# ວິຊາ: ບູຮານຄະດີ







ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
໙໙໙໙໙໙໙໙

ວິທະຍາໄລຄູສາລະວັນ
ສະພາວິທະຍາສາດ

ເລກທີ 44 ສພ.ວສ

# ໃບຮັບຮອງ

## ອະນຸມັດຜ່ານການຮັບຮອງການຮຽບຮຽງເອກະສານ ປະກອບການສອນພາກວິຊາຄູປະຫວັດສາດ-ພູມສາດ

- ອີງຕາມ: ວິໄສທັດຮອດປີ 2030 ຍຸດທະສາດຮອດປີ 2025 ແລະແຜນພັດທະນາຂະແໜງການສຶກສາ ແລະ ກິລາ 5 ປີ.
- ອີງຕາມ: ແຜນປັບປຸງຄຸນນະພາບ QA ຂອງກະຊວງສຶກສາທິການ ແລະ ກິລາ, ໃນມາດຕະຖານທີ 10 ຕົວຊີ້ວັດທີ 48-50 ການຄົ້ນຄວ້າວິທະຍາສາດ ແລະ ການບໍລິການ.
- ອີງຕາມ: ຂໍ້ຕົກລົງວ່າດ້ວຍພາລະບົດບາດ, ສິດ ແລະ ໜ້າທີ່ ສະພາວິທະຍາສາດຂອງວິທະຍາໄລຄູສາລະວັນ ສະບັບເລກທີ 05/ສພ.ວສ, ລົງວັນທີ 7 ມີນາ 2024.

ຈາກຜົນການກວດສອບ, ກວດກາທາງດ້ານເນື້ອໃນ, ຫຼັກການຂອງບັນດາອະນຸກຳມະການເຫັນວ່າບົດຮຽບຮຽງເອກະສານປະກອບການສອນ ວິຊາ: ບູຮານວິທະຍາ ມີຄວາມຖືກຕ້ອງຕາມເນື້ອໃນຫຼັກສູດທີ່ໄດ້ກຳນົດ ແລະ ສະພາວິທະຍາສາດຈຶ່ງໄດ້ຮັບຮອງເອົາປຶ້ມເຫຼັ້ມນີ້ເປັນສ່ວນໜຶ່ງໃນການສິດສອນ ແລະ ຖືກນຳໃຊ້ເຂົ້າໃນກິດຈະກຳການຮຽນ - ການສອນໃນວິທະຍາໄລຄູສາລະວັນ.

ວິທະຍາໄລຄູສາລະວັນ

| ຄະນະກຳມະການກວດສອບ | ລາຍເຊັນ |
| --- | --- |
| ທ່ານ ບຸນທັນ ອິ່ມວໍລະວົງ | ....... |
| ທ່ານ ອຈ ປທ ນາງ ສິງອຳໄພ ພົມພາພອນ | ....... |
| ທ່ານ ຊອ ນາງ ອິນປອນ ເພັງສຸວັນ | ....... |

ທີ່, ສາລະວັນ, ວັນທີ ........................
ປະທານສະພາວິທະຍາສາດ

ອຈ. ບ ສົມປອງ ແສນທະວິສຸກ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

========

ວິທະຍາໄລຄູສາລະວັນ

ສະພາວິທະຍາສາດ

ພາກວິຊາຄູປະຫວັດສາດ-ພູມສາດ

# ໃບຮັບຮອງ

## ການກວດແກ້ບົດຮຽບຮຽງເອກະສານປະກອບການສອນ

## ວິຊາ: ບູຮານວິທະຍາ

**ພາກວິຊາ:** ຄູປະຫວັດສາດ-ພູມສາດ

**ຜູ້ຮຽບຮຽງເອກະສານປະກອບການສອນ**

ທ່ານ ປທ ນາງ ລຸ້ງຟ້າ ຂັນຕິວົງ

**ຄະນະກຳມະການກວດແກ້ບົດ** **ລາຍເຊັນ**

ທ່ານ ວັດທະນາ ໝັ້ນວິໄລ ..............................

ທ່ານ ອຈ ປທ ນາງ ສີງອຳໄພ ພົມພາພອນ ..............................

ວິທະຍາໄລຄູສາລະວັນ

ທ່ານ ຊອ ນາງ ລັດສະໝີ ພົນທິສານ ..............................

ທີ່, ສາລະວັນ, ວັນທີ ..........................

ຫົວໜ້າພາກວິຊາຄູປະຫວັດສາດ-ພູມສາດ

ບຸນທັນ ອົ້ມວໍລະວົງ

Bounthanh OMVORAVONG

# ຄຳນຳ

ເພື່ອປັບປຸງຄຸນນະພາບ, ປະສິດທິພາບຂອງການກໍ່ສ້າງຄູໃຫ້ສູງ, ແນ່ໃນເພີ່ມສະມັດຖະພາບຂອງຄູ ແລະ  ແລະ ພັດທະນາອາຊີຄູໃຫ້ດີຂຶ້ນເທື່ອລະກ້າວນັ້ນ. ພວກຂ້າພະເຈົ້າຈຶ່ງໄດ້ຮຽບຮຽງປຶ້ມແບບຮຽນນີ້ຂຶ້ນມາ ເພື່ອຮັບໃຊ້ຢູ່ພາຍໃນສະຖາບັນສ້າງຄູ , ໂດຍສະເພາະໄດ້ພັດທະນາຕາມທິດທາງການສ້າງຄູແບບໃໝ່ ທີ່ນັ້ນການປູກອຸດົມການ, ຄຸນນຸທຳ ແລະ ຈິດວິນຍານຂອງຄວາມເປັນຄູໃຫ້ແກ່ນັກຮຽນຄູ, ເຮັດໃຫ້ເຂົາເຈົ້າມີທັກສະວິຊາຊີບຄູທີ່ໜັກແໜ້ນ, ເຂົ້າໃຈດ້ານບູຮານວິທະຍາ, ຄວາມຮູ້ທົ່ວໄປ ແລະ ຄວາມຮູ້ວິຊາສະເພາະທີ່ແທດເໝາະກັບຊັ້ນທີ່ຕົນເອງສອນ

ປຶ້ມເຫຼັ້ມນີ້ໄດ້ພັດທະນາດ້ວຍການປະກອບສ່ວນຈາກຄູພະນັກງານ- ຄູອາຈານ , ນັກຮຽນງ ນັກສຶກສາ ທີ່ໃຫ້ຄວາມຮ່ວມມື ແລະ ພາກສ່ວນຕ່າງໆ ທີ່ກ່ຽວຂ້ອງເພື່ອແນ່ໃສ່ເຮັດໃຫ້ນັກຮຽນຄູທີ່ຈົບຈາກສະຖາບັນສ້າງຄູມີປະສິດທິພາບດີ, ມີຄວາມຮູ້ ແລະ ຄວາມເຂົ້າໃຈລາຍວິຊາທີ່ຕົນເອງຢ່າງເລິກເຊິ່ງ,ຮູ້ຈັກໝູນໃຊ້ວິທີການສິນສອນຫຼາຍຮູບຫຼາຍສີ ມີຄວາມຊຳນານໃນການສອນ  ແບບເອົານັ້ນຮຽນເປັນໃຈກາງ, ຮູ້ຈັກຜະລິດ ແລະ ນຳໃຊ້ອຸປະກອນການຮຽນ-ການສອນທີ່ງ່າຍດາຍ ມີຄວາມຮັບຜິດຊອບໃນການພັດທະນາອາຊີບຄູຂອງຄົນ.

ປຶ້ມເຫຼັ້ມນີ້ຮຽບຮຽງຂຶ້ນມາອາດປະສະຈາກໄດ້ຄວາມຈາກບໍ່ໄດ້ຄວາມຂາດຕົກບົກຜ່ອງ, ບໍ່ເໝາະສົມ, ບໍ່ສອດຄ່ອງ ແລະ ບໍ່ທັນສະພາບ ກະລຸນາປະກອບຄຳຕິດຄຳເຫັນຂອງຕົນ ເພື່ອຊ່ວຍປັບປຸ່ງເຮັດໃຫ້ປຶ້ມເຫຼັ້ມນີ້ສົມບູນ ແລະ ມີປະສິດທິຜົນຢ່າງຍິ່ງຂຶ້ນ.

## ສາລະບານ


**ສາລະບານ** Error! Bookmark not defined.

ຄຳນຳ ........ 1

ບົດທີ 1 ຄວາມຮູ້ເບື້ອງຕົ້ນກ່ຽວກັບບູຮານວິທະຍາ ........ 9

**1. ຄວາມໝາຍຄວາມສຳຄັນ ແລະ ບົດບາດຂອງບູຮານວິທະຍາ** ........ 9

1.1 ຄວາມໝາຍຂອງບູຮານຄະດີ ........ 9

1.2 ບົດບາດຄວາມສຳຄັນຂອງບູຮານຄະດີ ........ 9

**2. ປະຫວັດຄວາມເປັນມາຂອງບູຮານຄະດີ** ........ 10

**3. ຄຸນປະໂຫຍດຂອງບູຮານຄະດີ** ........ 11

**ບົດທີ 2 ຫຼັກຖານທາງບູຮານຄະດີ** ........ 12

**1. ປະເພດບູຮານຄະດີວິທະຍາ** ........ 12

**1.1. ປະພດວັດຖຸ** (ສິ່ງທີ່ຄົນເຮົາສ້າງຂຶ້ນຫຼືດັດແປງສ້າງຂຶ້ນ) ........ 12

1.2. ປະເພດບັກທຶກ (ສິ່ງທີ່ກ່ຽວຂ້ອງກັບຄົນ) ........ 14

1.3. ປະເພດບອກເລົ່າ. ........ 16

**2. ສະຖານທີ່ຄົ້ນຄວ້າບູຮານຄະດີ** ........ 16

2.1. ຫຼັກຖານຂໍ້ມູນທີ່ພົບເຫັນຢູ່ໜ້າດິນໄດ້ແກ່: ........ 16

2.2. ຫຼັກຖານຂໍ້ມູນທີ່ຄົ້ນພົບໃນພື້ນດິນໄດ້ແກ່: ........ 16

**ບົດທີ 3 ກໍລະນີການຄົ້ນພົບບູຮານຄະດີ** ........ 17

1. **ການຄົ້ນພົບໂດຍບັງເອີນ** ........ 17

1.1 ສະພາບພູມມີປະເທດປ່ຽນແປງ ........ 17

1.2 ຂະນະນ້ຳລົ້ນ ຫຼື ນ້ຳແຫ້ງ ........ 17

1.3 ຂຸດດິນເພື່ອການກໍ່ສ້າງ ແລະ ການປູກຝັງ ........ 17

1.4 ຂຸດຄອງ, ບຶງ, ໜອງ ຫຼື ການຫາສັດນ້ຳ ........ 18

1.5 ຜົນຈາກສົງຄາມ ........ 18

2. **ການຄົ້ນພົບດ້ວຍວິທີສຳຫຼວດ** ........ 18

2.1 ເສດຖ້ວຍ, ຊາມ, ໝໍ້ຕ່າງໆທີ່ເຮັດດ້ວຍດິນເຜົາ. ........ 18

2.2 ເຄື່ອງປະດັບ (ເຄື່ອງເອ້)......19
2.4 ຊາກບູຮານສະຖານ......20
2.5 ວັດຖຸກໍ່ສ້າງ......20
2.6 ເງິນຕາ......21
**3. ການຄົ້ນພົບດ້ວຍການຂຸດຄົ້ນ**......23
3.1 ຄວາມມຸ່ງຫວັງຂອງການຂຸດຄົ້ນ......24
3.2 ປະເພດຂອງການຂຸດຄົ້ນ......24
3.3 ພື້ນທີ່, ທີ່ເຮັດການຂຸດຄົ້ນ......25
3.4 ລະບົບຫຼຸມຂຸດຄົ້ນ......25
3.5 ການກຽມຕົວກ່ອນການຂຸດຄົ້ນ......26
3.6 ອຸປະກອນການຂຸດຄົ້ນ ແລະ ຍານພາຫະນະ......27
3.7 ການດຳເນີນການຂຸດຄົ້ນ......27
3.8 ການດຳເນີນການເຮັດວຽກຫຼັງຈາກການຂຸດຄົ້ນ......28
**4. ການຄົ້ນພົບດ້ວຍພາບຖ່າຍທາງອາກາດ**......29
**ບົດທີ 4 ການແບ່ງຍຸກບູຮານຄະດີ**......32
**1. ຂໍ້ມູນນຳໃຊ້ໃນການແບ່ງຍຸກ**......32
**2. ຫຼັກການໃນການແບ່ງຍຸກ**......32
**3. ການກຳນົດຍຸກສະໄໝທາງບູຮານຄະດີ**......33
**3.1 ສະໄໝກ່ອນປະຫວັດສາດໂດຍທົ່ວໄປແບ່ງອອກເປັນ 2 ຍຸກຄື:**......34
**ບົດທີ5**......36
**ການກຳນົດອາຍຸບູຮານຄະດີ**......36
**1. ການກຳນົດອາຍຸເປັນປີ ( ຫຼື ສັກກະຣາດ )**......37
1.1 ການໃຊ້ໜັງສືຫຼືເອກະສານ......37
1.2 ການໃຊ້ວັດຖຸທີ່ບອກສັກກະຣາດ......38
**2. ການກຳນົດດ້ວຍການປຽບທຽບ**......38
2.1 ການພິຈາລະນາຮູບແບບ ( Typology )......39
2.2 ການພິຈາລະນາວິວັດທະນາການຂອງຮູບແບບສິລະປະ ( Evolutlon of style )......39

2.3 ວັດຖຸທີ່ພົບຢູ່ນຳກັນ ( Assoclatedflnds ) ........................................................................................39

2.4 ການວິເຄາະຊັ້ນດິນ ( SturlngaphlcalAnalysls ) ...............................................................................40

**3. ກຳນົດດ້ວຍວິທີໃຊ້ເຄື່ອງມືວິທະຍາສາດ** ..............................................................................................40

3.1 ດ້ວຍກາກບອນ 14........................................................................................................................40

3.2 ດ້ວຍທົ່ງແມ່ເຫຼັກ ( ArchaeomagnetlcDatlng ) ...................................................................................42

3.3 ດ້ວຍການດູດຊຶມອາຍນ້ຳ ( Obsldlan Hydration Dating ) .....................................................................43

3.4 ດ້ວຍນັບວົງປີຂອງຕົ້ນໄມ້ ( Dendrochrono Logy Dating ) ....................................................................43

**ບົດທີ 6 ບູຮານຄະດີ ແລະ ມໍລະດົກຂອງລາວ** ........................................................................................44

**1. ປະຫວັດການສຶກສາບູຮານຄະດີໃນລາວ** ..............................................................................................44

1.1 ຍຸກຫີນເກົ່າ..................................................................................................................................45

1.2 ຍຸກຫີນກາງ .................................................................................................................................45

1.3 ຍຸກຫີນໃໝ່ ..................................................................................................................................45

1.4 ຍຸກຫີນໃຫຍ່..................................................................................................................................45

1.5 ຍຸກໂລຫະ......................................................................................................................................45

**2. ປະເພດບູຮານຄະດີໃນລາວ** ..............................................................................................................46

2.1. ປະເພດວັດຖຸ / ເຄື່ອງມື, ເຄື່ອງໃຊ້, ເຄື່ອງເອ້. ...................................................................................46

2.2 ປະເພດສະຖານທີ່ບູຮານ....................................................................................................................47

2.3 ປະເພດບັນທຶກດ້ວຍຕົວອັກສອນ. ........................................................................................................49

**3. ມໍລະດົກແຫ່ງຊາດຂອງລາວ.**...............................................................................................................51

3.1 ປະເພດອະສັງຫາລິມະຊັບ. ..................................................................................................................51

**3.2 ປະເພດສັງຫາລິມະຊັບ.**........................................................................................................................53

3.3 ເວຍະນິສັນຖານ. ..............................................................................................................................53

**4. ການປົກປັກຮັກສາບູຮານສະຖານ ແລະ ບູຮານວັດຖຸໃນລາວ** .....................................................................54

4.2 ກໍລະນີແມ່ນຊັບສິນປະຫວັດສາດທີ່ເປັນເຈົ້າຂອງ ຫຼື ຖືກຄອບຄອງ. .......................................................55

ພາກອ່ານເພີ່ມ........................................................................................................................................57

**ວັດຊຽງທອງ ( ເມືອງ ແລະ ແຂວງຫຼວງພະບາງ )** ....................................................................................57

1. **ປະຫວັດຄວາມເປັນມາກ່ອນການສ້າງຕັ້ງ.**...............................................................................................57

2. **ທີ່ຕັ້ງຂອບເຂດ.**......58
**2.1 ສິມແບບຫຼວງພະບາງແທ້.**......58
**2.2 ຮູບພາບປະດັບແວ່ນ (ຮູບຕົ້ນທອງ ).**......59
**2.3 ວິຫານແດງ.**......60
**2.4 ວິຫານພະມ່ານ.**......61
**2.5 ໂຮງເກັບລາຊະໂກດ ( ໂຮງມ້ຽນກະດູກ).**......63
3. **ການບູລະນະສ້າງສາ.**......63
**ວັດພຣະທາດໂຜ່ນ**......66
**ພະທາດຫຼວງວຽງຈັນ**......70
**ພະທາດອີງຮັງ**......77
**ທົ່ງໄຫຫີນ**......102

# ບົດທີ 1

# ຄວາມຮູ້ເບື້ອງຕົ້ນກ່ຽວກັບບູຮານວິທະຍາ

## 1. ຄວາມໝາຍຄວາມສຳຄັນ ແລະ ບົດບາດຂອງບູຮານວິທະຍາ

### 1.1 ຄວາມໝາຍຂອງບູຮານຄະດີ

ຄວາມໝາຍວ່າ: ບູຮານຄະດີ (Archaeology) ມາຈາກພາສາກີດ 2 ຄຳ ຄື: archaios ແປວ່າຂອງບູຮານ ແລະ log0s ແປວ່າຄວາມຮູ້ ດັ່ງນັ້ນ, ບູຮານຄະດີຈຶ່ງເປັນວິຊາ ທີ່ສຶກສາ ກ່ຽວກັບການກະທຳຂອງຄົນໃນອະດີດ.

ບູຮານຄະດີ ມາຈາກພາສາສັນສະກິດຄື: ປຸຣານະ ( ເກົ່າ ) ສະມາດກັບຄຳວ່າ ຄະດີ ( ເລື່ອງລາວ ) ແປວ່າ ເລື່ອງລາວທີ່ເກົ່າແກ່ ເຊິ່ງໝາຍເຖິງ ການສຶກສາກ່ຽວກັບເລື່ອງລາວສະໄໝບູຮານ. ອຸໄທ ທັຣັນໂຕ (2526 : 6 ) ຂອງໄທ ໄດ້ເວົ້າວ່າ ບູຮານຄະດີເປັນສາຂາໜຶ່ງຂອງມະນຸດວິທະຍາເຊິ່ງຈະສຶກສາກ່ຽວກັບວັດທະນະທຳຂອງຄົນໃນອະດີດ ໂດຍການວິເຄາະວັດຖຸທີ່ຫຼົງເຫຼືອຢູ່ ການສຶກສາວິຊາບູຮານຄະດີ ບໍ່ໄດ້ຂຶ້ນຢູ່ກັບຫຼັກຖານທີ່ເປັນລາຍລັກອັກສອນ ຫຼື ວັດຖຸທີ່ຈັບບາຍໄດ້ເທົ່ານັ້ນ ແຕ່ສາມາດສຶກສາໄດ້ຈາກວັດທະນະທຳທີ່ບໍ່ແມ່ນວັດຖຸ ແລະ ຢູ່ນອກຂອບເຂດປະຫວັດສາດ ດັ່ງນັ້ນ ບູຮາຣຄະດີ ຈຶ່ງເປັນການສຶກສາທີ່ຈະຕ້ອງວິເຄາະທັງວັດທະນະທຳກ່ອນປະຫວັດສາດ, ວັດທະນະທຳທີ່ບໍ່ເປັນລາຍລັກອັກສອນ ຫຼ ວັດຖຸ ບູຮານຄະດີຈະໃຫ້ຂໍ້ມູນກ່ຽວກັບອາລິຍະທຳຂອງຄົນໃນອະດີດເຊິ່ງຈະຊ່ວຍສະໜັບສະໜູນຄວາມຮູ້ໃນປະຈຸບັນເຊັ່ນ: ການສຶກສາຊາກດຶກດຳບັນ, ເຄື່ອງມື, ເຄື່ອງປັ້ນດິນເຜົາ, ສິລະປະ, ກະດູກສັດ…ສິ່ງດັ່ງກ່າວເມື່ອວິເຄາະຢ່າງຖີ່ຖ້ວນແລ້ວ ຈະບອກໃຫ້ຮູ້ເຖິງວັດທະນະທຳຂອງມະນຸດສະໄໝນັ້ນເປັນແນວໃດ.

ສະຫຼຸບໄດ້ວ່າບູຮານຄະດີໝາຍເຖິງສິ່ງທີ່ຄົ້ນຫາ ວິເຄາະ ແລະ ສຶກສາທີ່ຄົນໃນອາດີດສ້າງ ຫຼື ດັດແປງຂຶ້ນ ແລະ ສິ່ງທີ່ກ່ຽວຂ້ອງກັບຄົນໂດຍສຶກສາຈາກຫຼັກຖານຂໍ້ມູນຕ່າງໆເຫຼົ່ານັ້ນ, ທັ້ງພົບເຫັນໃນພື້ນດິນ ແລະ ໜ້າດິນແລ້ວນຳມາວິເຄາະແປຄວາມໝາຍເພື່ອຈະຮູ້ເລື່ອງລາວຂອງຄົນໃນອາດີດ.

ອີກສະໄໝໜຶ່ງກໍ່ຄື ບູຮານຄະດີສຶກສາສິ່ງທີ່ຄົນສ້າງຂຶ້ນ ຫຼື ສິ່ງທີ່ມີໃນທຳມະຊາດນຳມາດັດແປງເປັນເຄື່ອງມື, ເຄືອງໃຊ້ສິ່ງກໍ່ສ້າງ ແລະ ເຄື່ອງປະດັບເຊັ່ນ: ຖ້ວຍ, ຊາມ, ບ່ວງ, ຈອກ, ໝໍ້ ທີ່ເຮັດດ້ວຍດິນເຜົາ, ຂວານຫີນ, ໃບຫອກ, ກຳແພງເມືອງ, ທາດບູຮານ, ເຈດີ, ແຫວນ, ປອກແຂນ… ເປັນຕົ້ນສິ່ງດັ່ງກ່າວຖືວ່າເປັນບູຮານຄະດີທີ່ຕ້ອງການສຶກສາ.

### 1.2 ບົດບາດຄວາມສຳຄັນຂອງບູຮານຄະດີ

ບູຮານວິທະຍາບໍ່ໄດ້ເປັນວິຊາທີ່ມີຄວາມສົມບູນໃນຕົວເອງຄືກັບວິທະຍາອື່ນໆ ຫຼື ວິທະຍາສາດບາງສາຂາແຕ່ບູຮານຄະດີກໍ່ມີວິທີການສຶກສາຄົ້ນຄວ້າທາງວິທະຍາສາດ ແລະ ຕ້ອງໃຊ້ວິທະຍາການທາງວິທະຍາສາດຫຼາຍຊ່ວຍໃນການສຶກສາເຊັ່ນ: ເຄມີສາດ, ຊີວະສາດ, ຟີຊິກສາດ, ການະວິພາກສາດ ແລະ ສັດຕະສາດເປັນຕົ້ນ. ນອກຈາກບູຮານຄະດີແລ້ວຍັງມີການພົວພັນກັບວິຊາອື່ນໆອີກເຊັ່ນ: ສັງຄົມສາດ ແລະ ມະນຸດສາດເພື່ອໃຫ້ການສຶກສາວິຊາບູຮານຄະດີມີຄວາມສົມບູນຫຼາຍຂຶ້ນ, ຈຶ່ງມີການຂຸດຄົ້ນຮວບຮວມຫຼັກຖານຂໍ້ມູນທີ່ຄົນໃນອະດີດປະຖິ້ມໄວ້ແລ້ວນຳມາສຶກສາເພື່ອທີ່ຈະຮູ້ເຖິງການພັດທະນາການໃນການດຳລົງຊີວິດຂອງຄົນໃນອະດີດວ່າມີຄວາມເປັນມາແນວໃດ ດັ່ງນັ້ນ, ບູຮານຄະດີຈຶ່ງມີບົດບາດຄວາມສຳຄັນໃນການສຶກສາຄົ້ນຄວ້າຕໍ່ໄປ.

## 2. ປະຫວັດຄວາມເປັນມາຂອງບູຮານຄະດີ

ວິຊາບູຮານຄະດີໄດ້ພັນລະນາເປັນເວລາດົນນານມາໄດ້ຫຼາຍປີແລ້ວເຊິ່ງເກີດຈາກຄວາມສົນໃຈຂອງຜູ້ຄົນໃນສະໄໝກຣາດສິກ ແລະ ສະໄໝຟື້ນຟູສິລະປະວິທະຍາອີກດ້ານໜຶ່ງເກີດຈາກການຢາກຮູ້ເລື່ອງລາວກ່ຽວກັບຊີວິດຄວາມເປັນຢູ່ຂອງຜູ້ທີ່ຄອບຄອງທະວີບອາເມຣິກາກ່ອນທີ່ໂຄລັມບັດ (Columbus) ຈະເດີນທາງໄປເຖິງ ແລະ ສິ່ງສຳຄັນແມ່ນຈາກຄົນຫຼາຍຕ້ອງຮຽນຮູ້ຄວາມເປັນມາຂອງມະນຸດໂລກ, ຊຶ່ງເກີດຂຶ້ນກ່ອນຈະມີການຈົດບັນທຶກເປັນລາຍລັກອັນສອນ.

ໃນສະຕະວັດທີ XV ວິຊາບູຮານຄະດີໄດ້ເລີ່ມຂຶ້ນປະເທດອີຕາລີຕໍ່ມາມີຕຸລາກີເມືອງຄອນສະແຕນໂນເປີສໄດ້ນັກປັດສະຍາໄດ້ພະຍາເອົາວິຊາການຫຼາຍຢ່າງຂອງເກຣັກ ແລະ ອີຕາລີຊຶ່ງໄດ້ແກ່ໂປ໊ບ ແລະ ເຈົ້ານາຍຂອງອີຕາລີໄດ້ຮອບຮອມຮູບປັ້ນ, ຮູບຈຳລອງຂອງບູຮານໄວ້ຢ່າງຫຼວງຫຼາຍຊຶ່ງມີຄວາມນິຍົມເຫຼົ່ານີ້ແຜ່ຫຼາຍໄປປະເທດອັງກິດ ແລະ ປະເທດຝຣັ່ງຈຶ່ງໄດ້ມີການຂຸດຄົ້ນທີ່ເມືອງປອມເປອີ ແລະ ເມືອງເຮອຄິວ-ເລນຽນໃນອີຕາລີ.

ໃນສະຕະວັດທີ XIX ວິງແຄມມັນ (Winckelmann) ໄດ້ນຳນັກສະສົມຂອງເກົ່າ ແລະ ນັກສຶກສາຊາວອັງກິດໄປທີ່ປະເທດເກຣັກ. ສຶກສາບູານຄະດີເລື່ອງເກຣັກໃນປະເທດອັງກິດທີ່ເລີ່ມຕົ້ນຂຶ້ນໂດຍທ່ານລອຣັດເອລຍິນ (Lord elgin) ນຳຮູບສະລັກຫີນອ່ອນຈາກວິຫານປາເທນອນ (Parthenon) ມາຍັງກຸ່ງລອນດອນ ແລະ ມີຄວາມພະຍາຍາມຂອງໂປເລອິງ (Polllon) ໄດ້ເປັນກຸນແຈເປີດເຜີຍເລື່ອງເມືອງເອຢິບບູຮານໃນໄລຍະປີຄສ 1880 ອັງກິດໄດ້ປົກຄອງປະເທດເອຢິບແທນປະເທດຝຣັ່ງແລະໄດ້ອະນຸຍາດໃຫ້ສາມາຄົມສຳຫຼວດເອຢິບໄດ້ເຮັດໃຫ້ການຂຸດຄົ້ນໃນຄວາມຄອບຄຸມຂອງເນວິລຊຶ່ງເປັນຄົນທຳອິດທີ່ນຳວິທີການຂຸດຄົ້ນແບບໃໝ່ມາໃຊ້ໃນເອຢິບຄືເຮັດການຂຸດຄົ້ນພ້ອມທັ້ງເຮັດລາຍງານໂດຍລະອຽດແລ້ວພິມເລື່ອງລາວອອກເຜີຍແຜ່, ຜູ້ເຮັດການຂຸດຄົ້ນໄດ້ຖືກຕ້ອງຕາມຫຼັກການວິຊາການເປັນຜູ້ທຳອິດຄືໂຮມາສເຈຟເຟີວຣສັນ (Thomas Jefferson) ປະທານາທິບໍດີຄົນທີ 3 ຂອງສະຫະລັດອາເມຣິກາ. ໂດຍໄດ້ຂຸດຄົ້ນທີ່ລັດເວວຈິເນຍການສຶກສາບູຮານຄະດີປະຈຸບັນເລີ່ມຂຶ້ນເມື່ອປີຄສ 1883 ຫຼັງຈາກຊລິມານ (Schllemann) ນັກບູຮານຄະດີຊາວເຢລະມັນໄດ້ເຮັດການຂຸດຄົ້ນທີ່ໄມຊີນີ (Mycenae) ແລະ ໄດ້ເປັນຜູ້ກໍ່ຕັ້ງກອງທຶນສຳຫຼວດເອຢິບຂຶ້ນໃຊ້ໃນການຂຸດຄົ້ນເມືອງບູຮານໃນບ່ອນຕ່າງໆ.

ນັກບູຮານຄະດີຊາວແດນມາກຜູ້ທີ່ມີຊື່ສຽງຄົນໜຶ່ງຄື: ສຣິສຕອນທອມເສນ (Chrilstlon-thomsed) ໄດ້ແບ່ງສະໄໝປະຫວັດສາດອອກເປັນສະໄໝຫີນ, ສະໄໝທອງສຳລິດ ແລະ ສະໄໝເຫຼັກເອີ້ນວ່າລະບົບ 3 ຍຸກຕໍ່ມາໄດ້ແບ່ງສະໄໝຫີນອອກເປັນ 3 ສະໄໝຄືຫີນເກົ່າ, ຫີນກາງ ແລະ ຫີນໃໝ່. ນອກຈາກນັ້ນຍັງສຶກສາເຖິງຮູບແບບ (Typogy) ຂອງເຄື່ອງມືຫີນ ແລະ ການແຜ່ຂະຫຍາຍຂອງວັດທະນະທຳຕະຫຼອດສຶກສາເຖິງສິ່ງທີ່ມີຊີວິດທີ່ໄດ້ຕາຍໄປແລ້ວ.

ຊາວ ເຣັສດາກວິນ ( Charles Darwin )  ໄດ້ຂຽນຂຶ້ນຄືກັນການກຳເນີດຂອງເຜົ່າພັນເນື່ອງຈາກການຈັດສັນຂອງທຳມະຊາດ ( on The origin of Species bMeans of natural selection ) ໄດ້ເຮັດໃຫ້ນັກວິຊາການອື່ນໆໄດ້ຕື່ນຕົວຂຶ້ນເປັນຈຳນວນຫຼວງຫຼາຍເພື່ອຄົ້ນຫາຄຳຕອບທີ່ພໍໃຈ.

ນາຍພົນ ພິສຣິເວດ ( General pill Rivers ) ຊາວອັງກິດ ໄດ້ເຮັດໃຫ້ການຂຸດຄົ້ນໃນປະເທດອັງກິດ ເມື່ອປີຄສ 1880 ໂດຍເຮັດການຂຸດຄົ້ນຕາມຊັ້ນໜ້າດິນເປັນຄັ້ງທຳອິດ ແລະ ເຊີມໍຕີວີເລີ ( Sir Morti-mer Wheeler) ໄດ້ນຳເອົາວິທີການຂຸດຄົ້ນສະໄໝໃໝ່ມາໃຊ້ໂດຍ ຂຸດຄົ້ນເປັນຫຼຸມ, ຮູບສີ່ຫຼ່ຽມ ຢ່າງເປັນທີ່ນິຍົມກັນໃນປະຈຸບັນ ຄວາມກ້າວໜ້າທາງດ້ານເທັກໂນໂລຍີ ຂອງມະນຸດໄດ້ກໍ່ໃຫ້ເກີດມີວິຊາ ບູຮານຄະດີ ຂະແໜງໃໝ່ຄື: ວິຊາ ບູຮານຄະດີໃຕ້ນ້ຳ ເຊິ່ງເລີ່ມຕົ້ນໂດຍ ນັກບູຮານຄະດີຊາວເບຣຍຽມ ນອກນັ້ນ, ຍັງມີນັກບູຮານຄະດີສາຂາອື່ນເກີດຂຶ້ນອີກຄື ວິຊາບູຮານຄະດີອຸດສາຫະກຳ ເຊິ່ງໄດ້ສຶກສາຄສະຫງວນຮັກສາບູຮານ ວັດຖຸສະຖານກ່ຽວກັບອຸດສາຫະກຳໃນອະດີດ ແລະ ລວມທັງວິຊາບູຮານຄະດີສິ່ງແວດລ້ອມ, ມາເຖິງປະຈຸບັນນີ້ ບູຮານຄະດີໄດ້ຂະຫຍາຍຕົວຢ່າງເຂັ້ມແຂງໃນທົ່ວໂລກ.

## 3. ຄຸນປະໂຫຍດຂອງບູຮານຄະດີ

ວິຊາບູຮານຄະດີເປັນວິຊາທີ່ສຶກສາຄວາມເປັນມາຂອງເລື່ອງລາວໃນອະດີດ ເຊິ່ງສາມາດນໍາໃຊ້ໃຫ້ເກີດປະໂຫຍດກັບສະພາບປະຈຸບັນຄື:

- ວິຊາບູຮານຄະດີຊ່ວຍໃຫ້ຮູ້ກ່ຽວກັບການເຄື່ອງໄຫວຂອງຄົນໃນອະດີດແຕ່ປະຫວັດສາດກໍ່ຍັງມີຂໍ້ຜິດພາດຂາດການຕໍ່ເນື່ອງ ແລະ ຍັງຂາດຫຼັກຖານຂໍ້ມູນຈຶ່ງຈໍາເປັນຕ້ອງມີການສຶກສາຄົ້ນຄວ້າເພີ່ມເຕີມເພື່ອໃຫ້ຂໍ້ມູນຄວາມຈິງທີ່ຖືກຕ້ອງເຊັ່ນ: ທົ່ງໄຫຫີນຊຽງຂວາງເຊິ່ງເປັນບູຮານວັດຖຸເກົ່າແກ່ຂອງຄົນໃນອະດີດ.
- ວິຊາບູຮານຄະດີຊ່ວຍໃຫ້ເກີດມີແນວຄິດຮັກຊາດ, ຮັກບ້ານເກີດເມືອງນອນຂອງຕົນນັ້ນຕ້ອງຢູ່ກັບການໄດ້ຮູ້ເລື່ອງລາວຄວາມເປັນມາຂອງທ້ອງຖິ່ນທີ່ຕົນຢູ່ອາໃສ່ມີຄວາມເປັນຢ່າງໃດ ແຕກຕ່າງກັນຄືແນວໃດທີ່ມີຄວາມເປັນເອກະລັກຕ້ອງບໍາລຸງຮັກສາໄວ້ເພື່ອສຶກສາຄົ້ນຄວ້າບູຮານຄະດີເປັນສ່ວນໜຶ່ງທີ່ເຮັດໃຫ້ປະຊາຊົນໄດ້ຮັບຮູ້ ແລະ ເຂົ້າໃຈເລື່ອງລາວຄວາມເປັນມາຂອງຊາດຕົນເຊັ່ນ: ສະໄໝເຈົ້າໄຊເສດຖາທິລາດທ້ອນໂຮມແຜ່ນດິນລາວເພິ່ນໄດ້ສ້າງວັດຖຸບູຮານອັນເກົ່າແກ່ໄວ້ຫຼາຍແຫ່ງ.
- ວິຊາບູຮານຄະດີຊ່ວຍຮູ້ເຖິງເຕັກໂນໂລຊີ ຫຼື ເຕັກນິກສະໄໝຄົນປະຖົມບູຮານ, ບູຮານວັດຖຸທີ່ພົບເຫັນຈາກການສໍາຫຼວດ, ການຂຸດຄົ້ນເມື່ອໄດ້ສຶກສາວິເຄາະແລ້ວຈະເຮັດໃຫ້ຮູ້ເຖິງເຕັກໂນໂລຍີໃນການສ້າງບູຮານສະຖານນັ້ນເຊັ່ນ: ແຫຼ່ງວັດຖຸດິບ, ການນໍາວັດຖຸດິບນັ້ນມາແປງພາບວິທີການຜະລິດ ແລະ ການນໍາຜະລິດຕະພັນໄປໃຊ້ປະໂຫຍດ ຫຼື ການກໍ່ສ້າງ. ໃນຂະນະດຽວກັນນັ້ນ, ນັກວິທະຍາສາດສາຂາທີ່ກ່ຽວຂ້ອງກໍ່ຈະນໍາເຕັກໂນໂລຍີ ສະໄໝບູຮານທີ່ກ່ຽວຂ້ອງໄປສຶກສາຄົ້ນຄວ້າ ແລະ ພັດທະນາການຜະລິດໃຫ້ກ້າວໜ້າເປັນອຸດສາຫະກໍາສະໄໝໃໝ່ໄດ້.
- ວິຊາບູຮານຄະດີຊ່ວຍໃນກິດຈະການສົ່ງເສີມການທ່ອງທ່ຽວ. ປັດຈຸບັດປະເທດຕ່າງໆຫຼາຍປະເທດມຸ່ງຫາລາຍໄດ້ເຂົ້າະເທດໂດຍການຈັດການສົ່ງເສີມການທ່ອງທ່ຽວເພື່ອດຶງດູດໃຫ້ນັກທ່ອງທ່ຽວຊາວຕ່າງດ້າວປະເທດຕ່າງໆເຂົ້າມາທ່ອງທ່ຽວປະເທດຂອງຕົນແຫຼ່ງບູຮານຄະດີຕ່າງໆເຊັ່ນ: ເມືອງບູຮານ, ວັດບູຮານ, ອະນຸສອນສະຖານ,ສະຖານທີ່ພິພິທະພັນ ແລະ ແຫຼ່ງຂຸດຄົ້ນທາງບູຮານຄະດີໃນສະຖານທີ່ຕ່າງໆເປັນສ່ວນໜຶ່ງທີ່ດຶງດູດຄວາມສົນໃຈຂອງນັກທ່ອງທ່ຽວໃຫ້ໄປຊົມສະຖານທີ່ເຫຼົ່ານັ້ນເພື່ອຄວາມເພີດເພີນ ແລະ ໄດ້ຮັບຄວາມຮູ້ຈາກນັກທ່ອງທ່ຽວທີ່ເດີນທາງເຂົ້າມາໃນປະເທດກໍ່ຈະເຮັດໃຫ້ປະເທດມີລາຍໄດ້ພິ່ມຂຶ້ນຈາກການຈັບຈ່າຍໃຊ້ສອຍ.

ວິຊາ ບູຮານວິທະຍາ ເປັນປະໂຫຍດທາງການເມືອງ, ບັນຫາລະຫວ່າງປະເທດທີ່ໃກ້ຄຽງກັນ ແລະ ປະເທດໃດປະເທດໜຶ່ງພະຍາຍາມອ້າງຫຼັກຖານຂໍ້ມູນທາງປະຫວັດສາດ, ຫຼັກຖານຂໍ້ມູນທາງເຊື້ອຊາດ ຫຼື ສາສະໜາແລ້ວພະຍາຍາມກໍ່ໄດ້ເກີດບັນຫາທາງການເມືອງໃນເລື່ອງຕ່າງໆຂຶ້ນເຊັ່ນ: ບັນຫາຊາຍແດນວິຊາບູຮານຄະດີ ເປັນສ່ວນໜຶ່ງທີ່ຊ່ວຍແກ້ໄຂບັນຫາໃຫ້ຈະແຈ້ງວ່າໄດ້ດິນແດນ ບໍລິເວນນັ້ນຄວນຈະເປັນປະເທດໃດໜຶ່ງໂດຍອາໄສຫຼັກຖານຂໍ້ມູນທາງບູຮານວິທະຍາທີ່ຄົ້ນພົບເປັນຂໍ້ວິໄຈຕົວຢ່າງກັບບົດບາດທາງບູຮານຄະດີໃນທາງການເມືອງຄື: ເມື່ອປີ ຄ ສ 1977 (2520) ປະເທດສາທາລະນະລັດປະຊາຊົນຈີນໄດ້ອ້າງສິດທິການຄຸ້ມຄອງໝູ່ເກາະ Spratly ແລະ ໝູ່ເກາະ Parasele ໃນທະເລຈີນໃຕ້, ໝູ່ເກາະດັ່ງກ່າວ, ຢູ່ລະຫວ່າງສາທາລະນະລັດປະຊາຊົນຈີນ, ປະເທດຊາທາລະນະລັດສັງຄົມນິຍົມຫວຽດນາມ, ປະເທດບູໄນ, ປະເທດສະຫະພັນມາເລເຊຍ, ປະເທດສາທາລະນະລັດຟີລິບປິນ ແລະ ປະເທດໄຕ້ຫວັນ,ໝູ່ເກາະທັງສອງເປັນບໍລິເວນທີ່ມີນໍ້າມັນ ແລະ ແຮ່ວັດຖຸ, ວັດສະດຸຕ່າງໆຫຼາຍຢ່າງ. ລັດຖະບານຈີນໄດ້ໃຫ້ນັກບູຮານຄະດີໄປເຮັດການຂຸດຄົ້ນ ແລະ ອ້າງວ່າໄດ້ພົບໂຄງກະດູກຄົນຈຶ່ງພິສູດແລ້ວວ່າເປັນບັນພະບູລຸດຂອງຄົນຈີນ ດັ່ງນັ້ນ; ໝູ່ເກາະທັງສອງຈຶ່ງຕ້ອງເປັນຂອງຈີນ.

# ບົດທີ 2

# ຫຼັກຖານທາງບູຮານຄະດີ

ໃນການສຶກສາເລື່ອງລາວຂອງຄົນໃນອາດີດຈະໄດ້ຜົນຢ່າງຖືກຕ້ອງຫຼາຍໜ້ອຍພຽງໃດ, ຂຶ້ນຢູ່ກັບຫຼັກຖານຂໍ້ມູນທີ່ຮວບຮວມມາໄດ້ ຖ້າສາມາດຫາຂໍ້ມູນໄດ້ຫຼາຍກໍ່ຈະເຮັດໃຫ້ລາຍລະອຽດຂອງການສຶກສາ ແລະ ມີຄວາມຖືກຕ້ອງຫຼາຍຂຶ້ນ, ຄົນເຮົາບໍ່ວ່າຈະມີຊີວິດຢູ່ໃນຍຸກໃດສະໄໝໃດຕ້ອງປະຮ່ອງຮອຍຫຼັກຖານໄວ້ສະເໝີ, ຮ່ອງຮອຍຫຼັກຖານເຫຼົ່ານັ້ນເປັນສິ່ງສຳຄັນທີ່ຈະເຮັດໃຫ້ຄົນເຮົາຮູ້ເຖິງສະພາບຊີວິດຄວາມເປັນຢູ່ຂອງຄົນໃນຍຸກນັ້ນ, ສະໄໝຮ່ອງຮອຍຫຼັກຖານຂອງຄົນໃນອາດີດປະໄວນັ້ນເອີ້ນວ່າ: **ຫຼັກຖານທາງບູຮານຄະດີ.**

## 1. ປະເພດບູຮານຄະດີວິທະຍາ

ຫຼັກຖານທາງບູຮານວິທະຍາໄດ້ແບ່ງອອກເປັນ 2 ປະເພດ (Shorer and Ashmore 1979:70-71) ຄື:

- ປະເພດວັດຖຸ (ສິ່ງທີ່ຄົນເຮົາສ້າງຂຶ້ນຫຼືດັດແປງສ້າງຂຶ້ນArtifaets)
- ປະເພດບັກທຶກ (ສິ່ງທີ່ກ່ຽວຂ້ອງກັບຄົນ)

**1.1. ປະພດວັດຖຸ** (ສິ່ງທີ່ຄົນເຮົາສ້າງຂຶ້ນຫຼືດັດແປງສ້າງຂຶ້ນ)

+ ສິ່ງທີ່ຄົນເຮົາສ້າງຂຶ້ນໄດ້ແກ່:

- ບູຮານສະຖານ (An clent Monument)
- ບູຮານວັດຖຸ (MaterlalRemaln)

**ກ. ບູຮານສະຖານ** (An clent Monument)

ບູຮານສະຖານໝາຍຄວາມວ່າອາສັງຫາຣິມະຊັບຊຶ່ງອາຍຸ ຫຼື ລັກສະນະແຫ່ງການກໍ່ສ້າງ ຫຼື ຫຼັກຖານກ່ຽວກັບປະຫວັດຂອງອາສັງຫາຣິມະຊັບນັ້ນເປັນປະໂຫຍດໃນທາງສິລະປະ, ປະຫວັດສາດຫຼືບູຮານຄະດີ. ນອກຈາກນັ້ນລວມເຖິງສະຖານທີ່ທີ່ເປັນແຫຼ່ງບູຮານຄະດີ, ແຫຼ່ງປະຫວັດສາດ ແລະ ອຸທິຍານປະຫວັດສາດອີກດ້ວຍ. ບູຮານສະຖານໝາຍເຖິງສິ່ງກໍ່ສ້າງທີ່ຕິດແໜ້ນຢູ່ກັບພື້ນດິນ ຫຼື ຫີນ ແລະ ຂະໜາດໃຫຍ່ບໍ່ສາມາດເຄື່ອນຍ້າຍໄດ້ເມື່ອເວລາຈະສຶກສາ ຫຼື ຄົ້ນຫາຫຼັກຖານໃດໜຶ່ງກ່ຽວກັບບູຮານສະຖານະຕ້ອງໄປສຶກສາຍັງສະຖານທີ່ບູຮານສະຖານທີ່ຕ້ອງຢູ່ນັ້ນ, ສາມາດແບ່ງບູຮານສະຖານອອກເປັນ 2 ຊະນິດຄື:

- **ບູຮານສະຖານທີ່ຮ້າງ** (Dead Mounment) ໄດ້ແກ່ສິ່ງທີ່ກໍ່ສ້າງໃນສະໄໝບູຮານທີ່ບໍ່ໄດ້ປະໂຫຍດ ແລະ ບໍ່ມີຄົນອາໃສເຊັ່ນ: ວັດຮ້າງ, ວັງຮ້າງ, ເມືອງຮ້າງ…
- **ບູຮານສະຖານທີ່ບໍ່ຮ້າງ** (Living Mounment) ໄດ້ແກ່ສິ່ງທີ່ກໍ່ສ້າງໃນສະໄໝບູຮານທີ່ຍັງເຫຼືອຄົງຄ້າງໃຊ້ເປັນປະໂຫຍດ ແລະ ມີຄົນອາໄສ.

**ຂ.) ບູຮານວັດຖຸ**

ບູຮານວັດຖຸໝາຍເຖິງສັງຫາລິມະຊັບເປັນຂອງສິ່ງບູຮານບໍ່ວ່າຈະເປັນສິ່ງປະດິດ ຫຼື ເປັນສິ່ງທີ່ເກີດຂຶ້ນໃນທຳມະຊາດຫຼື ເປັນສ່ວນໃດສ່ວນໜຶ່ງຂອງບູຮານສະຖານ, ຊາກມະນຸດ ຫຼື ຊາກສັດຊຶ່ງອາຍຸ ຫຼື ລັກສະນະແຫ່ງການປະດິດ ຫຼື ຫຼັກຖານກ່ຽວກັບປະຫວັດຂອງສັງຫາຣິມະຊັບ ເປັນປະໂຫຍດທາງສິລະປະປະຫວັດສາດ ຫຼື ບູຮານຄະດີ. ບູຮານວັດຖຸໝາຍເຖິງສິ່ງຂອງຂະໜາດນ້ອຍທີ່ເຮົາສາມາດເຄື່ອນຍ້າຍໄປມາໃນທີ່ຕ່າງໆໄດ້ເຊັ່ນ: ເຄື່ອງປັ້ນດິນເຜົາ, ຂວານຫີນ, ລູກປັດ, ປອກແຂວນ, ທອງສຳລິດ, ສີລາຈາລຶກ, ຈົດໝາຍເຫດເປັນຕົ້ນ.






ບູຮານວັດຖຸ







### 1.2. ປະເພດບັກທຶກ (ສິ່ງທີ່ກ່ຽວຂ້ອງກັບຄົນ)

ນອກຈາກຫຼັກຖານຂໍ້ມູນທີ່ເປັນບູຮານສະຖານ, ບູຮານວັດຖຸແລ້ວຍັງຈະຕ້ອງໃຊ້ຫຼັກຖານຂໍ້ມູນທີ່ເປັນການບັນທຶກດ້ວຍລາຍລັກອັກສອນສາດແບ່ງອອກໄດ້ດັ່ງນີ້: ບົດຈານານຸກົມ, ພົງສາວະດານ, ຈົດໝາຍເຫດ, ເອກະສານທາງກົດໝາຍ…

**ກ.) ບົດຈານານຸກົມ (ຈາຣຶກ)**

ຕາມຄວາມໝາຍໃນວັດຈານານຸກົມສະບັບລາຊະບັນດິດສະຖານວ່າຂຽນຮອຍຮຶກເປັນຕົວອັກສອນເທິງແຜ່ນສີລາ ຫຼື ໂລຫະເປັນການບັນທຶກເລື່ອງລາວທີ່ເປັນເຫດການສຳຄັນລົງໃສ່ວັດຖຸທີ່ຖາວອນເຊັ່ນ: ແຜ່ນຫີນ, ແຜ່ນເງິນ, ແຜ່ນທອງ, ແຜ່ນດິບຸກ, ໃບລານ ຫຼື ອາດຈະຈາຣຶກໄວ້ຕາມແຜນໜັງຂອງບູຮານສະຖານ ຫຼື ປູຊະນີຍະວັດຖຸໄດ້ແກ່ທີ່ແທນຕັ້ງພະພຸດທະຮູບ ເປັນຕົ້ນເລື່ອງລາວຕ່າງໆທີ່ຈາຣຶກໄວ້ສ່ວນຫຼາຍເປັນທີ່ໜ້າເຊື່ອຖືໄດ້ເພາະໄດ້ບັນທຶກເລື່ອງລາວທີ່ເກີດຂຶ້ນໃນຍຸກສະໄໝນັ້ນ ແລະ ກົງກັນຂ້າມຂໍ້ມູນຄວາມເປັນຈິງປະກົດຢູ່ໃນຫຼັກຖານອື່ນ.



**ບັນຈະນານຸກົມ**

**ຂ.) ພົງສາວະດານ**

ຕາມຄວາມໝາຍໃນວັດຈານານຸກົມສະບັບລາຊະບັນດິດສະຖານວ່າ ເລື່ອງລາວເຫດກ່ຽວກັບປະເທດຊາດ ຫຼື ພະມະຫາກະສັດຜູ້ເປັນປະມຸກຂອງປະເທດຊາດນັ້ນ, ໜັງສືພົງສາວະດານເປັນໜັງສືທີ່ຂຽນຂຶ້ນຈາກການຮວບຮວມເລື່ອງລາວຈາກຕຳນານ ແລະ ເອກະສານສຳຄັນຕ່າງໆແລ້ວນຳມາປະມວນຄວາມເປັນເລື່ອງດຽວກັນກັບພົງສາວະດານ. ສ່ວນຈະເປັນເລື່ອງດຽວກັບເຫດການຂອງປະເທດ ແລະ ຂອງກະສັດທີ່ສະແດງໃຫ້ເຫັນເຖິງຄວາມຈະເລີນຮຸ່ງເຮືອງ, ການຊຸດໂຊມທາງດ້ານເສດຖະກິດ-ສັງຄົມ ແລະ ວັດທະນະທຳ, ຮີດຄອງປະເພນີຕະຫຼອດຈົນໃຫ້ຄວາມຮູ້ກ່ຽວກັບບູຮານວັດຖຸ ແລະ ບູຮານສະຖານທີ່ສຳຄັນຕ່າງໆ.




**ພົງສາວະດານ**

**ຄ.) ຈົດໝາຍເຫດ**

ຕາມຄວາມໝາຍໃນວັດຈານານຸກົມສະບັບລາຊະບັນດິດສະຖານວ່າໜັງສືບອກຂ່າວຄາວທີ່ເປັນໄປລາຍງານ ຫຼື ບັນທຶກເຫດການຕ່າງໆ ທີ່ເກີດຂຶ້ນເປັນການບັນທຶກ ໂດຍຄົນທີ່ຮູ້ໜັງສື ແລະ ຮູ້ເລື່ອງລາວຕ່າງໆບັນທຶກຈະຈົດວັນ,ເດືອນ , ປີ ແລະ ບ່ອນເກີດເຫດການລົງກ່ອນ, ຈຶ່ງບັນທຶກເຫດການສຳຄັນທີ່ພົບເຫັນໃນຂະນະນັ້ນ ຫຼື ວັນເດືອນປີ ທີ່ໃກ້ຄຽງກັບເຫດການລົງໄວ້ໃນສະໄໝບູຮານ. ຈົດໝາຍເຫດ ໝາຍເຖິງການຈົດບັນທຶກຂ່າວຄາວ ຫຼື ເຫດການເລື່ອງໜຶ່ງໆ,ທີ່ເກີດຂຶ້ນໃນວັນເດືອນປີນັ້ນຈົດໝາຍເຫດທີ່ກ່ຽວຂ້ອງກັບເລື່ອງລາວຂອງຊາດຕ່າງໆເຊິ່ງແບ່ງອອກເປັນປະເພດດັ່ງນີ້:

- **ຈົດໝາຍເຫດຂອງຫຼວງ**: ເປັນການບັນທຶກກ່ຽວກັບບ້ານເມືອງ ແລະ ກະສັດ
- **ຈົດໝາຍເຫດໂຫຣາ**: ເປັນການບັນທຶກເຫດການຂອງບ້ານເມືອງ ທີ່ກ່ຽວກັບ ໂຫຣາສາດ ຜູ້ຈົດບັນທຶກອາດຈະມີຫຼາຍຄົນ ຊຶ່ງແຕ່ລະຄົນກໍ່ຈະບັນທຶກເຫດການຕ່າງໆກັນໄປຕາມຄວາມສົນໃຈ ຫຼື ແລ້ວແຕ່ຈະຮູ້ເຫດການນັ້ນໆຈຶ່ງເຮັດໃຫ້ເຫດການມີຄວາມແຕກຕ່າງກັນ.
- **ຈົດໝາຍເຫດຂອງຊາວຕ່າງດ້າວ:** ເປັນການບັດທຶກເຫດການຕ່າງໆທີ່ຊາວຕ່າງດ້າວພົບເຫັນທີ່ຕິດຕໍ່ພົວພັນກັບຊາດອື່ນ, ເອກະສານ ທີ່ເກົ່າແກ່ເລື່ອງລາວຂອງຊາດໃດ, ຊາດໜຶ່ງໄດ້ແກ່ຈົດໝາຍເຫດ.

**ງ.) ເອກະສານທາງກົດໝາຍ**

ຕາມຄວາມໝາຍໃນວັດຈະນານຸກົມສະບັບລາຊະບັນດິດສະຖານວ່າບົດບັນຍັດຊຶ່ງມີອຳນາດສູງສຸດໃນປະເທດທີ່ກ່າວຂຶ້ນໄວ້ເພື່ອໃຊ້ການບໍລິຫານ, ກິດຈະການບ້ານເມືອງ ແລະ ບັງຄັບທຸກຄົນໃນການສຳພັນລະຫວ່າງກັນ ແລະ ກັນຜູ້ໃດຝ່າຝືນຕ້ອງໄດ້ຮັບໂທດ ຫຼື ຕ້ອງຖືກບັງຄັບໃຫ້ປະຕິບັດຕາມ. ແຕ່ຄວາມໝາຍດັ່ງເດີມຂອງກົດໝາຍບັນທຶກຟ້ອງໃນອາດີດເລື່ອງໃດເລື່ອງໜຶ່ງໄວ້ເປັນຫຼັກຖານ. ສ່ວນບົດໝາຍທີ່ບັງຄັບຮັບໃຊ້ນັ້ນເອີ້ນຊື່ແຕ່ລະຢ່າງວ່າ ໄອຍະການ, ລັດຖະບັນຍັດ… ເອກະສານປະເພດນີ້. ນອກຈາກຈະໃຫ້ຄວາມຮູ້ໃນເລື່ອງລາວກົດໝາຍແລ້ວຍັງໃຫ້ຄວາມຮູ້ ແລະ ແນວຄິດໃນດ້ານປະຫວັດສາດ, ການປົກຄອງ, ສັງຄົມ, ວັດທະນະທຳ.

ຫຼັກຖານຂໍ້ມູນທາງບູຮານຄະດີ ທີ່ໄດ້ກ່າວມາແລ້ວ ຍັງມີຫຼັກຖານຂໍ້ມູນທີ່ບໍ່ມີລາຍລັກອັກສອນຊຶ່ງໄດ້ແກ່ພາສາເວົ້າມາຊ່ວຍສະໜັບສະໜູນ ຫຼື ຄົ້ນຫາຫຼັກຖານຂໍ້ມູນຢ່າງອື່ນເພື່ອໃຫ້ສຶກສາທາງບູຮານຄະດີສົມບູນຂຶ້ນໄດ້ແກ່: ນິຍາຍ, ນິທານ, ຄະຕິຊາວບ້ານເປັນເລື່ອງເລົ່າສືບຕໍ່ກັນມາ.

### 1.3. ປະເພດບອກເລົ່າ.

**ກ. ຕໍານານ**

ຕາມຄວາມໝາຍໃນວັດຈານານຸກົມສະບັບລາຊະບັນດິດສະຖານວ່າເລື່ອງສະແດງກິດຈະການອັນມີມາແລ້ວແຕ່ປາງກ່ອນເປັນເລື່ອງລາວທີ່ໄດ້ເລົ່າສືບຕໍ່ກັນມາເຊັ່ນ: ຕໍານານພຸດເຈດີເປັນການບັນທຶກເລື່ອງລາວເຫດການຕ່າງໆທີ່ເກີດຂຶ້ນໃນອະດີດສືບຕໍ່ກັນຕັ້ງແຕ່ສະໄໝບູຮານສະຖານ ຫຼື ປູຊະນີຍະວັດຖຸ ຊຶ່ງມັກຈະມີເລື່ອງກ່ຽວກັບຄວາມເຊື່ອ ແລະເລື່ອງກ່ຽວກັບປາຕິຫານປະປົນຢູ່ນໍາອີກ, ເປັນການບັກທຶກໃນລັກສະນະມູນຄວາມຈິງປະປົນກັບນິທານ.

ຂ. **ຄໍາໃຫ້ການ**

ໃນສະໄໝບູຮານເມືອງຊາວຕ່າງຊາດ ຫຼື ຊາວພື້ນເມືອງ ທີ່ໄດ້ຮູ້ເຫັນເຫດການບ້ານເມືອງ. ຕ່າງປະເທດມາ ແລະເຫັນວ່າເປັນປະໂຫຍດກໍ່ຈະເອົາຊາວຕ່າງຊາດ ຫຼື ຊາວພື້ນເມືອງ ມາຊັກຖາມຂໍ້ຄວາມທີ່ຕ້ອງການແລ້ວຈົດບັກທຶກໄວ້ເຊັ່ນຄໍາໃຫ້ການເປັນຕົ້ນ.

## 2. ສະຖານທີ່ຄົ້ນຄວ້າບູຮານຄະດີ

ສະຖານທີ່ຄົ້ນພົບທາງບູຮານທີ່ໃຊ້ສຶກສາຄົ້ນຄວ້າສາມາດຈະພົບເຫັນໄດ້: 2 ຢ່າງຄື:

### 2.1. ຫຼັກຖານຂໍ້ມູນທີ່ພົບເຫັນຢູ່ໜ້າດິນໄດ້ແກ່:

ກໍາແພງເມືອງ, ຄູເມືອງ, ຊາກໂບດ, ວິຫານເຈດີ, ຈົດໝາຍເຫດ, ຕໍານານພົງສາວະດານ, ເຄື່ອງປັ້ນດິນເຜົາ, ແຫວນ, ສາຍສ້ອຍເປັນຕົ້ນ.

### 2.2. ຫຼັກຖານຂໍ້ມູນທີ່ຄົ້ນພົບໃນພື້ນດິນໄດ້ແກ່:

ສິ່ງຕ່າງໆດັ່ງກ່າວມາແລ້ວທີ່ຝັງຢູ່ໃນດິນລວມເຖິງໂຄງກະດູກຄົນ, ກະດູກສັດເຄື່ອງສິ່ງຂອງໃຊ້ອື່ນໆ ແລະ ສິ່ງທີ່ກ່ຽວຂ້ອງກັບຄົນ.

# ບົດທີ 3

# ກໍລະນີການຄົ້ນພົບບູຮານຄະດີ

ຫຼັກຖານຂໍ້ມູນທາງບູຮານຄະດີມີຢູ່ຫຼາຍຢ່າງເຊັ່ນ: ເຄື່ອງໃຊ້ທີ່ເຮັດດ້ວຍດິນເຜົາ, ລູກປັດ, ປອກແຂນ, ຂວານຫີນ, ໂຄງກະດູກຄົນ, ພະພຸດທະຮູບ, ເທວະຮູບ, ເມືອງບູຮານ, ຄູເມືອງ, ຊາກບູຮານ, ຊາກເຈດີ, ຈາຣຶກຕຳນານ, ພົງສາວະດາພາບຂຽນ, ພາບແກະສະຫຼັກ... ສິ່ງຕ່າງໆເຫຼົ່ານີ້ຈະພົບໄດ້ຈາກເຫດການດັ່ງນີ້ :

## 1. ການຄົ້ນພົບໂດຍບັງເອີນ

ບູຮານວັດຖຸ ຄົ້ນພົບແບບບັງເອີນ ມັກຈະບໍ່ໄດ້ຫຼັກຖານຂໍ້ມູນຢ່າງອື່ນມາປະກອບ, ການສຶກສາຂໍ້ມູນຄືງຈະໄດ້ແຕ່ວັດຖຸພຽງຢ່າງດຽວເຮັດໃຫ້ວັດຖຸທີ່ພົບນັ້ນບໍ່ມີຄຸນຄ່າໃນການສຶກສາທາງບູຮານຄະດີແຕ່ເຖິງຢ່າງໃດກໍຕາມການຄົ້ນພົບບູຮານຄະດີໂດຍບັງເອີນ, ກໍ່ເປັນການຊ່ວຍສະຫງວນຮັກສາຫຼັກຖານຂໍ້ມູນທາງບູຮານຄະດີໄດ້ທາງໜຶ່ງ, ໂອກາດທີ່ພົບເຫັນບູຮານວັດຖຸດ້ວຍວິທີນີ້ຄື:

### 1.1 ສະພາບພູມມີປະເທດປ່ຽນແປງ

ການພົບຫຼັກຖານທາງ ບູຮານຄະດີດ້ວຍວິທີນີ້ມີທຳມະຊາດຫຼາຍຢ່າງເຮັດໃຫ້ພູມີປະເທດປ່ຽນແປງເຊັ່ນ: ລົມ, ຝົນ, ແມ່ນ້ຳລຳທານເປັນຕົ້ນຕາມພື້ນດິນບາງແຫ່ງ. ເມື່ອຝົນຕົກເລື້ອຍໆຈະເຮັດໃຫ້ໜ້າດິນຫຼຸດລົງມາຂ້າງລ່າງຈຶ່ງເຮັດໃຫ້ເຄື່ອງໃຊ້ສອຍຕ່າງໆທີ່ເຮັດດ້ວຍດິນເຜົາ, ຂວານຫີນຫຼືບູຮານວັດຖຸອື່ນໆປະກົດການເຊັ່ນນີ້ຊາວໄຮ່ນາຈະພົບເຫັນສິ່ງຕ່າງໆໄດ້ເລື້ອຍໆ

ສະໄໝກ່ອນມະນຸດມັກຈະຕັ້ງບ້ານເຮືອນຢູ່ອາໃສຕາມແຄມແມ່ນ້ຳລຳຄອງເພາະແມ່ນ້ຳຕ່າງໆເປັນບ່ອນຄົມມະນາຄົມທີ່ສຳຄັນທຽບກັບຖະໜົນໃນປັດຈຸບັນທັງເປັນແຫຼ່ງທີ່ອຸດົມສົມບູນໄປດ້ວຍອາຫານ ແລະ ສະດວກແກ່ການປູກຝັງຕໍ່ມາເມື່ອຄົນພວກນັ້ນອົບພະຍົບໄປຢູ່ທີ່ອື່ນດິນໃນບໍລິເວນນັ້ນກໍ່ຮ້າງ, ຂີ້ດິນໃນບໍລິເວນນັ້ນທັບຖົມສູງຂຶ້ນ. ເມື່ອຖືກນ້ຳເຊາະຕະລິ່ງຝັ່ງຈຶ່ງພົບເຫັນເຄື່ອງມື, ເຄື່ອງໃຊ້ຂອງຄົນສະໄໝນັ້ນທີ່ດິນຢູ່ໃນດິນແຄມແມ່ນ້ຳ.

### 1.2 ຂະນະນ້ຳລົ້ນ ຫຼື ນ້ຳແຫ້ງ

ໂດຍປົກກະຕິຢູ່ຕາມບໍ່ຕາມບຶງ ຫຼື ທະເລຈະມີນ້ຳຂັງຢູ່ເຕັມແຕ່ບາງຄັ້ງນ້ຳຈະລົດລົງຫຼືແຫ້ງລົງເຮັດໃຫ້ເຫັນບູຮານຄະດີເຊັ່ນ : ທະເລສາບເມືອງ ( **Zurich** ) **ປະເທດ Switzerland** ( ສະວິດສແລນ ) ເມື່ອປີຄ.ສ **1853** ນ້ຳທະເລສາບລົດລົງຫຼາຍຜິດປົກກະຕິເຮັດໃຫ້ພົບເຮືອນຂອງໝູ່ບ້ານຮ້າງຂອງຄົນສະໄໝບູຮານພົ້ນຂຶ້ນມາໃຫ້ເຫັນເປັນຈຳນວນຫຼວງຫຼາຍແລະຍັງໄດ້ພົບເຮືອຂາດ, ເຂົ້າສາລີ, ເບັດ, ຕຶກປາ, ແຫ, ກະດູກສັດບົກ ແລະ ສັດນ້ຳ ໃນບໍລິເວນໝູ່ບ້ານສິ່ງຕ່າງໆເຫຼົ່ານີ້ເຮັດໃຫ້ຮູ້ວ່າຄົນໃນສະໄໝນັ້ນ.ນອກຈາກຈະລ່າສັດບົກແລ້ວຍັງຮູ້ຈັກລ່າສັດນ້ຳມາກິນເປັນອາຫານສ່ວນເຮືອນອກຈາກຈະໃຊ້ເປັນອຸປະກອນໃນການຈັບສັດນ້ຳແລ້ວຍັງໃຊ້ໃນການຄົມມະນາຄົມຕິດຕໍ່ໝູ່ບ້ານອື່ນໆອີກ.

### 1.3 ຂຸດດິນເພື່ອການກໍ່ສ້າງ ແລະ ການປູກຝັງ

ໃນການກໍ່ສ້າງອາຄານ, ຂົວ, ທໍ່ນ້ຳ, ຖະໜົນຫົນທາງ, ຄອງເໝືອງອື່ນໆ ຈຳເປັນຕ້ອງຂຸດດິນເພື່ອໃຊ້ໃນກິດຈະການກໍ່ສ້າງບາງຄັ້ງກໍ່ພົບເຫັນຫຼັກຖານຂໍ້ມູນທາງບູຮານຄະດີເຊັ່ນ: ກະໂຫຼກຫົວຂອງ Hippoptamus ແຂວງນະຄອນສະຫວັນປະເທດໄທຊຶ່ງເປັນສັດຊະນິດໜຶ່ງທີ່ອາໃສຢູ່ໃນຍຸກptioceNeຫຼືປະມານ 11 ລ້ານປີມາແລ້ວ. ການສ້າງຖະໜົນຫົນທາງຫຼາຍແຫ່ງກໍ່ເຮັດໃຫ້ເກີດພົບເຫັນຫຼັກຖານທາງບູຮານຄະດີໄດ້ເຊັ່ນ: ເສດເຄື່ອງໃຊ້ປະຈຳວັນທີ່ເຮັດດ້ວຍ

ດິນເຜົາ, ຂວານຫີນຝົນ, ເງິນຕາ, ເຄື່ອງມືເຄື່ອງໃຊ້ແລະເຄື່ອງປະດັບທີ່ເຮັດດ້ວຍທອງສຳລິດ ແລະ ຫຼັກ. ຢູ່ຕາມເໝືອງແຮ່ບາງແຫ່ງກໍ່ພົບບູຮານວັດຖຸຫຼາຍຊະນິດເຊັ່ນ: ຂວານຫີນ, ຂວານທອງສຳລິດ ແລະ ເຄື່ອງມືເຄື່ອງຝຊ້ຫຼາຍຢ່າງ. ຊຶ່ງມີບູຮານວັດຖຸສະໄໝກ່ອນປະຫວັດສາດ ແລະ ສະໄໝປະຫວັດສາດ ຫຼື ໃນບາງຄັ້ງມີການຂຸດຫຼຸມເພື່ອປູກພືດຍັງໄດ້ພົບບູຮານວັດຖຸທີ່ຝັງຈົມຢູ່ໃນດິນເຊັ່ນກັນ.

### 1.4 ຂຸດຄອງ, ບຶງ, ໜອງ ຫຼື ການຫາສັດນ້ຳ

ເຮັດໃຫ້ພົບຫຼັກຖານຂໍ້ມູນທາງບູຮານຄະດີທີ່ໜ້າສົນໃຈຫາກບໍລິເວນນັ້ນມີຊຸມຊົນບູຮານ ຫຼື ເຄີຍເປັນເສັ້ນທາງສັນຈອນໄປມາໃນສະໄໝກ່ອນໄດ້ພົບເຫັນຖ້ວຍ, ຊາມ ແລະ ຊາກເຮືອຈົມຢູ່ໃນທະເລ, ເຮັດໃຫ້ຮູ້ວ່າບໍລິເວນນັ້ນ ແລະ ບໍລິເວນໃກ້ຄຽງມີຫຼັກຖານທາງບູຮານຄະດີຢູ່ໃນທະເລເປັນສາເຫດທີ່ພາໃຫ້ມີການສຳຫຼວດ ແລະ ຂຸດຄົ້ນທາງບູຮານຄະດີໃຕ້ນ້ຳໃນເວລາຕໍ່ມາ.

### 1.5 ຜົນຈາກສົງຄາມ

ການພົບຫຼັກຖານຂໍ້ມູນທາງບູຮານຄະດີ ດ້ວຍວິທີນີ້ມີໂອກາດທີ່ຈະພົບເຫັນໄດ້ນ້ອຍຄັ້ງ ເຊັ່ນເມື່ອສົງຄາມໂລກຄັ້ງທີສອງທະຫານຍີ່ປຸ່ນຈັບສະເລີຍເສິກຝ່າຍ ສຳພັນທະມິດໄດ້ຈຳນວນຫຼາຍ ແລະ ໃຊ້ສະເລີຍເສິກສ້າງເສັ້ນທາງລົດໄຟຈາກປະເທດໄປສູ່ປະເທດພະມ້າ ໃນຂະນະທີ່ສະເລີຍເສິກເຫຼົ່ານັ້ນ ກຳລັງສ້າງທາງໄປເຖິງບໍລິເວນທາງນິກກະຕ່ອຍ ຢູ່ໃນຕົວເມືອງຂຶ້ນກັບແຂວງຈັນທະບູລີປະເທດໄທ Dr H R Vanheekeren ຊຶ່ງນັກບູຮານຄະດີຊາວລັນດາ ແລະ ຖືກຈັບເປັນສະເລີຍສ້າງເສັ້ນທາງນັ້ນຢູ່. ໄດ້ພົບເຄື່ອງມືຫີນສຳລັບໄວ້ທຸບໃນບໍລິເວນນັ້ນຈຳນວນຫຼວງຫຼາຍຈຶ່ງເກັບຮັກສາເຄື່ອງມືຫີນເກົ່າເລົ່ານັ້ນ ແລະ ແຕ້ມແຜນທີ່ບໍລິເວນທີ່ພົບ ເມື່ອສົງຄາມໂລກສິ້ນສຸດລົງຈຶ່ງນຳເຄື່ອງມືຫີນທີ່ພົບ, ໄປທີ່ມະຫາວິທະຍາໄລ Harvard ເພື່ອສຶກສາ ແລະ ໄດ້ຂຽນບົດຄວາມລົງໃນນັງສືພິມເປັນການເຜີຍແຜ່. ຜົນຈາກການຂຽນບົດຄວາມຈາກທ່ານຜູ້ນີ້ເຮັດໃຫ້ນັກບູຮານຄະດີຕ່າງໆ ເຂົ້າມາສຶກສາຄົ້ນຄວ້າເລື່ອງລາວໃນສະໄໝກ່ອນ ປະຫວັດສາດນັບມື້ນັບຫຼາຍຂຶ້ນ.

## 2. ການຄົ້ນພົບດ້ວຍວິທີສຳຫຼວດ

ການສຳຫຼວດທາງບູຮານຄະດີ Sur vey ຄືການກວດສອບຫາຕຳແໜ່ງຫຼັກຖານຂໍ້ມູນທາງບູຮານຄະດີຢູ່ທີ່ພື້ນດິນ ແລະ ຢູ່ເທິງພື້ນດິນເພື່ອປະໂຫຍດໃນການສຶກສາຫາຄວາມຮູ້ ແລະ ເພື່ອປະເມີນຄ່າຂອງແຫຼ່ງບູຮານຄະດີນັ້ນວ່າມີຄວາມສຳຄັນຫຼາຍໜ້ອຍພຽງຄວນທີ່ຈະມີການສຶກສາຄົ້ນຄວ້າຕໍ່ໄປຫຼືບໍ່ການສຳຫຼວດບູຮານຄະດີເປັນວິທີຮວບຮວມຫຼັກຖານຂໍ້ມູນທາງບູຮານຄະດີຂັ້ນຕົ້ນຜູ້ທີ່ສຳຫຼວດຈະຕ້ອງໃຊ້ການສັງເກດ ແລະ ພິຈາລະນາຫາສິ່ງຕ່າງໆທີ່ພົບເຫັນມາວິເຄາະເພື່ອໃຫ້ເຫັນຫຼັກຖານຂໍ້ມູນທີ່ເປັນປະໂຫຍດຕໍ່ການສຶກສາທີ່ພົບເຫັນທົ່ວໄປຈາກການສຳຫຼວດເຊັ່ນ:

### 2.1 ເສດຖ້ວຍ, ຊາມ, ໝໍ້ຕ່າງໆທີ່ເຮັດດ້ວຍດິນເຜົາ.

ໃນການສຳຫຼວດແຫຼ່ງບູຮານຄະດີ ສ່ວນຫຼາຍຈະພົບເສດຖ້ວຍ, ຊາມ, ໝໍ້ ແລະ ອື່ນໆ ທີ່ເປັນດິນເຜົາທີ່ປະກົດຢູ່ພື້ນດິນ. ເນື່ອງຈາກ, ວ່າຄົນໃນອະດີດໄດ້ນຳເອົາເຄື່ອງດັ່ງກ່າວມາໃຊ້ໃນການຫຸງຕົ້ມອາຫານເມື່ອມັນແຕກຫັກກໍຖິ້ມໄປແລ້ວຫາມາໃຊ້ໃໝ່. ຕໍ່ມາເຄື່ອງເສດດິນເຜົາທີ່ໃຊ້ນັ້ນກໍຈະຈົມຢູ່ໃນດິນຕາມລຳດັບຂອງການທັບຖົມຕໍ່ມາບໍລິເວນທີ່ເຄີຍອາໃສຢູ່ກໍຖືກປະຮ້າງໄປ, ລົມ, ຝົນ ຫຼື ສິ່ງອື່ນໆ ກໍເຮັດໃຫ້ດິນທີຢູ່ເທິງໜ້າດິນກໍຖືກພັດອອກໄປເສດເຄື່ອງກໍພົ້ນນ້າດິນຂຶ້ນມາໃຫ້ຄົນພົບເຫັນເພື່ອເປັນຫຼັກຖານຂໍ້ມູນທີ່ເປັນປະໂຫຍດຕໍ່ການສຶກສາທາງບູຮານຄະດີຫຼາຍຂຶ້ນຄື:

- ໃຊ້ເປັນສິ່ງກຳນົດອາຍຸສະໄໝຂອງແຫຼ່ງບູຮານຄະດີໄດ້ໂດຍປະມານເພາະເຄື່ອງໃຊ້ທີ່ເຮັດດ້ວຍດິນເຜົາທີ່ຄົນໃນອະດີດສ້າງຂຶ້ນມາຕາມຍຸກສະໄໝຕ່າງໆຈະມີຮູບຮ່າງລັກສະນະລວດລາຍຕົບແຕ່ງບໍ່ຄືກັນ. ເຄື່ອງໃຊ້ທີ່ເຮັດດ້ວຍດິນເຜົາ

ສະໄໝຫີນໃໝ່ສ່ວນຫຼາຍຈະເປັນສີດຳຂັດມັນ, ບາງໃບມີພື້ນດ້ານນອກຕົບແຕ່ງດ້ວຍລາຍເຊືອກທາບ. ເຄື່ອງໃຊ້ທີ່ເຮັດດ້ວຍເຄື່ອງປັ້ນດິນເຜົາຍຸກໂລຫະສ່ວນຫຼາຍພື້ນດ້ານນອກຂອງເຄື່ອງໃຊ້ຈະປັນສີຂາວລະອຽດ ແລະ ໃຊ້ສີແດງຖຽນລວດລາຍປະດັບ. ເມື່ອສຳຫຼວດພົບເຫັນເຄື່ອງໃຊ້ທີ່ເຮັດດ້ວຍດິນເຜົາຢ່າງໃດຢ່າງໜຶ່ງກໍຈະສັນນິຖານວ່າ: ໃນເບື້ອງຕົ້ນເປັນແຫຼ່ງບູຮານຄະດີສະໄໝໃດແລະມີອາຍຸເທົ່າໃດ.

- ບອກເຖິງທີ່ຕັ້ງຂອງບຊຸມຊົນໃນອະດີດ. ໃນການສຳຫຼວດຖ້າພົບເຫັນເຄື່ອງໃຊ້ທີ່ເຮັດດ້ວຍດິນເຜົາທີ່ໃດທີ່ໜຶ່ງມີຈຳນວນຫຼາຍ ແລະ ໜາແໜ້ນເປັນບໍລິເວນກ້ວາງກໍສັນນິຖານໄດ້ວ່າໃນບໍລິເວນນັ້ນອາດຈະເປັນຊຸມຊົນ ຫຼື ເມືອງຂອງຄົນໃນອະດີດ.
- ບອກເຖິງຄວາມສຳພັນຂອງຄົນໃນອະດີດການສຳຫຼວດຖ້າພົບເສດເຄື່ອງໃຊ້ທີ່ເຮັດດ້ວຍດິນເຜົາໃນຄົວເຮືອນລັກສະນະດຽວກັນໃນທ້ອງຖິ່ນຕ່າງໆກໍອາດຈະເວົ້າໄດ້ວ່າໃນທ້ອງຖິ່ນເລົ່ານັ້ນຄົງມີການພົວພັນກັນທາງໃດທາງໜຶ່ງຮັບເອົາແບບການເຮັດຕາມຫຼືການອົບພະຍົບຜູ້ຄົນຈາກທີ່ໜຶ່ງໄປຍັງອີກທີ່ໜຶ່ງ.
- ບອກເຖິງເສັ້ນທາງການຄ້າ ຫຼື ການຄົມມະນາຄົມຈາກການສຳລວດເສດເຄື່ອງໃຊ້ທີ່ເຮັດດ້ວຍດິນເຜົາລັກສະນະດຽວກັນໃນຫຼາຍທ້ອງຖິ່ນທີ່ຈະຮູ້ເຖິງເສັ້ນທາງການຄ້າ ຫຼື ການຄົມມະນາຄົມຂອງຄົນໃນອະດີດໄດ້ເຊັ່ນ: ການພົບຖ້ວຍຊາມຈາກແຫຼ່ງເຕົາດິນເຜົາ, ມີລັກສະນະຄ້າຍຄືກັບຖ້ວຍ, ຊາມທີພົບຈາກການຂຸດຄົ້ນບູຮານຄະດີເຊິ່ງຖ້ວຍຊາມດັ່ງກ່າວທີ່ພົບເຫັນຢູ່ປະເທດອື່ນໆເຮັດໃຫ້ຮູ້ເຖິງເສັ້ນທາງການຄ້າຫຼືການຄົມມະນາຄົມຂອງຄົນໃນອະດີດ.
- ບອກເຖິງແຫຼ່ງຜະລິດ: ຖ້າພົບບໍລິເວນໃດບໍລິເວນໜຶ່ງເປັນໂພນ ແລະ ມີເສດເຄື່ອງທີ່ເຮັດດ້ວຍດິນເຜົາ ແລະເສດກິດຂອງເຄື່ອງໃຊ້ທີ່ເປັນວັດຖຸທີ່ສ້າງເຕົາເຜົາຖ້ວຍ, ຊາມປະປົນກັນເປັນຈຳນວນຫຼາຍກໍສັນນິຖານວ່າໃນບໍລິເວນນັ້ນເປັນບ່ອນຜະລິດຖ້ວຍຊາມ.
- ບອກເຖິງຂີດຂັ້ນຄວາມຈະເລີນຂອງຄົນໃນອະດີດໂດຍເບິ່ງຈາກເສດເຄື່ອງໃຊ້ທີ່ເຮັດດ້ວຍດິນເຜົາພົບວ່າມີການພັດທະນາ ຫຼື ບໍ່ເຊັ່ນ: ເຄື່ອງໃຊ້ດິນເຜົາມີຮູບຮ່າງລັກສະນະລວດລາຍຕົບແຕ່ງ ແລະ ມີການເຄືອບເຊິ່ງສະແດງວ່າຄົນສະໄໝນັ້ນມີການພັດທະນາໃນການເຮັດເຄື່ອງໃຊ້ທີ່ເຮັດດ້ວຍດິນເຜົາໄດ້ດີກວ່າສະໄໝທີ່ຜ່ານມາ.
- ບອກເຖິງຊີວິດການເປັນຢູ່ຂອງຄົນໃນຊຸມຊົນການເຮັດເຄື່ອງໃຊ້ດ້ວຍດິນເຜົາເປັນງານສີລະປະຢ່າງໜຶ່ງໂດຍສະເພາະການຕົບແຕ່ງພື້ນໜ້າຂອງເຄື່ອງໃຊ້ທີ່ເຮັດດ້ວຍດິນເຜົາ, ທີ່ຜູ້ຜະລິດໄດ້ຖ່າຍທອດອອກມາຈາກຄວາມຮູ້ສຶກນຶກຄິດຊຶ່ງບົ່ງບອກເຖິງສະພາບຈິດໃຈ ແລະ ການດຳລົງຊີວິດຂອງຜູ້ຜະລິດລວດລາຍພື້ນຜິວຂອງເຄື່ອງໃຊ້ມີຄວາມລະອຽດກໍບົ່ງບອກເຖິງສະພາບຈິດໃຈອ່ອນໂຍນ ແລະ ຄວາມເປັນຢູ່ຂອງຜູ້ຜະລິດມີຄວາມສຸກ.

**2.2 ເຄື່ອງປະດັບ (ເຄື່ອງເອ້)**

ລູກປັດເປັນເຄື່ອງປະດັບຢ່າງໜຶ່ງທີ່ຄົນສ້າງຂຶ້ນຕັ້ງແຕ່ສະໄໝກ່ອນປະຫວັດສາດ ແລະ ສ້າງເລື້ອຍໆຈົນຮອດສະໄໝປະຫວັດສາດເຊິ່ງມີລັກສະນະຄ້າຍຄືກັນຫຼາຍວັດຖຸທີ່ຄົນໃນອະດີດມານຳໃຊ້ເປັນໝາກປັດໄດ້ແກ່ກະດູກສັດ, ເປືອກຫອຍ, ເຂົາສັດ, ງາຊ້າງ, ຫີນ, ແກ້ວ ແລະ ໂລຫະ. ສະນັ້ນເປັນການຍາກທີ່ຈະໃຊ້ລູກປັດເປັນສິ່ງກຳນົດອາຍຸສະໄໝຂອງແຫຼ່ງບູຮານຄະດີວ່າຢູ່ໃນສະໄໝໃດ. ນອກຈາກຈະພົບຫຼັກຖານຂໍ້ມູນຢ່າງອື່ນມາປະກອບເຄື່ອງປະດັບທີ່ພົບເຫັນນອກຈາກລູກປັດແລ້ວກໍມີແຫວນ, ປອກແຂນ, ຕ້າງຫູ ເຊິ່ງຈະກຳນົດອາຍຸໃນສະໄໝນັ້ນໂດຍປະມານດ້ວຍການພິຈາລະນາລວດລາຍ ແລະ ຮູບພາຕ່າງໆ ຕະຫຼອດເຖິງແຫຼ່ງທີ່ຄົ້ນພົບຫຼືຫຼັກຖານອື່ນໆມາປະກອບອີກ.

**2.3 ເຄື່ອງມື, ເຄື່ອງໃຊ້**

ເຊິ່ງໄດ້ພົບຈາກການສຳຫຼວດເຊັ່ນ: ຂວານຫີນ, ຂວານທອງສຳລິດ, ໃບຫອກ, ຫືວລູກສອນເປັນຕົ້ນ. ສິ່ງເຫຼົ່ານີ້ມີຄຸນຄ່າໃນການສຶກສາຄົ້ນຄວ້າທາງບູຮານຄະດີເພາະສາມາດໃຊ້ສຶກກສາເຖິງຊີວິດການເປັນຢູ່ ແລະ ວິວັດທະນາການໃນການສ້າງເຄືອງມືເຄື່ອງໃຊ້ຂອງຄົນໃນອະດີດໄດ້..

## 2.4 ຊາກບູຮານສະຖານ

ໃນການສຳຫຼວດບໍລິເວນທີ່ເຄີຍເປັນເມືອງຫຼືຊຸມຊົນສະໄໝປະຫວັດສາດມັກຈະພົບຈາກບູຮານສະຖານທີ່ຫັກພັງເຊິ່ງ ບາງແຫ່ງມີດິນທັບຖົມເປັນໂພນຕາມຂະໜາດນ້ອຍ, ໃຫຍ່ຂອງບູຮານສະຖານນັ້ນໆບູຮານສະຖານອາດແບ່ງໄດ້ຕາມປະເພດຂອງວັດຖຸທີ່ໃຊ້ກໍ່ສ້າງຄື:

- ບູຮານສະຖານທີ່ກໍ່ສ້າງດ້ວຍດິນເຊັ່ນ:ໂນນດິນ,ຄັນຄູດິນ,ກຳແພງເມືອງຫຼືຖະໜົນເປັນຕົ້ນ
- ບູຮານສະຖານທີ່ກໍ່ສ້າງດ້ວຍດິນຈີ່ເຊັ່ນ: ໂບດ, ວິຫານ ( ວັດ, ເຈດີ, ທາດ ) ກຳແພງເມືອງ, ອາຄານຕ່າງເປັນຕົ້ນ.
- ບູຮານສະຖານທີ່ກໍ່ສ້າງດ້ວຍຫີນເຊັ່ນ: ຜາສາດລາຊະວັງ, ເທວະສະຖານເປັນຕົ້ນ. ຫີນທີ່ນິຍົມໃຊ້ກໍ່ສ້າງສ່ວນຫຼາຍໄດ້ແກ່ຫີນຊາຍແລະຫີນແລງຫຼືສີລາແດງ.
- ບູຮານສະຖານທີ່ກໍ່ສ້າງດ້ວຍໄມ້ເຊັ່ນ: ສາລາ, ກຸຕິ, ບ້ານເປັນຕົ້ນ. ບັນດາສິ່ງກໍ່ສ້າງທີ່ເຮັດດ້ວຍໄມ້ເຫັນໜ້ອຍເພາະວ່າໄມ້ບໍ່ທົນຄືກັບວັດຖຸຊະນິດຕ່າງໆທີ່ກ່າວມາຂ້າງເທິງ.

## 2.5 ວັດຖຸກໍ່ສ້າງ

ໃນການສຳຫຼວດແຫຼ່ງບູຮານຄະດີທີ່ເປັນຊຸມຊົນສະໄໝປະຫວັດສາດມັກຈະພົບເຫັນວັດທີ່ຄົນໃນອະດີດນຳມາໃຊ້ກໍ່ສ້າງອາຄານຕ່າງໆເຊັ່ນ: ດິນຈີ່ເປັນວັດຖຸກໍ່ສ້າງທີ່ສ້າງຂຶ້ນຕັ້ງແຕ່ສະໄໝທາວາຣະວະດີ ( ສະໄໝບູຮານ ) ເປັນຕົ້ນມາ. ດິນຈີ່ສະໄໝນີ້ຈະມີຂະໜາດໃຫຍ່ກວ່າສະໄໝຕໍ່ມາ, ດິນຈີ່ບາງແຜ່ນຈະມີຮອຍຂີດຂຽນເປັນຮູບສັດ, ຄົນ, ລວດລາຍຕ່າງໆຫຼືບາງແຜ່ນຈະມີຕົວໜັງສື.ຖ້າພົບດິນຈີ່ມີລັກສະນະດັ່ງກ່າວຈະຕ້ອງເກັບຮອບຮອມໄວ້ເພາະຈະເປັນປະໂຫຍດຕໍ່ການສຶກສາຄົ້ນຄວ້າເຖິງລວດລາຍ ຫຼື ຕົວໜັງສືທີ່ປະກົດເຫັນດິນຈີ່ສະໄໝບູຮານສ່ວນຫຼາຍຈະມີຮູບຮ່າງເປັນຮູບກັບສາກຄືດິນຈີ່ທີ່ໃຊ້ກໍ່ສ້າງອາຄານບ້ານເຮືອນໃນປັດຈຸບັນ. ດິນຈີ່ທີ່ໃຊ້ກໍ່ສ້າງບູຮານສະຖານສະໄໝກ່ອນ ບາງແຜ່ນເຈາະຮູ ຫຼື ເຮັດເປັນໄລຍະ ( ເປັນຮ່ອງ ) ໄວ້ທີ່ໜ້າແຜ່ນດິນຈີ່ ຫຼື ບາງແຜ່ນເຮັດເປັນຮູບຫ້າລ່ຽມເອີ້ນວ່າ : ດິນຊາຍ ໜັງງົວ ເພື່ອໃຊ້ກໍ່ທີ່ຄໍພະໜັງເຈດີ ( ທາດ ).

- ສີລາແລງ ມັກຈະໃຊ້ສ່ວນຖານຂອງອາຄານເພື່ອໃຫ້ອາຄານນັ້ນມີຄວາມທົນທານບໍ່ລຸ, ແຕ່ບູຮານສະຖານບາງແຫ່ງກໍ່ຈະໃຊ້ສີລາແລງກໍ່ສ້າງເກືອບທັງຫຼັງ. ສີລາແລງທີ່ໃຊ້ກໍ່ສ້າງອາຄານສ່ວນຫຼາຍຈະມີຂະໜາດໜ້ອຍໃຫຍ່ກວ່າຫີນຊາຍ ແລະ ຈະມີຮູບຮ່າງລັກສະນະແຕກຕ່າງກັນໄປເຊັ່ນ : ຮູບສີ່ລ່ຽມແຜ່ນຜ້າ, ຮູບມົນກົມ, ຮູບເຄິ່ງວົງກົມ, ຮູບແທ່ງຫ້າລ່ຽມ, ຮູບສີ່ລ່ຽມຈະຕຸລັດເປັນຕົ້ນ.
- ຫີນຊານ ( ຊາຍ ) ເປັນວັດຖຸທີ່ນິຍົມໃຊ້ໃນການກໍ່ສ້າງສາສະໜາຂອງຂອມໄດ້ແກ່ : ປາສາດຫີນ ແລະ ອື່ນໆ. ຫີນຊາຍສາມາດທີ່ຈະນຳມາແກະສະຫຼັກລວດລາຍຕ່າງໆປະດັບສາສະໜາ ສະຖານໃຫ້ສວຍງາມໄດ້ເຊັ່ນ : ໜ້າຂັ້ນໄດ, ເສົາປະດັບຂອມປະຕູຫີນຊາຍ ເປັນຕົ້ນ.
- ກະເບື້ອງມຸງຫຼັງຄາ ເຮັດດ້ວຍດິນເຜົາທັງເຄືອບ ແລະ ບໍ່ເຄືອບໃນສະໄໝກ່ອນນິຍົມເຮັດເປັນຮູບສີ່ລ່ຽມພືນຜ້າ, ຮູບສີ່ລ່ຽມພືນຜ້າລາຍແຫຼມ, ຮູບສີ່ລ່ຽມພືນຜ້າປາຍມົນ, ຮູບຄ້າຍບັ້ງໄມ້ຜ່າເຄິ່ງ. ຫາກສຳຫຼວດພົບວ່າບໍລິເວນໃດມີກະເບື້ອງມຸງຫຼັງຄາກໍ່ສັນນິຖານວ່າໃນບໍລິເວນນັ້ນຄົງຈະມີຊາກອາຄານຝັງດິນຢູ່ ຫຼື ເຄີຍມີອາຄານໃນບໍລິເວນນັ້ນ.

## 2.6 ເງິນຕາ

ໃຊ້ເປັນສິ່ງກຳນົດອາຍຸສະໄໝແຕ່ແຫຼ່ງບູຮານຄະດີໄດ້ໂດຍປະມານເງິນຕາເລີ່ມມີໃຊ້ແຕ່ສະໄໝຟູນານ, ສະໄໝທາວາຣະວາດີ ( ສະໄໝບູຮານ ), ສະໄໝສຸໂຂໄທ, ສະໄໝອາຍຸທະຍາ ແລະ ສະໄໝລັດຕະນະໂກສິນ.ດັ່ງນັ້ນ, ເມື່ອສຳຫຼວດພົບສິ່ງຕ່າງໆດັ່ງກ່າວມາ, ຜູ້ສຳຫຼວດຈະຕ້ອງຈົດບັນທຶກຢ່າງລະອຽດວ່າເປັນບູຮານສະຖານ ຫຼື ບູຮານວັດຖຸສະຖານຫຍັງ, ສະໄໝໃດ, ເຮັດດ້ວຍວັດຖຸອັນໃດ, ພົບຢູ່ໃນບໍລິເວນໃດ, ພົບລວມກັບວັດຖຸອັນໃດ, ພົບໄດ້ແນວໃດ, ມີລັກສະນະ ແລະ ຂະໜາດເທົ່າໃດ. ສະພາບແວດລ້ອມທີ່ພົບບູຮານສະຖານ ຫຼື ບູຮານວັດຖຸເປັນແນວໃດເປັນຕົ້ນ ເພື່ອໃຊ້ເປັນຫຼັກຖານຂໍ້ມູນໃນການສຶກສາຄົ້ນຄວ້າຕໍ່ໄປ. ສິ່ງທີ່ຈະເຮັດໃຫ້ເກີດຄວາມສັບສົນໃນການສຳຫຼວດທາງບູຮານຄະດີສິ່ງທີ່ພົບບາງຢ່າງ ກໍຈະເຮັດໃຫ້ເກີດຄວາມສັບສົນໄດ້ເຊັ່ນ :

- ສິ່ງທີ່ເກີດຂຶ້ນເອງຕາມທຳມະຊາດ ຫີນບາງບ່ອນຕັ້ງຊ້ອນກັນຄ້າຍຄືອະນຸສາວະລີຫີນຊະນິດໜຶ່ງຂອງສໄໝກ່ອນປະຫວັດສາດເຊິ່ງອາດເຮັດໃຫ້ບາງຄົນເກີດຄວາມສັບສົນໄດ້ວ່າເປັນບູຮານສະຖານຄື ພະລານຫີນ, ກ້ອນຫີນ, ທີ່ຕັ້ງຊ້ອນກັນຕາມທຳມະຊາດ. ບາງແຫ່ງມີການກໍ່ສ້າງຕໍ່ເຕີມໃນພາຍຫຼັງເພື່ອໃຊ້ເປັນສາສະໜາ ຫຼື ເພື່ອຈຸດປະສົງອື່ນ.
- ການເຮັດຮຽນແບບ ບູຮານວັດຖຸປັດຈະບັນມີການເຮັດສິ່ງຂອງຮຽນແບບຂອງບູຮານຫຼາຍເຊັ່ນ : ການຫຼໍ່ຮູບພະປອມໂດຍໃຊ້ໂຮງຫຼໍ່ ຫຼື ເນື້ອວັດຖຸເກົ່າ ເມື່ອສຳເລັດແລ້ວກໍນຳໄປແຊ່ນ້ຳ ຫຼື ແຊ່ສານເຄມີ ຫຼື ຝັງໄວ້ໃນດິນເປັນເວລາພໍສົມຄວນຈຶ່ງນຳໄປຂາຍໃຫ້ຄົນອື່ນ, ຄົນບໍ່ຮູ້ກໍເຊື່ອວ່າເປັນວັດຖຸບູຮານ.
- ວັດຖຸບູຮານທີ່ມີການເຄື່ອນຍ້າຍອາດຈະເຮັດໃຫ້ມີຄວາມສັບສົນໄດ້ວ່າສິ່ງທີ່ເຫັນນັ້ນເປັນສິ່ງທີ່ມີມາແຕ່ເດີມໃນບ່ອນນັ້ນ. ການກຽມເພື່ອການສຳຫຼວດໃນການສຳຫຼວດເພື່ອຫາຮ່ອງຮອຍຫຼັກຖານຂໍ້ມູນທາງບູຮານຄະດີບ່ອນໃດກໍຕາມຈະຕ້ອງກຽມສິ່ງຕ່າງໆເພື່ອໃຫ້ວຽກທີ່ສຳຫຼວດດຳເນີນໄປດ້ວຍຄວາມຮຽບຮ້ອຍເຊິ່ງມີຂັ້ນຕອນທີ່ຈະຕ້ອງດຳເນີນກ່ອນການສຳຫຼວດດັ່ງນີ້ :

**ເງິນທີ່ໃຊ້ໃນການສຳຫຼວດແມ່ນເງິນທີ່ຈະຫາໄດ້ມີ 3 ປະເພດຄື :**

1) ເງິນຈາກງົບປະມານຂອງລັດຖະບານ. ສ່ວນຫຼາຍມັກຈະມີຈຳນວນໜ້ອຍ, ການໃຊ້ຈ່າຍຫຍຸ້ງຍາກຕໍ່ການປະຕິບັດງານໃນພາກສະໜາມເພາະໃນການສຳຫຼວດມັກຈະມີລາຍການໃຊ້ຈ່າຍທີ່ນອກເໜືອຂໍ້ຕົກລົງສະເໜີ.
2) ເງິນຈາກເກາະຊິນ, ມູນລະນິທິ, ອົງການຕ່າງໆສ່ວນຫຼາຍແມ່ນຈະເປັນເງິນທີ່ສະເໜີ ແລະ ໄດ້ຮັບອະນຸມັດ. ດັ່ງນັ້ນ, ບັນຫາເລື່ອງຈຳນວນເງິນ ແລະ ການນຳສິ່ງໃບສຳຄັນຕ່າງໆຈຶ່ງບໍ່ມີ ຫຼື ມີໜ້ອຍເຮັດໃຫ້ສະດວກຕໍ່ການປະຕິບັດງານ.
3) ການຮ່ວມມືກັບນັກບູຮານຄະດີຊາວຕ່າງປະເທດໂດຍໃຊ້ແຫຼ່ງເງິນທຶນຈາກຕ່າງປະເທດ.

ຮວບຮວມແຜນທີ່ແຜນຜັງຂອງບໍລິເວນທີ່ຈະສຳຫຼວດ ການຮວບຮວມສິ່ງດັ່ງກ່າວກໍ່ເພື່ອສຶກສາລັກສະນະພູມີປະເທດແລະສຶກສາຫາຄວາມຮູ້ທາງບູຮານຄະດີໃຫ້ຮູ້ເປັນແນວທາງໃນການປະຕິບັດງານພາກສະໜາມແຜນທີ່ທີ່ນຳມາໃຊ້ໃນງານບູຮານຄະດີມີຢູ່ຫຼາຍໆຢ່າງເຊັ່ນ: ແຜນທີ່ຂອງກົມແຜນທີ່ທະຫານ ເປັນແຜນທີ່ທີ່ເຮັດລະອຽດຈາກພາບຖ່າຍທາງອາກາດສຳລັບໃຊ້ປະໂຫຍດທາງລາຊະການທະຫານ, ແຕ່ສາມາດນຳມາໃຊ້ໃນງານບູຮານຄະດີເພື່ອພິຈາລະນາລັກສະນະພູມີປະເທດ ແລະ ທີ່ຕັ້ງຂອງແຫຼ່ງບູຮານຄະດີໄດ້.

- ແຜນທີ່ທາງທໍລະນີວິທະຍາ ເປັນແຜນທີ່ຂອງກົມຊັບພະຍາກອນເຮັດຂຶ້ນສະແດງເຖິງຊັ້ນຫີນ ແລະ ແຮ່ຕ່າງໆທີ່ມີໃນປະເທດທີ່ເປັນປະໂຫຍດຕໍ່ງານບູຮານຄະດີທີ່ຈະໃຊ້ສຶກສາເພື່ອຮູ້ເຖິງຊະນິດຂອງຫີນ ແລະ ແຮ່ເຊິ່ງເປັນວັດສະດຸທີ່ນຳມາໃຊ້ເປັນສິ່ງກໍ່ສ້າງ, ເຮັດເຄື່ອງມືເຄື່ອງໃຊ້ ແລະ ເຄື່ອງປະດັບວ່າຫີນ ແລະ ແຮ່ນັ້ນມີຢູ່ໃນທ້ອງຖິ່ນນັ້ນເອງ ຫຼື ນຳມາຈາກບ່ອນອື່ນ.

-	ແຜນທີ່ທາງແຂວງ ຫຼື ເມືອງ ເປັນແຜນທີ່ສະແດງອານາເຂດຂອງແຂວງ ຫຼື ເມືອງຢ່າງລະອຽດສະແດງລັກສະນະພູມີປະເທດ ແລະ ສິ່ງກໍ່ສ້າງ ຫຼື ບູຮານສະຖານທີ່ຢູ່ໃນແຂວງ ຫຼື ແຜນທີ່ດັ່ງກ່າວມີປະໂຫຍດໃນທາງດ້ານບູຮານຄະດີ ເພາະສາມາດໃຊ້ສຶກສາລັກສະນະພູມີປະເທດ ແລະ ແຫຼ່ງບູຮານຄະດີຂອງແຂວງ ຫຼື ເມືອງນັ້ນໄດ້.

-	ແຜນທີ່ລັກສະນະພູມີປະເທດ ເປັນແຜນທີ່ສະແດງລັກສະນະພູມີປະເທດຂອງແຂວງຕ່າງໆທັງປະເທດ, ບອກເຖິງແມ່ນ້ຳລຳເຊສາຍສຳຄັນ, ປ່າໄມ້, ພູ, ແຫຼ່ງນ້ຳ, ເສັ້ນທາງຄົມມະນາຄົມ ແລະ ອື່ນໆ ເຊິ່ງຈະເປັນປະໂຫຍດໃນການກະກຽມອຸປະກອນການສຳຫຼວດໄດ້ຖືກຕ້ອງເໝາະສົມກັບລັກສະນະພູມີປະເທດທີ່ຈະໄປສຳຫຼວດ.

ສຶກສາຄົ້ນຄວ້າຫາໜັງສື ຫຼື ເອກະສານ ຜູ້ສຳຫຼວດຕ້ອງສຶກສາຄົ້ນຄວ້າໜັງສື ຫຼື ເອກະສານເພື່ອຈະຫາຮ່ອງຮອຍຫຼັກຖານຂໍ້ມູນ ຫຼື ຮູ້ປະຫວັດບູຮານວັດຖຸຂອງບໍລິເວນທີ່ຈະໄປສຳຫຼວດ. ໜັງສື ຫຼື ເອກະສານຄົ້ນຄວ້າມີຢູ່ຫຼາຍຢ່າງນຳກັນຄື :

-	ໜັງສືປະຫວັດສາດ ຫຼື ຕຳນານ
-	ຈາຣຶກທີ່ພົບໃນບໍລິເວນທີ່ຈະໄປສຳຫຼວດ ຫຼື ບໍລິເວນໃກ້ຄຽງ
-	ໜັງສືກ່ຽວກັບການທ່ອງທ່ຽວ ຫຼື ບ່ອນກວດວຽກ
-	ລາຍງານການສຳຫຼວດ ຫຼື ການຂຸດຄົ້ນ

ສຶກສາແບບຢ່າງບູຮານວັດຖຸສະຖານຜູ້ສຳຫຼວດຄວນຈະໄດ້ສຶກສາແບບຢ່າງບູຮານສະຖານພົບຈາກບໍລິເວນທີ່ຈະໄປສຳຫຼວດ ຫຼື ບໍລິເວນໃກ້ຄຽງບູຮານວັດຖຸອາດຈະສຶກສາໄດ້ຈາກພິພິທະພັນ, ອະນຸສອນສອນແຫ່ງຊາດ ຫຼື ຮູບຖ່າຍໃນໜັງສືບາງເຫຼັ້ມ ຫຼື ຂໍເບິ່ງນຳນັກສະສົມຂອງເກົ່າ. ການສຶກສາແບບຢ່າງບູຮານວັດຖຸສະຖານຂອງບໍລິເວນທີ່ຈະໄປສຳຫຼວດ ກໍເພື່ອຈະໃຫ້ຮູ້ຖືງຄວາມສຳຄັນ ແລະ ຮູບຮ່າງລັກສະນະຂອງບູຮານວັດຖຸສະຖານນັ້ນວ່າມີຮູບແບບໃດຄ້າຍຄືກັນ ຫຼື ຕ່າງກັນກັບບູຮານວັດຖຸສະຖານສະໄໝອື່ນໆຄືແນວໃດ.

ປະສານງານກັບບຸກຄົນໃນທ້ອງຖິ່ນ ຜູ້ສຳຫຼວດຈະຕ້ອງປະສານງານກັບຄົນໃນທ້ອງຖິ່ນທີ່ຈະລົງໄປສຳຫຼວດຊຶ່ງໄດ້ແກ່ບ້ານ, ເມືອງ, ຄູບາ... ແລະ ຜູ້ທີ່ຊາວບ້ານນັບຖື ເພື່ອຄວາມສະດວກປອດໄພ ແລະ ໄດ້ຮັບການຮ່ວມມືໃນການລົງສຳຫຼວດ.

ຄະນະສຳຫຼວດນັບວ່າເປັນປັດໄຈທີ່ສຳຄັນທີ່ສຸດຢ່າງໜຶ່ງຂອງການສຳຫຼວດ. ຜູ້ທີ່ເປັນຫົວໜ້າຄະນະສຳຫຼວດຈະຕ້ອງຈັດຄະນະສຳຫຼວດໃຫ້ເໝາະສົມກັບຊະນິດຂອງງານ, ໄລຍະເວລາ ແລະ ເງິນທຶນທີ່ໄດ້ຮັບເພື່ອຈະກຽມຄົນ ແລະ ອຸປະກອນການສຳຫຼວດໃຫ້ຖືກຕ້ອງ. ການຄັດເລືອກບຸກຄົນເຂົ້າໃນາການສຳຫຼວດເປັນສິ່ງສຳຄັນທີ່ຕ້ອງພິຖີພິຖັນ ໂດຍພິຈາລະນາຈາກຄວາມສົ້ນເຄີຍໃນການເຮັດວຽກ, ນິໄສໃຈຄໍ, ຄວາມສາມາດພິເສດ, ຄວາມອົດທົນ, ການເຂົ້າກັນໄດ້ກັບບຸກຄົນໃນຄະນະສຳຫຼວດ, ຄວາມມີລະບຽບວິໄນ ເພາະເປັນວຽກທີ່ຫຍຸ້ງຍາກລຳບາກຫຼາຍ, ຕ້ອງເຂົ້າປ່າເຂດທຸລະກັນດານ. ຄະນະສຳຫຼວດຕ້ອງມີຈຳນວນພົນບໍ່ຫຼາຍ, ແຕ່ລະຄົນຕ້ອງມີປະສິທິພາບຈຶ່ງຈະເຮັດໃຫ້ວຽກປະສົບຜົນສຳເລັດ.

ການປະກັນໄພໃນການເດີນທາງໄປສຳຫຼວດ ເພື່ອຮວບຮວມຫຼັກຖານຂໍ້ມູນທາງບູຮານຄະດີທີ່ຍາກລຳບາກເປັນການປະຕິບັດງານທີ່ສ່ຽງຕໍ່ອັນຕະລາຍຕ່າງໆເຊັ່ນ : ໂຈນຜູ້ຮ້າຍ, ການເຈັບເປັນ ແລະ ພາຫະນະເປ້ເພດັ່ງນັ້ນ, ເພື່ອເປັນການບຳລຸງຂວັນ ແລະ ເປັນກຳລັງໃຈແກ່ຄະນະສຳຫຼວດຈຶ່ງຄວນຈະຕ້ອງໃຫ້ມີການປະກັນໄພ.

**ການດຳເນີນການສຳຫຼວດ**

ເມື່ອເຖິງບໍລິເວນທີ່ຈະສຳຫຼວດເພື່ອຮວບຮວມຫຼັກຖານຂໍ້ມູນໃນແຫຼ່ງບູຮານຄະດີ ວຽກທີ່ຈະຕ້ອງປະຕິບັດຄື :

-	ຖ່າຍຮູບພາບພູມີປະເທດທຸກດ້ານຂອງບໍລິເວນທີ່ສຳຫຼວດ ໂດຍຕ້ອງຈົດບັນທຶກການຖ່າຍພາບທຸກພາບໄວ້ເປັນຫຼັກຖານ.

- ເຮັດແຜນຜັງບໍລິເວນທີ່ສຳຫຼວດ ແລະ ບໍລິເວນໃກ້ຄຽງຢ່າງລະອຽດໂດຍເລືອກເຮັດແຜນຜັງຊະນິດໃດຊະນິດໜຶ່ງ ຫຼື ຫຼາຍຊະນິດຕາມຄວາມເໝາະສົມຂອງວຽກ.

- ຮວບຮວມບູຮານວັດຖຸທີ່ພົບບໍລິເວນສຳຫຼວດ ແລະ ບໍລິເວນໃກ້ຄຽງເພື່ອປະໂຫຍດໃນການສຶກສາວິເຄາະພ້ອມທັງຈົດບັນທຶກ ແລະ ລົງທະບຽນບູຮານວັດຖຸທີ່ພົບເຫັນ.

- ຈົດບັນທຶກລັກສະນະພູມີປະເທດໂດຍລະອຽດການແຜ່ກະຈາຍຂອງບູຮານວັດຖຸແບບຢ່າງຂອງບູຮານຄະດີ

- ບູຮານວັດຖຸສະຖານ ທີ່ພົບເຫັນໃນຂະນະນັ້ນ. ສະພາບທາງທໍລະນີວິທະຍາ ແລະ ສະພາບແວດລ້ອມຍຸກສະໄໝຂອງແຫຼ່ງບູຮານຄະດີ ທີ່ສາມາດຈະຮູ້ໄດ້ຈາກ ບູຮານວັດຖຸສະຖານທີ່ພົບເຫັນ.

- ສອບຖາມຊາວບ້ານ ຫຼື ເຈົ້າໜ້າທີ່ ກ່ຽວກັບບູຮານວັດຖຸສະຖານທີ່ພົບໃນທ້ອງຖິ່ນ ແລະ ຂໍຖ່າຍພາບ

- ຂຸດຫຼຸມທົດສອບ ຫຼື ໃຊ້ເຄື່ອງມືເຈາະຄວັດ. ໃນກໍລະນີທີ່ບໍລິເວນໃດບໍລິເວນໜຶ່ງມີຄວາມສຳຄັນ ແລະ ຕ້ອງການຫຼັກຖານຂໍ້ມູນເພີ່ມເຕີມກໍອາດຈະເຮັດການຂຸດຄົ້ນທົດສອບ ຫຼື ໃຊ້ເຄື່ອງມືເຈາະຄວັດໃນບໍລິເວນນັ້ນແຕ່ຕ້ອງຄຳນຶງເຖິງເວລາ ແລະ ເງິນທີ່ມີຢູ່.

ເມື່ອກັບຈາກການສຳຫຼວດ ຜູ້ສຳຫຼວດຕ້ອງນຳບູຮານວັດຖຸທີ່ໄດ້ຈາກການສຳຫຼວດມາເຮັດການສຶກສາ ຫຼື ວິເຄາະດ້ວຍວິທີຕ່າງໆ ເພື່ອຈະຮູ້ຍຸກສະໄໝ, ຮູບແບບເຕັກໂນໂລຢີ ແລະ ປະໂຫຍດຂອງການໃຊ້ສອຍຂອງບູຮານວັດຖຸແຕ່ລະສິ້ນຕໍ່ຈາກນັ້ນຈຶ່ງຂຽນລາຍງານສຳຫຼວດໃນທັນທີ.

## 3. ການຄົ້ນພົບດ້ວຍການຂຸດຄົ້ນ

ການຂຸດຄົ້ນ ເປັນວິທີການຮວບຮວມຫຼັກຖານຂໍ້ມູນທາງບູຮານຄະດີທີ່ຝັງຈົມຢູ່ໃນດິນ. ຫຼັກຖານຂໍ້ມູນໄດ້ແບບວິທີຂຸດຄົ້ນນັບວ່າມີຄວາມສຳຄັນຢ່າງຍິ່ງຕໍ່ການສຶກສາຄົ້ນຄວ້າທາງບູຮານຄະດີເພາະຈະເຮັດໃຫ້ຮູ້ເຖິງສະພາບຊີວິດຄວາມເປັນຢູ່ຂອງຄົນໃນອະດີດການຂຸດຄົ້ນຈະຕ້ອງດຳເນີນວຽກຕາມຂັ້ນຕອນຕາມຫຼັກວິຊາການ.

ການຂຸດຄົ້ນ ຫຼື ການຂຸດລົງໄປໃນດິນບໍລິເວນທີ່ເປັນແຫຼ່ງບູຮານຄະດີເພື່ອ ຮວບຮວມຫຼັກຖານຂໍ້ມູນທີ່ເປັນບູຮານວັດຖຸ ຫຼື ຮ່ອງຮອຍກິດຈະກຳຂອງຄົນໃນອາດີດສຳລັບການສຶກສາຄົ້ນຄວ້າຕໍ່ໄປ

ການຂຸດຄົ້ນ ຄືການຂຸດຄົ້ນໃນບໍລິເວນທີ່ເປັນໂພນ ຫຼື ຄູນ້ຳໂດຍຂຸດຊອກດິນທີ່ທັບຖົມຊາກບູຮານຄະດີສະຖານອອກໄປເພື່ອຕ້ອງການສຶກສາຮູບຮ່າງ ແລະ ອະນຸຮັກບູຮານສະຖານນັ້ນໃຫ້ຖາວອນຕໍ່ໄປ

ການຮວບຮວມຫຼັກຖານຂໍ້ມູນທາງບູຮານຄະດີສາມາດຈະໃຊ້ວິທີການຂຸດຄົ້ນນັ້ນຂຶ້ນມາຢູ່ກັບຄວາມມຸ່ງໝາຍຂອງການສຶກສາຄົ້ນຄວ້າ ເພາະການຄົ້ນຄວ້າມີຈຸດມຸ່ງໝາຍປະເພດຂອງການຂຸດຄົ້ນ, ລະບົບຫຼຸບຂອງການຂຸດຄົ້ນວິທີການ ແລະ ດຳເນີນງານຄ້າຍຄືກັນ ປະຈຸບັນການຂຸດຄົ້ນ ແລະ ຂຸດແຕ່ງໄປພ້ອມເພື່ອຕ້ອງການສຶກສາຊັ້ນດິນ ແລະ ຮ່ອງຮອຍກິດຈະກຳຂອງຄົນໃນອະດີດທັງກ່ອນ ແລະ ຫຼັງການສ້າງບູຮານສະຖານແຫ່ງໜຶ່ງໆ.



**ຮູບທີ 3 ຮູບພາບການຂຸດຄົ້ນທາງບູຮານຄະດີ**

### 3.1 ຄວາມມຸ່ງຫວັງຂອງການຂຸດຄົ້ນ

ກ່ອນຈະດຳເນີນການຂຸດຄົ້ນ, ຕ້ອງພິຈາລະນາວ່າມີຄວາມມຸ່ງຫວັງແນວໃດ, ມີໄລຍະເວລາເທົ່າໃດ, ມີເງິນໃນການດຳເນີນງານໜ້ອຍຫຼາຍພຽງໃດ ຜູ້ທີ່ຈະຊ່ວຍການຂຸດຄົ້ນນີ້ພຽງພໍ ຫຼື ບໍ່ເພາະຄວາມມຸ່ງຫວັງຂອງການຂຸດຄົ້ນແຕ່ລະຢ່າງບໍ່ຄືກັນ, ຄວາມມຸ່ງຫວັງຂອງການຂຸດຄົ້ນບູຮານຄະດີມີດັ່ງນີ້ :

1. ເພື່ອຮວບຮວມຫຼັກຖານຂໍ້ມູນກ່ອນທີ່ຈະຖືກທຳລາຍ, ເປັນການຂຸດຄົ້ນເພື່ອສະຫງວນຫຼັກຖານຂໍ້ມູນທາງບູຮານຄະດີບໍ່ໃຫ້ຖືກທຳລາຍ ຫຼື ສູນຫາຍໄປກ່ອນການສ້າງສິ່ງຕ່າງໆ ເຊັ່ນ : ການສ້າງເຂື່ອນ, ການສ້າງຖະໜົນຫົນທາງ, ການສ້າງຂົວ, ການສ້າງເຮືອນເປັນຕົ້ນ

2. ເພື່ອຕອບບັນຫາສຳຄັນໃນການສຶກສາບູຮາຄະດີ ແລະ ປະຫວັດສາດຫຼາຍເລື່ອງຍັງມີບັນຫາທີ່ບໍ່ຈະແຈ້ງ ແລະ ຊັດເຈນການຂຸດຄົ້ນບູຮານຄະດີສາມາດຈະພິສູດເລື່ອງລາວທີ່ເປັນບັນຫາ ຫຼື ຕອບຄຳຖາມທີ່ສຳຄັນເຫຼົ່ານັ້ນໃຫ້ຊັດເຈນໄດ້ເພາະຫຼັກຖານຂໍ້ມູນທີ່ຄົນໃນອະດີດປະຖິ້ມຮ່ອງຮອຍໄວ້ຈະຖືກດິນທັບຖົມຄູນຂຶ້ນເປັນຊັ້ນຕາມໄລຍະເວລາຕັ້ງແຕ່ເກົ່າຂຶ້ນມາຫາໃໝ່ອາດເຮັດໃຫ້ຮູ້ເຫດການ ຫຼື ເລື່ອງລາວທີ່ເກີດຂຶ້ນຕາມລຳດັບກ່ອນ ແລະ ຫຼັງໄດ້




**ຮູບທີ 5 ເປົ້າໝາຍຂອງການສຶກສາບູຮານຄະດີ**

### 3.2 ປະເພດຂອງການຂຸດຄົ້ນ

ການຂຸດຄົ້ນແບ່ງອອກເປັນ 4 ປະເພດຄື :

ເລືອກຂຸດຄົ້ນສະເພາະບ່ອນທີ່ສຳຄັນ : ໄດ້ແກ່ການຂຸດຄົ້ນສ່ວນໃດສ່ວນໜຶ່ງຂອງບໍລິເວນທີ່ເປັນແຫຼ່ງບູຮານຄະດີ ເພື່ອຄົ້ນຫາຫຼັກຖານຂໍ້ມູນທີ່ສຳຄັນກ່ຽວກັບວັດທະນະທຳ, ອາຍຸ ຫຼື ສະໄໝຂອງແຫຼ່ງບູຮານຄະດີ

1. ຂຸດຄົ້ນເພື່ອໃຫ້ຮູ້ສົມບູນ : ເປັນການຂຸດຄົ້ນທົ່ວບໍລິເວນແຫຼ່ງບູຮານຄະດີໃນພື້ນທີ່ກວ້າງທີ່ສຸດເທົ່າທີ່ຈະເຮັດໄດ້ເພື່ອຄົ້ນຫາຫຼັກຖານຂໍ້ມູນທາງບູຮານຄະດີໃຫ້ໄດ້ຫຼາຍທີ່ສຸດ.

2. ຂຸດຄົ້ນເພື່ອກູ້ແຫຼ່ງບູຮານຄະດີ : ໄດ້ແກ່ການຂຸດຄົ້ນທີ່ຈະສ້າງເຂື່ອນເກັບນໍ້າຂະໜາດໃຫຍ່, ສ້າງຄອງເໝືອງ, ຂຸດຄອງຊົນລະປະທານເປັນຕົ້ນ. ການຂຸດຄົ້ນປະເພດນີ້ເປັນການຂຸດຄົ້ນເພື່ອຮອບຮອບຂໍ້ມູນທາງບູຮານຄະດີກ່ອນຖືກທຳລາຍໄປເປັນການຂຸດຄົ້ນຢ່າງຮີບດ່ວນ ແລະ ເລັ່ງລັດ.

3. ຂຸດຄົ້ນຊໍ້າບ່ອນເກົ່າ : ໄດ້ແກ່ການຂຸດຄົ້ນບ່ອນທີ່ເຄີຍມີການຂຸດຄົ້ນມາກ່ອນແລ້ວ ເພາະບາງຄັ້ງຜູ້ທີ່ຂຸດຄົ້ນໄວ້ກ່ອນຈະຂຸດຄົ້ນພຽງແຕ່ຕອນໃດຕອນໜຶ່ງຂອງພື້ນທີ່ ຫຼື ເປັນການຂຸດຄົ້ນຊໍ້າບ່ອນເກົ່າໃນພາຍຫຼັງ ຫຼື ເປັນການກວດສອບຫຼັກຖານຂໍ້ມູນ ຫຼື ລາຍງານຜູ້ທີ່ຂຸດຄົ້ນກ່ອນ. ການຂຸດຄົ້ນແບບນີ້ອາດຈະໄດ້ຫຼັກຖານຂໍ້ມູນເພີ່ມເຕີມໄດ້ເພື່ອສ້າງຫຼັກຖານ.

## 3.3 ພື້ນທີ່, ທີ່ເຮັດການຂຸດຄົ້ນ

ການຮອບຮອມຫຼັກຖານຂໍ້ມູນດ້ວຍວິທີການຂຸດຄົ້ນຜິດການສຶກສາມັນຈະເຮັດໃຫ້ການຂຸດຄົ້ນໃນພື້ນທີ່ດັ່ງນີ້ :

1. ພື້ນທີ່ທີ່ເຄີຍອາໃສຢູ່ ເຊັ່ນ : ຖໍ້າ, ບ້ານ, ໝູ່ບ້ານ, ໂພນທີ່ຄົນນຳດິນມາຖົມ.
2. ພື້ນທີ່ທີ່ໃຊ້ເປັນບ່ອນຝັງສົບຄົນຕາຍ ເຊັ່ນ : ຖໍ້າ, ປ່າຊ້າ, ອະນຸສາວະລີຫີນ, ພື້ນດິນທີ່ເກີດຈາກການຄູນດິນຝັງສົບ.
3. ພື້ນທີ່ໃຊ້ເປັນສາສະໜາສະຖານ ເຊັ່ນ : ວັດ, ຫໍປະສາດ, ຖໍ້າ. ການແບ່ງປະເພດຂອງພື້ນທີ່ທີ່ຈະເຮັດການຂຸດຄົ້ນເປັນການແບ່ງຢ່າງກວ້າງໆ ຊຶ່ງບາງພື້ນທີ່ອາດຈະມີລັກສະນະປະປົນກັນ 3 ປະເພດເຊັ່ນ : ເປັນບ່ອນທຳພິທີສາສະໜາ, ເປັນທີ່ຢູ່ອາໃສ ແລະ ເປັນບ່ອນຝັງສົບ.

## 3.4 ລະບົບຫຼຸມຂຸດຄົ້ນ

ການຂຸດຄົ້ນທາງບູຮານຄະດີ ຕ້ອງມີລະບຽບການທີ່ລະອຽດຮອບຄອບ, ໂດຍຄຳນຶງເຖິງຄວາມສະດວກໃນການເຮັດວຽກ, ການຈົດບັນທຶກເພື່ອຈະໃຫ້ໄດ້ຫຼັກຖານຂໍ້ມູນທີ່ຖືກຕ້ອງໃກ້ຄຽງກັບຄວາມເປັນຈິງທີ່ສຸດ. ລະບົບຫຼຸມຂຸດຄົ້ນທາງບູຮານຄະດີທີ່ນິຍົມໃຊ້ໃນປັດຈຸບັນມີ 3 ລະບົບຄື :

1. ລະບົບຂຸດຄົ້ນສີ່ຫຼ່ຽມຈະຕຸລັດ ການວາງຫຼຸມຂຸດຄົ້ນລະບົບນີ້ສາມາດວາງຜັງຫຼຸມພື້ນທີ່ ທີ່ຈະເຮັດການຂຸດຄົ້ນໄດ້ທົ່ວບໍລິເວນ, ຂະໜາດຂອງຫຼຸມຂຸດຄົ້ນທີ່ນິຍົມຄື : 300 x 300 m ຫຼື 400 x 400 ລະຫວ່າງຫຼຸມຕໍ່ຫຼຸມຈະຈົ່ງທາງຢ່າງໃຫ້ມີຂະໜາດພໍສົມຄວນ ເຊັ່ນ : ກວ້າງ 50 cm ຫຼື 1 m ເພື່ອໃຊ້ສຳລັບຍ່າງຕິດຕໍ່ກັນລະຫວ່າງຫຼຸມຕໍ່ຫຼຸມ ແລະ ໃຊ້ສຳລັບຂົນດິນໄປຖິ້ມໃນເວລາເລືອກ ຈະເລືອກຂຸດຕາມແບບໃດກໍໄດ້ຄື :

- ຂຸດຄົ້ນທຸກຫຼຸມທີ່ວາງຜັງໄວ້ ໂດຍເຮັດການຂຸດຄົ້ນທຸກຫຼຸມທີ່ວາງຜັງໄວ້ເທິງໜ້າດິນ
- ເລືອກຂຸດສະເພາະຫຼຸມທີ່ສຳຄັນ ໂດຍການຂຸດຄົ້ນສະເພາະບໍລິເວນ ຫຼື ຫຼຸມທີ່ຈຳເປັນ ແລະ ມີຄວາມສຳຄັນທີ່ພິຈາລະນາແລ້ວວ່າຫຼຸມຂຸດຄົ້ນນັ້ນມີຂໍ້ມູນຫຼາຍ
- ຂຸດຄົ້ນແບບຕາມໝາກດາມ ໄດ້ແກ່ການເລືອກຂຸດຄົ້ນແບບຂຸດໜຶ່ງຫຼຸມເວັ້ນໜຶ່ງຫຼຸມີກັນກັບຫຼີ້ນໝາກດາມ

1. ລະບົບຂຸດຄົ້ນ ແບບຮູບສີ່ຫຼ່ຽມແຜ່ນຜ້າ ການວາງຫຼຸມຂຸດຄົ້ນແບບນີ້ສາມາດດັດແປງຈາກການວາງຜັງຫຼຸມຂຸດຄົ້ນຮູບສີ່ຫຼ່ຽມແຜ່ນຜ້າຂະໜາດ 1,50 x 3,00 ຫຼື 200 x 400 m ຫຼື ຈະວາງຫຼຸມຂຸດຄົ້ນໃຫ້ກວ້າງຍາວກວ່ານີ້ກໍໄດ້ຕາມຄວາມຈຳເປັນ ລະບົບນີ້ມີປະໂຫຍດໃນການກວດສອບເບິ່ງຊັ້ນດິນ ຫຼື ຫາເຄື່ອງວັດຖຸບູຮານສະຖານ.

2. ລະບົບຫຼຸມຂຸດຄົ້ນຮູບວົງກົມ (ວົງມົນ) ການວາງແຜນຜັງຫຼຸມຂຸດຄົ້ນລະບົບນີ້ເໝາະກັບການໃຊ້ຂຸດດິນໂພນ, ໂພນບູຮານສະຖານ ຫຼື ໂພນດິນຫຼຸມຝັງສົບ ໂດຍແບ່ງຫຼຸມອອກເປັນ 4 ສ່ວນ ມີບ່ອນທາງທຽວລະຫວ່າງສ່ວນຕ່າງໆ

**ວິທີການຂຸດຄົ້ນໂດຍທົ່ວໄປມີ 3 ວິທີຄື :**

- ວິທີຂຸດແບບແນວນອນ
- ວິທີຂຸດແບບແນວດີ່ງ
- ວິທີຂຸດແບບລອກຊັ້ນດິນຕາມທຳມະຊາດ

ວິທີຂຸດທັງສາມວິທີດັ່ງກ່າວ ສາມາດຈະນຳໄປໃຊ້ເຮັດການຂຸດຄົ້ນໃນແຫຼ່ງບູຮານຄະດີທັງກ່ອນປະຫວັດສາດ ແລະ ສະໄໝປະຫວັດສາດ ໂດຍພິຈາລະນາເຖິງຄວາມເໝາະສົມດ້ານຕ່າງໆເຊັ່ນ : ໄລຍະເວລາ, ກຳລັງຄົນ, ຜູ້ຊ່ຽວຊານ, ສາຂາຕ່າງໆທີ່ຈະຊ່ວຍການຂຸດຄົ້ນແຂງ ແລະ ຄວາມອ່ອນຂອງດິນພື້ນທີ່ກຳລັງຂຸດຄົ້ນຄວາມສຳຄັນຂອງແຫຼ່ງຂຸດຄົ້ນ.

ໃນການຂຸດທັງ 3 ວິທີນີ້ຜູ້ສຶກສາຈະຕ້ອງຂຸດຄົ້ນເຖິງຊັ້ນດິນທຳມະດາບໍ່ປາກົດມີກິດຈະກຳຂອງຄົນໃນອະດີດຈຶ່ງຈະເປັນການສຳເລັດ ແລະ ສິ້ນສຸດຂອງການຂຸດຄົ້ນທາງບູຮານຄະດີ.

## 3.5 ການກຽມຕົວກ່ອນການຂຸດຄົ້ນ

ເພື່ອໃຫ້ການຂຸດຄົ້ນມີປະສິດທິພາບ ແລະ ໄດ້ຜົນທາງວິຊາການຢ່າງຄຸ້ມຄ່າກັບການລົງທຶນຈຶ່ງຈະເປັນການກຽມຕ່າງໆໃຫ້ເໝາະສົມກັບການຂຸດຄົ້ນຄື :

1. **ເງິນທີ່ໃຊ້ໃນການຂຸດຄົ້ນໄດ້ມາຈາກ 3 ແຫຼ່ງຄື :**

- ເງິນງົບປະມານຂອງລັດຖະບານ : ຕ້ອງຂໍງົບປະມານລ່ວງໜ້າເງິນທີ່ໄດ້ຈາກງົບປະມານບໍ່ຫຼາຍ ແລະ ການໃຊ້ຈ່າຍບໍ່ສະດວກຕ້ອງມີໃບບິນສະແດງລາຍລະອຽດຄ່າໃຊ້ຈ່າຍຕ່າງໆ.
- ເງິນຂອງມູນນິທິ, ອົງການ : ເງິນທີ່ໄດ້ມາຈາກຈຳນວນຫຼາຍໄດ້ຮັບຄວາມເຫັນຈາກອົງການທີ່ສະເໜີຂໍທຶນໄປການໃຊ້ຈ່າຍຕ່າງໆສະດວກເພາະບໍ່ໄດ້ຄຳນຶງເຖິງໃບບິນໃນການໃຊ້ຈ່າຍເງິນເຈົ້າຂອງເງິນຕ້ອງການລາຍງານການຂຸດຄົ້ນເທົ່ານັ້ນ.
- ການຮ່ວມວຽກກັບນັກບູຮານຄະດີຊາວຕ່າງປະເທດໂດຍໄດ້ແຫຼ່ງເງິນທຶນຈາກຕ່າງປະເທດ.

2. **ຄະນະຂຸດຄົ້ນໃນການກຽມກຳລັງຄົນສຳລັບການຂຸດຄົ້ນຈະຕ້ອງຄຳນຶງເຖິງຄຸນສົມບັດຕ່າງໆເຊັ່ນ : ຄວາມຮູ້**

ຄວາມສາມາດ, ນິໄສ, ຄວາມປະພຶດ, ຄວາມມີມະນຸດສຳພັນ, ຄວາມອົດທົນເປັນຕົ້ນ ເພື່ອໃຫ້ເຮັດວຽກຮ່ວມກັນເປັນໝູ່ຂະນະດຳເນີນໄປດ້ວຍຄວາມຮຽບຮ້ອຍ. ຄະນະຂຸດຄົ້ນປະກອບດ້ວຍບຸກຄົນຕ່າງໆຄື : ຜູ້ອຳນວຍການຂຸດຄົ້ນ, ຜູ້ຮອງອຳນວຍການແຫຼ່ງຂຸດຄົ້ນ, ຮອງອຳນວຍການຝ່າຍສຳນັກງານສະໜາມ, ຜູ້ຊ່ຽວຊານສາຂາຕ່າງໆເຊັ່ນ : ຫົວໜ້າຄົນງານ, ເຈົ້າໜ້າທີ່ຖ່າຍພາບ, ເຈົ້າໜ້າທີ່ເຮັດແຜນຜັງ ແລະ ແຜນວາດເສັ້ນ, ເຈົ້າໜ້າທີ່ທະບຽນບູຮານວັດຖຸຂະໜາດນ້ອຍ, ເຈົ້າໜ້າທີ່ດ້ານເຄື່ອງປັ້ນດິນເຜົາ, ເຈົ້າໜ້າທີ່ພະຍາບານ, ເຈົ້າໜ້າຮັກສາຄວາມປອດໄພ ແລະ ຄົນງານ.

3. **ຮວບຮວມຫຼັກຖານຂໍ້ມູນຕ່າງໆກ່ຽວກັບແຫຼ່ງທີ່ໄປຂຸດຄົ້ນ**

- ລາຍງານການສຳຫຼວດແຫຼ່ງບູຮານຄະດີທີ່ຈະໄປເຮັດການຂຸດຄົ້ນ ຫຼື ບໍລິເວນໃກ້ຄຽງ
- ສຶກສາແຜນທີ່, ແຜນພູມີປະເທດ, ແຜນຜັງ, ພາບຖ່າຍທາງອາກາດ ແລະ ພາບຖ່າຍທາງດາວທຽມໃນບໍລິເວນນັ້ນໆ ແລະ ບໍລິເວນໃກ້ຄຽງເພື່ອຮູ້ລັກສະນະພູມີປະເທດ ແລະ ພູມອາກາດຊຶ່ງເປັນປະໂຫຍດໃນການກຽມພາຫະນະ, ກຽມອຸປະກອນການຂຸດຄົ້ນຕ່າງໆ

- ສຶກສາໜັງສື ຫຼື ເອກະສານຕ່າງໆເຊັ່ນ : ໜັງສືປະຫວັດສາດ, ພົງສາວະດານ, ຕຳນານ ຫຼື ໜັງສືອື່ນໆທີ່ຂຽນກ່ຽວຂ້ອງກັບແຫຼ່ງບູຮານຄະດີທີ່ຈະໄປຂຸດຄົ້ນ
- ສຶກສາບູຮານວັດຖຸສະຖານ ຫຼື ການຖ່າຍພາບບູຮານວັດຖຸສະຖານທີ່ພົບຈາກແຫຼ່ງບູຮານຄະດີຈະໄປຂຸດຄົ້ນ ຫຼື ບໍລິວນໃກ້ຄຽງ

## 3.6 ອຸປະກອນການຂຸດຄົ້ນ ແລະ ຍານພາຫະນະ

ອຸປະກອນໃນການຂຸດຄົ້ນແຫຼ່ງບູຮານຄະດີສະໄໝກ່ອນປະຫວັດສາດ ຫຼື ສະໄໝປະຫວັດສາດ, ສ່ວນຫຼາຍຈະມີລັກສະນະການເຮັດວຽກຄ້າຍຄືກັນ ແຕ່ມີອຸປະກອນພິເສດທີ່ໃຊ້ສະເພາະວຽກບາງວຽກ. ອຸປະກອນທີ່ໃຊ້ຮ່ວມກັນໃນການເຮັດວຽກທັ້ງສອງປະເພດໄດ້ແກ່: ກ້ອງຖ່າຍຮູບ ແລະອຸປະກອນສາຍແທກໄລຍະ, ເຂັມທິດ,ລະດັບນໍ້າ, ລູກຄິ່ງ, ກ້ອງຊ່ອງລະດັບ, ຫຼັກມຸມຫຼັກເລັ່ງ, ຈົກ, ສຽມ,ມີດ, ຈຽງ, ເຊືອກຂະໜາດຕ່າງໆ, ແບບບັນທຶກ, ໄມ້ສະເກນ, ຖົງຢາງ, ຢາງຮັດດສະຫວານເຈາະດິນ, ນໍ້າຢາເຄມີ, ຢາປົວພະຍາດ, ຍານພະຫະນະຕ່າງໆ

1. ການປະສານເພື່ອໃຫ້ການເຮັດວຽກຖືກຕ້ອງຕາມກົດໝາຍ ແລະ ໄດ້ຮັບຄວາມສະດວກ, ປອດໄພ ຜູ້ຂຸດຄົ້ນຈະຕ້ອງປະສານງານກັບໜ່ວຍງານ ແລະ ບຸກຄົນຕ່າງໆ

- ຂໍອະນຸຍາດເພື່ອເຮັດໃຫ້ການຂຸດຄົ້ນຕໍ່ກົມສິລະປະກອນຕາມກົດໝາຍ
- ປະສານງານກັບເຈົ້ານາທີ່ທ້ອງຖິ່ນທີ່ຈະເຮັດການຂຸດຄົ້ນເຊັ່ນ: ເຈົ້າຂອງພື້ນທີ່,ເຈົ້າໜ້າທີ່ຕຳຫຼວດ,ນາຍບ້ານ, ເຈົ້າເມືອງ,ຄູ,ພຣະ ແລະ ຜູ້ທີ່ຊາວບ້ານໃຫ້ຄວາມເຄົາລົບນັບຖືໃນທ້ອງຖິ່ນນັ້ນ.
- ຂໍອະນຸຍາດຈາກເຈົ້າຂອງນາທີ່ດິນທີ່ເຮັດການຂຸດຄົ້ນເພື່ອຖືກຕ້ອງຕາມກົດໝາຍ ແລະ ຄວນຈະເຮັດເປັນລາຍລັກອັກສອນ

2. ຕ້ອງພົວພັນລວງໜ້າເພື່ອກຽມການໃນເບື້ອງຕ່າງໆໃຫ້ຮຽບຮ້ອຍເຊັ່ນ: ບ່ອນພັກເຊົາ,ຈັດຫາຄົນງານ,ວາງຜັງຫຼຸມຂຸດຄົ້ນຕາມຄຳສັ່ງຂອງຜູ້ອຳໜ່ວຍການຂຸດຄົ້ນ ປະສານງານກັບເຈົ້າໜ້າທີ່ຝ່າຍຕ່າງໆເພື່ອຄວາມຮຽບຮ້ອຍ.
3. ປະກັນໄພ ແຫຼ່ງຂຸດຄົ້ນທາງບູຮານຄະດີສ່ວນຫຼາຍມັກຈະຢູ່ໃນທີ່ຫ່າງໄກຄວາມຈະເລີນ ຫຼື ໃນທີ່ໜ້າຈະເກີດອັນຕະລາຍ,ນອກອຸປະກອນການຂຸດຄົ້ນບາງຊະນິດທີ່ເປັນລາຄາແພງແລ້ວຍັງມີເຄື່ອງທີ່ໃຊ້ສຳລັບຮັບໃຊ້ໃນການຂຸດຄົ້ນ.ເປັນສິ່ງທີ່ເຮັດໃຫ້ເກີດອັນເຮັດໃຫ້ຫຼືອຸປະຕິເຫດ.ດັ່ງນັ້ນຈຶ່ງມີການປະກັນໄພບຸກຄົນ ແລະ ຊັບສິນຂອງຂະນະຂຸດຄົ້ນ.

## 3.7 ການດຳເນີນການຂຸດຄົ້ນ

**ການປະຕິບັດວຽກງານຂຸດຄົ້ນມີຂັ້ນຕອນດັ່ງນີ້:**

1. ປະຊຸມຊີ້ແຈ້ງຄະນະຂຸດຄົ້ນ ແລະ ຄົນງານເພື່ອໃຫ້ຮູ້ກົດລະບຽບໃນການປະຕິບັດງານ.
2. ຖ່າຍພາບ, ເຮັດແຜນທີ່, ແຜນຜັງບໍລິເວນທັງກ່ອນ ແລະ ຫຼັງການຖາງຫຍ້າ ແລະ ຕັດໄມ້
3. ກຳນົດຈຸດຕາຍຕົວ ຫຼື ຈຸດຄົງທີ່ ຈຸດນີ້ເປັນຈຸດສຳຄັນຫຼາຍໃການຂຸດຄົ້ນເພາະເຮັດໃຫ້ຮູ້ວ່າຫຼຸມຂຸດຄົ້ນແຕ່ລະຫຼຸມຢູ່ທາງທິດໃດ, ຢູ່ຫ່າງຈາກຈຸດນີ້ເປັນໄລຍະທາງທາງເທົ່າໃດ. ນອກນັ້ນຍັງມີຈຸດກວດສອບຫາຕຳແໜ່ງຂອງຫຼຸມຂຸດຄົ້ນທີ່ໄດ້ຂຸດໄປແລ້ວ ຫຼື ເພື່ອຂະຫຍາຍຫຼຸມຂຸດຄົ້ນຕໍ່ໄປ. ດັ່ງນັ້ນຈຸດຕາຍຕົວ ຫຼື ຄົງທີ່ຈະເປັນຈຸດທີ່ໝັ້ນຄົງແຂງແຮງ ແລະ ບໍ່ເຄື່ອນຍ້າຍ ຫຼື ສູນຫາຍ ແລະ ຄວນຈະຢູ່ເຄິ່ງກາງຂອງການຂຸດຄົ້ນຕໍ່ໄປໄດ້ທຸກດ້ານ.
4. ຖາງຫຍ້າ ຫຼື ຕັດຕົ້ນໄມ້ທີ່ຈຳເປັນໃນບໍລິເວນທີ່ຈະເຮັດການຂຸດຄົ້ນ

5. ວາງຜັງຫຼຸມຂຸດຄົ້ນລະບົບໃດລະບົບໜຶ່ງດັ່ງທີ່ກ່າວມາແລ້ວ ແລະ ໃຫ້ຊື່ຫຼຸມຂຸດຄົ້ນຈຳນວນຂຸດຄົ້ນຈະຫຼາຍ ຫຼື ໜ້ອຍຂຶ້ນຢູ່ກັບປັດໄຈຕ່າງໆຄື : ຄວາມມຸ່ງໝາຍຂອງການຂຸດຄົ້ນ, ເງິນ, ເວລາ ແລະ ກຳລັງຄົນ
6. ກຳນົດເສັ້ນລະບົບມາດຕາສົມມຸດ ເປັນເສັ້ນທີ່ສົມມຸດວ່າໜ້າດິນບໍລິເວນທີ່ຂຸດຄົ້ນມີຄວາມເປັນດິນພຽງເທົ່າກັນໝົດ. ສະນັ້ນການຈັດຄວາມເລິກຂອງບູຮານວັດຖຸ ແລະ ຊັ້ນດິນໃນຫຼຸມຂຸດຄົ້ນຈະຕ້ອງວັດຈາກເສັ້ນລະດັບມາດຕາຖານສົມມຸດທຸກຄັ້ງ, ເສັ້ນລະດັບມາດຕະຖານສົມມຸດຄວນຈະກຳນົດໃຫ້ຢູ່ສູງກວ່າໜ້າດິນໂດຍທົ່ວໄປຂອງແຫຼ່ງຂຸດຄົ້ນພໍສົມຄວນເມື່ອຈະເຮັດການຂຸດຄົ້ນຫຼຸມຕໍ່ໄປໃນແຫຼ່ງຂຸດຄົ້ນນັ້ນຕ້ອງຖ່າຍລະດັບຈາກເສັ້ນລະດັບມາດຕາຖານສົມມຸດທີ່ເຮັດໃຫ້ຖາວອນທຸກຄັ້ງ
   1) ຮອບຮອມບູຮານວັດຖຸທາງໜ້າດິນ ແລະ ທີ່ຢູ່ໃນເຂດຂອງຫຼຸມຂຸດຄົ້ນໃສ່ຖົງ ແລະ ບັນທຶກໂດຍລະອຽດ
   2) ກຳນົດທີ່ຕັ້ງກ້ອງສ່ອງລະດັບ
   3) ເລີ່ມເຮັດການຂຸດຄົ້ນວິທີໃດວິທີໜຶ່ງທີ່ເໝາະສົມບໍ່ໃຫ້ມີຄົນງານຫຼາຍ ຫຼື ນ້ອຍເກີນໄປ.
   4) ກຳນົດບ່ອນຖິ້ມດິນ ຊຶ່ງຄວນຈະຫ່າງຈາກຫຼຸມຂຸດຄົນພໍສົມຄວນ ແລະ ຕ້ອງຢູ່ໃຕ້ລົມໂດຍຈະຕ້ອງຄຳນຶງເຖິງຄວາມຈຳເປັນທີ່ຂະຫຍາຍຫຼຸມຂຸດຄົ້ນຕໍ່ໄປ ແລະ ບໍ່ກີດຂວາງວຽກງານອື່ນ.
   5) ຂະນະຂຸດຄົ້ນຜູ້ອຳນວຍການຂຸດຄົ້ນ ຫຼື ຫົວໜ້າຝ່າຍແຫຼ່ງຂຸດຄົ້ນ ຫຼື ຜູ້ທີ່ໄດ້ຮັບມອບໝາຍຈະຕ້ອງຄອບຄອງການຂຸດຄົ້ນຢ່າງໃກ້ສິດຕ້ອງຈົດບັນທຶກການຂຸດຄົ້ນ ແລະ ປະສານງານກັບນັກວິຊາການສາຂາອື່ນທີ່ຊ່ວຍການຂຸດຄົ້ນເພື່ອແກ້ໄຂບັນຫາເຊິ່ງອາດຈະເກີດຂຶ້ນໃນຂະນະຂຸດຄົ້ນ.
   6) ແຍກປະເພດບູຮານວັດຖຸທີ່ພົບຈາກການຂຸດຄົ້ນຈະຕ້ອງຈົດບັນທຶກການພົບບູຮານວັດຖຸແຕ່ລະສິ້ນຢ່າງລະອຽດ.
   7) ຖ່າຍພາບການຂຸດຄົ້ນ ເປັນໄລຍະໂດຍສະເພາະຢ່າງຍິ່ງການພົບວັດຖຸທີ່ສຳຄັນ ຫຼື ການພົບຮ່ອງຮອຍທີ່ມີລັກສະນະພິເສດຈະຕ້ອງໄດ້ຖ່າຍຮູບທຸກຄັ້ງ, ທຸກດ້ານ, ທຸກຕອນ ແລະ ທຸກໂອກາດ.
   8) ຜູ້ອຳນວຍການຂຸດຄົ້ນຈະຕ້ອງຈັດການບໍລິການດ້ານຕ່າງໆ ຢ່າງເໝາະສົມ ເພື່ອໃຫເວຽກດຳເນີນໄປດ້ວຍຄວາມດີ.

### 3.8 ການດຳເນີນການເຮັດວຽກຫຼັງຈາກການຂຸດຄົ້ນ

ເມື່ອການຂຸດຄົ້ນສຳເລັດລົງຜູ້ຂຸດຄົ້ນຈະຕ້ອງດຳເນີນການຕ່າງໆຄື :

1) ຮອບຮອມເຄື່ອງມືເຄື່ອງໃຊ້ທີ່ໃຊ້ໃການຂຸດຄົ້ນ ແລະ ທຳຄວາມສະອາດ
2) ຮອບຮອມບູຮານວັດຖຸແຕ່ລະປະເພດໂດຍຂຽນປ້າຍ ແລະ ເຮັດທະບຽນຄວບຄຸມຢ່ງລະອຽດເພື່ອສະດວກໃນການຄົ້ນຫາເມື່ອກັບເຖິງຫ້ອງການ
3) ເຮັດຜັງຊັ້ນດິນຂອງຫຼຸມຂຸດຄົ້ນທຸກຫຼຸມຜັງຊັ້ນດິນຂອງຫຼຸມຂຸດຄົ້ນ ຫຼື ເຮັດພຽງດ້ານໃດດ້ານໜຶ່ງ ຫຼື ອາດເຮັດໃຫ້ກໍໄດ້ມັນຂຶ້ນກັບຄວາມສຳຄັນຂອງແຫຼ່ງຂຸດຄົ້ນ
4) ເກັບຕົວຢ່າງດິນຂອງຫຼຸມຂຸດຄົ້ນຕາມຊັ້ນດິນທີ່ໄດ້ແບ່ງແລ້ວນຳກັບໄປສຶກສາວິເຄາະໂດຍລະອຽດທີ່ສຳນັກງານ
5) ແປງຫຼຸມຂຸດຄົ້ນໃຫ້ລະອຽດເມື່ອກັບເຖິງສຳນັກງານຕ້ອງເຮັດການວິເຄາະ ແປຄວາມໝາຍຂອງບູຮານວັດຖຸທີ່ຂຸດພົບ ແລະ ຂຽນລາຍງານທັນທີ

ຫຼັກຖານຂໍ້ມູນທີ່ຮອບຮອມໄດ້ຈາກແຫຼ່ງຂຸດຄົ້ນຜູ້ອຳນວຍການຂຸດຄົ້ນ ຈະຕ້ອງພິຈາລະນາເຖິງຄຸນຄ່າຄວາມຕ້ອງການ ແລະ ປະໂຫຍດທີ່ຈະນຳມາໃຊ້ໃນການສຶກສາວ່າມີສາລະສຳຄັນວິເຄາະຕໍ່ໄປເຊັ່ນ :

-	ນັກທໍລະນີວິທະຍາຊ່ວຍສຶກສາກ່ຽວກັບຫີນ ແລະ Fossllsຕ່າງໆເຊັ່ນ : ຫີນທີ່ຄົນສະໄໝກ່ອນນໍາມາໃຊ້ເຮັດເຄື່ອງທີເຄື່ອງໃຊ້ ແລະ ເຄື່ອງປະດັບ
-	ນັກວິທະຍາຊ່ວຍວິເຄາະ ແລະ ແປຄວາມໝາຍຂອງຊັ້ນດິນ
-	ຜູ້ຊ່ຽວຊານລື່ອງເຄື່ອງໃຊ້ໃນຄົວເຮືອນທີ່ເຮັດດ້ວຍດິນເຜົາຊ່ວຍສຶກສາເຖິງຊະນິດແບບ ແລະ ເທັກໂນໂລຢີໃນການເຮັດເຄື່ອງໃຊ້ທີ່ເຮັດດ້ວຍດິນເຜົາຂອງຄົນໃນອາດີດ.
-	ນັກມະນຸດວິທະຍາ ກາຍະພາບຊ່ວຍວິເຄາະໂຄງກະດູກ
-	ນັກພຶກສາສາດຊ່ວຍຍວິເຄາະເມັພືດ ຫຼື ລະອອງເກສອນວ່າເປັນພືດຫຍັງຈະເລີນເຕີບໂຕໃນພູມປະເທດຢ່າງໃດ
-	ນັກສັດຕະສາດຊ່ວຍວິເຄາະກະດູກສັດຕ່າງໆທີ່ໄດ້ຈາກການຂຸດຄົ້ນວ່າເປັນສັດຫຍັງທີ່ຄົນໃນອາດີດນໍາມາໃຊ້ເປັນປະໂຫຍດຢ່າງອື່ນ ຫຼື ເປັນອາຫານ
-	ນັກວິທະຍາສາດຊ່ວຍວິເຄາະກະດູກເປືອກຫອຍ ຫຼື ເສດເຄື່ອງປັ້ນດິນເຜົາເພື່ອກໍານົດອາຍຸແຫຼ່ງບູຮານຄະດີ

ຊ່ວຍການສະຫງວນບູຮານວັດຖຸບໍ່ໃຫ້ສູນເສຍໄປຫຼືຊ່ວຍໃນການວິເຄາະໂລຫະເປັນຕົ້ນ. ຫຼັກຖານຂໍ້ມູນທີ່ຮອບຮອມໄດ້ຈາກການສໍາຫຼວດຫຼື ການຂຸດຄົ້ນເຊິ່ງຖືໄດ້ວ່າເປັນຫຼັກຖານຂໍ້ມູນຊັ້ນຕົ້ນ ແລະ ແຫຼ່ງທີ່ໄດ້ຮອບຮອມ ຫຼັກຖານຂໍ້ມູນເປັນແຫຼ່ງທໍາອິດ ດັ່ງນັ້ນການລາຍງານການສໍາຫຼວດ, ລາຍງານກນຂຸດຄົ້ນບູຮານຄະດີ ຫຼືລາຍງານການວິໄຈທາງບູຮານຄະດີຈຶ່ງເປັນສິ່ງທີ່ໜ້າເຊື່ອຖືໄດ້ວ່າຖືກຕ້ອງ ຫຼື ໃກ້ຄຽງຄວາມຈິງ.ດັ່ງນັ້ນກໍ່ຂຶ້ນຢູ່ກັບການວິເຄາະການແປຄວມໝາຍ ແລະ ການຂຽນບົດລາຍງານເປັນສິ່ງສໍາຄັນ.

## 4. ການຄົ້ນພົບດ້ວຍພາບຖ່າຍທາງອາກາດ

ພາບຖ່າຍທາງອາກາດໃນການກວດຫາທີ່ຕັ້ງູຮານສະຖານຈາກພາບຖ່າຍທາງອາກາດເປັນິທີການຢ່າງຫນື່ງໃນໃນທາງບູຮານຄະດີຊ່ວຍປະຢັດຄ່າໃຊ້ຈ່າຍໃນການສໍາຫຼວດ. ພ້ອມທັງຄົ້ນພົບບູຮານສະຖານທີ່ບໍ່ອາດຈະກວດພົບທາງພື້ນດິນໄດ້.ພາບຖ່າຍທາງອາກາດຊ່ວຍໃຫ້ເຫັນໍລິເວນບູຮານສະຖານທີ່ສະຫຼັບຊັບຊ້ອນໄດ້ຢ່າງຊັດເຈນເຊັ່ນ ບໍລິເວນເມືອງເກົ່າ, ຄູເມືອງ, ຄ້າຍທະນົບູຮານຕະຫຼອດິງຄວາມງອກງາມຂອງພືດ ແລະ ຄວາມແຕກຕ່າງຂອງສີດິນໃນບໍລິເວນນັ້ນ. ນອກນີ້ຍັງສາມາດແນມເຫັນບ່ອນສູງຕໍ່າຂອງພູມີປະເທດອີກ.

ໃນລະຫວ່າງສົງຄາມໂລກຄັ້ງທີ 2 ປະເທດຝຣັ່ງກັບກອງທັບອາກາດທີ່ປະເທດຂະເໝນ( ກໍາປູເຈຍ) ແລະ ປະເທດຫວຽດນາມເຮັດການຖ່າຍພາບທາງບູຮານສະຖານທາງອາກາດເຮັດໃຫ້ໄດ້ພົບເຫັນອານາຈັກຂະແມບູຮານ, ຖະໜົນ, ຄູນໍ້າ ແລະ ຊາຍຝັ່ງທະເລ. ສະໄໝບູຮານຫຼາຍແຫ່ງ ໃນຂະນະດຽວກັນກອງທັບອາກາດອາເມຣິກາ ແລະ ອັງກິດໂດຍຄວາມຮ່ວມມືຂອງກອງທັບອາກາດ ໄທກໍ່ໄດ້ຖ່າຍພາບບູຮານສະຖານໃນປະເທດໄທຈາກເຄື່ອງບິ່ໄອ້ຫຼາຍແຫ່ງຈາກການຖ່າຍພາບທາງອາກາດເຫຼົ່ານີ້ໄດ້ກວດພົບເມືອງບູຮານໃນພາກຕາເວັນອອກສຽງເໜືອເປັນຈໍານວນຫຼາຍ. ຫຼັງຈາກສົງຄາມໂລກຄັ້ງທີ 2 ສິ້ນສຸດລົງການຖ່າຍພາບທາງອາກາດກໍໄດ້ຈະເລີນກ້າວໜ້າຫຼາຍຂຶ້ນ ເຊິ່ງເປັນຜົນໃຫ້ແກ່ການສໍາຫຼວດບູຮານສະຖານດ້ຮັບຜົນດີຂຶ້ນ

ໃນທາງປະຕິບັດ ເມື່ອມີການຖ່າຍພາບທາງອາກາດກໍຄວນຈະເດີນສໍາຫຼວດພູມີປະເທດບໍລິເວນນັ້ນເພື່ອສັງເກດຄວາມສວຍງາມຂອງພືດ ແລະ ສີຂອງດິນ ແລ້ວນໍາມາປຽບທຽບກັບການຖ່າຍພາບທາງອາກາດວ່າແຕກຕ່າງກັນຫຼືບໍ່ເພາະສິ່ງເຫຼົ່ານີຈະຊ່ວຍໃຫ້ພົບເຫັນຫຼັກຖານຂໍ້ມູນທາງບໍຮານຄະດີທີ່ຢູ່ໃນດິນໄດ້ເຊິ່ງອາດມີຮູບເປັນແບບແນວໂຄ້ງແນວກົ່ງ, ຮູບສີ່ຫຼ່ຽມ, ຮູບກົມ, ຮູບໄຂ່, ຫຼືຮູບຫຼາຍຫຼ່ຽມຊ້ອນກັນຫຼາຍຊັ້ນເຊິ່ງຂຶ້ນກັບຮູບຮ່າງຂອງບູຮານສະຖານທີ່ຝັງຢູ່ໃນດິນ ເມື່ອພົບແລ້ວກໍສາມາດສັນນິຖານວ່າບໍລິເວນນັ້ນເປັນຊາກຖະໜົນ, ຊາກກໍາແພງເມືອງ, ຄູເມືອງດ ຊາກທາດແມ່ນໍ້າເກົ່າຫຼືເມືອງເກົ່າ.

ການອ່ານພາບຖ່າຍທາອາກາດດ້ວຍກ້ອງ ຮູບຮ່າງຂອງກ້ອງປະກອບດ້ວຍສະໜຸນອງເລນປະກອບເຂົ້າກັບກອບເຊິ່ງມີຮູບຮ່າງຄ້າຍຄືແວ່ນຕາຂາກ້ອງບາງຊະນິດທີ່ເລື່ອນເລນໃຫ້ສູງຕ່ຳໄດ້ຕາມຄວາມຕ້ອງການເມື່ອເວລາໃສ່ຊ່ອງຂະຫຍາຍພາບກໍ່ເອົາກ້ອງນັ້ນວາງລົງທາງພາບທີ່ເບິ່ງແລ້ວເບິ່ງຜ່ານເລນທັງສອງຂ້າງພາບທີ່ປາກົດມີທັງ 3 ຢ່າງຄື: ມີທັງສ່ວນກວ້າງ, ສ່ວນສູງ, ສ່ວນຍາວ ຫຼື ສ່ວນເລິກ.




**ຮູບທີ 6 ການຄົ້ນພົບໂດຍການຖ່າຍພາບທາງອາກາດ**

**ຄຸນປະໂຫຍດຂອງການຖ່າຍພາບທາງອາກາດໃນບູຮານະຄະດີ**

- ສາມາດເບິ່ງເຫັນກົກເຄົ້າຂອງບູຮານສະຖານໄດ້ຊັດເຈນກວ່າການສຳຫຼວດໃນພື້ນດິນ
- ສາມາດກວດສອບບູຮານສະຖານໄດ້ບໍລິເວນກວ້າງ
- ສາມາດວັດສ່ວນກວ້າງ ສ່ວນຍາວ ແລະ ສ່ວນເລິກຫຼືສ່ວນສູງໄດ້ຕາມມາດຕາສ່ວນທີ່ຖ່າຍພາບນັ້ນ
- ປະຢັດເວລາ ແລະ ຄ່າໃຊ້ຈ່າຍໃນການສຳວດ
- ສາມາດສຳຫຼວດໄດ້ທຸກພູມີປະເທດ
- ສາມາດຂຽນແຜນຜັງແຜນທີ່ຂອງບູຮານສະຖານໄດ້ຈາດຮູບຖ່າຍທາງອາກາດ
- ສາມາດສຶກສາຄວາມສຳພັນລະຫວ່າງແຫຼ່ງບູຮານຄະດີກັບສະພາບແວດລ້ອມ

**ຂໍ້ຈຳກັດຂອງພາບຖ່າຍທາງອາກາດຄື**

- ບໍ່ສາມາດເບິ່ງເຫັນລາຍລະອຽດຕ່າງໆຂອງບູຮານສະຖານໄດ້
- ບາງສິ່ງບາງຢ່າງທີ່ປາກົດໃນພາບຖ່າຍທາງອາກາດຈະຄາດເຄື່ອງຈາກຄວາມເປັນຈິງ
- ການອ່ານພາບຖ່າຍທາງອາກາດຈະໄດ້ຜົນດີຕ້ອງອາໄສການສຳຫຼວດທາງພື້ນດິນປະກອບພ້ອມ

# ບົດທີ 4

# ການແບ່ງຍຸກບູຮານຄະດີ

## 1. ຂໍ້ມູນນຳໃຊ້ໃນການແບ່ງຍຸກ

ວິຊາບູຮານຄະດີເປັນວິຊາທີ່ມີຂອບເຂດການສຶກສາທີ່ກວ້າງຂວາງ ແລະ ໃຊ້ຮູບແບບຂອງເວລາເຂົ້າມາກ່ຽວຂ້ອງກັບການສຶກສາໂດຍການແບ່ງປັນຍຸກສະໄໝຕ່າງໆດັ່ງທີ່ກ່າວຕໍ່ໄປນີ້: ຄົນໄດ້ກຳເນີດ ແລະ ເຮັດກິດຈະກຳຕ່າງໆຢູ່ເທິງໜ້າໂລກມາເປັນເວລາບໍ່ໜ້ອຍກວ່າຫ້າແສນປີມາແລ້ວ ຕະຫຼອດໄລຍະເວລາເຫຼົ່ານັ້ນຄົນໄດ້ພັດທະນາການທາງຮ່າງກາຍ ແລະ ວັດທະນະທຳຂຶ້ນຕາມລຳດັບກິດຈະກຳຕ່າງໆທີ່ຄົນໃນອາດີດສ້າງຂຶ້ນ ແລະ ໄດ້ເຫຼືອຮ່ອງຮອຍໄວ້ນັ້ນນັບວ່າເປັນຫຼັກຖານຂໍ້ມູນທີ່ສຳຄັນ ແລະ ເປັນປະໂຫຍດຕໍ່ການສຶກສາຄົ້ນຄວ້າຈົນເຖິງປະຈຸບັນນີ້.

ເພື່ອປະໂຫຍດຂອງການສຶກສາທາງບູຮານຄະດີ ນັກບູຮານຄະດີໄດ້ແບ່ງຍຸສະໄໝຂອງຄວາມຈະເລີນທາງວັດທະນະທຳທີ່ກ່ຽວຂ້ອງກັບວັດຖຸທີ່ຄົນໃນອາດີດສ້າຂຶ້ນເຊິ່ງໄດ້ແກ່ເຄື່ອງມືເຄື່ອງໃຊ້ຕ່າງໆເຊັ່ນ, ຂວານ, ມີດທີ່ສ້າງຂຶ້ນຈາກຫີນຈັດວ່າເປັນຫຼັກຖານຂໍ້ມູນທີ່ມີໃນຍຸຫີນເຊິ່ງສ້າງຂຶ້ນກ່ອນມີເຄື່ອງໃຊ້ທີ່ສ້າງຂຶ້ນຈາກທອງສຳລິດ ແລະ ເຫຼັກທີ່ຈັດຢູ່ໃນຍຸກໂລຫະ.

ເມື່ອປະມານ **5000** ປີທີ່ຜ່ານມາໄດ້ມີບາງຊາດໄດ້ແກ່ເອຢິບແລະສຸເມຣຍນໄດ້ຄົ້ນຄິດລະບົບການຂຽນໜັງສືຂຶ້ນເຊິ່ງໄດ້ບັນທຶກຊື່ແລະເຫດການທີ່ເກີດຂຶ້ນໃນເວລາຕໍ່ມາຄວາມຮູ້ເລື່ອງການຂຽນໜັງສືໄດ້ແຜ່ຫຼາຍໄປຍັງປະເທດຕ່າງເຊິ່ງລາຍລັກອັກສອນເຫຼົ່ານັ້ນໄດ້ຊ່ວຍໃຫ້ຫຼັກຖານຂໍ້ມູນທາງປະຫວດສາດແລະບູຮານຄະດີສົມບູນຍິ່ງຂຶ້ນ.

ແຕ່ເນື່ອງຈາກຄວາມຈະເລີນຂອງແຕ່ລະທ້ອງຖິ່ນບໍ່ເທົ່າກັຄົນໃນທ້ອງຖິ່ນໄດ້ຄິດຕົວອັກສອນຂຶ້ນໃຊ້ໄດ້ກ່ອນແລະມີຜູ້ອ່ານໄດ້ແລ້ວທ້ອງຖິ່ນນັ້ນກໍເຂົ້າສູ່ສະໄໝປະຫວັດສາດດັ່ງນັ້ນສິ່ງສຳຄັນຢ່າງໜ້ອຍທີ່ໃຊ້ກຳນົດວ່າທ້ອງຖິ່ນໃດຢູ່ສະໄໝກ່ອນປະຫວັດຫຼືສະໄໝປະຫວັດສາດຄືອັກສອນຫຼືຕົວໜັງສືເຊັ່ນ: ປະເທດໄທພົບສີລາຈາຣຶກເຊິ່ງເປັນຕົວອັກສອນຫຼືຕົວໜັງສືທີ່ສຸດມີອາຍຸປະມານພສ 1000 ແລະ ເປັນຕົວອັກສອນຫຼືຕົວໜັງສືມາແລ້ວດັ່ງນັ້ນປະເທດໄທຈຶ່ງເຂົ້າສູ່ສະໄໝປະຫວັດສາດເມື່ອມານປີຄສ 1000 ເປັນຕົ້ນມາປີເທດເອຢິບເລີ່ມເຂົ້າສູ່ສະໄໝປະຫວັດສາດເມື່ອປະມານ **5000** ປີມາແລ້ວ, ປະເທດອິນເດຍເລີ່ມເຂົ້າສູ່ອິນເດຍເມື່ອປະມານ **2300** ປີມາແລ້ວ , ປະເທດຈີນເລີ່ມເຂົ້າສູ່ສະໄໝປະຫວັດສາດເມື່ອປະມານປີພສ 850, ປະເທດລາວເລີ່ມມີຕົວອັກສອນຫຼືຕົວໜັງສືມາແລ້ວເມື່ອປະມານປີພສ 549 ພຸດທະສັກກະລາດ ( ສະຕະວັດທີ 6 ກ່ອນຄສ).

## 2. ຫຼັກການໃນການແບ່ງຍຸກ

- ❖ ການແບ່ງຍຸກສະໄໝທາບູຮານຄະດີກ່ອນປະຫວັດສາດໂດຍທ່ວໄປມີຄື:

- ແບ່ງຕາມຊະນິດວັດຖຸທີ່ນຳມາໃຊ້ເຮັດເປັນເຄື່ອງມືເຄື່ອງໃຊ້ເຊັ່ນ: ຫີນຫຼືໂລຫະ
- ແບ່ງຕາມຮູບແບບທີ່ມີການພັດທະນາໃນການເຮັດເຄື່ອງມືເຄື່ອງໃຊ້ວ່າເຮັດລະອຽດຫຼືບໍ່ລະອຽດເຊັ່ນ: ຂວານຫີນທີ່ເອົາໄວ້ທຸບຕີ, ຂວານຫີນຂັດ.
- ການແບ່ງຍຸກສະໄໝທາງບູຮານຄະດີກ່ອນປະຫວັດສາດຕັ້ງແຕ່ໃນອາດີດຈົນເຖິງປະຈຸບັນໄດ້ມີນັກຍູຮານຄະດຫຼາຍທ່ານສະເໜີຄວາມຄິດເຫັນໃນການແບ່ງຍຸກທາງປະຫວັດສາດໄວ້ຫຼາຍຮູບແບບເຊັ່ນ:

  - ➢ ການແບ່ງຍຸກສະໄໝຕາມພຶດຕິກຳຂອງຄົນວ່າມີຄວາມເປັນຢູ່ຢ່າງປາເຖື່ອນ ແລະ ມີການພັດທະນາມນລະດັບໃດ.
  - ➢ ການແບ່ງຍຸກສະໄໝຕາມວດຖຸທີ່ນຳມາໃຊ້ເຮັດເຄື່ອງມືເຄື່ອງໃຊ້ໄດແກ່ ຫີນສຳລິດ ແລະ ເຫຼັກ

➢ ການແບ່ງຍຸສະໄໝຕາມແບບສັງຄົມວິທະຍາ ແລະ ມະນຸດວິທະຍາ
➢ ການແບ່ງຍຸກສະໄໝຕາມການແບ່ງຍຸກທາງທໍລະນີວິທະຍາໄດ້ແກ່: ສະໄໝ ແລະ ສະໄໝ ເປັນຕົ້ນ
➢ ການແບ່ງຍຸກສະໄໝຕາມຊະນິດຂອງວັດຖຸ ແລະ ການພັດທະນາການເຮັດເຄື່ອງມືເຄື່ອງໃຊ້

ດັ່ງທີ່ກ່າວມາແລ້ວ ການແບ່ງຍຸກສະໄໝຕາມແບບສັງົມວິທະຍາ ແລະ ມະນຸດວິທະຍາໂດຍມີຫຼັກການໃນການພິຈາລະນາຄື: ສະພາບສັງຄົມ ການດໍາລົງຊີວິດ, ການຕັ້ງຖິ່ນຖານ, ສະພາບແວດລ້ອມຕະຫຼອດເຖິງຄວາມຈະເລີນທາງດ້ານເທກໂນໂລຍີ ແລະ ທາງວັດທະນະທໍາຕາມຫຼັກເກນີ້ໄດ້ແບ່ງຍຸກສະໄໝທາງບູຮານຄະດີອອກເປັນ 3 ໄລຍະຄື:

1. ສັງຄົມຫາຂອງປ່າແລະລ່າສັດ
2. ສັງຄົມກະເສດຕະກໍາ
3. ສັງຄົມເມືອງ

ການແບ່ງຍຸກສະໄໝໃນໄລຍະນີ້ຈະສັບສົນສໍາລັບຜູ້ເລີ່ມຕົ້ນສຶກສາຄົ້ນຄວ້າທາງບູຮານຄະດີເພາະການແບ່ງຍຸກສະໄໝດັ່ງກ່າວມີລັກສະນະເປັນນາມມະທໍາ ເຊິ່ງຜູ້ສຶກສາຄົ້ນຄວ້າຕ້ອງໃຊ້ຄວາມນຶກຄິດເລື່ອງລາວຕ່າງໆ ຈຶ່ງເຂົ້າໃຈເຫດການຕ່າງໆໄດ້.

ການແບ່ງຍຸກສະໄໝຕາມແບບເດີມເປັນຫຼັກ ແຕ່ມີການຕໍ່ເນື່ອງໃຫ້ເຫັນເຖິງການແບ່ງຍຸກສະໄໝຕາມແບບໃໝ່ເຂົ້າກັນ.

ຕາຕະລາງປຽບທຽບການແບ່ງຍຸກສະໄໝທາງບູຮານຄະດີກ່ອນປະຫວັດສາດຕາມແນວຄິດທັງສອງແບບ

| ແບບທີ 1 | | | ແບບທີ 2 |
|---|---|---|---|
| | ຍຸກຫີນ | ສະໄໝຫີນເກົ່າ | ຍຸກສັງຄົມຫາຂອງປະ ແລະ ລ່າສັດ |
| | | ສະໄໝຫີນກາງ | |
| ສະໄໝກ່ອນປະຫວັດສາດ | | ສະໄໝຫີນໃໝ່ | |
| | ຍຸກໂລຫະ | ຍຸກໂລຫະ | ຍຸກສັງຄົມກະເສດຕະກໍາ |
| | | | ສະໄໝກ່ອນໃຊ້ໂຫະ |
| | | | ສະໄໝທີ່ມີການໃຊ້ໂລຫະ |

## 3. ການກໍານົດຍຸກສະໄໝທາງບູຮານຄະດີ

ການແບ່ງຍຸກສະໄໝທາງບູຮານຄະດີໂດຍທົ່ວໄປແບ່ງອອກເປັນສອງສະໄໝຄື:

1. ສະໄໝກ່ອນປະຫວັດສາດ
2. ສະໄໝປະຫວັດສາດ

❖ **ສະໄໝກ່ອນປະຫວັດສາດແບ່ງອອກເປັນ 2 ຍຸກຄື:**

ກ. ຍຸກຫີນ ແບ່ງເປັນ 3 ສະໄໝຄື

- ສະໄໝຫີນເກົ່າ

- ສະໄໝຫີນກາງ
- ສະໄໝຫີນໃໝ່

**ຂ. ຍຸກໂລຫະແບ່ງອອກໄດ້ 3 ຍຸກສະໄໝຄື:**

- ສະໄໝທອງແດງ
- ສະໄໝສໍາລິດ
- ສະໄໝເຫຼັກ

❖ ສະໄໝປະຫວັດສາດເນື່ອງຈາກຄວາມຈະເລີນທີ່ເກີດຂຶ້ນໃນແຕ່ລະທ້ອງຖິ່ນຂອງໂລກບໍ່ເທົ່າກັນຈຶ່ງເຮັດໃຫ້ອາດຍາກໍາຕ່າງໆກໍາເນີດຂຶ້ນໃນເວລາທີ່ແຕກຕ່າງກັນເຊັ່ນ: ອະລິຍະທໍາເກຣັກ, ອະລິຍະທໍາອິນເດຍ, ອະລິຍະທໍາຈີນ.

**3.1 ສະໄໝກ່ອນປະຫວັດສາດໂດຍທົ່ວໄປແບ່ງອອກເປັນ 2 ຍຸກຄື:**

1. ຍຸກຫີນເປັນຍຸກທີ່ຄົນໃນໄລຍະທໍາອິດຮູ້ຈັກນໍາໃຊ້ຫີນມາຝົນໃຫ້ເປັນແງ່ມມີຄົມສໍາລັບປະໂຫຍດແຕ່ໄມ້ບໍ່ທົນທານຄືກັບຫີນ ສະນັ້ນຈຶ່ງເຮັດໃຫ້ຫີນທີ່ເຫຼືເປັນຫຼັກຖານຂໍ້ມູຮນໃຫ້ສຶກສາຄົ້ນຄວ້າຈົນເຖິງປະຈຸບັນນີ້.

**ຍຸຫີນສາມາດແບ່ງອອກເປັນ 3 ສະໄໝຄື:**

- **ສະໄໝຫີນເກົ່າ:** ໃນໄລຍະເວລາທີ່ຍາວນານຫຼາຍປີ ເລີ່ມຕັ້ງແຕ່ມີຄົນຮູ້ຈັກໃຊ້ເຄື່ອງມືເຄື່ອງໃຊ້ໂດຍເອົາໄມ້ມາເຮັດເປັນເຄື່ອງມືປາຍແຫຼມ ແລະ ກະບອງ ສ່ວນຫີນນໍາມາຝົນໃຫ້ແຫຼມມີຄົມສໍາລັບສັບຕັບຂຸດ ແລະ ໃຊ້ປະໂຫຍດອື່ນຕາມຕ້ອງການເຄື່ອງມືຫີນນີ້ເອີ້ນວ່າ ເຄື່ອງມືສໍາລັບທຸບຕີ ( ກະເທາະເຊິ່ງເຮັດບໍ່ອຽດເພື່ອໃຫ້ໃຊ້ງານໄດ້ເທົ່ານັ້ນຕໍ່ມາຮູ້ຈັກເຮັດເຄື່ອງມືເຄື່ອງໃຊ້ຈາກກະດູສັດສໍາລັບທີ່ຢູ່ອາໄສບາງພວກແມ່ນອາໄສຢູ່ຕາມຖໍ້າຫຼືຜາ ແລະ ໄດ້ຂຽນພາບສະຫຼັກໄວ້ຕາມຝາຖໍ້າແຕ່ບາງພວກກໍອາໄສຢູ່ກາງແຈ້ງຫຼືໃຕ້ຕົ້ນໄມ້ໂດຍເຮັດປັນບ່ອນພັກອາໄຊ້ວຄາວຄົນພວກນີບໍ່ມີທີ່ຢູ່ອາໄສແນ່ນອນອົບພະຍົບເລລ່ອນຫາອາຫານ ແລະ ຫາຄວາມສະດວກປອດໄພໄປໃນບ່ອນຕ່າງໆ ອາຫານຂອງຄົນພວກນີ້ໄດ້ແກ່: ໝາກໄມ້, ຫົວເຜືກ, ຫົວມັນ, ໃນໄລຍະທໍາອິດແມ່ນກິນດິບໆຢູ່ໃນໄລຍະຕໍ່ມາ ເມື່ອຮູ້ຈັກໃຊ້ໄຟກໍ່ປີ້ງ ແລະ ຢ້າງໃຫ້ສຸກ ແລະ ຍັງໃຊ້ໄຟ ເພື່ອໃຫ້ແສງສະຫວ່າງ ໃຫ້ຄວາມອົບອຸ່ນ ແລະ ປ້ອງກັນສັດຮ້າຍ ພວກເຂົາຢູ່ຮ່ວມກັນເປັນສັງຄົມຂະໜາດນ້ອຍເສື້ອຜ້າເຄື່ອງນຸ່ງຫົ່ມກໍ່ໃຊ້ໜັງສັດປົກປິດຮ່າງກາຍ. ເມື່ອມີຄົນຕາຍພວກເຂົາກໍເຮັດວິທີຝັງສົບ ແລະໃຊ້ສິ່ງຂອງເຄື່ອງມືເຄື່ອງໃຊ້ລົງໃນຫຼຸມສົບ.

ຄົນສະໄໝຫີນເກົ່າກໍ່ໄດ້ກໍ່ໄດ້ດໍາລົງຊີວິດໃນສ່ວນຕ່າງໆຂອງໂລກຫລາຍແຫ່ງເຊິ່ງນັກບູຮານຄະດີໄດ້ເຮັດການສໍາຫຼວດຂຸດຄົ້ນພົບຫຼັກຖານຂໍ້ມູນຕ່າງໄດ້ແກ່ເຄື່ອງມືທີ່ເຮັດດວ້ຍຫີນ ແລະ ກະດູກ, ເຄື່ອງປະດັບກະດູກສັດ ແລະ ກະດູກຄົນ ເປັນຕົ້ນ.

**ວັດທະນະທໍາສະໄໝຫີນເກົ່າໄດ້ແກ່**

- ພົບເຄື່ອງມືທີ່ເຮັດຈາກຫີນກວດ ( ຫີນປົນດິນຊາຍ) ແມ່ນນໍາເຊາະເທື່ອລະໜ້ອຍໃນທະວີບອາຟຣິກາ
- ພົບເຄື່ອງມືທີ່ເຮັດດ້ວຍຫີນທີ່ປະເທດອິນເດຍ
- ພົບເຄື່ອງມືທີ່ເຮັດດ້ວຍໄມ້ຈົນກາຍເປັນຫີນທີ່ປະເທດພະມ່າ
- ພົບເຄື່ອງມືຫີນສໍາລັບທຸບທີ່ເຮັດດ້ວຍຫີນປົນດິນຊາຍ(ຫີນກວດ)ໃນແມ່ນໍ້າທີ່ກາງແຈ້ງ
- ພົບເຄື່ອງມືທີ່ເຮັດຈາກຫີນກວດ ( ຫີນປົນດິນຊາຍ) ແມ່ນໍ້າ ແລະ ໂຄງກະດູກຂອງບາງສ່ວນຂອງ ຫຼື ມະນຸດຊາວາທີ່ປະເທດອິນເດຍ
- ພົບເຄື່ອງມືທີ່ເຮັດຈາກຫີນກວດ ( ຫີນປົນດິນຊາຍ) ໃນແມ່ນໍ້າທາງໃນທີ່ກາງແຈ້ງ ແລະ ຕາມຖໍ້ານອກນັ້ນຍັງພົບໂຄງປະດູກຄົນສະໄໝກ່ອນປະຫວັດສາດເອີ້ນວ່າ ມະນຸດປັກກິ່ງ ຫຼື ທີ່ປະເທດຈີນຫຼື ພົບເຄື່ອງມືຫີນແບນທາງໃນທະວີບເອີຣົບ ແລະ ທະວີບອາເມຣິກາບາງສ່ວນເຄື່ອງມືຫີນແບນຂອງວັດທະນະທໍານີ້ເຮັດດ້ວຍແຖນ

ຫີນຫີນກະເທາະໜ້າດຽວ ( ຫີນກະເທາະໃຊ້ສຳລັບທຸບບໍ່ລະອຽດເຄື່ອງມືຫີນຂອງວັດທະນະທຳພົທັງໃນນ້ຳ ແລະ ໃນກາງແຈ້ງ.

ເຄື່ອງມືຫີນຂອວັດທະນະທຳພົບເຫັນເປັນຄັ້ງທຳອິດທີ່ປະເທດຝຣັ່ງລັກສະນະຂອງວດທະນະທຳຄືເຄື່ອງມືຫີນແຜ່ນ ຮູບເຄິ່ງວົງກົມສຳລັບໃຊ້ຂູ ເຄື່ອງມືປາຍແລມສຳລັບເຈາະ ແລະ ໃບມີດສ່ວນກໍຍັງຄົງມີໃຊ້ຢູ່

ເຄື່ອງມືຫີນຂອງວັດທະນະທຳພົບທີ່ປະເທດຝຣັ່ງເປັນເຄື່ອງມືຫີນແຜນໃບມີດເຂັມ, ໃບຫອກທີ່ເຮັດດ້ວຍກະດູກ ແລະ ເຂົາສັດສີມືໃນການເຮັດເຄື່ອງມືເື່ອງໃຊ້ໄດ້ພັດທະນາຂຶ້ນໃນໄລຍະນີ້ ມີງານສິລະປະເກີດຂຶ້ນໂດຍມີທັງຈິດຕະກຳ ປະຕິມະກຳ ແລະ ສະລັກງານທີ່ສີລະປະສ່ວນຫຼາຍ ປາກົດໃນຖ້ຳເຊິ່ງໃຊ້ເປັນທີ່ຢູ່ອາໄສ

ເຄື່ອງມືເຄື່ອງໃຊ້ທີ່ໄດ້ພັດທະນາມີເຄື່ອງມຫີນຢູ່ 2 ແບບທີ່ມີຊື່ສຽງຂອງວັດທະນະທຳຄືແບບ ແລະ ແບບ ງານສີລະປະໄດ້ພັດທະນາດີຂືນ ແລະ ສວຍງາມ

ເປັນໄລຍະສຸດທາຍຂອງສະໄໝຫີນເກົ່າໃນທະວີບເອີຣົບເຄື່ອງມືເຄື່ອງໃຊ້ສ່ວນຫຼາຍເຮັດດ້ວຍກະດູກສັດ ແລະ ເຂົາສັດ ນັກບູຮານຄະດີບາງຄົນມີຄວາມຈະເລີນສູງສຸດເຄື່ອງມືເຄື່ອງໃຊ້ເຮັດໄດ້ດີ.

❖ **ສະໄໝຫີນກາງ**: ໄລຍະເວລາຂອສະໄໝຫີນກາງເປັນໄລຍະເວລາສັ້ນບາງສ່ວນຂອງໂລກມີອະລິຍະທຳປາກົດຂຶ້ນໜ້ອຍໂດຍສະເພາະນທະວີບເອີຣົບ ແລະ ອາຟຣິກາ ສ່ວນທາງອາຊີພົດມີວັດທະນະທຳປາກົດຂຶ້ນຢ່າງຫຼວງຫຼາຍ ແລະ ມີລັກສະນະສີເພາະຕົວະພາບຊີວິດຄວາມເປັຢູ່ຂອງຄົນສະໄໝຫີນກາງສ່ວນຫຼາຍຄ້າຍຄືກັບສະໄໝຫີນເກົ່າແຕ່ມີຄົນສະໄໝຫີນກາພັດທະນາຂຶ້ນຫຼາຍ.

**ວັດທະນະທຳສະໄໝຫີນກາງທີສຳຄັນໄດ້ແກ່**

ເປັນວັດທະນະທຳທີ່ພົບໄດ້ໃນສະແກນດິເນເວຍ ແລະ ໃນທະວີບເອີຣົບໂດຍສະເພະໃນປະເທດເດນມາຣ໌ໄດ້ພົບຮ່ອງຮອຍຂອງຫຼຸມເສົາບ້ານເປັນບ້ານທີ່ປຸກຢ່າງງ່າຍໆໂດຍໃຊ້ຟາງຫຼືຫຍ້າແຫ້ງມຸງຫຼັງຄາຮູ້ຈັກການປູກພດ, ພືດທີ່ປູກໄລຍະທຳອິດໄດ້ແກ່ ເຂົ້າ, ສາລີນອກຈາກນັ້ນຍັງພົບທ່ອນໄມ້ນຳມາຖາກເປັນເຮືອ, ພົບໝວກ ແລະ ເບັດຕຶກປາເຮັດດ້ວຍກະດູກສັດນ້ຳຂະໜາດໃຫຍ່ ການພົບຫຼັກຖານຂໍ້ມູນເຊັ່ນນີ້ສະແດງວ່າຄົນໃນສະໄໝນັ້ນມີຄວາມສາມດໃນການຈັດສັດນ້ຳໄດ້ດີ ແລະ ມີການຄົມມະນາຄົມສັດນ້ຳເກີດຂຶ້ນແລ້ວສ່ວນເຄື່ອງມືເຄື່ອງໃຊ້ທີ່ເຮັດຈາກຫີນໄດ້ແກ່ຫົວລູກສອນ, ໃບຫອກ ແລະ ທີ່ສຳຄັນຄື່ເຄື່ອງມືຫີນຂະໜາດນ້ອນເຮັດຈາກສະເກັດຫີນຂຶ້ນນ້ອຍໆຮູບຊົງເລຂະຄະນິດໂດຍນຳມາວາງຮຽງໃບໄມ້ທີ່ເຊາະເປັນຮ່ອງແລ້ວເອົາຢາງໄມ້ຢອດໃຫ້ຕິດກັບເຄື່ອງມືຫີນຕິດກັບໄມ້ໃຊ້ເປັນມີດຫຼືກ່ຽວ.

ພົບເຄື່ອງມືຫີນທີ່ເກາະເຊຣິເບສ ແລະ ເກາະຕິມ ເຮັດເປັນໃບມີດຫົວລູກສອນລວມທັງພົບກ້າງປາເປືອກຫອຍ… ມີທັງໃນນ້ຳ ແລະ ກາງແຈ້ງເຄື່ອງມືເຄື່ອງໃຊ້ກ່ອນໜ້ານີ້ແມ່ນເຮັດດ້ວຍຫີນກໍ່ປ່ຽນມາໃຊ້ໂລຫະລັກສະນະສັງຄົມມີຫົວໜ້າໃນການປົກຄອງຢູ່ຮ່ວມກັນເປັນໝູ່ບ້ານ, ມີການປ່ຽນ, ມີການແບ່ງງານກັນຕາມຄວາມເໝາະສົມໃນຍຸກໂລຫະບາງແຫ່ງກໍ່ໄດ້ພັດທະນາເຂົ້າສູ່ສະໄໝປະຫວັດສາດໃນໄລຍະຕໍ່ມາສະໄໝຫີນໃໝ່ ແລະ ຍຸກໂລຫະຈັດໃນສະໄໝສັງຄົມເສດຕະກຳ.

**ວັດທະນະທຳຍຸກໂລຫະໄດ້ແກ່:** Dongson culture ເປັນຊື່ວັດທະນະທຳຍຸກໂລຫະພົບຄັ້ງທຳອິດໃນປະເທດຫວຽດນາມເຊື່ອກັນວ່າວັດທະນະທຳນີ້ໄດ້ເຜີຍແຜ່ເຂົ້າມາດິນແດນປະເທດລາວ, ກຳປູເຈຍ, ພະມ້າ, ໄທ, ມາເລເຊຍແລະອິນໂດເນເຊຍ. ເຄື່ອງໃຊ້ສຳຄັນໃນວັດທະນະທຳນີ້ໄດ້ແກ່ກອງມະໂຫຈະທຶກ, ຫອກສຳລິດ, ຂວານເຫຼັກ, ແຫວນສຳລິດເປັນຕົ້ນ. Ban chleng culture ເປັນຊື່ວັດທະນະທຳຍຸກໂລຫະພົບເຫັນຢູ່ປະເທດໄທເປັນແຫຼ່ງທີ່ພົບເຄື່ອງໃຊ້ທີ່ເຮັດດ້ວຍດິນເຜົາລາຍຂຽນສີ (Palnted pottery) ນອກຈາກນັ້ນຍັງພົບເຄື່ອງມືເຄື່ອງໃຊ້ ແລະ ເຄື່ອງປະດັບທີ່ເຮັດດ້ວຍທອງສຳລິດ, ເຫຼັກແລະລູກປັດເຮັດດ້ວຍແກ້ວເພື່ອເປັນການເຂົ້າໃຈເຖິງການປ່ຽນແປງຂອງຍຸກສະໄໝຕ່າງໆ, ການປ່ຽນແປງບໍ່ໄດ້ເກີດຂຶ້ນຢ່າງທັນທີທັນໃດແຕ່ເປັນການປ່ຽນແປງທີ່ຄ່ອຍໆເປັນຄ່ອຍໄປຂອງສະໄໝທີ່ເກົ່າກ່ອາໄປສູ່

ສະໄໝໃໝ່ກ່ວາຊຶ່ງເປັນລັກສະນະຂອງຄົນທີ່ຮູ້ຈັກການພັດທະນາເພື່ອການດຳລົງຊີວິດທີ່ດີກ່ວາດ້ວຍການສະສົມຄວາມຮູ້ແລະປະສົບການຈາກອະດີດແລ້ວນຳມາປັບປຸງປ່ຽນແປງທີ່ລະເລັກທີ່ລະໜ້ອຍຈົນເປັນທີ່ນິຍົມຢ່າງແຜ່ຫຼາຍຂອງຄົນຮ່ວມສະໄໝເຊັ່ນ: ການປ່ຽນແປງຈາກຫີນທີໃຊ້ໄວ້ທຸບ ( ຫີນກະເທາະ ) ມາເປັນການເຮັດຂວານຫີນຂັດຊຶ່ງຄົງຈະໃຊ້ເວລາການປ່ຽນແປງທີ່ດົນນານພໍສົມຄວນເພາະວ່າການເຮັດຂວານຫີນຂັດມີວິທີເຮັດທີ່ຫຍຸງຍາກຫຼາຍໂດຍຝົນຫີນໃຫ້ເປັນຮູບຮ່າງຕາມຄວາມຕ້ອງການແລ້ວຈຶ່ງນຳຫີນນັ້ນໄປຂັດຖູໃຫ້ຮອຍທີ່ທຸບຫາຍໄປກໍ່ຈະໄດ້ຂວານຫີນຂັດທີ່ສວຍງາມແລະໃຊ້ງານໄດ້ດີກ່ວາເກົ່າເປັນຕົ້ນ.

# ບົດທີ5

# ການກຳນົດອາຍຸບູຮານຄະດີ

ໃນການສຶກສາບູຮານຄະດີ ແລະ ປະຫວັດສາດເລື່ອງໄລຍະເວລາ ຫຼື ຮູບແບບຂອງເວລາທີ່ເກີດເຫດການຕ່າງໆເປັນສິ່ງຈຳເປັນ ແລະ ສຳຄັນຫຼາຍ ເພາະການສຶກສາທາງບູຮານຄະດີ ແລະ ປະຫວັດສາດເປັນການສຶກສາເຖິງສະພາບຊີວິດການເປັນຢູ່ຂອງຄົນໃນອະດີດຕັ້ງແຕ່ປະມານ 2-3 ລ້ານປີມາແລ້ວຈົນເຖິງປັດຈຸບັນ ຈຶ່ງເປັນທີ່ໜ້າສົນໃຈຂອງນັກບູຮານຄະດີ ແລະ ນັກປະຫວັດສາດທີ່ຈະສຶກສາວ່າ ຄົນໃນອະດີດມີສະພາບຊີວິດການເປັນຢູ່ແຕ່ລະຍຸກ ແຕ່

ລະສະໄໝແບບໃດ, ພັດທະນາເປັນຂັ້ນຕອນຢ່າງໃດ ແລະ ເມື່ອໃດໃນທາງບູຮານຄະດີມີວິທີການກຳນົດອາຍຸສະໄໝຂອງຫຼັກຖານຂໍ້ມູນ 2 ວິທີຄື:

1. ການກຳນົດອາຍຸສະໄໝເປັນປີ ( ChronomatlcDatlng )
2. ການກຳນົດອາຍຸສະໄໝໂດຍການປຽບທຽບ ( RelatlveDatlng )

## 1. ການກຳນົດອາຍຸເປັນປີ ( ຫຼື ສັກກະຣາດ )

ເປັນການກຳນົດອາຍຸສະໄໝດ້ວຍຕົວຫຼັກຖານຂໍ້ມູນນັ້ນເອງຊຶ່ງລວມເຖິງວິທີການທາງວິທະຍາສາດ. ປັດຈຸບັດການກຳນົດອາຍຸສະໄໝທີ່ໄດ້ຈາກການກຳນົດດ້ວຍວິທີນີ້ມີຄວາມແນ່ນອນໜ້າເຊື່ອຖືໄດ້ຫຼາຍກ່ວາວິທີອື່ນການກຳນົດອາຍຸສະໄໝເປັນປີສາມາດກຳນົດໄດ້.

### 1.1 ການໃຊ້ໜັງສືຫຼືເອກະສານ

ສຶກສາເລື່ອງລາວ ແລະ ການກຳນົດເວລາຂອງເຫດການໃນອະດີດສາມາດກຳນົດໄດ້ໂດຍການໃຊ້ໜັງສືຫຼືເອກະສານຕ່າງໆເຊັ່ນ: ຈາຣຶກ, ຈົດໝາຍເຫດ, ຕຳນານ, ພົງສາວະດານເປັນຕົ້ນ.

**1.) ຈາຣຶກ**

ການຈາຣຶກຂອງຄົນໃນອະດີດຈະຈາຣຶກໄວ້ເທິງວັດຖຸຕ່າງໆເຊັ່ນ: ເທິງແຜນໂລຫະ, ເທິງແຜນດິນຈີ່, ເທິງໄມ້ຕະຫຼອດຈົນຈາຣຶກເທິງຫີນຫຼືເອີ້ນວ່າສີລາຈາຣຶກທີ່ຄົ້ນພົບເພິ່ນຈະໃຊ້ຕົວອັກສອນແລະພາສາຕ່າງກັນເຊັ່ນ: ຕົວອັກສອນປັດລວະ ( ພາສາວາມອນ ) ແຕ່ພາສາທີ່ຈາຣຶກເປັນພາສາສັນສະກິດບູຮານໃຊ້ຕົວອັກສອນຂອມບູຮານ, ແຕ່ພາສາທີ່ຈາຣຶກເປັນພາສາຂະເມນບູຮານໃຊ້ຕົວໜັງສືຂອມບູຮານ, ແຕ່ພາສາທີ່ຈາຣຶກເປັນພາສາຂອມຫຼືໃຊ້ຕົວໜັງສືປັດລວະ. ແຕ່ພາສາທີ່ຈາຣຶກເປັນພາສາມອນເປັນຕົ້ນ.

ໃນການວິເຄາະຈາຣຶກ, ນອກຈາກ, ຈະພິຈາລະນາຂໍ້ຄວາມຫຼືເລື່ອງລາວແລ້ວພາສາທີ່ໃຊ້ກໍ່ເປັນສິ່ງສຳຄັນຢ່າງຍິ່ງໂດຍສະເພາະແມ່ນພາສາພື້ນເມືອງຈາຣຶກ. ເພາະຈາຣຶກຄືປະກາດບໍ່ມີສີລາລຶກ, ຖ້າເປັນສີລາລຶກເມື່ອເຮັດຂຶ້ນແລ້ວກໍ່ຝັງໄວ້ໃຕ້ອາຄານບໍ່ຕ້ອງການໃຫ້ໃຜອ່ານຖືເປັນເລື່ອງຂອງເລີກຍາມ. ແຕ່ຈາຣຶກເປັນຄືປະກາດທີ່ຕ້ອງການໃຫ້ຄົນຮູ້ເລື່ອງລາວຂອງເຫດການເມື່ອມີຈາຣຶກກໍ່ຕ້ອງມີຜູ້ອ່ານ. ເຖິງວ່າໃນເວລານັ້ນຈະມີຄົນໜ້ອຍຄົນທີ່ອ່ານກໍ່ຕາມ. ຈາຣຶກສ່ວນຫຼາຍຈະບອກເຖິງປີທີ່ສ້າງໄວ້ເຮັດໃຫ້ຜູ້ສຶກສາຮູ້ເຖິງປີທີ່ສ້າງບູຮານວັດຖຸສະຖານ ແລະ ເລື່ອງລາວຕ່າງໆໄດ້ຢ່າງຖືກຕ້ອງ.
ຈາຣຶກບາງແຫ່ງທີ່ເຮັດໃຫ້ເກີດຄວາມເຂົ້າໃຈຜິດເຊັ່ນ: ຈາຣຶກທີໂຄປຸຣະ ( ຊຸ້ມປະຕູ ) ທີ່ລະບຽງຊັ້ນໃນທາງດ້ານທິດໃຕ້ຂອງປະສາດຫີນພິມາຍຈາຣຶກວ່າໃນປີພສ 1651 ( ປີຄສ 1108 ) ຊຶ່ງເປັນປະຕິມະກຳສຳຄັນໄວ້ທີ່ປະສາດຫີນພິມາຍອີງໜຶ່ງແຕ່ຈາຣຶກບໍ່ໄດ້ບອກວ່າສ້າງປະສາດຫີນແຫ່ງນີ້ໃນປີນັ້ນ, ຊຶ່ງເຮັດໃຫ້ເກີດຄວາມເຂົ້າໃຈຜິດວ່າໃນປີ 1651 ( ປີຄສ 1108 ) ເປັນປີທີ່ສ້າງປະສາດພິມາຍ. ແຕ່ກົງກັນຂ້າມສະແດງໃຫ້ເຫັນວ່າປະສາດຫີນພິມາຍໄດ້ສ້າງຂຶ້ນກ່ອນປີພສ 1651 ( ປີຄສ 1108 ) ຈຶ່ງໄດ້ເປັນທີ່ປະດິດສະຖານປະຕິມະກຳອີງນັ້ນ. ດັ່ງນັ້ນ, ຜູ້ສຶກສາຈະຕ້ອງວິເຄາະຫຼັກການຂໍ້ມູນອື່ນປະກອບເຊັ່ນ: ລັກສະນະຕົວອັກສອນໝາຍຄວາມວ່າພາສາທີ່ໃຊ້ຈາຣຶກ, ສຳນວນຂອງພາສາ, ຂໍ້ຄວາມຫຼືເລື່ອງລາວ ແລະ ສະພາບແວດລ້ອມທີ່ພົບຈາຣຶກຈຶ່ງຈະເປັນຈາຣຶກທີ່ໜ້າເຊື່ອຖືແລະໃຊ້ອ້າງອີງໄດ້.

**2) ຈົດໝາຍເຫດ** :

ການວິເຄາະຈົດໝາຍເຫດເຊັ່ນດຽວກັນກັບຈາຣຶກເພາະຈົດໝາຍເຫດແລະຈາຣຶກຕ່າງກໍ່ເປັນຫຼັກຖານຂໍ້ມູນອັນດັບໜຶ່ງຫຼືເອກະສານຂັ້ນຕົ້ນທີ່ບັນທຶກເລື່ອງລາວເມື່ອເກີດເຫດການນັ້ນຂຶ້ນ. ດັ່ງນັ້ນ, ຄວາມເຊື່ອຖືຈະເປັນໄປໄດ້ຫຼາຍ, ຫາກຜູ້ຂຽນມີຄວາມຊື່ສັດຍຸດຕິທຳ. ການວິເຄາະເລື່ອງລາວຈິງຫຼືບໍ່ຈິງຕ້ອງໄດ້ກວດສອບຫຼັກຖານຂໍ້ມູນອື່ນໆປະກອບອີກຫາກມີຂໍ້ມູນກົງກັນຂ້າມກໍ່ແມ່ນຖືກຕ້ອງແລະເຊື່ອຖືໄດ້.

3) **ຕຳນານ ແລະ ພົງສາວະດານ** :

ເປັນການບັນທຶກເລື່ອງລາວທີ່ເກີດຂຶ້ນຈາກການບອກເລົ່າສືບຕໍ່ກັນມາຫຼືເປັນການຮວບຮວມເລື່ອງລາວ, ພາຍຈາກເຫດການນັ້ນເກີດຂຶ້ນແລ້ວຈຶ່ງຈັດເປັນຫຼັກຖານຂໍ້ມູນອັນດັບສອງຫຼືເອກກະສານຂັ້ນຮອງແລະຈະເຊື່ອຖືໄດ້ຈາກຫຼັກຖານຂໍ້ມູນອື່ນມາສະໜັບສະໜູນ. ຜູ້ຂຽນຕຳນານຫຼືພົງສາວະດານ, ບາງຄັ້ງກໍ່ນຳເລື່ອງຈິງມາຂຽນ, ບາງຄັ້ງກໍ່ບໍ່ແມ່ນເລື່ອງຈິງ. ແຕ່ໄດ້ເລົ່າສືບຕໍ່ກັນມາເປັນເວລານານຈຶ່ງຜິດພຽນໄປ. ສະນັ້ນ, ຈຶ່ງບໍ່ຄວນເຊື່ອຖືຕຳນານຫຼືພົງສາວະດານຕະຫຼາດທັງໝົດເຫຼັ້ມ. ນອກຈາກການກວດສອບຫຼັກຖານຂໍ້ມູນອື່ນວ່າຖືກຕ້ອງຈຶ່ງເຊື່ອວ່າຖືກຕອນໆໄປ.

ເພື່ອຈະໄດ້ໃຫ້ຂໍ້ມູນຄວາມຈິງທີ່ຖືກຕ້ອງຄວນເຮັດການຂຸດຄົ້ນຫາຫຼັກຖານຂໍ້ມູນທາງດ້ານບູຮານວັດຖຸສະຖານມາປະກອບເຊັ່ນ: ຕຳນານເມືອງໂຍນົກນະຄອນກ່າວວ່າເມືອງໂຍນົກເປັນນະຄອນທີ່ຈະເລີນຮຸ່ງເຮືອງຫຼາຍແຕ່ຕໍ່ມາເກີດເຫດຮ້າຍເກີດເຮັດໃຫ້ເມືອງລົ້ມຈົມລົງໝົດເມືອງກາຍເປັນໜອງຂະໜາດໃຫ່ຍເອີ້ນວ່າວຽງໜອງລົ່ມປັດຈຸບັດຢູ່ໃນເຂດເມືອງທົ່ງຟ້າຮ່າມ ( ປະເທດໄທ ) ຊຶ່ງບໍ່ທັນໄດ້ເຮັດການຂຸດຄົ້ນເພາະຫາກຂຸດຄົ້ນເມືອງນັ້ນພົບແລ້ວຈຶ່ງເຊື່ອໄດ້ວ່າຕຳນານຫຼືພົງສາວະດານນັ້ນເປັນຄວາມຈິງ.

### 1.2 ການໃຊ້ວັດຖຸທີ່ບອກສັກກະຣາດ

ສ່ວນຫຼາຍໄດ້ແກ່ເງິນຕາ ( ຫຼຽນ ) ທີ່ພົບໄດ້ນແຫຼ່ງບູຮານຄະດີເງິນຕາ ( ຫຼຽນ ) ບາງຫຼຽນຈະບອກປີທີ່ຜະລິດ, ບອກຊື່ຜູ້ຄອງອະນາຈັກ, ສັນຍາລັກຂອງຜູ້ຄອງເມືອງ, ສ່ວນວັດຖຸບູຮານອື່ນໆທີ່ບອກປີຜະລິດໄດ້ແກ່ເຄື່ອງໃຊ້ສອຍທີ່ເຮັດດ້ວຍດິນເຜົາຂອງຈີນແຕ່ຜູ້ສຶກສາຕ້ອງລະມັດລະວັງວ່າຖ້າເຄື່ອງໃຊ້ສອຍທີ່ເຮັດດ້ວຍດິນເຜົາບໍ່ໄດ້ຄົ້ນພົບບ່ອນທີ່ຜະລິດກໍ່ຈະເຮັດໃຫ້ການກຳນົດອາຍຸສະໄໝຂອງແຫຼ່ງບູຮານຄະດີນັ້ນຜິດໄປ. ເພາະປີທີ່ຜະລິດກັບປີຈຳໜ່າຍແລະມາເຖິງແຫຼ່ງທີ່ເຮັດການຂຸດຄົ້ນຈະມີໄລຍະເວລາທີ່ຫ່າງໄກກັນຫຼາຍປີ. ຜູ້ສຶກສາບໍ່ຄວນສະຫຼຸບວ່າແຫຼ່ງບູຮານຄະດີນັ້ນມີອາຍຸກັບປີທີ່ເຫັນຢູ່ເທິງພາຫະນະດິນເຜົາທີ່ຂຸດຄົ້ນພົບ. ດັ່ງນັ້ນ, ການກຳນົດອາຍຸສະໄໝຈາກປີທີ່ເຫັນເທິງພາຫະນະດິນເຜົາຈຶ່ງຕ້ອງພິຈາລະນາປັດໃຈສິ່ງແວດລ້ອມອື່ນໆປະກອບດ້ວຍເຊັ່ນ: ໜັງສືຫຼືເອກະສານບູຮານວັດຖຸອື່ນທີ່ພົບຈາກການຂຸດຄົ້ນຈຶ່ງຈະເປັນສິ່ງກຳນົດອາຍຸສະໄໝແຫຼ່ງບູຮານຄະດີທີ່ແນນອນໄດ້.

### 1.3 ການໃຊ້ວິທີການທາງວິທະຍາສາດ

ບັນຫາທີ່ສຳຄັນຢ່າງໜຶ່ງຂອງການສຶກສາທາງບູຮານຄະດີ ແລະ ປະຫວັດສາດຄື ການກຳນົກໄລຍະເວລາຂອງເຫດການຕ່າງໆທີ່ເກີດຂຶ້ນໃນອະດີດ. ບັນຫາດັ່ງກ່າວ, ນັກວິທະຍາສາດໄດ້ເຮັດການສຶກສາຄົ້ນຄວ້າຫາວິທີການມາເປັນເວລາດົນນານຈົນໃນທີ່ສຸດກໍ່ພົບວິທີການທີ່ສາມາດນຳມາໃຊ້ໃນງານບູຮານຄະດີໄດ້ມີວິທີການທາງວິທະຍາສາດທີ່ນຳມາໃຊ້ກຳນົດຄ່າອາຍຸບູຮານວັດຖຸມີຫຼາຍວິທີຄື: ວິທີກາກບອນ 14 , ວິທີເຮືອງແສງຄວາມຮ້ອນ, ສະໜາຍທິ່ງແມ່ເຫຼັກ, ການນັບປີຂອງຕົ້ນໄມ້, ການດູດຊຶມຂອງອາຍນ້ຳ...

## 2. ການກຳນົດດ້ວຍການປຽບທຽບ

ເປັນການກຳນົດສະໄໝບູຮານວັດຖຸສະຖານໂດຍນຳເອົາສິ່ງທີ່ພົບໃໝ່ໆມາປຽບທຽບກັບສິ່ງທີ່ພົບແລະຮູ້ອາຍຸສະໄໝຂອງສິ່ງທີ່ພົບໃໝ່ໄດ້. ການກຳນົດໂດຍວິທີນີ້ອາດຜິດພາດໄດ້ງ່າຍ, ແຕ່ກໍ່ເປັນປະໂຫຍດໃນການສຶກສາຄົ້ນຄ້ວາຂັ້ນຕົ້ນໄດ້ການກຳນົດອາຍຸສະໄໝດ້ວຍວິທີຕ່າງໆຄື:

### 2.1 ການພິຈາລະນາຮູບແບບ ( Typology )

ການກຳນົດອາຍຸສະໄໝດ້ວຍວິທີນີ້ມີຫຼັກເກນຕ່າງໆຄື: ຖ້າມີບູຮານວັດຖຸຢ່າງໜຶ່ງທີ່ຮູ້ອາຍຸຫຼືສະໄໝແລ້ວແລະໃນເວລາຕໍ່ມາໄດ້ພົບບູຮານວັດຖຸອີກອັນໜຶ່ງມີຮູບຮ່າງຄ້າຍຄືກັບບູຮານວັດຖຸອັນທຳອິດກໍ່ອາດສັນນິຖານໄດ້ວ່າບູຮານວັດຖຸທີ່ໄດ້ມາ. ພາຍຫຼັງມີອາຍຸຫຼືສະໄໝດຽວກັນກັບບູຮານວັດຖຸອັນທຳອິດ.

**ຕົວຢ່າງ:** ຫີນຂວານທີ່ໃຊ້ສຳລັບທຸບເຮັດຈາກຫີນກວດເປັນບູຮານວັດຖຸສະໄໝຫີນເກົ່າ, ຕໍ່ມາກໍ່ໄດ້ຂວານຫີນຝົນທີ່ມີຮູບຮ່າງຄ້າຍຄືກັບຂວານຫີນໃຊ້ສຳລັບທຸບທຳອິດກໍ່ເຮັດໃຫ້ຮູ້ເຖິງອາຍຸສະໄໝຂອງຂວານຫີນຝົນອັນນຳຫຼັງໄດ້. ໂດຍການປຽບທຽບຮູບຮ່າງລັກສະນະຂອງຂວານຫີນສຳລັບທຸບ ( ກະເທາະ ) ຫຼືພິຈາລະນາຈາກຫຼັກຖານທີ່ວ່າສິ່ງຂອງສະໄໝທຳອິດມີຮູບແບບທີ່ງ່າຍຫຼືລອກແບບຈາກທຳມະຊາດ. ແຕ່ໃນໄລຍະຕໍ່ມາຄົນມາຄວາມຈະເລີນຂຶ້ນກໍ່ຄິດປະດິດຮູບແບບໃໝ່ແລະສວຍງາມອອກໄປໄດ້ຫຼາຍຢ່າງຊຶ່ງຈະຕ້ອງພິຈາລະນາເຖິງສະພາບແວດລ້ອມທີ່ພົບສິ່ງຂອງມາປະກອບດ້ວຍ.

### 2.2 ການພິຈາລະນາວິວັດທະນາການຂອງຮູບແບບສິລະປະ ( Evolutlon of style )

ການຈາຣຶກຫຼືເອກະສານອື່ນໆທາງປະຫວັດສາດຜູ້ທີ່ສຶກສານຳໃຊ້ໃນການນົດອາຍຸສະໄໝ, ຫຼັກຖານຂໍ້ມູນໃນສະໄໝປະຫວັດສາດໄດ້ຖືກຕ້ອງແລະເຊື່ອຖືໄດ້ກໍ່ຕາມແຕ່ມີຫຼາຍຄັ້ງທີ່ຈາຣຶກຫຼືເອກະສານທາງປະຫວັດສາດເຮັດໃຫ້ເກີດຄວາມສັບສົນກ່ຽວກັບອາຍຸສະໄໝຂອງບູຮານວັດຖຸສະຖານນັ້ນໄດ້ເຊັ່ນ: ຈາຣຶກຂອງພະເຈົ້າສຸລິຍະວໍຣະມັນທີ1 ກ່າວເຖິງການສ້າງປະສາດເຂົ້າພະວິຫານໃນພຸດທະສາດສະວໍຣະລັດທີ XVIແຕ່ການພິຈາລະນາຮູບແບບສິລະປະປະກົດວ່າປະສາດຫຼັງນັ້ນບໍ່ໄດ້ສ້າງຂຶ້ນໃນສະໄໝພະເຈົ້າສຸລິຍະວໍຣະມັນທີ XVແຕ່ສ້າງໃນສະໄໝຫຼັງເປັນຕົ້ນ.

ການພິຈາລະນາວິວັດທະນາການຂອງຮູບແບບສິລະປະຖ້າເຮັດໄດ້ຢ່າງຖືກຕ້ອງກໍ່ຈະເຮັດໃຫ້ຮູ້ເຖິງວິວັດທະນາການຂອງສິລະປະໄດ້ເພາະສິລະປະທີ່ກ່ຽວເນື່ອງກັບສາລະໜາຫຼືທີ່ເຮັດຂຶ້ນຕາມລະບຽບປະເພນີຄວາມຄິດຂອງຊ່າງສ່ວນໃຫ່ຍຍັງລອກຮຽນແບບເດີມທີ່ເກົ່າແກ່ແລະມີການເຮັດສືບຕໍ່ເປັນສູກໂສ້. ບາງຄັ້ງມີການແລກປ່ຽນທັນທີທັນໃດໂດຍໄດ້ຮັບອິດທິພົນຈາກພາຍນອກຕໍ່ມາກັບເຂົ້າສູ່ໄລຍະເດີມເຊິ່ງເປັນແບບຕົນເອງໃນທີ່ສຸດ.

ຫຼັກສຳຄັນໃນການຈັດລຳດັບວິວັດທະນາການຂອງຮູບແບບສິລະປະໂດຍສະເພາະລວດລາຍປະດັບຄືເລືອກຫາສະນະພິເສດຂອງລວດລາຍສ່ວນໃດສ່ວນໜຶ່ງແລ້ວຈຳແນກລວດລາຍຫຼໍ່ານັ້ນອອກເປັນກຸ່ມຕາມຈຳນວນຫຼາຍໜ້ອຍໃນແຕ່ລະຍຸກແຕ່ລະສະໄໝ. ຕໍ່ມານັ້ນຈຶ່ງຄັດເລືອກລວດລາຍທີ່ສາມາດກຳນົດອາຍຸສະໄໝໄດ້ແນ່ນອນມາເປັນຕົ້ນແບບຊຶ່ງຮູ້ອາຍຸສະໄໝໄດ້ຈາກການຈາຣຶກບອກເວລາທີ່ສ້າງຫຼືຮູ້ອາຍຸສະໄໝໄດ້ໂດຍການປຽບທຽບກັບລວດລາຍທີ່ເປັນສິລະປະກຳຂອງປະເທດອື່ນທີ່ໃຫ້ອິດທິພົນແກ່ລວດລາຍນັ້ນ, ຕໍ່ມາຈຶ່ງຄັດເລືອກລວດລາຍອື່ນເຂົ້າປຽບທຽບເພື່ອຈັດລຳດັບກ່ອນແລະຫຼັງການຈັດລຽງລັກສະນະລວດລາຍທີ່ວິວັດທະນາການເປັນລຳດັບນັ້ນນອກຈາກ, ສຶກສາຄົ້ນຄ້ວາຫຼັກຖານຂໍ້ມູນອື່ນໆຊຶ່ງຮູ້ອາຍຸສະໄໝແນ່ນອນແລ້ວຍັງຈຳເປັນຕ້ອງອາໃສຄວາມຊຳນານແລະປະສົບການຂອງຜູ້ສຶກສາອີກ.

### 2.3 ວັດຖຸທີ່ພົບຢູ່ນຳກັນ ( Assoclatedflnds )

ໃນສະໄໝປະຫວັດສາດວັດຖຸທີ່ເຮັດຂຶ້ນໃນສະໄໝດຽວກັນສ່ວນຫຼາຍຈະຝັງຫຼືວາງຢູ່ນຳກັນແຂວງອຸດລາຊະທານີປະເທດໄທເພິ່ນໄດ້ຄົ້ນພົບຫຼຸມຝັງສົບຍຸກໂລຫະ 1 ໂຄງຢູ່ເທິງຫົວມີເຄື່ອງໃຊ້ທີ່ເຮັດດ້ວຍດິນເຜົາລາຍຂຽນສີວາງຢູ່ 4 ໃບທາງດ້ານຂອງໂຄງກະດູກມີໃບຫອກເຮັດດ້ວຍເຫຼັກວາງຢູ່ 1 ເຫຼັ້ມທີ່ນີ້ວມືທັງສອງເບື້ອງສວມແຫວນສຳລິດແລະທີ່ປາຍຕີນມີເຄື່ອງໃຊ້ທີ່ເຮັດດ້ວຍດິນເຜົາລາຍຂຽນສີວາງຢູ່ 3 ໃບເຄື່ອງໃຊ້ດັ່ງກ່າວແມ່ນໃນຍຸກໂລຫະ.

### 2.4 ການວິເຄາະຊັ້ນດິນ ( SturlngaphlcalAnalysls )

ການທັບຖົມຂອງດິນທີ່ເປັນໄປຕາມທຳມະຊາດແລະບໍ່ຖືກລົບກວນຈະມີການທັບຖົມຊ້ອນກັນຂຶ້ນມາເປັນຊັ້ນໆເກົ່າແກ່ທີ່ສຸດເຊິ່ງຢູ່ຊັ້ນລ່າງແລະຊັ້ນທີ່ເກີດໃໝ່ຈະລຽງຂຶ້ນມາຕາມລຳດັບຈົນເຖິງຊັ້ນດິນປັດຈຸບັດ. ຊັ້ນດິນທີ່ເປັນທີ່ຢູ່ອາໃສຂອງຄົນໃນອະດີດ (Llvlng Floor ) ຈະມີເສດສິ່ງຂອງເຄື່ອງມືເຄື່ອງໃຊ້ (Arlfacts ) ທີ່ຄົນສະໄໝນັ້ນປະຖິ້ມໄວ້. ສິ່ງເຫຼົ່ານີ້, ຈະເຮັດໃຫ້ຮູ້ວ່າຄົນທີ່ເຄີຍຢູ່ອາໃສໃນຊັ້ນດິນນັ້ນເປັນຄົນຍຸກໃດສະໄໝໃດມີຄວາມເປັນຢູ່ຢ່າງໃດມີເຄື່ອງມືແລະເຄື່ອງປະດັບຫຍັງແດ່.

ຊັ້ນດິນທີ່ມີຄົນອາໃສຢູ່ເມື່ອປະຮ້າງໄປຫຼືບໍ່ມີຄົນຢູ່ອາໃສກໍ່ມີອິນຊີວັດຖຸແລະອິນຊີວັດຖຸທັບຖົມເກີດເປັນຊັ້ຊດິນອີກຊັ້ນໜຶ່ງໃນບູຮານຄະດີເອີ້ນຊັ້ນດິນນີ້ວ່າ : ຊັ້ນດິນທຳມະຊາດ ( Natural Soll ) ຊຶ່ງຈະມີສີແລະລັກສະນະເນື້ອດິນຜິດແປກໄປຈາກດິນຊັ້ນອື່ນ. ສະນັ້ນ, ຈຶ່ງຂຶ້ນຢູ່ກັບອິນຊີວັດຖຸແລະອິນຊີວັດຖຸທີ່ທັບຖົມກັນເປັນສຳຄັນ.

ການວິເຄາະຊັ້ນດິນເບື້ອງຕົ້ນທາງບູຮານຄະດີມີລັກການພິຈາລະນາດັ່ງນີ້:

1) ບູຮານວັດຖຸທີ່ພົບໃນຊັ້ນດິນ
2) ສີດິນ
3) ລັກສະນະດິນ

ການກຳນົດສະໄໝໂດຍໃຊ້ຊັ້ນດິນເປັນສິ່ງກຳນົດມີຂໍ້ທີ່ຄວນຄຳນຶງຢ່າງຫຼາຍຄືຊັ້ນດິນໃນແຫຼ່ງບູຮານຄະດີທີ່ຈະໃຊ້ກຳນົດຍຸກສະໄໝຈະຕ້ອງເປັນຊັ້ນດິນທີ່ບໍ່ຖືກລົບກວນແລະຮຽງລຳດັບກັນຂຶ້ນມາຈາກຊັ້ນດິນທີ່ເກົ່າທີ່ສຸດຊຶ່ງຢູ່ຕອນລ່າງແລະຊັ້ນດິນໃໝ່ສຸດຈະຢູ່ຕອນເທິງ. ນອກນັ້ນ, ໃນຊັ້ນດິນບາງຊັ້ນຈະຕ້ອງມີສິ່ງຂອງເຄື່ອງໃຊ້ຂອງຄົນທີ່ເຄີຍຢູ່ອາໃສໃນຊັ້ນດິນນັ້ນຊຶ່ງຈະເປັນສິ່ງທີ່ເຮັດໃຫ້ຮູ້ອາຍຸຫຼືສໄໝໄດ້ໃນເບື້ອງຕົ້ນໃນການວິເຄາະຊັ້ນຂອງແຫຼ່ງບູຮານຄະດີກໍ່ເພື່ອຈະຮູ້ວ່າ:

1) ເຄີຍມີຄົນອາໃສໃນບໍລິເວນນັ້ນມາຈັກຍຸກຈັກສະໄໝ, ແຕ່ລະຍຸກສະໄໝຢູ່ອາໄສມານານພຽງໃດ
2) ມີການປ່ຽນແປງທາງດ້ານວັດທະນະທຳໃນແຕ່ລະຊັ້ນດິນແນວໃດ

ການວິເຄາະຊັ້ນດິນທາງບູຮານຈະຍຶດຫຼັກເບື່ອງຕົ້ນທາງທໍລະນີວິທະຍາທີ່ວ່າເມື່ອມີຊັ້ນດິນເກີດຂຶ້ນຫຼາຍຊັ້ນ, ຊັ້ນດິນທີ່ຢູ່ເທິງຈະມີອາຍຸໜ້ອຍກວ່າຊັ້ນດິນທີ່ຢູ່ລຸ່ມໂດຍທົ່ວໄປຊັ້ນດິນໃນແຫຼ່ງບູຮານຄະດີຈະມີລັກສະນະດັ່ງນີ້:

1. ຊັ້ນສີດິນ ( Humus ) ທີ່ເກີດຈາກຝຸ່ນລະອອງ, ກິ່ງໄມ້, ໃບໄມ້ແລະຊາກສັດທັບຖົມກັນ.
2. ຊັ້ນດິນທີ່ເຄີຍຢູ່ອາໃສຂອງຄົນໃນອະດີດຊຶ່ງມີຫຼາຍກ່ວາຊັ້ນໜຶ່ງກໍ່ໄດ້.
3. ຊັ້ນດິນທີ່ບໍ່ເຮັດກິດຈະກຳຂອງຄົນໃນອະດີດ ( Sterlle )ຈະຢູ່ຊັ້ນລຸ່ມສຸດຂອງຫຼຸມຂຸດຄົ້ນນັກບູຮານຄະດີຈະຕ້ອງແຍກຊັ້ນດິນເຫຼົ່ານັ້ນອອກເປັນຊັ້ນໆໂດຍມີການພິຈາລະນາຈາກສິ່ງທີ່ພົບໃນຊັ້ນດິນເຊັ່ນ: ເສດເຄື່ອງປັ້ນດິນເຜົາ, ເຄື່ອງໃຊ້ຫຼືເຄື່ອງປະດັບເປັນຕົ້ນ.

## 3. ກຳນົດດ້ວຍວິທີໃຊ້ເຄື່ອງມືວິທະຍາສາດ

### 3.1 ດ້ວຍກາກບອນ 14

RadlocarbonDatlng ແມ່ນຫຼັກການຂອງການກຳນົດອາຍຸໂດຍວິທີກາກບອນ 14 ຫຼື ວິທີເຣດີໂອກາກບອນຄືທາດກາກບອນໃນທຳມະຊາດປະກອບດ້ວຍສານໄອໂຊໂທບຄືກາກບອນ 12, ກາກບອນ 13, ເປັນໄອໂຊໂທບເສຍ. ສ່ວນກາກບອນ 14 ຫຼື ເອີ້ນອີກຢ່າງໜຶ່ງວ່າເຣດີໂອກາກບອນ ( Radlocarbon ) ນັ້ນເປັນໄອໂຊໂທບລັງສີກາກບອນ 14 ເກີດຈາກການປະຕິກິລິຍານິວເຄຍລະຫວ່າງອະນຸພາບນິວເຕີນ ( ຕຣອນ ) ທີ່ໄດ້ຈາກລັງສີຄອນມິກກັບອາຕອມຂອງທາດ

ໄນໂຕເຈນໃນບັນຍາກາດຊັ້ນເທິງເມື່ອເກີດຂຶ້ນແລ້ວກໍ່ລວມຕົວກັນກັບອົກຊີເຈນໃນບັນຍາກາດ, ກາຍເປັນກ໊າດກາກບອນໄດອອກໄຊ, ຈາກນັ້ນ, ກໍ່ແຜ່ກະຈາຍລົງມາຊັ້ນບັນຍາກາດຊັ້ນລຸ່ມແລ້ວລົງໄປໃນທະເລແລະມະຫາສະມຸດໃນຮູບກາກບອນເນດ ຫຼື ໄນກາກບອນເນດກາກບອນ 14 ເມື່ອເກີດຂຶ້ນແລ້ວກໍ່ສະລາຍຕົວໄປໂດຍການໃຫ້ອະນຸພາບເບຕາແລ້ວປ່ຽນຕົນເອງເປັນອາຕອມທາດໄນໂຕຣເຈນຄືເກົ່າ. ການເກີດແລະການຂະຫຍາຍຕົວຂອງກາກບອນ 14 ເປັນໄປຢ່າງຕໍ່ເນື່ອງແລະ ຄາດວ່າຈະເກີດຂຶ້ນພ້ອມໆກັບບັນຍາກາດໂລກ. ດັ່ງນັ້ນຕໍ່ມາເມື່ອໄລຍະເວລາຫຼາຍປີພໍສົມຄວນປະລິມານກາກບອນ 14 ໃນບັນຍາກາດຊຶ່ງຢູ່ໃນຮູບຂອງທາດກາກບອນໄດອອກໄຊແລະຢູ່ໃນຮູບກາກບອນເນດຫຼືໄນກາກບອນເນດ. ເມື່ອຢູ່ໃນນໍ້າຈະຢູ່ໃນພາວະສົມບູນອັດຕາການເກີດຂອງການບອນເທົ່າກັບອັດຕາສະຫຼາຍຂອງມັນຫຼືອີກຢ່າງໜຶ່ງປະລິມານກາກບອນ 14 ຕໍ່ 1 ກຼາມ. ໃນບັນຍາກາດຫຼືໃນນໍ້າມີຄ່າຄົງທີ່ຕະຫຼາດເວລາເນື່ອງຈາກທາດກາກບອນໄດອອກໄຊຖືກນໍາໄປໃຊ້ໃນຂະບວນການສັງເຄາະແສງຂອງພືດກາຍເປັນສານອິນຊີຫຼາຍຊະນິດ, ຊຶ່ງມີກາກບອນ 14 ເປັນອົງປະກອບເມື່ອສັດກິນພືດກໍ່ຈະໄດ້ຮັບສານອິນຊີທີ່ມີກາກບອນ 14 ເປັນອົງປະກອບຂອງຕົວສັດອີກ, ປະລິມານກາກບອນ 14 ຕໍ່ 1 ກຼາມກາກບອນໃນພືດຫຼືສັດໃນຂະນະທີ່ດໍາລົງຊີວິດຢູ່ເປັນປະລິມານດຽວກັນກັບກາກບອນ 14 ຕໍ່ 1 ກຼາມກາກບອນໃນບັນຍາກາດຫຼືໃນນໍ້າເວລານັ້ນແລະຈະເປັນປະລິມານດຽວກັບປະລິມານກາກບອນ 14 ຕໍ່ 1 ກຼາມກາກບອນໃນບັນຍາກາດຫຼືໃນນໍ້າປະຈຸບັນເພາະປະລິມານກາກບອນ 14 ຕໍ່ 1 ກຼາມກາກບອນມີຄ່າຄົງທີ່ຕະຫຼອດເວລາ.

ເມື່ອສິ່ງທີ່ມີຊີວິດຕາຍລົງການປ່ຽນແປງລະຫວ່າງກາກບອນ 14 ໃນຕົວຂອງສິ່ງທີ່ມີຊີວິດກັບກາກບອນ 14 ໃນບັນຍາກາດຫຼືໃນນໍ້າສິ້ນສຸດລົງ. ດັ່ງນັ້ນ, ປະລະມານການບອນ 14 ທີ່ມີຢູ່ແຕ່ກ່ອນກໍ່ຈະລົດຈໍານວນລົງໄປເລື້ອຍໆເປັນຜົນສືບເນື່ອງມາຈາກຕົວຂອງມັນເອງອັນຕາການສະລາຍຕົວຂອງສານກໍາມັນລັງສີນິຍົມກັນເວົ້າໃນຮູບຂອງ "ເຄິ່ງຊີວິດ" ໝາຍເຖິງໄລຍະເວລາທີ່ສານກໍາມັນຕໍາລັງສີສະລາຍຕົວໄປເປັນປະລິດມານເຄິ່ງໜຶ່ງຂອງປະລິມານທີ່ມີຢູ່ກອ່ນ.

ສໍາລັບຄ່າເຄິ່ງຊີວິດຂອງການບອນ 14 ມີຄ່າກັບ 5,568 ປີ. ດັ່ງນັ້ນ, ຖ້າເຮົາຮູ້ເຖິງປະລິມານກາກບອນ 14 ທີ່ມີຢູ່ຢ່າງຄົງທີ່ໃນບັນຍາກາດແລະມີຊີວິດຢູ່ໃນປັດຈຸບັນໃນຕົວຢ່າງບູຮານວັດຖຸເຮົາກໍ່ສາມາດຄໍານວນຫາເວລາທີ່ຜ່ານມາຕັ້ງແຕ່ຕົວຢ່າງນັ້ນຕາຍໄປຈົນເຖິງເວລາປັດຈຸບັນໂດຍການກໍານົດຄ່າອາຍຸໂດຍວິທີນີ້ສາມາດກໍານົດຄ່າອາຍຸໃນຊ່ວງ 200 – 50.000 ປີມາແລ້ວຖ້າຫາກຫຼາຍກ່ວານີ້ມັນຈະໃຊ້ຄ່ອຍໄດ້ຜະລິດຈົນເປັນທີ່ຍອມຮັບກັນ.

ປະເພດແລະປະລິມານຕົວຢ່າງທີ່ສາມາດນໍາມາກໍານົດຄ່າອາຍຸຕົວຢ່າງທີ່ເໝາະສົມສໍາລັບທີ່ຈະໃຊ້ໃນການກໍານົດຄ່າອາຍຸໂດຍວິທີນີ້ຈະຕ້ອງມີກາກບອນເປັນອົງປະກອບ ແລະ ທາດກາກບອນສາມາດແລກປ່ຽນທາດກາກບອນໃນບັນຍາກາດຫຼືໃນນໍ້າໄດ້. ຕົວຢ່າງປະເພດທີ່ວ່າໄດ້ແກ່ : ໄມ້, ຖ່ານ, ເປືອກຫອຍ, ກະດູກແລະຖ່ານພືດ. ຕົວຢ່າງດັ່ງກ່າວໄດ້ຈາກສິ່ງທີ່ມີຊີວິດທັງນັ້ນ. ນອກນັ້ນຍັງມີປະເພດກາກບອນເນດໃນດິນຫຼືກາກບອນເນດໃນຕະກອນທະເລ ຫຼື ທະເລສາບກໍ່ສາມາດນໍາມາກໍານົດອາຍຸໄດ້ຕົວຢ່າງພວກຫີນ, ລູກປັດ, ແກ້ວ, ໂລຫະແລະເຄື່ອງປັ້ນດິນເຜົາບໍ່ສາມາດກໍານົດຄ່າອາຍຸໂດຍວິທີນີ້ໄດ້.

**ຕາຕະລາງ 1 ປະລິມານຂອງຕົວຢ່າງປະເພດຕ່າງໆທີ່ໃຊ້ໃນການກໍານົດຄ່າອາຍຸຕົວຢ່າງ:**

| ລ/ດ | ປະເພດ | ປະລິມານທີ່ຕ້ອງການກຼາມ |
|---|---|---|
| 1 | ຖ່ານໄມ້ | 10-20 |
| 2 | ໄມ້ | 20-30 |
| 3 | ເປືອກຫອຍ | 50-100 |
| 4 | ຖ່ານພືດ | 100 |

**ໝາຍເຫດ**

**ຕົວຢ່າງ:** ປະເພດກະດູກກໍ່ສາມາດນໍາມາກໍານົດຄ່າອາຍຸໄດ້ແຕ່ປະລິມານທີ່ໃຊ້ຂື້ນກັບອາຍຸຂອງຕົວຢ່າງຂອງກະດູກນັ້ນໆ ໂດຍທົ່ວໄປກໍ່ຈະໃຊ້ປະມານ 1.000 – 3.000 ກຼາມ.

ຕາຕະລາງທີ2 : ຕົວຢ່າງການກໍານົດຄ່າອາຍຸດ້ວຍວິທີກາກບອນ 14 ຈາກຖ້ຳເປື່ອງແບບແຂວງສຸລາດທານີ

| **ຕົວຢ່າງ: ໝາຍເລກ** | **ປະເພດຕົວຢ່າງ** | **ຜົນການກໍານົດອາຍຸຄ່າອາຍຸເປັນປີກ່ອນ ຄສ 1950 +_10** |
|---|---|---|
| 1 | ກະດູກຕົ້ນຂາມະນຸດດ້ານຊ້າຍ | 4.750 +_ 210 |
| 2 | ຫອຍກາບນ້ຳຈືດ | 6.910 +_ 180 |
| 3 | ກະດູກສັດ | 4.760 +_ 150 |
| 4 | ຫອຍກາບນ້ຳຈືດ | 6.510 +_ 360 |

ຕົວຢ່າງເຫຼົ່ານີ້, ມາຈາກຊັ້ນວັດທະນະທໍາດຽວກັນຄ່າອາຍຸທີ່ແຕກຕ່າງກັນອາດມາຈາກຄ່າຄາດເຄື່ອນກັບມີສິ່ງປົນເປື້ອນ ແລະ ການສະສົມຫີນປູນໃນຕົວຢ່າງທີ່ເປັນຫອຍ. ດັ່ງນັ້ນ, ຜູ້ຂຽນຊຶ່ງເປັນຜູ່ດໍາເນີນການຂຸດຄົ້ນຈຶ່ງເລືອກໃຊ້ຄ່າອາຍຸທີ່ເໝາະສົມ ແລະ ອາດຈະເປັນໄປໄດ້ໂດຍນໍາມາຄໍານວນດັ່ງນີ້:

- ຄ່າອາຍຸຈາກກະດູກຫອຍ 2 ຄ່າເລືອກຄ່າບວກໄດ້ 4.960 ແລະ 4.910 ປີມາແລ້ວ
- ຄ່າກະດູກຫອຍ 2 ຄ່າເລືອກຄ່າລົບໄດ້ 6.150 ແລະ 6.730 ປີມາແລ້ວ
- ຄ່າອາຍຸຂອງຖ້ຳເປື່ອງແບບຈຶ່ງອາດຢູ່ລະຫວ່າງ 5000 – 600 ປີມາແລ້ວ

### 3.2 ດ້ວຍທົ່ງແມ່ເຫຼັກ ( ArchaeomagnetlcDatlng )

ເປັນທີ່ຮູ້ຈັດໂດຍທົ່ວໄປວ່າ ໂລກມີສະພາບເປັນສະໜາມແມ່ເຫຼັກທີ່ມີຂອບກ້ວາງງຂວາງຂື້ນໄປໃນບັນຍາກາດຮອບໂລກ ແລະ ເຖີງວ່າໂລກຈະມີຂົ້ວໂລກເໜືອ ແລະ ຂົ້ວໂລກໃຕ້ ພູມສາດແລ້ວກໍ່ຕາມແຕ່ກໍ່ມີຂົ້ວແມ່ເຫຼັກເໜືອ ແລະ ແມ່ເຫຼັກໃຕ້ອີກດ້ວຍ.

ຕັ້ງແຕ່ຄຣິດສະຕະວັດທີ XIII ເປັນຕົ້ນມາຊາວຢູໂລບໄດ້ພະຍາຍາມຄົ້ນຄ້ວາທົດລອງກ່ຽວກັບເຂັ້ມທິດ ແລະ ອໍານາດແມ່ເຫຼັກໂລກ ພົບວ່າສະໜາມແມ່ເຫຼັກມີການປ່ຽນແປງຢູ່ຕະຫຼອດເວລາ. ຈາກການສັງເກດດັ່ງກ່າວຈຶ່ງເປັນທີ່ໝັ້ນສົນໃຈວ່າຈະນໍາວິທີນີ້ໄປໃຊ້ໃນການກໍານົດອາຍຸສະໄໝບູຮານວັດຖຸໄດ້ ນັກວິທະຍາສາດຈຶ່ງດໍາເນີນການຄົ້ນຄ້ວາທົດລອງຈົນໄດ້ຮັບຜົນສະຫຼູບກ່ຽວກັບການຄົ້ນຄ້ວາສະໜາມແມ່ເຫຼັກໂດຍພົບຄວາມຈິງ 3 ປະການຄື:

- ຂົ້ວເໜືອ - ຂົ້ວໃຕ້ຂອງແມ່ເຫຼັກແຕກຕ່າງກັບຂົ້ວເໜືອແລະໃຕ້ພູມສາດ
- ຂົ້ວແມ່ເຫຼັກປ່ຽນແປງຢູ່ຕະຫຼອດເວລາ
- ວັດຖຸໃດທີ່ມີທາດເຫຼັກຈະມີອໍານາດແມ່ເຫຼັກໂດຍໄດ້ຮັບອິນຊີຂອງສະໜາມແມ່ເຫຼັກໂລກຊຶ່ງເອີ້ນວ່າ: Remnant Magnetlcm.

Remnant Magnetlcm ຈະປະກົດຢູ່ເທິງໜ້າໂລກທົ່ວໄປເມື່ອມີຜູ້ຂຸດເອົາດິນມາປັ້ນເປັນຖ້ວຍ, ໝໍ້, ຊາມ ( ເຄື່ອງໃຊ້ທີ່ເຮັດດ້ວຍດິນເຜົາ ) ແລ້ວເອົາມາເຜົາໄຟອຸນຫະພູມປະມານ 500ອົງສາເຊວັດຖຸກໍ່ຈະເສຍອໍານາດແມ່ເຫຼັກເມື່ອ

ໄດ້ຮັບຄວາມຮ້ອນແຕ່ວັດຖຸນັ້ນເປັນລີງຈິນມີອຸນຫະພູມປົກກະຕິກໍ່ຈະກັບມາມີອໍານາດແມ່ເຫຼັກອີກ. ທິດທາງອໍານາດແມ່ເຫຼັກຄັ້ງກ່ອນນີ້ຈະໄດ້ຮັບສານອິນຊີສະໜາມແມ່ເຫຼັກໃນຂະນະນັ້ນເຊັ່ນ: ຫາກທິດທາງຂອງແມ່ເຫຼັກໂລກໃນເສດເຄື່ອງໃຊ້ທີ່ເຮັດດ້ວຍດິນເຜົາກົງກັບຂໍ້ແມ່ເຫຼັກໂລກທີ່ບັນທຶກໄວ້ເມື່ອປີຄສ1580 ( 2123 ) ເຄື່ອງໃຊ້ທີ່ເຮັດດ້ວຍດິນເຜົານັ້ນສ້າງຂຶ້ນເມືອປີຄສ 1580 ( ພສ 2123 ) ເປັນຕົ້ນ.

### 3.3 ດ້ວຍການດູດຊຶມອາຍນໍ້າ ( Obsldlan Hydration Dating )

Obsldlan ເປັນແກ້ວຊະນິດໜຶ່ງທີ່ເກີດຈາກການລະເບີດຂອງພູເຂົາໄຟມີຫຼາຍສີເຊັ່ນ: ສີເທົາ, ສີນໍ້າຕານ, ສີນໍ້າຕານອອກແດງ, ຈົນກະທັ່ງສີດໍາຄືຖ່ານຫີນຄວາມແຕກຕ່າງຂອງສີເກີດຈາກການປະກອບໃນເນື້ອແກ້ວແລະອັດຕາທີ່ໄດ້ຮັບຄວາມເຢັນຄົນສະໄໝບູຮານນໍາ Obsldlan ມາໃຊ້ເຮັດເຄື່ອງມື ແລະ ເຮັດເຄື່ອງປະດັດຕະຫຼອດຈົນເອົາມາເຮັດສິລະປະວັດຖຸອື່ນໆ. ໃນປີຄສ 1960ໄດ້ມີນັກວິທະຍາສາດ 2 ທ່ານຄື: DrlrvlngFrledman ແລະ Dr RobertL smlth ຄົ້ນພົບວ່າ Obsldlan ເປັນແກ້ວທີ່ສາມາດດູດຊຶມນໍ້າໄປຕາມຜິວໄດ້ໂດຍຂະບວນການທີ່ເອີ້ນວ່າ: Obsldlanຈົນກາຍເປັນສ່ວນທີ່ປະກົດຢູ່ຕາມພື້ນໜ້າຊຶ່ງເອີ້ນວ່າ Hydralion Layer ແຕ່ກໍ່ຍັງມີສິ່ງທີ່ຕ້ອງການຮູ້ຕໍ່ໄປອີກວ່ານໍ້າທີ່ຊຶມເຂົ້າໄປນັ້ນອັດຕາສ່ວນທີ່ແນ່ນອນສະໝໍ່າສະເໝີທຸກໆປີຫຼືບໍ່, ຖ້າສະໝໍ່າສະເໝີກັນທຸກປີກໍ່ອາດນໍາມາໃຊ້ວັດ Hydralion ໄດ້ເຮັດໃຫ້ຮູ້ອາຍຸຂອງ Obsldlan ນັ້ນວ່າມີອາຍຸຈັກປີອັດຕາຂອງ Hydralion ອາດນໍາມາໃຊ້ກໍານົດອາຍຸບູຮານວັດຖຸໄດ້ຄືເອົານໍາມາຕັດ ແລະ ຝົນໃຫ້ມີຄວາມໜາ 0.003 ນີ້ວແລ້ວນໍາມາວັດຄວາມໜາຂອງ HydralionLayer ໂດຍມີໜ່ວຍວັດເປັນ Micron ( 1 ໄມຄອນເທົ່າກັບ 0.001 mm) ຊຶ່ງສາມາດນໍາໄປຫາອາຍຸໄດ້ໂດຍການປຽບທຽບກັບຄວາມໜາມາດຕາຖານຂອງວັດຖຸທີ່ໄດ້ມາຈາກທີ່ຕ່າງໆຂອງໂລກເຊັ່ນ: ຖ້າເປັນObsldlanທີ່ໄດ້ຈາກເອຢິບຈະມີ Hydralion Layer ໜາປະມານ 14 ໄມຄອນຊຶ່ງມີອາຍຸປະມານ 1000 ປີມາແລ້ວເປັນຕົ້ນ.

### 3.4 ດ້ວຍນັບວົງປີຂອງຕົ້ນໄມ້ ( Dendrochrono Logy Dating )

ການນັບວົງປີຂອງຕົ້ນໄມ້ ( Tree – Ring ) ເປັນທີ່ຍອມຮັບວ່າວົງປີຂອງຕົ້ນໄມ້ສາມາດບອກອາຍຸຂອງຕົ້ນໄມ້ນັ້ນໄດ້ຊຶ່ງມາຈາກຄວາມຈິງທີ່ວ່າຕົ້ນໄມ້ມີຂະໜາດໃຫ່ຍເພີ່ມຂຶ້ນໂດຍການເພີ່ມວົງປີໃຫ້ແກ່ລໍາຕົ້ນຄວາມໜາບາງຂອງວົງປີຕົ້ນໄມ້ແຕ່ລະທ້ອງຖິ່ນຈະເຮັດໃຫ້ເຫັນຄວາມແຕກຕ່າງທາງດ້ານສະພາບພູມສາດໄດ້ໂດຍທົ່ວໄປແລ້ວຕົ້ນໄມ້ຈະເພີ່ມວົງປີໂດຍການສ້າງເຊວຂຶ້ນມາໃນລະດູທີ່ມີອາກາດຊຸ່ມຊື່ນ, ເໝາະແກ່ການຈະເລີນເຕີບໂຕຂອງຕົ້ນໄມ້, ຕົ້ນໄມ້ຈະຂະຫຍາຍລໍາຕົ້ນອອກໄປໄດ້ຫຼາຍວົງປີກໍ່ມີຄວາມກ້ວາງໃນທາງກົງກັນຂ້າມ, ຫາກປີໃດມີຄວາມແຫ້ງແລ້ງ, ຂາດຄວາມອຸດົມສົມບູນເຮັດໃຫ້ຕົ້ນໄມ້ງອກງາມໄດ້ຊ້າ, ລໍາຕົ້ນຂະຫາຍຕົວໄດ້ໜ້ອຍວົງປີກໍ່ຈະແຄບ.

ການກວດສອບບູຮານວັດຖຸທີ່ເຮັດດ້ວຍໄມ້ຈະຕ້ອງນໍາໄປປຽບທຽບກບຕົວຢ່າງ (Tattem ) ຊຶ່ງຮູ້ວ່າອາຍຸແນ່ນອນແລ້ວ ແລະ ແບບຢ່າງນັ້ນຈະຕ້ອງເປັນໄມ້ທີ່ມາຈາກບໍລິເວນດຽວກັນກັບໄມ້ທີ່ຕ້ອງການທົດສອບອາຍຸ, ເພາະໄມ້ທີ່ເກີດຂຶ້ນໃນບໍລິເວນດຽວກັນຕ້ອງມີແບບແຜນການຈະເລີນເຕີບໂຕຢ່າງດຽວກັນ ເນື່ອງຈາກລັກສະນະອາກາດທີ່ຄືກັນ. ວິທີການທົບສອບເຊັ່ນນີ້ເປັນທີ່ນິຍົມໃນເຂດອາເມຣິກາເໜືອ ເຖິງວ່າການທົດສອບໃນວິທີນີ້ຈະໃຊ້ການກວດສອບອາຍຸຍ້ອນຫຼັງໄປໄດ້ພຽງ 2000 ປີກໍ່ຕາມ, ແຕ່ກໍ່ນັບວ່າເປັນປະໂຫຍດໃນການກວດສອບຫາອາຍຸຫຼາຍຢ່າງໃນທາງການປະຕິບັດແລ້ວການກວດສອບຫາອາຍຸດ້ວຍວິທີນີ້ຈະມີຜົນດີເມື່ອມີດັ່ງໃຈດັ່ງນີ້:

- ຕົ້ນໄມ້ຕ້ອງມີວົງປີຊັດເຈນເປັນຜົນມາຈາກລັກສະນະພູມອາກາດຊຶ່ງອາດຈະຊຸ່ມຊື່ນ ຫຼື ແຫ້ງແລ້ງ, ແຕ່ໃນບາງຄັ້ງເກີດອາກາດແປປ່ວນ ມີຝົນຕົກໃນລະດູຮ້ອນເຮັດໃຫ້ວົງປີເກີດອາການສັບສົນໄດ້.
- ໄມ້ທີ່ຕ້ອງການກວດສອບຕ້ອງມີລັກສະນະໂຄງສ້າງຂອງເຊວຕ່າງໆຄົບຖ້ວນ.

**ຕົວຢ່າງ:** ຢູ່ປະເທດໄທ ໄມ້ທີ່ນໍາມານັບວົງປີເພື່ອຮູ້ອາຍຸໄດ້ແກ່: ໄມ້ສັກ ເພາະເປັນໄມ້ທີ່ມີວົງປີຊັດເຈນ.




**ໄມ້ສັກ ອາຍຸ 100 ປີ**

# ບົດທີ 6

# ບູຮານຄະດີ ແລະ ມໍລະດົກຂອງລາວ

## 1. ປະຫວັດການສຶກສາບູຮານຄະດີໃນລາວ

ປະເທດລາວເປັນປະເທດໜຶ່ງທີ່ມີຂອບເຂດກ້ວາງໃຫ່ຍ, ບາງບ່ອນກວມເອົາສອງຝັ່ງລ້ອງແມ່ນໍ້າຂອງຕອນກາງແຕ່ເໜືອເຖິງໃຕ້. ຊຶ່ງເມື່ອກ່ອນມີເນື້ອທີ່ກ້ວາງຂວາງກ່ວາທີ່ມີຢູ່ໃນປັດຈຸບັນ ແລະ ເປັນອານາຈັກໜຶ່ງທີ່ມີບົດບາດທາງດ້ານເສດຖະກິດ, ການເມືອງ, ວັດທະນະທໍາແລະສັງຄົມ. ຜ່ານປະຫວັດສາດອັນຍາວນານຄືກັນກັບຢູ່ອານາຈັກອື່ນໆໃນແຫຼມອິນດູຈີນ.

ແຜນດິນທີ່ເອີ້ນວ່າປະເທດລາວໃນປັດຈຸບັນນີ້, ເປັນເສັ້ນທາງຜ່ານລະຫ່ວາງມະນຸຊາວາ ( Java ) ກັບມະນຸດັກກິ່ງຊຶ່ງມີອາຍຸປະມານ 800.000 ປີມາແລ້ວແຕ່ເປັນແຜນດິນທີ່ໃກ້ຊິດກັບວັດທະນະທໍາປົວບິນ ແລະ ວັດທະນະທໍາດົງຊອນຂອງຫວຽດນາມດັ້ງນັ້ນ. ຈື່ງເປັນທີ່ແນ່ນອນວ່າດິນແດນລ້ອງແມ່ນໍ້າຂອງທີ່ເອີ້ນວ່າເປັນປະເທດລາວນີ້ຈະຕ້ອງມີມະນຸດເຂົ້າມາອາໃສຢູ່ລ້ວນັບເປັນແສນໆປີມາແລ້ວ. ຢູ່ນລາວເພິ່ນໄດ້ຄົ້ນພົບບາງຮ່ອງຮອຍປະຫວັດສາດມະນຸດປະຖົມບູຮານ ແລະ ຫຼັກຖານປະຫວັດສາດໃນສະໄໝຕ່າງໆຄື:

- ຍຸກຫີນເກົ່າ (Polaeollthic Period)
- ຍຸກຫີນກາງ (Mesollthic Period)
- ຍຸກຫີນໃໝ່ (Neollthic Period)
- ຍຸກຫີນໃຫຍ່ (Megallthic Period)
- ຍຸກໂລຫະ (Metal period)

**1.1 ຍຸກຫີນເກົ່າ**

ເພິ່ນໄດ້ສຳຫຼວດພົບເຫັນເຄື່ອງມື, ເຄື່ອງໃຊ້ເພື່ອລ່າເນື້ອສັດໃຫຍ່ຂອງມະນຸດປະຖົມບູຮານ ຫຼື ວ່າເຄື່ອງມືຫຍາບໆທີ່ມີຢູ່ທົ່ວໄປໃນແຜ່ນດິນລາວໂດຍສະເພາະຢູ່ ແຂວງຫົວພັນ, ຊຽງຂວາງ, ຫຼວງພະບາງ, ວັງວຽງແຂວງວຽງຈັນ, ມະຫາໄຊ ແຂວງຄຳມ່ວນ ແລະ ພິເສດໄດ້ຄົ້ນພົບບົ້ງກະໂຫຼກຫົວຄົນປະຖົມບູຮານ, ກະດູກສັດດແຂ້ວສັດທີ່ຖ້ຳຮ້າງ, ຖ້ຳປ່ອງສາຍພູເລີຍໄປທາງທິດຕາເວັນອອກສຽງເໜືອຂອງແຂວງຫຼວງພະບາງປະມານ 40.000 ມາແລ້ວ ແລະ ສັນນິຖານວ່າອາດແມ່ນ ມະນຸດເຜົ່າພັນດຽວກັນ ກັບ ມະນຸດ ຊາວາ (ອິນໂດເນເຊຍ) ແລະ ມະນຸດປັກກິ່ງ (ສ ປຊ ຈີນ).

**1.2 ຍຸກຫີນກາງ**

ໄດ້ພົບຢູ່ແຂວງຫຼວງພະບາງ, ຈຳປາສັກ ແລະ ບັ້ງຄ້ອງ (ກອງທອງ) ພົບຢູ່ພູຜາດ່າງແຂວງວຽງຈັນ ແລະ ບ່ອນອື່ນໆ. ທາງພາກເໜືອຂອງລາວມີເຄື່ອງມືເຫຼັກພົບເຫັນຢູ່ບໍລິເວນທົ່ງໄຫຫີນແຂວງຊຽງຂວາງເຊິ່ງສັນນິຖານວ່າມີອາຍຸປະ 2500 ປີ ຫາ 30.000 ປີມາແລ້ວ.

**1.3 ຍຸກຫີນໃໝ່**

ຍຸກນີ້ເພິ່ນໄດ້ຄົ້ນພົບເຄື່ອງມືຫີນພັດທະນາສູງຂື້ນຕາມແບບສະບັບເຄື່ອງອອກແຮງງານຊະນິດຕ່າງໆເຊັ່ນ: ຂວັນຫີນປະເພດມີບ່າ, ບໍ່ມີບ່າບາງອັນມີຮູດ້າມ, ບາງອັນບໍ່ມີຮູດ້າມແລະມີປາຍຄົມ, ບາງທ້ອງຖິ່ນປະຊິນເອີ້ນວ່າຂວັນຟ້າ, ຂວັນແຖນ ແລະ ບາງບ່ອນເອີ້ນວ່າສຽມຕຸນ ແລະ ອື່ນໆ. ເຄື່ອງມືປະເພດນີ້ໄດ້ພົບເຫັນຫຼາຍພິເສດແມ່ນຢູ່ແຂວງຫຼວງພະບາງ, ວຽງຈັນ ແລະ ຄຳມ່ວນ

**1.4 ຍຸກຫີນໃຫຍ່**

ແມ່ນໄລຍະຕໍ່ເນື່ອງລະຫວ່າງຍຸກຫີນໃໝ່ ແລະ ຍຸກໂລຫະເຊິ່ງມະນຸດນິຍົມກັນເອົາຫີນກ້ອນໃຫຍ່ມາປະດິດສ້າງເປັນອະນຸສອນເຖິງອັນໃດອັນໜຶ່ງຫຼືພິທີກຳທາງສາສະໜາຕາມຄວາມເຊື່ອຖື. ວັດທະນະທຳຫີນໃຫຍ່ນີ້ພົບເຫັນຢູ່ສປປລາວຫຼາຍບ່ອນຄື: ກຸ່ມເສົາຫີນຢູ່ເມືອງຮາມ, ເມືອງເປີນແຂວງຫົວພັນ ເຊິ່ງມີຂະໜາດແຕ່ 1 ແມັດ ເຖິງ 5 ແມັດ. ກຸ່ມໄຫຫີນ ແຂວງຊຽງຂວາງ ບາງໜ່ວຍສູງໄດ້ 3,25 ແມັດ ແລະ ປາກກວ້າງ 3 ແມັດ ເຊິ່ງມັນຄົ້ນຄວ້າສັນນິຖານວ່າໄຫຫີນ ນີ້ມີມະນຸດບູຮານ ສ້າງຂື້ນເພື່ອໃສ່ຊາກສົບຄົນຕາຍ ຫຼື ກະດູກຄົນຕາຍ ຊຶ່ງເກັບໄວ້ຕາມການນັບຖືຕາມປະເພນີຂອງເຂົາເຈົ້າ. ກຸ່ມຮູບຊ້າງຫີນມີຢູ່ຕາແສງເຕົ່ງເມືອງຍົມມະລາດ, ຮູບນົກຍູງຫີນໃຫຍ່ຕາແສງວຽງທອງເມືອງ ຍົມມະລາດ ແຂວງຄຳມ່ວນ. ຍຸກຫີນໃຫຍ່ຢູ່ລາວຢ່າງໜ້ອຍອາຍຸປະມານ  2000 ປີ ຫາ 4000 ປີມາແລ້ວ.

**1.5 ຍຸກໂລຫະ**

ຍຸກນີ້ນອນຢູ່ໃນສະໄໝທອງແລະເຫຼັກເຊິ່ງແມ່ນໄລຍະລະບອບສັງຄົມຂ້າທາດແລະສັກດີນາແຕ່ຢູ່ລາວຍັງບໍ່ຮູ້ຄັກແນ່ວ່າສັງຄົມຂ້າທາດມີ ຫຼື ບໍ່ ແລະ ການລິເລີ່ມສັງຄົມສັກດີນາມີມາແຕ່ເມື່ອໃດແທ້. ແຕ່ວັດຖຸເຄື່ອງໃຊ້ທີ່ເຮັດດ້ວຍ

ໂລຫະໄດ້ພົບຢູ່ຫຼາຍບ່ອນເຊັ່ນ: ຂວານທອງບໍ່ມີຮູ້ດ້າມ (ເອີ້ນວ່າ ຂວານຟ້າຜ່າ) ໄດ້ພົບເຫັນໃນບໍລິເວນ ອ່າງນ້ຳຊວງ, ທົ່ງ ຮາບ ແຂວງ ວຽງຈັນ, ຂວານທອງມີຮູ້.

## 2. ປະເພດບູຮານຄະດີໃນລາວ

### 2.1. ປະເພດວັດຖຸ / ເຄື່ອງມື, ເຄື່ອງໃຊ້, ເຄື່ອງເອ້.

ນັບແຕ່ 6000 – 1200 ປີກ່ອນຄ.ສ ( BC) ໄດ້ພົບຮ່ອງຮອຍການດຳລົງຊີວິດຂອງຄົນບູຮານຢູ່ຫຼາຍແຫ່ງເຊັ່ນ: ຢູ່ຖ້ຳເລີຍແລະຖ້ຳຮ້າງໄດ້ພົບເຄື່ອງມືຫີນຕ່ອຍ, ແຂ້ວແລະປີ້ງກະໂຫຼກຂະໜັບຊ້າຍຂອງຄົນບູຮານຊຶ່ງເປັນກະດູກປະເພດດຽວກັບມະນຸດຊາວາແລະມະນຸດປັກກິ່ງ. ຢູ່ໃນສັງຄົມຊົນເຜົ່າເພິ່ນໄດ້ຄົ້ນພົບຕັ່ງຫີນ, ຫີນຕັ້ງ, ໂລງຫີນ, ຂຸມສົບທີ່ເຮັດດ້ວຍແທ່ງຫີນ. ນອກນັ້ນ, ຍັງພົບຫີນຕັ້ງຢູ່ຊຳເໜືອ, ຫຼວງນ້ຳທາ, ຫຼວງພະບາງແລະໄຫຫີນຢູ່ຊຽງຂວາງລວມທັງໂຮງສົບຫີນທີ່ຄົ້ນພົບຢູ່ຕາມຖ້ຳຕາມພູຕ່າງໆ. ນອກຈາກນັ້ນຍັງໄດ້ຄົ້ນພົບເຕັກນິກໃນການຕຳແຜ່ນຕິດຢູ່ໝໍ້ບ້ານຊຽງ. ຢູ່ຖ້ຳເລີຍໄດ້ຄົ້ນພົບໂຄງກະໂຫຼກຫົວຄົນແລະແຂ້ວໂຄມ ( ແຂ້ວກົກ ) ຂອງຄົນສະໄໝສະຫະຊີບປະຖົມບູຮານພ້ອມທັງເຄື່ອງມືຫີນຕ່ອຍໜ້າດຽວແລະກະດູກສັດໃນຍຸກດຽວກັນເຊັ່ນ: ກະດູກຊ້າງ, ກະດູກໝີ, ກະດູກແມວ, ກະດູກສິງ, ກະດູກກວາງ ແລະ ກະດູກແຮດ.

ຢູ່ຖ້ຳຮ້າງໄດ້ຄົ້ນພົບແຂ້ວຄົນຊະນີ, ປີ້ງຫົວຄົນຊະນີ, ປີ້ງກະດູກຂ້າງຊ້າຍຂອງຄົນຊະນີ. ພ້ອມທັງເຄື່ອງມືຫີນໜ້າດຽວຮູບສາມຫຼ່ຽມຄົມແຫຼມ, ກະດູກສັດກາຍເປັນຫີນແລ້ວ, ກະດູກເໜືອຍ, ກະດູກແມວກະດູກກວາງ, ກະດູກຊ້າງງາໂຄ້ງແລະກະດູກສັດທີ່ຖືກທຸບຕີ, ເຄື່ອງມືທີ່ເຮັດດ້ວຍກະດູກສັດເຊັ່ນ: ເບັດ, ສິ່ວ, ຢູ່ຖ້ຳນາງແອນຫ່າງຈາກຫຼວງພະບາງປະມານ10 ກິໂລແມັດໄດ້ພົບເຄື່ອງມືທີ່ເຮັດດ້ວຍຫີນຝົນເປັນເຄື່ອງໃຊ້ໃນສະໄໝສັງຄົມຫີນໃໝ່. ນອກນັ້ນຍັງພົບເຄື່ອງໃຊ້ໃນຍຸກໂລຫະເຊັ່ນ: ຂວານ, ທອງເຫຼືອງຄ້ອງບ້າງ, ເຄື່ອງເອ້ຕ່າງໆ.

ຢູ່ຫຼວງພະບາງໄດ້ພົບເຄື່ອມືແລະເຄື່ອງເອ້, ອາວຸດຫຼາຍຊະນິດເຊັ່ນ: ຂວານ, ສິ່ວ, ຫອກ, ລູກທະນູ, ປອກແຂນ ແລະ ໂຈກທອງເຫຼືອງ. ນັກບູຮານຄະດີທອງສາໄຊຍະວົງຄຳດີໄດ້ຄົ້ນພົບວັດຖຸບູຮານຫຼາຍຢູ່ທົ່ງໄຫຫີນເຊັ່ນ: ໝາກປັດແກ້ວ, ເຄື່ອງມືຫີນ, ຫົວຂວານ. ວັດທະນະທຳໄຫຫີນທີ່ທົ່ງໄຫຫີນສ້າງຂຶ້ນມນຍຸກໂລຫະຄືສະໄໝທອງເຫຼືອງ ແລະ ສະໄໝເຫຼັກອາຍຸປະມານ 2500 ຂຶ້ນໄປເຖິງ 3500 ປີ. ຢູ່ເຂດລຽບນ້ຳເທີນເພິ່ນໄດ້ຄົ້ນພົບຮ່ອງຮອຍບູຮານຄະດີໂດຍສະເພາະແມ່ນວັດຖຸບູຮານໃນຍຸກໂລຫະເຊັ່ນ: ຄົກຫີນ, ແກ້ວຫີນຕຳ, ກົງລໍ່ຫີນທີມີຮູທາງກາງເຮັດຂຶ້ນຢ່າງລະອຽດແລະຈົບງາມຊຶ່ງຢູ່ລະຫວ່າງແຄມແມ່ນ້ຳເທີນ.

ສະໄໝປັດຈຸບັນປະມານ 800 ປີຢູ່ແຂວງວຽງຈັນເພິ່ນໄດ້ຄົ້ນພົບເຄື່ອງປັ້ນດິນເຜົາລາຍຮ້ອຍເຊືອກແບບໃໝ່ ແລະ ພາສະນະດິນເຜົາຊະນິດແຂງ, ຖ້ວຍ, ຊາມ, ເຄື່ອງເຫຼັກ, ທອງສຳລິດ, ກະດູກຄົນທີ່ເຜົາແລ້ວ. ປະມານ 3000 ປີມາແລ້ວເພິ່ນໄດ້ຄົ້ນພົບເມືອງຮ້າງສີໂຄດຕະບອງເປັນເມືອງທີ່ບົ່ງບອກລັກສະນະຂອງສັງຄົມເມືອງໄດ້ມີກອງມູນດິນຂະໜາດໃຫຍ່ມີລັກສະນະຮູບຍາວພາຍໃນມູນດິນເຄຍລະດາດໄປດ້ວຍກ້ອນດິນຈີ່ ແລະ ເຟື້ອງໝໍ້ໄຫ. ຢູ່ເມືອງຊຽງຄານນັກສຳຫຼວດໄດ້ຄົ້ນຄ້ວາແລະຂຸດຄົ້ນປີ 1973 – 1974  ໄດ້ພົບຖ້ຳດິນ 2 ແຫ່ງຄື: ຢູ່ເມືອງຊະນະຄາມວັນທີ25 / 2 / 1974 ໄດ້ຂຸດຄົ້ນທົດລອງ. ຢູ່ເລົ່າປາໂກໃກ້ໆວຽງຈັນໄດ້ຄົ້ນພົບວັດຖຸບູຮານຫຼາຍຢ່າງອາຍຸປະມານຢູ່ລະຫວ່າງສະຕະວັດທີII ກ່ອນຄ.ສເຖິງສະຕະວັດທີIII ຫຼັງຄ.ສ. ໄດ້ພົບເຄື່ອງມື , ເຄື່ອງໃຊ້ທີ່ເຮັດດ້ວຍໂລຫະເຊັ່ນ: ຄ້ອງບັງທີ່ເຮັດດ້ວຍທອງສຳລິດ, ເຄື່ອງປະດັບລວດລາຍຕ່າງໆ, ອາວຸດທີ່ເຮັດດ້ວຍທອງສຳລິດຄື: ຂວານ, ຫອກ, ຫົວລູກສອນ, ດ້າມມີດ, ມີດສັ້ນພາສະນະທີ່ເຮັດດ້ວຍທອງສຳລິດເຊັ່ນ: ໝໍ້, ພານແຈກັນ, ຂັນ, ໂອ, ຮູບຫຼໍ່ສຳລິດ, ເຄື່ອງປະດັບສຳລິດ, ເຄື່ອງປັ້ນດິນເຜົາ ແລະ ລູກກິ່ງເພື່ອແຕ້ມລາຍໝໍ້. 1983 ໄດ້ຄົ້ນພົບຄ້ອງບັງຫຼືຕັ່ງເຈືອງໃນເຂດພູເຂົ້າລີບແລະພູສາມສຸມ. ໃນປີ 1991 ຢູ່ແຂວງຫຼວງພະບາງໄດ້ຄົ້ນພົບເຄື່ອງປັ້ນດິນເຜົາທີ່ສຳຄັນມີອາຍຸ 600 ປີມາແລ້ວ. ປີ 1981 – 1990 ເພິ່ນໄດ້ຄົ້ນພົບເຄື່ອງ

ປັ້ນດິນເຜົາຢູ່ບ້ານວັດນາກເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ. ປີ2004 ຂຸດຄົ້ນນໍ້າເທີນ 2 ໄດ້ຄົ້ນພົບໂຄງກະດູກຂອງຄົນບູຮານ.

**2.2 ປະເພດສະຖານທີ່ບູຮານ**

ສະຖານທີ່ບູຮານທີ່ສຳຄັນຢູ່ໃນແຜນດິນລາວມີຫຼາຍບ່ອນທີ່ໄດ້ພົບເຫັນຊຶ່ງເປັນເມືອງທີ່ຢູ່ອາໄສໃນປັດຈຸບັນຄື: ເມືອງຮ້າງ, ວັດຮ້າງແລະສະຖານທີ່ອື່ນໆເຊັ່ນ: ວັດພູຈຳປາສັກ, ພະສາດຫີນໄດ້ສ້າງຂຶ້ນປະມານສະຕະວັດທີIV - ສະຕະວັດທີ V ແຫ່ງຄຣິດຕະສັງກາດສະໄໝອານາຈັກຈຳປາ. ນອກນັ້ນຍັງມີສີວະລິງຄະເສັ້ນຜ່າໃຈກາງ0,60 cm ສູງ 1 m 60 cm ແລະອີກແບບໜຶ່ງຕິດກັບຮູບໂຍນີຢູ່ແຂວງຈຳປາສັກເປັນຖານສີ່ລ່ຽມຮອງຮັບສ້າງໃນທ້າຍສະຕະວັດທີIVຫາຕົ້ນສະຕະວັດທີ V ແຫ່ງຄຣິດຕະສັງກາດ.

ພະທາດອີງຮັງຕັ້ງຢູ່ແຂວງສະຫວັນນະເຂດພາກໃຕ້ຂອງລາວພະທາດນີ້ຈາກການສັນນິຖານວ່າພະທາດອີງຮັງສ້າງຂຶ້ນໃນສະໄໝສີໂຄດຕະບອງຕັ້ງຢູ່ເມືອງເກົ່າ 6 ກິໂລແມັດໄປທາງໃຕ້ເມືອງທ່າແຂກແຂວງຄຳມ່ວນໄດ້ສ້າງຂຶ້ນໃນລາຊະການຂອງພະເຈົ້າໄຊເສດຖາທິລາດສະຕະວັດທີ XVI ຊຶ່ງສ້າງຫຼືທັບໃສ່ພະທາດເກົ່າສີໂຄດຕະບອງສະໄໝອານາຈັກຈະເລີນຮຸ່ງເຮືອງເມື່ອປະມານສະຕະວັດທີVI -  X ແຫ່ງຄຣິດຕະສັງກາດ.

ພະທາດຫຼວງເປັນທາດໃຫຍ່ທີ່ສຸດໃນສປປລາວສ້າງຕັ້ງໃນສະຕະວັດທີ VI - X ແຫ່ງຄຣິດຕະສັງກາດ. ສະໄໝອານາຈັກ " ຈັນລາ " ຈະເລີນຮຸ່ງເຮືອງແມ່ນສ້າງຂຶ້ນເທື່ອທຳອິດ ແລະ ສ້າງເທື່ອທີສອງໃນບໍລິເວນທາດມີຫີນຈາລຶກ 2 ໜ່ວຍບອກວ່າເມື່ອປີຄສ 1566 ພະເຈົ້າໄຊຍະເສດຖາທິລາດພາປະຊາຊົນຂອງພະອົງກໍ່ສ້າງພະທາດຫຼວງກວມພະທາດນ້ອຍລູກໜຶ່ງທີ່ມີມາແຕ່ກ່ອນແລ້ວທີ່ຊານເມືອງເບື້ອງຕາເວັນອອກ. ພະທາດນີ້ໃຫ້ຊື່ວ່າ " ພະເຈດີໂລກະຈຸລະມະນີ " ແຕ່ຄົນທັງຫຼາຍເອີ້ນວ່າ: ພະທາດຫຼວງ.

ນອກນີ້ຍັງມີວັດມະໂນລົມຫຼວງພະບາງສ້າງເມື່ອຄສ 1428 ກວມເອົາອັດຖິທາດຂອງພະຍາລ້ານຄຳແດງເປັນວັດທີ່ດີເດັ່ນທີ່ສຸດພະພຸດທະຮູບເຮັດດ້ວຍທອງສຳລິດ, ທອງເຫຼືອງ, ຄຳ ແລະ ວັດວິຊຸນສ້າງຂຶ້ນໃນສະຕະວັດທີ XVI ( ຄສ 1914 ) ເພິ່ນໄດ້ຄົ້ນພົບພະພຸດທະຮູບຄຳ, ທອງ, ເງິນ, ແກ້ວ... ລວມມີເຈດີພະປະທຸມຫຼືພະທາດໝາກໂມ, ພຸດທະສິມມາ, ທາດໝາກໂມເພິ່ນໄດ້ຄົ້ນພົບວັດຖຸທີ່ມີຄ່າຈຳນວນຫຼາຍເຊັ່ນ: ພະທາດຈຳລອງເຮັດດ້ວຍຄຳ, ພະພຸດທະຮູບຄຳ, ເງິນ, ທອງແລະອື່ນໆ. ນອກນັ້ນ, ຍັງມີວັດຊຽງທອງຊຶ່ງເປັນວັດໜຶ່ງທີ່ສຳຄັນໃນສະໄໝບູຮານຂອງຊາວຫຼວງພະບາງສ້າງກາງສະຕະວັດທີ XVI ແຫ່ງຄຣິດຕະສັງກາດສ້າງກ່ອນພະເຈົ້າໄຊຍະເສດຖາທິລາດຍ້າຍນະຄອນຫຼວງຈາກຫຼວງພະບາງລົງມາສ້າງຕັ້ງເມືອງວຽງຈັນ.





**ຮູບພາບ : ວັດຊຽງທອງຫຼວງພະບາງ**

ນອກນັ້ນ, ຍັງມີເມືອງບູຮານທີ່ເປັນເມືອງຮ້າງເຊັ່ນ: ເມືອງວຽງຄຳ ( ແຂວງວຽງຈັນ ) , ຊາກກຳແພງເມືອງບູຮານ ( ນະຄອນຫຼວງວຽງຈັນ ) , ຊາກວັດຮ້າງ, ພະພຸດທະຮູບຫີນ, ຮູບປັ້ນ, ທອງ, ສີລາຈາລຶກ, ຕົວອັກສອນມອນ, ຕົວທຳ, ຕົວລາວລ້ານຊ້າງຢັ້ງຢືນປະຫວັດສາດວ່າເປັນເມືອງວຽງຄຳບູຮານ. ເມືອງວຽງຄຳບູຮານຕັ້ງຢູ່ບໍລິເວນທົ່ງຮາບສອງຝັ່ງລ່ອງແມ່ນ້ຳງື່ມຂອງແຂວງວຽງຈັນໃນເຂດເມືອງແກ້ວອຸດົມແລະໂພນໂຮງໃນປະຈຸບັນສິລະປະຂອມໄດ້ເລີ່ມມີແຕ່ສະຕະວັດທີXIV ຫາ  XVI ຢູ່ເມືອງວຽງຄຳເຂດທົ່ງຮາບແຂວງວຽງຈັນ.

ຫໍພະແກ້ວສ້າງຂຶ້ນໃນປີຄສ 1565 ສ້າງຂຶ້ນເພື່ອເປັນບ່ອນປະທັບຢູ່ຂອງພະແກ້ວມໍລະກົດ ( ພະພຸດທະຮູບທີ່ເຮັດດ້ວຍແກ້ວມໍລະກົດ ) ໃນສະໃໝສະຖາປານາເມືອງວຽງຈັນເປັນນະຄອນຫຼວງຂອງອານາຈັກລາວລ້ານຊ້າງໃຕ້ການນຳພາຂອງເຈົ້າໄຊຍະເສດຖາທິລາດໃນສະຕະວັດທີXVIແຫ່ງຄຣິດຕະສັງກາດພະແກ້ວມໍລະກົດໄດ້ປະທັບຢູ່ນະຄອນຫຼວງວຽງຈັນນານເຖິງ 218 ປີ

ວັດອິນແປງເປັນວັດທີ່ເກົ່າແກ່ໃນສະໃໝກ່ອນແຕ່ມາຮອດ ຄສ 1911 – 1912 ເປັນເທື່ອທຳອິດທີ່ມີການບູລະນະສ້ອມແປງພຸດສີມມາວັດອິນແປງຄືນຊຶ່ງເປັນສະຖານທີ່ສາສະໜາໃນສະໃໝມອນ - ຂອມ (ບໍ່ຮູ້ວ່າໃຜສ້າງດສ້າງເມື່ອໃດ ).

ວັດອົງຕື້ສ້າງຂຶ້ນເມື່ອສະຕະວັດທີ XVI ແຫ່ງຄຣິດຕະສັງກາດ ( ຄ.ສ 1566 ) ພາຍຫຼັງເຈົ້າເສດຖາທິລາດສ້າງເມືອງວຽງຈັນ ເປັນນະຄອນຄອນຫຼວງ 6 ປີ ລະ ສັນນິຖານວ່າສ້າງໃສ່ວັດເກົ່າໃນສະໄໝ ຂອມ ເພາະບໍລິເວນວັດອິນແປງໄດ້ພົບເຫັນວັດທະນະທຳຂອມຫຼາຍອັນຊຶ່ງແຕ່ເມື່ອກ່ອນ ວັດອົງຕື້, ວັດອິນແປງ ແລະ ວັດຫາຍໂສກ ຕັ້ງຢູ່ບໍລິເວນດຽວກັນແຕ່ກ່ອນເອີ້ນວ່າ ວັດໄຊຍະພູມ ເມື່ອມີພະພຸດທະຮູບ ອົງຕື້ ມາປະດິດສະຖານຢູ່ທີ່ນັ້ນແລ້ວຄົນທັງຫຼາຍຈຶ່ງເອີ້ນວ່າ ວັດອົງຕື້ ມາຮອດທຸກວັນນີ້ ແຕ່ວັດນີ້ ໄດ້ສ້ອມແປງໃນປີຄ.ສ 1911 - 1912.

ວັດສີເມືອງເປັນວັດໜຶ່ງທີ່ເກົ່າແກ່ຂອງຊາວນະຄອນຫຼວງວຽງຈັນ ສະໄໝບູຮານ ແລະ ສະໄໝຕໍ່ໆມາ ວັດສີເມືອງໄດ້ສ້າງທັບໃສ່ສາສະນະສະຖານທີ່ສັກສິດ. ສະໄໝຂອມເຮືອງອຳນາດຢູ່ວຽງຈັນ ແລະ ຊາຍຟອງ ເມື່ອສະຕະວັດທີ

XII – XIII ແຫ່ງຄຣິດຕະສັງກາດອາຍຸປະມານ 700 – 800 ປີມາແລ້ວ. ວັດທາງພຸດທະສາສະໜາຈຶ່ງໄດ້ປຸກສ້າງຂຶ້ນເມື່ອສະຕະວັດທີ XVI ເມື່ອພວກຂອມໝົດອຳນາດໄປແລ້ວ. ພຸດທະສີມມາວັດສີເມືອງເປັນພຸດທະສີມມາຕົວແມ່ສະໄໝລ້ານຊ້າງຫຼວງພະບາງ, ສະກຸນຊ່າງສີລະປະວຽງຈັນ ຕໍ່ມາພຸດທະສີມມານີ້ກໍ່ຖືກທັກເພໃນສະໄໝວຽງຈັນຮ້າງຄືກັນກັບພຸດທະສີມມາວັດອື່ນໆ ແລະ ໄດ້ບູລະນະສ້ອມແປງຄືນໃໝ່ເມື່ອເຄິ່ງຕົ້ນສະຕະວັດທີ XX ພ້ອມກັບວັດອື່ນໆຢູ່ນະຄອນຫຼວງວຽງຈັນ ແລະ ວັດສີສະເກດກໍ່ໄດ້ສ້າງຂຶ້ນເມື່ອປີ ຄ.ສ 1818 ຕາມຄຳສັ່ງຂອງເຈົ້າອະນຸວົງ ເຈົ້າຊີວິດອົງສຸດທ້າຍຂອງອານາຈັກລາວລ້ານຊ້າງວຽງຈັນ.

**2.3 ປະເພດບັນທຶກດ້ວຍຕົວອັກສອນ.**

ຢູ່ໃນແຜ່ນດິນລາວມີຕົວອັກສອນໃນສະໄໝບູຮານທີ່ຍັງເຫຼືອຄ້າງຢູ່ຫຼາຍບ່ອນເຊັ່ນ: ສີລາຈາລຶກພົບເຫັນຢູ່ບ້ານວັດທາດ ປະມານ 30 ກິໂລແມັດ ໄປທາງທິດຕາເວັນຕົກສ່ຽງໃຕ້ຂອງ ເມືອງຈຳປາສັກ ຂຽນເປັນພາສາສັນສະກິດ ມີເນື້ອໃນກ່າວວ່າ ຄຳອຸທິດ ແລະ ສັນລະເສີນຕໍ່ພະຊິວະເທບສ້າງຂຶ້ນໃນສະຕະວັດທີ XII ສະໄໝພະເຈົ້າສຸລິຍະວໍລະມັນທີ II ສີລາຈາລຶກສອງໜ່ວຍຂອງຂອມໄດ້ຈາລຶກເຫດການໃນສະຕະວັດທີ II ໄວ້ວ່າພະເຈົ້າເສດຖາວໍລະມັນ ເກີດທີ່ເມືອງໄຊຍະດິຖິຍະປຸລະ ໄດ້ເປັນຈອມແຫ່ງເຈົ້າຊີວິດຢູ່ແຄ້ວນ ເສດຖາປູລະ, ສີລາຈາລຶກໄດ້ຈາກວັດພູຈຳປາສັກ ແລະ ບໍລິເວນໃກ້ຄຽງນັ້ນຂຽນເປັນຕົວອັກສອນສັນສະກິດ. ນັກຄົ້ນຄ້ວາສັນນິຖານວ່າແມ່ນຕົວອັກສອນທີ່ໃຊ້ກັນໃນທ້າຍສະຕະວັດທີ V ແລະ ສະຕະວັດທີ VI ໄດ້ມາຈາກວັດຫຼວງເກົ່າ ເມືອງຈຳປາສັກ ນັ້ນ ທ່ານ ເຊແດັດ ນັກປາດ ຝຣັ່ງ ໄດ້ໃຫ້ທັດສະນະວ່າ ແມ່ນຕົວອັກສອນທີ່ໃຊ້ໃນທ້າຍສະຕະວັດທີ V ແລະ ສະຕະວັດທີ VII ທ້າຍແຫ່ງຄຣິດຕະສັງກາດ ຂອງກະສັດຂອມ ອົງໜຶ່ງຊື່ວ່າ ພະເຈົ້າ ເທວະນິກະ ມີນາມມະຍົດເປັນ ລາຊາທິລາດ. ວັດພະທາດຫຼວງມີຫີນຈາລຶກ ສອງ ໜ່ວຍບອກວ່າເມື່ອປີ ຄ.ສ 1566 ພະເຈົ້າ ໄຊຍະເສດຖາທິລາດໃຕ້ການນຳພາຂອງປະຊາຊົນຂອງພະອົງເອງກໍ່ສ້າງພະທາດຫຼວງສ້າງກວມພະທາດນ້ອຍລູກໜຶ່ງ ທີ່ມີມາກ່ອນແລ້ວ, ພະທາດນ້ອຍປາລະມີນັ້ນໄດ້ພົບເຫັນພະທາດນ້ອຍເຮັດດ້ວຍຄຳ ນ້ຳໜັກປະມານ 4 ບາດ ແລະ ມີລານຄຳ ຍາວປະມານ 40 ຊັງຕີແມັດ ຮອງຮັບພະທາດຄຳ ແລະ ລານຄຳຂຽນ ເປັນຫົວໃຈພຸດທະທຳວ່າ “ ເຍທັມມາ ເຫຕຸປະພະວາເຕສັງເຫຕຸງ ຕະຖາຄະໂຕ ເຕສັນຈະໂຕນິໂຣໂທຈະ ເອວັງວາທີ ມະຫາສະມະໂນ ” ມີເນື້ອໃນວ່າ ທຳທັງຫຼາຍເກີດເພາະເຫດ ແລະ ດັບກໍ່ເພາະເຫດ.

ຢູ່ບໍລິເວນບ້ານຊາຍຟອງ 15 ກິໂລແມັດໄປທາງໃຕ້ຂອງນະຄອນຫຼວງວຽງຈັນເພິ່ນໄດ້ພົບສີລາຈາລຶກຂຽນເປັນຕົວອັກສອນສັນສະກິດ ເວົ້າເຖິງ ການສ້າງໂຮງໝໍຂອງ ພະເຈົ້າໄຊຍະວໍລະມັນທີ 7 ແລະ ຮູບ ອະນຸສາວະລີພະເຈົ້າໄຊຍະວໍລະມັນທີ 7.

ວັດສີສະເກດມີສີລາຈາລຶກວ່າ “ ສະຕະອະຫັສສາຣາມ ” ແປວ່າ ວັດແສນ. ວັດສີສະເກດເປັນວັດໜຶ່ງທີ່ມີຄວາມໝາຍສຳຄັນທາງປະຫວັດສາດລາວເມື່ອຕົ້ນສະຕະວັດທີ XIX ແຫ່ງຄຣິດຕະສັງກາດ ແລະ ມີວັດດຽວເທົ່ານັ້ນຢູ່ນະຄອນຫຼວງວຽງຈັນທີ່ລອດເຫຼືອຈາກສົງຄາມທຳລາຍຈູດເຜົານະຄອນຫຼວງວຽງຈັນເມື່ອປີ ຄ.ສ 1829 ແລະ ໂຄງຮ່າງ



**ຮູບພາບວັດສີສະເກດວຽງຈັນ**

ສີລາຈາຣຶກແຜ່ນໃຫຍ່ຕັ້ງຕິດຝາປະຕູທາງເຂົ້າດ້ານຂວາມືເບື້ອງຕາເວັນຕົກຂອງກົມມະລຽນບັນທຶກບອກເວລາກໍ່ສ້າງວັດສີສະເກດເມື່ອຈສ 1180 ( ຄສ 1818 ).ພ້ອມທັງບອກສິ່ງທີ່ກໍ່ສເາງພາຍໃນວັດແລະມໍລະດົກຂອງວັດທັງໝົດ.

ວັດແສນ ຫຼື ວັດແສນສຸຂະຣາມວັດນີ້ສ້າງຂຶ້ນເມື່ອຄສ 1714 ສະໄໝການປົກຄອງຂອງພະເຈົ້າກິ່ງກິດສະລາດກະສັດທີ່ເຂັ້ມແຂງ ( ຫຼານຂອງເຈົ້າສຸຣິຍະວົງສາ ) ຂອງອານາຈັກຫຼວງພະບາງແລະເປັນຜູ້ນໍາພາປະຊາຊົນຫຼວງພະບາງແຍກຕົວອອກຈາກນະຄອນຫຼວງວຽງຈັນ. ວັດນີ້ກໍ່ສ້າງສ້ອມແປງຂຶ້ນຈາກວັດເກົ່າສະໃໝສະຕະວັດທີXV ( ຄສ 1932) ເທື່ອທີສອງຄສ 1957 ( ພສ 2500 ).

ວັດໜອງສີຄູນເມືອງເປັນວັດໜຶ່ງທີ່ຖືກກໍ່ສ້າງໃນປີຄສ 1729 ສເາງໂດຍນາຍເຈົ້າຫ້າງໃນສະໄໝພະເຈົ້າອິງນົກ. ຂະໜາດກວ້າງ 8,90 ແມັດ, ຍາວ 16,85 ແມັດ, ສູງ 14,82 ແມັດ. ປະເພດມີຫ້ອງ ແລະ ເຊຍດ່ຽວວັດນີ້ໄດ້ປະດັບປະດາເປັນເສົາແບບຫູ່ຽມ ແລະ ປະດັບເອ້ໜ້າຈໍ່ວແມ່ນເຮັດຂຶ້ນໃນທ້າຍສະຕະວັດທີXIX. ຫຼັງຈາກນັ້ນໄດ້ມີການສ້ອມແປງໃນປີ 1804 ຄືນໃໝ່ເນື່ອງຈາກວັດດັ່ງກ່າວໄດ້ຖືກທໍາລາຍດ້ວຍລົມພະຍຸປີ 1965 ແລະ ໄດ້ປຸກສ້າງຄືເປັນລະບົບສີມັງທັງໝົດມີ 3 ຫ້ອງລອຍແລະ 6 ຫ້ອງຂວາງ. ຜູ້ສ້ອມແປງນາຍເຈົ້າຣາງສະໄໝເຈົ້າອະນຸຣຸດໃນວັດນີ້ມີພະພຸດທະຮູບທອງສໍາລິດໜັກ 211 ກິໂລ. ສະແດງປະຕິຫານເມື່ອເກີດໄຟໄໝ້ວັດແລະພາກສ່ວນໜຶ່ງຂອງເມືອງຫຼວງພະບາງປີ 1774.

ຢູ່ວັດພູຍັງຖໍ້າພາຍໃນເລກມີສີຣາຈາຣຶກຂຽນເປັນພາສາສັນສະກິດ, ຂະແມ ແລະ ສີລາຈາຣຶກອີກອັນໜຶ່ງແຜ່ນເປັນພາສາຂະແມ, ນອກນັ້ນຍັງມີໃບລານ.

## 3. ມໍລະດົກແຫ່ງຊາດຂອງລາວ.

### 3.1 ປະເພດອະສັງຫາລິມະຊັບ.

ປະເທດລາວເປັນປະເທດໜຶ່ງທີ່ມີມໍລະດົກແຫ່ງຊາດຫຼາຍແຫ່ງທີ່ຊາວໂລກໄດ້ຮັບຮູ້ຢ່າງເປັນທາງການເຊັ່ນ: ເມືອງຫຼວງພະບາງ ແລະ ວັດພູຈຳປາສັກ.

ວັດພູຈຳປາສັກເປັນນິຍະສະຖານອັນລື່ຊື່ແຫ່ງໜຶ່ງໃນລະດັບສະຖານບູຮານລະດັບຊາດຂອງ ສາທາລະນະລັດປະຊາທິປະໄຕ ປະຊາຊົນລາວ ແລະ ເປັນໜຶ່ງໃນພາກພື້ນໃນອາຊີຕາເວັນອອກສຽງໃຕ,ມີຈຸດຕັ້ງຢູ່ເປັນພູເກົ້າມີຊື່ເດີມວ່າ: ພູລິງຕະປະລະວະຕະໝາຍເຖິງ ພູເຂົາສັກສິດ.



**ຮູບພາບວັດພູຈຳປາສັກ**

ວັດພູຈຳປາສັກໄດ້ຈັດເຂົາເປັນມູນມໍລະດົກທາງດ້ານບູຮານສະຖານອັນລ້ຳຄ່າຂອງຊາດແລະໄດ້ຮັບຮ້ອງເອົາເປັນມູນມໍລະດົກແຫ່ງຊາດໃນປີ1993 ທັງເຮັດໃຫ້ຮັບຮູ້ເຖິງຄວາມສຳຄັນຂອງສະຖານທີ່ບູຮານແຫ່ງນີ້ອີກດ້ວຍ. ກອງປະຊຸມສະໄໝສາມັນຄັ້ງທີ່ 25 ຂອງຄະກຳມະການມໍດົກໂລກເຊິ່ງໄດ້ໄຂຂຶ້ນໃນວັນທີ11-16 ທັນວາປີ 2001 ທີ່ນະຄອນຫຼວງແຮນຊິນກີປະເທດແຟງແລັງໄດ້ຮັບຮອງເອົາວັດພູພ້ອມດ້ວຍກຸ່ມສະຖານບູຮານຈຳປາສັກເຂົ້າເປັນມໍລະດົກໂລກຢ່າງເປັນທາງການພາຍຫຼັງໄດ້ຮັບບົດລາຍຈາກຄະນະຊ່ຽວຊານຂອງໂຄງການICOMOSແລະICCROM ທີ່ມາກວດກາກັບທີ່ ແລະ ຕີລາຄາຄຸນຄ່າທາງປະຫວັດສາດ, ສີລະປະກຳ ແລະ ວັດທະນະທຳລະດັບໂລກ.

ຍັງມີແຈ້ງການຊະບັບເລກທີ 1763/ ຫສນຍ - ລຂ, ລົງວັນທີ 9/12/2002 ຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີໄດ້ຕົກລົງເຫັນດີໃຫ້ເອົາວັນທີ 25-26 /12/2002 ເປັນວັນຈັດປະກາດພິທີຮັບຮອງເອົາວັດພູຈຳປາສັກເປັນມໍລະດົກໂລກແລະເອົາໂອກາດນະມັດສະການວັດພູຈຳປາສັກທີ່ໄດ້ຮັບກຽດຈັດມໍລະດົກແຫ່ງໃໝ່ຂອງ ສປປລາວ. ນອກນັ້ນ, ມີໂຮງສີດາ ແລະ ຖະໜົນບູຮານພື້ນທີ່ດ້ານໃຕ້ຂອງວັດພູແມ່ນພື້ນທີ່ອຸດົມສົມບູນໄປດ້ວຍຮ່ອງຮ້ອຍບູຮານຄະດີການວາງແຜນການນຳໃຊ້ພື້ນທີ່ໃນໄລຍະການປົກຄອງຂອງວັດພູ.ຖະໜົນບູຮານເຊິ່ງເປັນຖະໜົນທີ່ເລີ່ມຈາກໂຮງງົວທີ່ວັດພູເປັນຖະໜົນໃຊ້ເຊື່ອມກັບອັງກໍເຊິ່ງເປັນໄລຍະທາງປະມານ 200 ກ່ວາກິໂລແມັດເປັນຖະໜົນທີ່

ຖືກຍົກຂຶ້ນສູງ 2 ແມັດ, ກວ້າງ 14 ແມັດໂດຍມີຮ່ອງລະບາຍນ້ຳຢູ່ຕາມແຄມທາງໃນໄລຍະ 1 ກິໂລແມັດທຳອິດເພື່ອເປັນການປ້ອງກັນນ້ຳໄຫຼມາຈາກພູ. ຖະໜົນດັ່ງກາວນີ້,ຍັງເປັນເງື່ອນໄຂໜຶ່ງທີ່ຕອບສະໜອງໃຫ້ແກ່ການເຂົ້າເຖິງສະຖານທີ່ຢູ່ທາງໃຕ້ຂອງວັດພູໄດ້ຢ່າງສະດວກຈາກວັດພູໄປທາງໃຕປະມານ 1,5 ກິໂລແມັດແມ່ນພື້ນຂອງເຂດໂຮງນາງສີດາອັນປະກອບມີແທ່ນບູຊາ, ຫ້ອງໂຖທາງເຂົ້າແລະທຳຄອຍທີ່ຖືກສ້າງຂຶ້ນໃນສະຕະວັດທີXII. ທຳຄອຍດັ່ງກ່າວນີ້ໄດ້ພັງລົງເກືອບໝົດແລ້ວຍັງເຫຼືອແຕ່ໂຄງສ້າງດ້ານລຸ່ມທີ່ຖືກສ້າງຂຶ້ນດ້ວຍກ້ອນຫີນໃຫຍ່ແລະແຂງແຮງ. ສະຖານບູຮານດັ່ງກ່າວໃນປັດຈຸບັນໄດ້ສະແດງໃຫ້ເຫັນເຖິງການເວລາຂອງສະຕະວັດທີXI. ແຕ່ການນຳໃຊ້ສະຖານທີ່ທັງໝົດແມ່ນນອນຢູ່ໃນສະໄໝສະຕະວັດທີX ຫາສະຕະວັດທີ XIV.

ເມືອງເກົ່າ : ຮ່ອງຮອຍຂອງຊາກເມືອງເກົ່າທີ່ສັນນິຖານວ່າເປັນທີ່ຕັ້ງຂອງເມືອງເກົ່າເສດຖາປຸຣະຕັ້ງຫ່າງຈາກວັດພູໄປທາງທິດຕາເວັນອອກປະມານ 6,5 ກິໂລແມັດ. ເທິງພື້ນທີ, ທີ່ຖືກທັບຖົມໃຫຍ່ຂຶ້ນຢູ່ທາງຝັ່ງຂວາ ( ຕາເວັນຕົກ ) ຂອງແມ່ນ້ຳຂອງມີເນື້ອທີ່ກວມປະມານ 400 ແຮັກຕາ. ເມືອງເກົ່າແຫ່ງນີ້ເປັນຮູບສີ່ຫຼ່ຽມຜືນຜ່າມີຂະໜາດ 2,4 ຄູນ 1,8 ກິໂລແມັດ. ທິດໃຕ້, ທິດຕາເວັນຕົກແລະທິດເໜືອຖືກອ້ອມຮອບດ້ວຍກຳແພງດິນທີ່ມີຄວາມກວ້າງຂອງຕີນ 14 ແມັດ. ໃນປັດຈຸບັນບ່ອນທີ່ຍັງສາມາດຮັກສາໄດ້ດີກວ່າໝູ່ຍັງມີຄວາມສູງຢູ່ປະມານ 6 ແມັດ. ກຳແພງທາງດ້ານເໜືອຂອງເມືອງເກົ່ານີ້ສ່ວນຫຼາຍແມ່ນຖືກທຳລາຍຈາກການເຊາະເຈື່ອນຂອງແມ່ນ້ຳຂອງ.

ວັດປາກຄານສ້າງປີ 1737 ໂດຍພະຍາຈັນເທບແລະວັດຄີລີກໍສ້າງໃນທ້າຍສະຕະວັດທີXVIII. ສ້າງໂດຍເຈົ້າຄຳ ( ເຈົ້າຊາຍຊາວພອນ ) ສະໄໝເຈົ້າຊີວິດພະເຈົ້າອິນທະໂສມ.

ວັດຊຽງທອງສ້າງປີ 1560 ສ້າງໂດຍພະເຈົ້າໄຊຍະເສດຖາທິລາດວັດນີ້ໄດ້ສ້ອມແປງ 2 ຄັ້ງຄື : ຄັ້ງທີ 1 ປີ 1928. ຄັ້ງທີ 2 ລະຫວ່າງປີ 1952 – 1960. ການສ້ອມແປງແບບປະດັບເອ້, ສ້ອມແປງສະໄໝເຈົ້າສີສະຫວ່າງວົງ. ວັດຊຽງທອງເປັນວັດປະຕູເມືອງທັງເປັນທ່າຈອດເຮືອດ້ານເໜືອສຳລັບການສະເດັດມາເຖິງແລະສະເດັດປະພາດທາງລາຊະການຂອງພະມະຫາກະສັດ. ທັງເປັນບ່ອນຂອງນັກເດີນເຮືອຕາມລຳແມ່ນ້ຳຂອງເປັນວັດດຽວທີ່ບໍ່ຖືກເຜົາຜານໃນປີ 1887.

ວັດສີລິມຸງຄຸນສ້າງໃນປີ 1763. ສ້າງໂດຍເພຍກັງມຸງຄຸນສ້ອມແປງຄືນໃນປີ 1931 ວັດນີ້ມີການປະດັບປະດາຍອດຊໍ່ຟ້າ 7 ຊັ້ນ. ວັດນາກສ້າງໃນປີ 1768 ສ້າງໂດຍພໍ່ບາຮັ່ງ, ວັດນີ້ສ້າງໃນສະໄໝເຈົ້າໂຊຕິກຸມມານ.

ວັດສີບສ້າງໃນປີ 1481 ສ້າງໂດຍພະເຈົ້າແທ່ນຄຳ, ວັດນີ້ສ້າງຂຶ້ນເພື່ອເປັນອະນຸສອນແກ່ພະລາຊະບິດາຂອງພະອົງ. ພະເຈົ້າຈັກກະພັດແຜ່ນແຜ້ວ ແລະ ໄດ້ຖືກສ້ອມແປງຄືນໃນປີ 1909 ໃໝ່ໝົດຕາມສະພາບເດີມ ແລະ ໄດ້ສ້າງລະບຽນສອງຂ້າງໃນປີ 1950.

ວັດແສນສ້າງຂຶ້ນໃນປີ 1714 ສ້າງໂດຍຕາເຈົ້າເຮັ່ງໃນສະໄໝເຈົ້າກິ່ງກິດສະລາດໄດ້ສ້ອມແປງຄືນໃນປີ 1932-1936 ແລະໃນປີ 1957 ໄດ້ຖືກສ້ອມແປງອີເນື່ອງໃນໂອກາດຄົບຮອບ 2500 ພະຊິນພັນສາຂອງພະພຸດທະເຈົ້າ.

ວັດປ່າໃຜ່ສ້າງໃນປີ 1765 ແລະ 1791, 1815 ( ເຈົ້າຄຳໝັ້ນວົງກິດລັດຕະນະນັກບັນທຶກປະຫວັດສາດຂອງພະລາຊະວົງ ) ສ້າງໂດຍສຸລິຍະວົງສາ ( ລຸຍຟີໂນແລະຣ. ປາມັງຈິເອ ). ໄດ້ສ້ອງແປງຄືນໃນປີ 1932 ໄດ້ສ້າງກຸຕິອີກ 3 ຫຼັງ ແລະ ວິຫານ. 1966 ແລະ 1969 ໄດ້ມີການສ້ອມແປງແຕ່ບໍ່ມີການປ່ຽນແປງລັກສະນະຫຼາຍ.

ວັດໃໝ່ສີສຸວັນນະພູມມາຣາມສ້າງໃນປີ 1796 ໂດຍພະເຈົ້າອະນຸລຸດໃນສະໄໝເຈົ້າອະນຸລຸດປົກຄອງ. ວັດນີ້ໄດ້ສ້ອມແປງຄືນໃນປີ 1821 ໂດຍເຈົ້າມັງທາຕຸລາດແລະໄດ້ສ້າງອີກຫຼັງໜຶ່ງໃນປີ 1891. ໃນລາຊະການຂອງພະເຈົ້າອຸ່ນຄຳໄດ້ສ້ອມແປງໃນປີ 1943 ແລະປີ 1962ເປັນການປະດັບປະດາເອ້ດ້ວຍຮູບນູນຕ່ຳເຮັດດ້ວຍຊີມັງທາດ້ວຍນ້ຳກຽງພອກດ້ວຍຄຳປົວ. ຮູບທີ່ເລົ່າເຖິງນິທານເລື່ອງພະເວດສັນດອນ, ສະແດງເປັນສາກດຳລົງຊີວິດປະຈຳວັນຂອງຊາດຫຼວງພະບາງ. ຜູ້ສ້ອມແປງພະເຈົ້ານັນທາຕຸລາດສ້າງເຊຍທັງສອງພະເຈົ້າອຸ່ນຄຳໄດ້ສ້າງລະບຽງດ້ານຕາເວັນອອກ ແລະ ຕາເວັນຕົກ. ວັດນີ້ເຄີຍເປັນບ່ອນປະທັບຂອງພະສັງຄະລາດປະມຸກຂອງພະສົງລາວແຕ່ປີ 1894 ເປັນຕົ້ນມາ.

ວັດປ່າແຄສ້າງປີ 1853 ສ້າງໂດຍເຈົ້າຈັນທະລາດສ້ອມແປງຄືນປີ 1967 – 1969 ແລະ ວັດປ່າຮວກສ້າງປີ 1861 ໃນໄລຍະການົກຄອງເຈົ້າຈັນທະລາດສ້ອມແປງຄືນປີ 1928.

ວັດວິຊຸນເກົ່າສ້າງປີ 1512 – 1515 ສະໄໝພະເຈົ້າວິຊຸນນະລາດໄດ້ຖືກສ້ອມແປງຄັ້ງທຳອິດປີ 1898. ປັດຈຸບັນໄດ້ປະຕິສັງຂອນດ້ວຍດິນຈີ່, ໂດຍເຮັດຕາມຮູບຮ່າງແລະການຈັດວາງຕາມອາຮາມເກົ່າທັງໝົດທັງປະດັບປະດາຍອດຊໍ່ຟ້າ 17 ຜາສາດແລະນາກສາມຫົວສ້ອມແປງໂດຍເຈົ້າສັກກະລິນຄຳສຸກ. ເມືອງຫຼວງໄດ້ຖືກເຜົາໃນປີ 1887 ວັດນີ້ໃນເມື່ອກ່ອນເປັນວັດໜຶ່ງທີ່ສະຫງ່າງາມທີ່ສຸດຂອງເມືອງຫຼວງພະບາງອະດີດຣາຊະທານີ. ປີ 1942 ໄດ້ຈັດເປັນຫໍພິພິດທະພັນຂອງພຸດທະສີລະປະເປັນບ່ອນທ້ອນໂຮມສີຣາຈາລືທີ່ງົດງາມສຸດຕ່າງໆ. ບັນດາພະພຸດທະຮູບແລະສິ່ງຂອງເກົ່າແກ່ທີ່ມີຄຸນຄ່າທາງວັດທະນະທຳສູງເຊັ່ນ: ວັດສຸພັນຂອງຂອມສະໝສະຕະວັດທີXI – XIIIໂດຍມະຫາອຸປະຣາດເພັດສະລາດສະໄໝເປັນຮອງເຈົ້າຊີວິດ. ທາດໝາກໂມ, ທາດປະທຸມ.

ວັດໝື່ນນາສ້າງປີ 1533. ວັດອາໄພສ້າງປີ 1529 , ວັດສັງຄະໂລສ້າງປີ 1527 ວັດດັ່ງກ່າວສ້າງໂດຍພະເຈົ້າໂພທິສາລະລາດ. ວັດສັງຄະໂລເຄີຍເປັນສະຖານທີ່ສຳຄັນຂອງການສະເຫຼີມສະຫຼອງປີໃໝ່ລາວ. ນອກນັ້ນຍັງມີວັດອື່ນໆອີກເຊັ່ນ: ວັດທາດ, ວັດທາດໃຫຍ່, ວັດທາດຫຼວງ, ວັດຖ້ຳ, ວັດຄີບປາບ, ວັດທອງຄູນ, ວັດຈອມເພັດ, ວັດຊ່າງຄ້ອງ, ວັດຊຽງເຫຼັກ, ວັດພັນຫຼວງ, ວັດຈອມສີ, ປາກອູ, ວັດໂພແກ້ວ, ວັດອຸໂບສົດຫຼວງ, ວັດທວງດນາມ, ວັດສີຖານກວັດສີເກີດ, ວັດປໍລັງກາ, ວັດແກ້ວ, ວັດສະໝານ, ວັດຊຽງກັງ, ວັດມະຫາວັນແລະວັດໝື່ນຊ່າງ.

### 3.2 ປະເພດສັງຫາລິມະຊັບ.

ສັງຫາລິມະຊັບ ໄດ້ແກ່ບັນດາວັດຖຸຕ່າງໆທີ່ສາມາດເຄື່ອນທີ່ໄດ້ເຊິ່ງປະກອບມີຫຼາຍຊະນິດເຊັ່ນ: ຂວານ, ສິ່ວ, ຫອກ, ລູກທະນູ, ປອກແຂນ ແລະ ໂຈກທອງເຫຼືອງ, ເຄື່ອງທອງສຳເລັດມີ ບົ້ງໂອ, ກະດິງ, ເຄື່ອງເຮັດດ້ວຍເຫຼັກມີ ໃບຫອກ, ກ່ຽວຕະປູ, ມີດ...ຢູ່ທາງທິດເໜືອຂອງວັດພູ ແຂວງຈຳປາສັກໃນສະຕະວັດທີ VII ຫາ VIII ຍັງມີຖ້ຳເລກ. ພາຍໃນຖ້ຳມີສີລາຈາຣຶກຂຽນເປັນພາສາສັນສະກິດ, ຂະແມ ແລະ ມີແຜ່ນໜຶ່ງທີ່ຂຽນເປັນພາສາຂະແມ. ນອກນັ້ນຍັງມີໃບລານ, ຖ້ວຍ, ໂອ, ຊາມ ແລະ ພະພຸດທະຮູບທີ່ເກົ່າແກ່. ຢູ່ທາງເບື້ອງຂວາງບັນໄດຂຶ້ນວັດພູຍັງມີຮູບຄະລິງຄະລາຍ ໂຍນີ ( ຮູບຍິງນອນຫງາຍຊາຍນອນຂວ້າມ )ຢູ່ຖ້ຳນາງອັ່ນ ເພິ່ນໄດ້ຄົ້ນພົບສະຖານທີ່ຝັງສົບສະໄໝຫີນຝົນ, ໃນນັ້ນໄດ້ຄົ້ນພົບໄຫກະດູກຂວານຫີນ ແລະ ຄົ້ນພົບຕັ່ງເຈື່ອງ (ຄ້ອງຫີນ ). ຢູ່ຖ້ຳປີ່ງ ແລະ ສາຍພູຊຽງທອງ ຄົ້ນພົບເຄື່ອງມືທີ່ເຮັດດ້ວຍຫີນໃຫຍ່ ແລະເຄື່ອງມືທີ່ເຮັດດ້ວຍກະດູກ, ງາ ເຊັ່ນ: ສິ່ວແຫຼມມີງ່ຽງ, ຫຼາວ, ຫອກປາຍແຫຼມ...

ຢູ່ຖ້ຳທ້າວ, ຖ້ຳນາງ ພົບເຄື່ອງມືສຳລັບຕັດ, ຂຸດຄວັດ, ເຈາະ ພິເສດແມ່ນພົບສິ່ວຂວັນທອງ, ຫາງກົບ, ເຫຼັກກົບ ແລະ ພົບເຄື່ອງມືທີ່ເຮັດດ້ວຍດິນເຜົາຫຼາຍຊະນິດ, ເຄື່ອງປະດັບປະດາ, ເຄື່ອງແຕ່ງກາຍທີ່ມີຮູບຮ່າງລັກສະນະລວດລາຍຕ່າງໆບັນດາເຄື່ອງມືເຫຼົ່ານີ້ແມ່ນເຄື່ອງໃຊ້ໃນສະໄໝຫີນໃໝ່ ແລະ ສະໄໝທອງແດງ.

ເມືອງຫຼວງພິບາງມີພະພຸດທະຮູບທອງສຳລິດໜັກ 211 ກິໂລ. ສະແດງປະຕິຫານເມື່ອເກີດໄຟໄໝ້ວັດແລະພາກສ່ວນໜຶ່ງຂອງເມືອງລວງພະບາງໃນປີ 1774 ແລະວັດມະໂນລົມມີພະພຸດທະຮູບລໍ່ດ້ວຍທອງສຳລິດ. ສ້າງຂຶ້ນໃນປີ 1919 ເປັນພະພຸດທະຮູບທີ່ເກົ່າແກ່ກວ່າໝູ່ໃນເມືອງລວງພະບາງແລະໃນປະເທດລາວ.

### 3.3 ເວຍະນິສັນຖານ.

ວັດພູຈຳປາສັກສະຖານທີ່ສັກສິດເປັນສັກກະລະບູຊາຖືກປຸກສ້າງຂຶ້ນຢູ່ເນີນພູເກົ້າບ່ອນມີນ້ຳອອກບໍ່ໄຫຼພຸອອກຈາກໂງ່ນຫີນແລະສູງຈາກລະດັບໜ້ານ້ຳທະເລປະມານ 200 ແມັດ. ແຕ່ລະກຸ່ມສະຖານບູຮານວັດພູນີ້ເວົ້າລວມຕັ້ງຢູ່ແນວເສັ້ນແກນທີ່ເຊື່ອມຕໍ່ຈາກທິດຕາເວັນອອກເຊິ່ງສ້າງຄວາມປະທັບໃຈໃຫ້ແກ່ຜູ້ມີຈິດສັດທາດ້ວຍຄວາມສັກສິດຂອງສະຖານທີ່ຕັ້ງໂດຍສາມາດແນມເຫັນລິງລິງຄະປະຣະອະຕະທີ່ຢູ່ດ້ານຫຼັງໄດ້ຢ່າງຊັດເຈນ. ນອກຈາກນັ້ນວັດພູຈຳປາສັກຍັງມີບໍ່ນ້ຳ

ທ່ຽງ ( ນ້ຳສັກສິດ ) ນ້ຳທີ່ໄຫຼອອກຈາກບໍ່ຢູ່ທາງສິ້ນດ້ານເໜືອໄດ້ເກັບບັນຈຸຢູ່ໃນອ່າງທີ່ກໍ່ດ້ວຍດິນຈີ່ແລະພື້ນກໍ່ດ້ວຍແຜ່ນຫີນຊາຍສີຂຽວມີຝາປິດ ແລະ ຄໍ້າດ້ວຍເສົາຫີນຕັ້ງລຽບໄປຕາມຂອບດ້ານໃຕ້ພັກຂັ້ນໄດຫີນເຊິ່ງເຊື່ອມຕໍ່ລະຫວ່າງກຳແພງກົມມະລຽນຂ້າງປ່ອງປະຕູດ້ານໃຕ້ຜ່ານລະບຽງທາງດ້ານຕາເວັນອອກແລ້ວຈຶ່ງລ້ຽວທັບ 90 ອົງສາໄປທາງດ້ານເໜືອເພື່ອໄປສູ່ຈຸດໝາຍກໍ່ຜາສາດປະທານມີຫໍໄຫວ້ຂະໜາດນ້ອຍຫຼັງໜຶ່ງສ້າງດ້ວຍຫີນຊາຍແລະດິນຈີ່ ( ສະຕະວັດທີ 11 ). ຕັ້ງຢູ່ທາງດ້ານໃຕ້ຂອງເງີບຫີນສ່ວນດ້ານຫູງຂອງຫໍໄຫວ້ໄດ້ກວມເລີກເຂົ້າໄປໃນກ້ອງເງີບຜາຫີນທາງໃນຂອງຫໍໄຫວ້ນີ້ອາດຈະເປັນສະຖາທີ່ປະດິດສະຖານພະສີວິລິງຄະເພື່ອເພີ່ມຄວາມສັກສິດໃຫ້ແກ່ບໍ່ນ້ຳແຫ່ງນີ້ຂຶ້ນຕື່ມອີກ.

## 4. ການປົກປັກຮັກສາບູຮານສະຖານ ແລະ ບູຮານວັດຖຸໃນລາວ

ການປົກປັກຮັກສາສະຖານທີ່ວັດຖຸບູຮານແລະວັດຖຸໂບຮານແມ່ນໜ້າທີ່ຂອງທຸກໆຄົນເຖິງແມ່ນວ່າປະເທດຂອງພວກເຮົາມີກົດໝາຍ, ວັດຖຸບູຮານ, ວັດຖຸບູຮານ, ແລະອື່ນໆ, ນັບຕັ້ງແຕ່ **1961,** ມີສົນທິສັນຍາສາກົນແລະສັນຍາກັບບາງປະເທດ.ເພື່ອປ້ອງກັນການນຳເຂົ້າແລະສົ່ງອອກວັດຖຸບູຮານທີ່ຜິດກົດໝາຍເຊັ່ນ: ວັດຖຸບູລານແລະປອມທີ່ເປັນຫຼັກຖານຂອງປະຫວັດສາດຂອງປະເທດ, ມັນເປັນໄປໄດ້ພຽງແຕ່ຊື້ສິນຄ້າທີ່ເປັນຊັບສິນສ່ວນຕົວ.ການມໍລະດົກພຽງແຕ່ຈາກບັນພະບຸລຸດຜູ້ທີ່ສ້າງມັນຢ່າງໃດກໍຕາມ, ຍັງມີວັດຖຸບູຮານສົມກຽດແຫ່ງຊາດຢ່າງກວ້າງຂວາງຢ່າຢ້ານກົດໝາຍຂອງກົດໝາຍວິທີດຽວທີ່ຈະແກ້ໄຂບັນຫານີ້ແມ່ນສິ່ງເສີມສະຕິຂອງຄົນທີ່ເປັນຄົນສົມບັດສິນທຳມີຄວາມຮູ້ສຶກຄືກັບເຂົ້າຮ່ວມກອງກຳລັງເພື່ອຮັກສາສະຖານທີ່ໂບຮານຄະດີແລະວັດຖຸບູຮານຂອງປະເທດມັນເປັນສົມບັດວັດທະນະທຳຂອງປະເທດມັນບໍ່ແມ່ນຊັບສິນສ່ວນບຸກຄົນນີ້ຈະເຮັດໄດ້ຈາກຕອນນີ້ເນື່ອງຈາກວ່າມື້ອື່ນອາດຈະຊັກຊ້າສະຖານທີ່ປະຫວັດສາດແລະວັດຖຸບູຮານບໍ່ແມ່ນຊັບພະຍາກອນທຳມະຊາດໄດ້ເກີດຂຶ້ນມັນເປັນຊັບພະຍາກອນທາງວັດທະນະທຳປັນຍາຂອງມະນຸດແລະຄວາມຮູ້ໃຫມ່ທັງຫມົດກໍ່ສ້າງຫຼືດັດແປງຈາກຊັບພະຍາກອນທຳມະຊາດເພື່ອຮັບຜົນປະໂຫຍດຕົວເອງແລະສັງຄົມໃນມື້ນັ້ນ.ສະຖານທີ່ເຫຼົ່ານີ້ສິ່ງທີ່ໄດ້ຮັບມໍລະດົກຕໍ່ການຜະລິດຂອງພວກເຮົາ.ມັນໄດ້ກາຍເປັນບູຮານຄະດີແລະວັດຖຸບູຮານຄືກັນກັບອາຄານວັດຖຸທີ່ພວກເຮົາສ້າງໃນມື້ນີ້.ມັນຈະເປັນປະຫວັດສາດແລະວັດຖຸບູຮານຂອງອະນາຄົດນີ້ບໍ່ແມ່ນການທຳລາຍສະນັ້ນບູຮານຄະດີແລະວັດຖຸບູຮານມັນເປັນປະເພດຂອງຫຼັກຖານປະຫວັດສາດ.ປະວັດສາດຂອງບັນພະບຸລຸດມັນແມ່ນຢູ່ໃນສັງຄົມທີ່ແຕກຕ່າງຈາກກຸ່ມນ້ອຍກັບບ້ານ, ເມືອງແລະປະເທດຊາດສືບຕໍ່ກັບປະຈຸບັນປະວັດສາດຫຼືພື້ນຖານດັ່ງກ່າວສະແດງໃຫ້ເຫັນການພັດທະນາຂອງຄົນສະໄໝບູຮານການອະນຸລັກສິ່ງເຫຼົ່ານັ້ນເພື່ອນຳໃຊ້ຢ່າງເຕັມສ່ວນການ "ການອະນຸລັກ" ແລະ "ການພັດທະນາ"

### 4.1 **ຄວາມໝາຍ**

- ການອະນຸລັກຫມາຍເຖິງການບຳລຸງຮັກສາເພື່ອຮັກສາມູນຄ່ານີ້ປະກອບມີການປ້ອງກັນ,ການປິ່ນປົວ ແລະ ການຟື້ນຟູ
- ການປົກປັກຮັກສາຫມາຍເຖິງຮັກສາສະພາບເດີມ ແລະ ປ້ອງກັນຄວາມເສຍຫາຍຕື່ມອີກ
- ການຟື້ນຟູໝາຍເຖິງການຟື້ນຟູຄືນໃຫມ່ກັບສິ່ງທີ່ມັນເຄີຍເປັນ.
- ການສ້ອມແປງແມ່ນການສ້ອມແປງ ແລະ ປັບປຸງຮູບຮ່າງຕົ້ນສະບັບເທົ່າທີ່ເປັນໄປໄດ້. ແຕ່ມັນຕ້ອງສະແດງໃຫ້ເຫັນຄວາມແຕກຕ່າງຂອງສິ່ງທີ່ເຄີຍເປັນມາກ່ອນ ແລະ ທ່ານເຮັດແນວໃດ?

  - Ruins ຫມາຍຄວາມວ່າອະສັງຫາລິມະສັບ ແລະ ຜູ້ທີ່ຖືກຕິດຕັ້ງຢ່າງຖາວອນກັບຊັບສິນໂດຍອາຍຸ ຫຼື ໂດຍ

ລັກສະນະຂອງການກໍ່ສ້າງ ຫຼື ໂດຍຫຼັກຖານຂອງປະວັດສາດຂອງຊັບສິນມີປະໂຫຍດໃນສິລະປະ.

ປະຫວັດສາດ ແລະ ໂບຮານຄະດີ

ສະຖານທີ່ປະຫວັດສາດຕ້ອງມີສ່ວນຫນຶ່ງ ຫຼື ຫຼາຍແມ່ນ

1. ມີຄ່າອາຍຸ

2 ມູນຄ່າສໍາລັບການກໍ່ສ້າງ.

3 ມູນຄ່າປະຫວັດສາດ

- ຄະນະກໍາມະການຫມາຍຄວາມວ່າຄະນະກໍາມະການທີ່ໄດ້ແຕ່ງຕັ້ງໃຫ້ພິຈາເບິ່ງແລະຮັກສາສະຖານທີ່ບູຮານຄະດີ.

2. ກໍາມະການທົ່ວໄປຂອງພະແນກສິລະປະມີອໍານາດລົງທະບຽນສະຖານທີ່ໂບຮານຄະດີ ແລະ ກໍານົດສະຖານທີ່ໂບຮານຄະດີ ທັງສອງມີ ແລະ ບໍ່ມີເຈົ້າຂອງຫຼືຜູ້ທີ່ຢູ່ອາໄສເປັນກໍລະນີປະຫວັດສາດທີ່ບໍ່ມີເຈົ້າຂອງຫຼືຜູ້ເປັນເຈົ້າຂອງ.

ອາຄານບໍ່ໃຫ້ສ້າງໃນທຸກປະເພດເວັ້ນເສຍແຕ່ວ່າຜູ້ອໍານວຍການທົ່ວໄປອະນຸຍາດ

- ຢ່າຊ່ອມແຊມ, ແກ້ໄຂ, ລຶບລ້າງ, ທໍາລາຍ, ທໍາລາຍ, ຍ້າຍຫຼືທໍາລາຍສະຖານທີ່ປະຫວັດສາດຫຼືບາງສ່ວນຂອງສະຖານທີ່ປະຫວັດສາດຫຼືຂຸດຄົ້ນສິ່ງໃດໃນເວັບໄຊປະຫວັດສາດຍົກເວັ້ນຄໍາສັ່ງຂອງຜູ້ອໍານວຍການໃຫຍ່ຫຼືມີການອະນຸຍາດຈາກຜູ້ອໍານວຍການໃຫຍ່

- ລັດຖະມົນຕີມີອໍານາດທີ່ຈະອອກລະບຽບການກໍານົດໃຫ້ນັກທ່ອງທ່ຽວໄປຢ້ຽມຢາມໃນເວລາຢ້ຽມຢາມມັນຍັງຈະຕ້ອງໃຫ້ຜູ້ມາຢ້ຽມຢາມຈ່າຍຄ່າທໍານຽມເຂົ້າ,ຄ່າທໍານຽມອື່ນໆ
- ຜູ້ອໍານວຍການທົ່ວໄປມີອໍານາດທີ່ຈະອະນຸຍາດໃຫ້ຜູ້ໃດເຮັດທຸລະກິດໃດໆເພື່ອເປັນປະໂຫຍດສໍາລັບສະຖານທີ່ປະຫວັດສາດໂດຍການຈ່າຍຄ່າພະແນກວິຈິດສິນ.

**4.2 ກໍລະນີແມ່ນຊັບສິນປະຫວັດສາດທີ່ເປັນເຈົ້າຂອງ ຫຼື ຖືກຄອບຄອງ.**

- ເມື່ອແຈ້ງການລົງທະບຽນສະຖານທີ່ໂບຮານຄະດີ.ເຈົ້າຂອງຫຼືຜູ້ເປັນເຈົ້າຂອງຕ້ອງຮ້ອງຮຽນຕໍ່ສານພາຍໃນ 30 ວັນຖ້າວ່າການຮ້ອງຟ້ອງບໍ່ໄດ້ອຸທອນຫຼືສານສັ່ງຄໍາຮ້ອງ.ຜູ້ອໍານວຍການສາມາດລົງທະບຽນ.
- ຢ່າຊ່ອມແຊມ, ແກ້ໄຂ, ລຶບລ້າງ, ທໍາລາຍ, ທໍາລາຍ, ຍ້າຍຫຼືທໍາລາຍສະຖານທີ່ປະຫວັດສາດຫຼືບາງສ່ວນຂອງສະຖານທີ່ປະຫວັດສາດຫຼືຂຸດຄົ້ນສິ່ງໃດໃນປະຫວັດສາດຍົກເວັ້ນຄໍາສັ່ງຂອງຜູ້ອໍານວຍການໃຫຍ່,ມີການອະນຸຍາດຈາກຜູ້ອໍານວຍການໃຫຍ່ອາຄານສະຖານທີ່ຕ່າງໆບໍ່ໄດ້ອະນຸຍາດສ້າງໃນທຸກປະເພດເວັ້ນເສຍແຕ່ວ່າຜູ້ອໍານວຍການທົ່ວໄປອະນຸຍາດ
- ຖ້າທໍາລາຍວັດຖຸບູຮານໄດ້ຮັບຄວາມເສຍຫາຍ. ເຈົ້າຂອງຫຼືຜູ້ເປັນເຈົ້າຂອງຕ້ອງແຈ້ງໃຫ້ຜູ້ອໍານວຍການທົ່ວໆໄປແຈ້ງພາຍໃນ 30 ວັນ ແລະ ຖ້າມັນເປັນສະຖານທີ່ໂບຮານຄະດີທີ່ຈະເສຍຄ່າທໍານຽມເຂົ້າຫລືອື່ນໆ.ໃຫ້ເຈົ້າຂອງອອກຄ່າບໍລິການ. ທັງຫມົດຫຼືສ່ວນຫນຶ່ງຂອງການສ້ອມແປງຕາມທີ່ກໍານົດໂດຍຜູ້ອໍານວຍການ.ນີ້ຈະຖືກກໍານົດໂດຍຄະນະກໍາມະການທີ່ມີເຈົ້າຂອງຮ່ວມກັນ.
- ຜູ້ອໍານວຍການໃຫຍ່ສາມາດສັ່ງໃຫ້ຜູ້ໃດເຮັດການສ້ອມແປງສໍາລັບການອະນຸລັກ.ແຕ່ຕ້ອງແຈ້ງໃຫ້ເຈົ້າຂອງເຈົ້າລ່ວງຫນ້າ.
- ເຈົ້າຂອງສາມາດເກັບຄ່າທໍານຽມປະຫວັດສາດ ຫຼື ການບໍລິການອື່ນໆແຕ່ຕ້ອງແຈ້ງໃຫ້ຜູ້ອໍານວຍການ ແລະ ປະຕິບັດຕາມກົດລະບຽບທີ່ກໍານົດໂດຍຜູ້ອໍານວຍການ.

**4.3 ກໍານົດຂັ້ນຕອນກ່ອນການປະຕິບັດການອະນຸລັກ.**

- ຄົ້ນຫາເງື່ອນໄຂທີ່ມີຢູ່ (ສະພາບເດີມ ແລະ ເງື່ອນໄຂ (ສະພາບ) ໃນປະຈຸບັນ.
ທັງສອງລາຍລະອຽດກ່ຽວກັບຖາປັດຕະຍະກຳນັ້ນປະຫວັດສາດ ແລະ ສະພາບຄວາມເສຍຫາຍບັນທຶກເປັນເອກະສານ, ຮູບພາບ, ແຕ້ມລາຍລະອຽດສຳລັບຂໍ້ມູນກ່ຽວກັບໂຄງການອະນຸລັກເປັນເອກະສານປະຫວັດສາດ.
- ກະກຽມໂຄງການພິຈາລະນາວ່າມີຄຸນຄ່າປະຫວັດສາດຫລືມີຄຸນນະພາບໂຄງການແມ່ນສຸມໃສ່ການຮັກສາລັກສະນະດ້ານໃດເປັນຕົ້ນຕໍ ແລະ ມີຄວາມສຳຄັນດ້ານອື່ນໆ.
- ພິຈາລະນາການຟື້ນຟູ ຫຼື ແກ້ໄຂພິຈາລະນາລຶບລ້າງການເພີ່ມເຕີມຖ້າວ່າມັນເຮັດໃຫ້ມູນຄ່າເດີມຖືກສູນເສຍ ຫຼື ຖືກຕ້ອງ

**4.4 ມາດຕະການການອະນຸລັກ**

- ການປ້ອງກັນ (ການເຕືອນໄພຕໍ່ຄວາມເສຍຫາຍເຊັ່ນ: ການຈົດທະບຽນ, ການແບ່ງເຂດ, ການລ່ວງລະເມີດ, ແລະອື່ນໆ) Conservation (Conservation ການຟື້ນຟູ ແລະ ການຟື້ນຟູ)
- ການປົກປັກຮັກສາ(ການປົກປ້ອງແລະປົກປັກຮັກສາພູມສັນຖານ, ສິ່ງແວດລ້ອມ ແລະ ການຄຸ້ມຄອງ)
- ເພື່ອປົກປັກຮັກສາສະຖານທີ່ ບູຮານຄະດີ ຕ້ອງພິຈາລະນາພູມສັນຖານ ແລະ ສິ່ງແວດລ້ອມ.

## ພາກອ່ານເພີ່ມ

## ວັດຊຽງທອງ ( ເມືອງ ແລະ ແຂວງຫຼວງພະບາງ )

### 1. ຄວາມເປັນມາ

ວັດຊຽງທອງນັບວ່າເປັນສະຖານທີ່ທ່ອງທ່ຽວທີ່ສຳຄັນ ແລະ ສວຍສົດງົດງາມທີ່ນັກທ່ອງທ່ຽວຢາກມາສຳພັດ ແລະ ຊື່ນຊົມຫຼາຍທີ່ສຸດ. ເຊິ່ງມີຄວາມງົດງາມ ແລະ ຊົງຄຸນຄ່າຂອງວັດຊຽງທອງໄດ້ຮັບການຍົກຍ້ອງຈາກນັກບູຮານຄະດີວ່າ : " ເປັນສິລະປະກຳແຫ່ງອານາຈັກລາວລ້ານຊ້າງ" ທີ່ສວຍສົດງົດງາມແບບປະຈັກຕາ.



ວັດຊຽງທອງ

### 1. ປະຫວັດຄວາມເປັນມາກ່ອນການສ້າງຕັ້ງ.

ສິມວັດຊຽງທອງ ຫຼື ວິຫານວັດຊຽງທອງໄດ້ຮັບອິດທິພົນມາຈາກວິຫານວັດໂລກໂມລີ.ຈັງຫວັດຊຽງໃໝ່ໂດຍໃນປີ ພ.ສ 2042 ( ຄ.ສ 1499 ) ລາຊະວົງມັງລາຍແຫ່ງອານາຈັກລ້ານນາເກີດເຫດການບໍ່ມີກະສັດປົກຄອງ,ພະນາງຈິຣະປຣະພາມະເຫສີຜູ້ເປັນອັກຄະລະມະເຫສີໃນ(ເມືອງເກສເກົ້າ)ຈຳເປັນໄດ້ຂຶ້ນຄອງລາດ,ເຊິ່ງເປັນກະສັດຍິງທີ່ປົກຄອງບ້ານເມືອງ.ໃນໄລຍະປົກຄອງບ້ານເມືອງພຽງ 1 ປີ ກໍ່ເກີດຄວາມສັບສົນວຸ້ນວາຍຍ້ອນຖືກຮຸກຮານຈາກອານາຈັກອັອມຂ້າງ ແລະ ໃນຍຸກ"ບູເລັງນອງ" ເຊິ່ງບູເລັງນອງນີ້ເປັນຜູ້ຊະນະ 10 ທິດ,ພະນາງຈິຣະປຣະພາຈຶ່ງໄດ້ເຊື່ອມຄວາມສຳພັນອັນແໜ້ນແຟ້ນກັບອານາຈັກອະຍຸດທະຍາ ແລະ ອານາຈັກລ້ານຊ້າງ.ແຕ່ພະອົງຄອງລາດໄດ້ພຽງ 1 ປີ ກໍ່ສະຫຼະບັນລັງແລ້ວໄປອັນເຊີນພະເຈົ້າໄຊຍະເສດຖາທິລາດຈາກເມືອງຫຼວງພະບາງແຫ່ງອານາຈັກລ້ານຊ້າງມາປົກຄອງບ້ານເມືອງແທນ,ເນື່ອງຈາກວ່າ : ພະນາງຍອດຄຳທິດ.ທີ່ເປັນພະອັກຄະມະເຫສີຂອງເຈົ້າໂພທິສາຣະລາດແຫ່ງອານາຈັກລ້ານຊ້າງ ຫຼື ຜູ້ເປັນແມ່ຂອງເຈົ້າໄຊຍະເສດຖາທິລາດ,ເຊິ່ງເປັນທິດາຂອງພະນາງຈິຣະປຣະພາ.ຍ້ອນແນວນັ້ນຈຶ່ງເຫັນວ່າຊາຍຂອງຕົນເປັນສາຍເລືອດລ້ານນາຈຶ່ງໃຫ້ຂຶ້ນປົກຄອງອານາຈັກລ້ານນາແທນ.ພະເຈົ້າໄຊຍະເສດຖາທິລາດຄອງລາດໄດ້ພຽງ 1 ປີ ພະເຈົ້າ

ໂພທິສາຣະລາດ (ພໍ່ຂອງເຈົ້າໄຊຍະເສດຖາທິລາດ)ໄດ້ສະຫວັນນະຄົດກະທັນຫັນຈຶ່ງເຮັດໃຫ້ພະເຈົ້າໄຊຍະເສດຖາທິລາດຈຳຕ້ອງກັບໄປອານາຈັກລ້ານຊ້າງ ແລະ ພະອົງກໍ່ໄດ້ອັນເຊີນເອົາພະແກ້ວມໍລະກົດ ແລະ ພະພຸດທະສິຫິງ.ຈາກຊຽງໃໝ່ກັບໄປຫຼວງພະບາງຫຼັງຈາກນັ້ນພະອົງກໍ່ໄດ້ເລີ່ມສ້າງ"ວັດຊຽງທອງ"ຂຶ້ນເຊິ່ງຕັ້ງຢູ່ໃຈກາງຂອງເມືອງຫຼວງພະບາງ.

ຫຼັງຈາກນັ້ນບໍ່ພໍເທົ່າໃດທັງສາມອານາຈັກຄື : ອານາຈັກລ້ານນາ,ອານາຈັກລ້ານຊ້າງ, ແລະ ອານາຈັກອະຍຸດທະຍາ.ກໍ່ໄດ້ຕົກເປັນຫົວເມືອງຂຶ້ນຂອງ"ຫົງສາວະດີ"ພະເຈົ້າໄຊຍະເສດຖາທິລາດຈຶ່ງໄດ້ຍ້າຍນະຄອນຫຼວງໄປຕັ້ງຢູ່"ນະຄອນຫຼວງວຽງຈັນ"ເຊິ່ງໄດ້ເປັນເມືອງຫຼວງແຫ່ງໃໝ່ຂອງອານາຈັກລາວລ້ານຊ້າງ.ເປັນການປ່ອຍປະໃຫ້ເມືອງຫຼວງພະບາງເປັນເມືອງຮ້າງ ແລະ ສິ້ນສຸດບົດບາດ,ພະແກ້ວມໍລະກົດກໍ່ໄດ້ຖືກອັນເຊີນໄປສະຖິດຢູ່ນະຄອນຫຼວງວຽງຈັນ,ແຕ່ສ່ວນພະສິຫິງກໍ່ໄດ້ອັນເຊີນໄປຍັງຊຽງໃໝ່ຕາມເດີມ.

ມາຮອດປີ ພ.ສ 2250 ອານາຈັກລາວລ້ານຊ້າງແຕກອອກເປັນ 3 ຝ່າຍຄື: ອານາຈັກລາວລ້ານຊ້າງຫຼວງພະບາງ, ອານາຈັກລາວລ້ານຊ້າງວຽງຈັນ ແລະ ອານາຈັກລາວລ້ານຊ້າງຈຳປາສັກ.ເມືອງຫຼວງພະບາງຈຶ່ງກັບມາມີຄວາມສຳຄັນອີກຄັ້ງ ແລະ ໄດ້ມີການບູລະນະຊ້ອມແປງວັດຊຽງທອງເລື້ອຍໆມາຂອງທຸກໆຣາຊະການຈຶ່ງເກີດມີລັກສະນະລວດລາຍທີ່ມີເອກະລັກຕ່າງຈາກນະຄອນຫຼວງວຽງຈັນ ແລະ ຈຳປາສັກ.ວັດຊຽງທອງຖືວ່າເປັນວັດປະຈຳລາຊະວັງຫຼວງພະບາງ ແລະ ເປັນສຸດຍອດແຫ່ງສະຖາປັດຕະຍະກຳລາວລ້ານຊ້າງເຊິ່ງມີລວດລາຍທີ່ມີວິຈິດຕະການຕາ.

## 2. ທີ່ຕັ້ງຂອບເຂດ.

ວັດຊຽງທອງຕັ້ງຢູ່ເໜືອ ແລະ ທິດຕາເວັນຕົກຕິດກັບແມ່ນ້ຳຂອງ, ທິດຕາເວັນຕົກສຽງໃຕ້ຕິດກັບພະລາຊະວັງຫຼວງພະບາງ, ທິດຕາເວັນອອກຕິດກັບສະໜາມບິນເມືອງຫຼວງພະບາງ, ທິດຕາເວັນອອກສຽງເໜືອຕິດກັບຮ້ານນວດ ,ຢູ່ໃກ້ກັບແຄມແມ່ນ້ຳຄານໄຫຼປ່ອງໃສ່ແມ່ນ້ຳຂອງ ແລະ ໃນປັດຈຸບັນພາຍໃນວັດແຫ່ງນີ້ມີສິ່ງທີ່ໜ້າສົນໃຈ ແລະ ດຶງດູດນັກທ່ອງທ່ຽວຫຼາຍທີ່ສຸດອັນໄດ້ແກ່ :

### 2.1 ສິມແບບຫຼວງພະບາງແທ້.

ສິ່ງທີ່ນັກທ່ອງທ່ຽວສົນໃຈຫຼາຍທີ່ສຸດເມື່ອມາວັດຊຽງທອງນັ້ນກໍ່ຄື "ສິມ"ເຖິງວ່າມັນຈະມີຂະໜາດນ້ອຍແຕ່ກໍ່ສະແດງເຖິງຄວາມງົດງາມປະການຕາທາງດ້ານສະຖາປັດຕະຍະກຳ ແລະ ທາງດ້ານສາສະໜາແບບຫຼວງພະບາງ.ເຊິ່ງມີຄວາມໂດດເດັ່ນດ້ວຍຫຼັງຄາສິມທີ່ແອ່ນໂຄ້ງຊ້ອນກັນ 3 ຊັ້ນທີ່ມີລັກສະນະຕ່ຳ,ສ່ວນກາງຂອງຫຼັງຄາມີຍອດ"ຊໍ່ຟ້າ"ເປັນຮູບເຂົາພະສຸເມນ ແລະ ທິວເຂົາສັດບໍລິພັນອ້ອມຮອບ 7 ຊັ້ນ,ຮອງຮັບດ້ວຍປາລາອານົນເປັນການຈຳລອງຈັກກະວາດຕາມຄະຕິພຸດທະສາສະໜາປະກອບດ້ວຍ 17 ຊໍ່ ມີຄວາມໝາຍວ່າ : ເປັນສິມທີ່ພະມະຫາກະສັດສ້າງຂຶ້ນ,ສ່ວນຄົນສາມັນຊົນຈະສ້າງວັດທີ່ມີຊໍ່ຟ້າ 1-7 ຊໍ່ເທົ່ານັ້ນ.

ໜ້າປະຕູສິມມີການແກະສະຫຼັກຕາມຜະໜັງທີ່ມີລວດລາຍສວຍງາມດ້ວຍປິດທອງສະຫຼູພື້ນຮັກສີດຳເຊິ່ງເປັນການແກະສະຫຼັກເລົ່າເລື່ອງປະຫວັດຂອງສິທົນ-ມະໂນລາ... ນອກນັ້ນຍັງມີນິທານພື້ນເມືອງ ແລະ ເລີກເຂົ້າໄປພາຍໃນຈະພົບພະອົງຫຼວງ ຫຼື ພະພຸດທະຮູບ.



**ສິມວັດຊຽງທອງ**

**2.2 ຮູບພາບປະດັບແວ່ນ (ຮູບຕົ້ນທອງ ).**

ຮູບພາບນີ້ຕັ້ງຢູ່ບໍລິເວນຜະໜັງດ້ານຫຼັງຂອງ"ສິມ"ຈະຕົກແຕ່ງດ້ວຍການນຳໃຊ້ແວ່ນສີມາຕັດຕໍ່ກັນໃຫ້ເປັນຮູບຕົ້ນທອງຂະໜາດໃຫ່ຍມີລັກສະນະຄ້າຍໆກັບຕົ້ນໂພໂດຍມີພື້ນສາກຫຼັງເປັນສີອອກສົ້ມໆນັບວ່າຊ່ວຍເສີມຕົວພາບໃຫ້ມີຄວາມໂດດເດັ່ນ ແລະ ໜ້າສົນໃຈຫຼາຍຂຶ້ນສ່ວນດ້ານຂ້າງຂອງພາບຈະເປັນຮູບຂອງສັດໃນວັນນະຄະດີເປັນຕົ້ນ.



**( ຮູບປະດັບແວ່ນ ຫຼື ຮູບຕົ້ນທອງ )**

**2.3 ວິຫານແດງ.**

ມີລັກສະນະເປັນວິຫານນ້ອຍໆທີ່ຕັ້ງຢູ່ດ້ານຂ້າງຂອງ''ສິມ'',ຜະໜັງດ້ານນອກປະກອບດ້ວຍແວ່ນສີຕັດເປັນຮູບພາບທີ່ເປັນການເລົ່າເລື່ອງທ້າວສຽວສະຫວາດວັນນະກຳຊັ້ນເອກຂອງລາວສ່ວນພາຍໃນປະດິດສະຖານພະພຸດທະຮູບປາງໄສຍານທີ່ງົດງາມດ້ວຍພະຫັດຕະທີ່ຮັບຮອງພະເຄຍໄວ້ຢ່າງສະຫງ່າງາມ ແລະ ອ່ອນຊ້ອຍພະພຸດທະຮູບນີ້ເຄີຍນຳໄປຈັດສະແດງທີ່ກຸງປາຣີໃນປີ ພ.ສ 2474ໄປປະດິດສະຖານຢູ່ທີ່ນະຄອນຫຼວງວຽງຈັນຫຼາຍສິບປີກ່ອນຈະນຳກັບມາຫຼວງພະບາງອີກຄັ້ງໃນປີ ພ.ສ 2507.



**ວິຫານແດງ**

**2.4 ວິຫານພະມ່ານ.**

ຕັ້ງຢູ່ດ້ານຫຼັງຂອງ ”ສິມ” ສ້າງຂຶ້ນໃນປີ ພ.ສ 2493 (ຄ.ສ ) ເພື່ອສະເຫຼີມສະຫຼອງທີ່ໂລກກ້າວເຂົ້າສູ່ຍຸກກິ່ງພຸດທະການ.ພາຍໃນມີ ”ພະມ່ານ” ສະຖິດຢູ່ໃນຊ່ວງບຸນປີໃໝ່ຂອງທຸກໆປີຈະມີການອັນເຊີນ “ພະມ່ານ” ລົງມາສະຖິດຢູ່ສະຖານທີ່ທີ່ໃຫ້ປະຊາຊົນສົງນໍ້າ ແລະ ກາບໄຫ້ວ. ສ່ວນຜະໜັງດ້ານນອກຕົກແຕ່ງດ້ວຍແວ່ນສີຕັດເປັນສ່ວນນ້ອຍໆ ແລະ ນໍາມາຕໍ່ກັນເປັນຮູບຮ່າງຕ່າງໆ. ຜະໜັງດ້ານຫຼັງວິຫານທາດ້ວຍສີຊົມພູປະດັບດ້ວຍແວ່ນສີແດງຈະເປັນການເລົ່າເລື່ອງວິຖີຊີວິດຂອງຜູ້ຄົນ.



**ຮູບ ( ກ ) ວິຫານພະມ່ານ**



**ຮູບ ຂ ພະມ່ານ**

**2.5 ໂຮງເກັບລາຊະໂກດ ( ໂຮງມ້ຽນກະດູກ).**

ຕັ້ງຢູ່ທິດຕາເວັນອອກຂອງວັດ, ສ້າງຂຶ້ນໃນປີ ພ.ສ2505 ລັກສະນະເປັນໂຮງກວ້າງຜະໜັງໜ້າຈິນຮອດພື້ນ ສາມາດຖອດອອກເພື່ອໃຫ້ລາຊະລົດອອກມາໄດ້ໂດຍບໍລິເວນກາງໂຮງເປັນທີ່ຕັ້ງຂອງລາຊະລົດໄມ້ຈະແກະສະຫຼັກປິດທອງຄໍາ, ມີພະໂກດ 3 ອົງ (ໂຖໃສ່ກະດູກ). ພະໂກດຢູ່ກາງຈະໃຫ່ຍກວ່າໝູ່ ແລະ ເປັນພະໂກດຂອງເຈົ້າສີສະຫວ່າວັດທະນາສ່ວນອົງນ້ອຍໆດ້ານຫຼັງເປັນພະໂກດມານດາຂອງພະອົງ, ສ່ວນດ້ານໜ້າເປັນພະໂກດຂອງພະເຈົ້າອາ. ໂຮງເກັບລາຊະລົດແຫ່ງນີ້ອອກແບບໂດຍພະເຈົ້າມະນີວົງ ແລະ ແກະສະຫຼັກໂດຍຫຼວງພະບາງທີ່ມີຊື່ວ່າ : “ ເພຍຕັນ ” ຕອນທີ່ຮັບລາຊະການຢູ່ໃນຫຼວງພະບາງເຊິ່ງເປັນຊ່າງຜູ້ທີ່ມີສີມືປະຈໍາພະອົງເຈົ້າສີສະຫວ່າງວັດທະນາ. ບໍລິເວນດ້ານນອກຂອງໂຮງລາຊະລົດແຫ່ງນີ້”ເພຍຕັນ” ໄດ້ແກະສະຫຼັກເລື່ອງລາວຂອງລາມກຽດຕອນສໍາຄັນໄດ້ຢ່າງງົດງາມດ້ວຍການລົງຮັກປິດທອງສຸກໃສ.



**ໂຮງມ້ຽນກະດູກ**

## 3. **ການບູລະນະສ້າງສາ.**

ວັດຊຽງທອງວັດນີ້ແມ່ນໄດ້ຮັບການສ້າງຕັ້ງຂຶ້ນໃນລາຊະການສະໄໝພຣະເຈົ້າໄຊຍະເສດຖາທິລາດ ຫຼັງຈາກສ້າງວັດນີ້ບໍ່ດົນພະອົງກໍ່ຊີ້ຍ້າຍເມືອງຫຼວງໄປຍັງນະຄອນຫຼວງວຽງຈັນ ແລະ ວັດນີ້ໄດ້ຮັບການອຸບປະຖໍາເບິ່ງແຍງຈາກເຈົ້າມະຫາຊີວິດ ສີສະຫວ່າງວົງ ແລະ ເຈົ້າມະຫາຊີວິດ ສີສະຫວ່າງວັດທະນາ ເຈົ້າມະຫາຊີວິດສອງພະອົງສຸດທ້າຍຂອງລາວ.ເມື່ອເດີນທາງມາເຖິງວັດນີ້ສິ່ງທໍາອິດກໍ່ຄືການໄປຊົມ “ພຣະອຸໂປສົດ” ຫຼື ທີ່ເອີ້ນວ່າ : ”ສິມ” ແມ່ນຂະໜາດຈະບໍ່ໃຫ່ຍແຕ່ກໍ່ສະແດງເຖິງສະຖາປັດຕະຍະກໍາທາງສາສະໜາແບບຫຼວງພະບາງແທ້ໆ. ດ້ວຍຫຼັງຄາພຣະອຸໂປສົດທີ່ແອ່ນໂຄ້ງຊ້ອນກັນຢູ່ 3 ຊັ້ນຫຼຸດລື່ນກັນເກືອບຮອດຖານຈົນເບິ່ງຂ້ອນຂ້າງເຕ້ຍສ່ວນກາງຂອງຫຼັງຄາມີເຄື່ອງຍອດສີທອງຊຶ່ງຊາວລາວຮຽກກັນວ່າ

”ຊໍ່ຟ້າ” ປະກອບດ້ວຍ 17 ຊໍ່ອັນມີຄວາມໝາຍວ່າເປັນ “ສິມ” (ອຸໂປສົດ) ທີ່ເຈົ້າມະຫາຊີວິດຊົງສ້າງຂຶ້ນສ່ວນ”ສິມ” ທີ່ຄົນສາມັນສ້າງຂຶ້ນຈະມີຊໍ່ຟ້າພຽງ 1-7 ຊໍ່ເທົ່ານັ້ນເຊື່ອກັນວ່າບໍລິເວນປ່ອງສີ່ຫຼ່ຽມນ້ອຍໆເຄິ່ງກາງຂອງຊໍ່ຟ້າເຄີຍໃຊ້ເປັນທີ່ເກັບຂອງມີຄ່າປັດຈຸບັນເຫຼືອພຽງປ່ອງວ່າງເປົ່າຖັດມາທີ່ສ່ວນຂອງໜ້າບັນມີ ”ໂຫ່ງ” ຮູບຮ່າງຄ້າຍຄືຫົວນາກເປັນສ່ວນປະດັບຕາມຄະຕິທຳທາງພຸດທະສາດສາສະໜາເມື່ອຍ່າງເຂົ້າມາທີ່ປະຕູພະອຸໂປສົດຈະສະດຸດຕາກັບລວດລາຍແກະສະຫຼັກອັນສວຍງາມເຊັ່ນດຽວກັບປ່ອງຢ້ຽມຝາພາຍໃນກໍ່ສວຍງສາມດ້ວຍລວດລາຍປິດທອງສະຫຼູເທິງພື້ນສີດຳເລົ່າເລື່ອງພຸດທະປະຫວັດ, ທ້າວສິທົນ, ພະເຈົ້າ 10 ຊາດ ແລະ ພາບນິທານເພື່ອນບ້ານ.ເລີກເຂົ້າໄປຄືພະປະທານຊື່ມີຊື່ວ່າ : “ພະອົງຫຼວງ” ນອກຈາກວັດຊຽງທອງຈະມີພະອຸໂປສົດທີ່ໂດດເດັ່ນດ້ວຍສະຖາປັດຕະຍະກຳແບບລ້ານຊ້າງແລ້ວການຕົບແຕ່ງລວດລາຍຕາມຝາພາຍໃນກໍ່ສວຍງາມຄືກັນ. ບໍລິເວນຝາດ້ານຫຼັງຂອງພະອຸໂປສົດກໍ່ມີການຕົບແຕ່ງດ້ວຍການເອົາແກ້ວສີມາຕັດຕໍ່ກັນເປັນຮູບຕົ້ນໂພຂະໜາດໃຫ່ຍດ້ານຂ້ງກໍ່ຕິດເປັນຮູບສັດໃນວັນນະຄະດີຍາມບ່າຍທີ່ແສງແດດສ່ອງສະທ້ອນລົງມາເບິ່ງງົດງາມຖັດມາບໍລິເວນດ້ານຂ້າງ ແລະ ດ້ານຫຼັງຂອງພະອຸໂປສົດເປັນທີ່ຕັ້ງຂອງວິຫານນ້ອຍໆ 2 ຫຼັງຈຸດເດັ່ນຂອງວິຫານດ້ານໜ້າຄື:ທີ່ຝາດ້ານນອກແຕ່ລະຫຼັງຕົບແຕ່ງດ້ວຍແກ້ວຕັດເປັນຊິ້ນສ່ວນນ້ອຍໆແລ້ວນຳມາຕໍ່ກັນເປັນຮູບຮ່າງຕ່າງໆເລົ່າເປັນນິທານເພື່ອນບ້ານລົງເທິງຝາສີບົວເບິ່ງສວຍງາມໜ້າຮັກຕາມແບບສະບັບຫຼວງພະບາງວິຫານຫຼັງນ້ອຍດ້ານຂ້າງພະອຸໂປສົດທີ່ມີຊື່ວ່າ : “ວິຫານແດງ” ພາຍໃນເປັນທີ່ປະດິດຖານພະ.

ພະພຸດທະຮູບປາງໄສຍາດທີ່ງົດງາມດ້ວຍພະຫັດທີ່ຮັບຮອງພະສຽນໄວ້ຢ່າງງົດງາມ ແລະ ອອນຊອນ ພະພຸດທະຮູບນີ້ເຄີຍຈັດໄປນຳສະແດງທີ່ນະຄອນປາຣີປະເທດຝຣັ່ງໃນປີ ຄ.ສ 1931 ແລະ ໄປປະດິດສະຖານຢູ່ນະຄອນຫຼວງວຽງຈັນຫຼາຍສິບປີກ່ອນນຳກັບມາຍັງຫຼວງພະບາງໃນປີ ຄ.ສ 1964ສ່ວນວິຫານດ້ານຫຼັງພະອຸໂປສົດຄື: ”ຫໍພະມ່ານ” ພາຍໃນປະດິດສະຖານ ”ພະມ່ານ” ຊຶ່ງມີລັກລະນະຄ້າຍຄືກັບ ”ພະບາງ” ຈົນຫຼາຍຄົນເຂົ້າໃຈຜິດຄິດວ່າເປັນອັນດຽວກັນໃນຊ່ວງບຸນມື້ຂຶ້ນປີໃໝ່ຂອງລາວ (ຊ່ວງມື້ສັງການ)ຈະມີການອັນເຊີນ ”ພະມ່ານ” ລົງມາເພື່ອໃຫ້ປະຊາຊົນສົງນ້ຳ ແລະ ກາບໄຫວ. ນອກນັ້ນພາກສ່ວນໃນວິຫານຫຼັງນີ້, ຝາດ້ານຫຼັງເປັນພາບປະດັບແກ້ວສີ ເລົ່າເລື່ອງວິຖີຊີວິດຂອງຜູ້ຄົນ ເຊິ່ງສ້າງຂຶ້ນໃນປີຄ.ສ 1950 ເພື່ອສະເຫຼີມສະຫຼອງທີ່ໂລກກ້າວສູ່ຍຸກເຄິ່ງພຸດທະການ,ດ້ານຫຼັງຫໍພະມ່ານເປັນທີ່ຕັ້ງຂອງພະທາດສີສະຫວ່າງວົງເຊິ່ງເປັນທີ່ຈັດເກັບອັດທິຂອງມະຫາຊີວິດເຈົ້າສີສະຫວ່າງວົງ ແລະ ດ້ານທິດຕາເວັນອອກສ່ຽງໃຕ້ຕິດກັບຮົ້ວເປັນໂຮງກັບເຮືອໃກ້ກັບແຄມແມ່ນ້ຳຂອງສ່ວນດ້ານໜ້າພະອຸໂປສົດເປັນທີ່ຕັ້ງຂອງຫໍກອງມີລວດລາຍລົງຮັກປິດທອງສວຍງາມເທິງເສົານອກຈາກນັ້ນໃນບໍລິເວນວັດຊຽງທອງເມືອທ່ານຍ່າງເຂົ້າໄປທາງຂ້າງຖະໜົນໂພທິສາລາດດ້ານຂວາມືຈະມີຄວາມສະດຸດຕາກັບອາຄານແບບຊົງບູຮານມີລວດລາຍແກະສະຫຼັກທາສີຄຳ. ຂະໜາດໃຫ່ຍເຊິ່ງເອີ້ນວ່າ ”ໂຮງມ້ຽນໂກດ”ຫຼື ເປັນໂຮງເກັບພະໂກດ, ພະລາຊະລົດ, ລາຊະຍານຂອງເຈົ້າຊີວິດສີສະຫວ່າງວັດທະນາເຊິ່ງສິ້ນພະຊົນເມື່ອປີ ຄ.ສ 1959 ແລະ ໄດ້ສ້າງໂຮງມ້ຽນໂກດແຫ່ງນີ້ຂຶ້ນໃນປີ ຄ.ສ 1962 ພາຍໃນມີລັກສະນະເປັນໂຖງກ້ວາງຝາດ້ານໜ້າຕັ້ງແຕ່ໜ້າບັນລົງມາຈົນເຖິງພື້ນສາມາດຖອດອອກເພື່ອໃຫ້ສາມາດເຄື່ອນລາຊະລົດອອກມາໄດ້ບໍລິເວນກາງໂຮງມ້ຽນໂກດເປັນທີ່ຕັ້ງຂອງລາຊະລົດໄມ້ແກະສະຫຼັກປິດຄຳແປວຮອບຄັນມີພະໂກດ 3 ອົງສູນກາງເປັນໂກດອົງໃຫ່ຍຂອງພະເຈົ້າສີສະຫວ່າງວັດທະນາອົງນ້ອຍ. ດ້ານຫຼັງເປັນຂອງລາຊະມານດາສ່ວນອົງນ້ອຍດ້ານໜ້າເປັນເຈົ້າຂອງພະເຈົ້າອາໂຮງມ້ຽນໂກດນີ້ອອກແບບໂດຍເຈົ້າມະນີວົງ ແລະ ແກະສະຫຼັກໂດຍຊ່າງຫຼວງພະບາງທີ່ມີຊື່ວ່າ ”ເພຍຕັນ” ເມື່ອຄັ້ງທີ່ຮັບລາຊະການຢູ່ໃນພະມະຫາລາຊະວັງນັບເປັນຊ່າງຝີມືຊັ້ນເອກປະຈຳພະອົງຂອງເຈົ້າມະຫາຊີວິດສີສະຫວ່າງວັດທະນາມີຄວາມຊຳນານທາງດ້ານການຂຽນ ແລະ ການແກະສະຫຼັກຈຸດເດັ່ນອີກຢ່າງໜຶ່ງຂອງໂຮງມ້ຽນໂກດຄືບໍລິເວນຝາດ້ານນອກທີ່ ”ເພຍຕັນ” ແກະສະຫຼັກໄວ້ຢ່າງງົດງາມລົງດ້ວຍສີທອງສຸກ. ເລົ່າເລື່ອງພະລັກພະລາມຕອນສຳຄັນເຊັ່ນ: ດ້ານເທິງສຸດເປັນຕອນພິເພກກຳລັງບອກຄວາມລັບເລື່ອງທີ່ຊ່ອນຫົວໃຈຂອງທົດສະກັນກັບພະລາມ, ພະລັກ ແລະ ນາງສີດາ. ຖັດລົງມາເປັນຕອນທີ່

ທິດສະກັນຖືກທະນູຂອງພະລາມສຽບເຂົ້າທີ່ຫົວໃຈເປັນຕົ້ນ. ເດີມພາບແກະສະຫຼັກເຫຼົ່ານີ້ເປັນລັກສະນະການລົງຮັກປິດທອງທີ່ສວຍງາມ. ຕໍ່ມາໄດ້ມີການບູລະນະໃໝ່ໂດຍການທາສີທອງທັບລົງໄປດັ່ງທີ່ເຫັນໃນປະຈຸບັນ.

ນອກຈາກນີ້ພາຍໃນວັດຊຽງທອງຍັງມີເຂດສັງຄາວາດປະກອບດ້ວຍກຸດຕິ, ສະຖຸບເຈດີ. ດັ່ງວັດທົ່ວໆໄປ ແລະ ຍັງມີພະສິງຈຳພັນສາຢູ່. **(ວັດຊຽງທອງ, raosukunfung.)**






**ເຈົ້າມະຫາຊີວິດສະຫວ່າງວົງ** **ເຈົ້າມະຫາຊີວິດສີສະຫວ່າງ**

# ວັດພຣະທາດໂຜ່ນ

ພຣະທາດໂຜ່ນ ແມ່ນພຣະທາດໜຶ່ງທີ່ມີຄວາມສັກສິດ ແລະ ເປັນທີ່ເພິ່ງທາງສາສະໜາຂອງປະຊາຊົນລາວ, ເປັນພຣະທາດທີ່ມີຄວາມສຳຄັນຄູ່ບ້ານຄູ່ເມືອງຂອງປະຊາຊົນລາວ ແລະ ຖືວ່າເປັນມໍລະດົກຕົກທອດ, ເປັນຊັບສິນບັດມັ່ງເມືອງທີ່ມີຄຸນຄ່າສູງ, ໂດດເດັ່ນທາງດ້ານວັດທະນະທຳອັນລ້ຳຄ່າ



## ພຣະທາດໂຜ່ນ

## 1. ປະຫວັດຄວາມເປັນມາຂອງວັດພຣະທາດໂຜ່ນກ່ອນການສ້າງຕັ້ງ

ຕາມຕຳນານກ່າວຂານແຫ່ງຄວາມເຊື່ອຖືທາງພຣະພຸດທະເຈົ້າ ໂດຍພະຍາຄັດທະນານ ພຣະທາດໂຜ່ນແມ່ນພຣະເຈດີ ຍະຮາມບູຮານສະຖານທີ່ໄດ້ຮັບການສ້າງຂຶ້ນ ເມື່ອວັນພຸດ ເດືອນ 12 ພ.ສ 236 ປັດຈຸບັນມີອາຍຸເຖິງ 2500 ປີເຊິ່ງສ້າງດ້ວຍຫີນເຂົ້າຈີ່ ຫຼື ເອີ້ນວ່າຫີນໝາມໜີ່, ກໍ່ເປັນທາດອຸໂມງ (ຮູບໂອຂວ້ຳ), ກວ້າງ ດ້ານລະ 12 ວາ, ມີລູກທາດອ້ອມຢູ່ຖານລຸ່ມມີ 7 ລູກ ສ້າງໂດຍພະສົມເດັດ ພະພຸດທະສາສະໜາມີສັດທາແກ່ກ້າ ໄດ້ວ່າຈ້າງເຈົ້າພະຍາທັງຫຼາຍ ໃນຊຸມພູທະວີບ ສ້າງວັດວາອາຮາມຕ່າງໆ ໝົດເງິນ 88 ໂກດ ພ້ອມກັນກັບການສ້າງພຣະທາດ 4 ຮູບຄື : ພຣະທາດພະນົມ ບໍລົມມະເຈດີ, ພຣະທາດອິງຮັງ, ພຣະທາດໂຜ່ນ ແລະ ພຣະທາດເຊີງຊຸມ (ຢູ່ໃກ້ໜອງຫານປະເທດໄທ) ອັນໄດ້ກວມເອົາຫຼັກຫີນ 4 ລ່ຽມ 7 ໜ່ວຍ ເຊິ່ງເປັນທີ່ລະລຶກເຖິງພະພຸດທະເຈົ້າ 5 ພະອົງ, ຕໍ່ມາເຖິງກາດຣາຊາ 101 ຕົວ ພະຍາຊຽງດົງ ຊຽງທອງ ໄດ້ຖວາຍຄືນເປັນທານ ເພື່ອເປັນເຂດແດນຂອງພຣະທາດໂຜ່ນ ແລ້ວໄດ້ຢາດນ້ຳໝາຍທານ ຕັ້ງສັນນິຖານໄວ້ວ່າ : ຖ້າຜູ້ໃດຕັ້ງຖິ່ນຖານ, ສ້າງເຮືອນ, ສ້າງໄຮ່ທຳນາ ໃນອານາເຂດພຣະທາດນີ້ ຕະຫຼອດເຖິງບວກນ້ຳ ແລະ ວັງປາ ໃນອານາເຂດດິນແດນແຫ່ງນີ້ ຕ້ອງໄດ້ຮັກສາປະຕິບັດເຄົາລົບນົບໄຫວ້ຕາມລະດູການບໍ່ໃຫ້ຂາດທຸກປີຄື : ເດືອນ 11 ເພັງໃຫ້ໄດ້ເຂົ້າເໝົ້າ 1 ໝື່ນ, ພາເຂົ້າ 166 ພາ ແລະ ເດືອນ 3 ເພັງ ໃຫ້ພາກັນເຮັດເຂົ້າຈີ່ 400 ກ້ອນບູຊາ ຈິ່ງຢູ່ດີມີແຮງອຸດົມສົມບູນ ແລະ ຢູ່ເຢັນເປັນສຸກ.

ພຣະທາດໂຜ່ນ ແມ່ນພຣະທາດໜຶ່ງທີ່ມີຄວາມສັກສິດ ແລະ ເປັນທີ່ເພິ່ງທາງສາສະໜາ ເຊິ່ງຕັ້ງຢູ່ບ້ານໂພນທາດ ເມືອງໄຊພູທອງ ແຂວງສະຫວັນນະເຂດ ແລະ ມີຕຳນານກ່າວຂານກັນມາວ່າ, ກາລະຄັ້ງໜຶ່ງມີພຣະພຸດທະເຈົ້າໄດ້ສະເດັດມາຈາກເມືອງລ້ານໍ້າ ພະອົງນັ້ນຊື່ວ່າ : ເວສາລີ ໄດ້ມາສະແດງທຳໂພດສັດຢູ່ທີ່ໂພນຊ້າງສານເຖິງ 7 ຄືນ, ມີເທວະດາ, ມະນຸດ, ອະມະນຸດ ຟັງເທດສະໜາເປັນຈຳນວນຫຼວງຫຼາຍ. ເມື່ອເຖິງ 7 ວັນແລ້ວ ພະອົງກໍຢາກທະອານໜັກ ພໍພະອົງນຶກພຽງເທົ່ານັ້ນກໍມີພະຍານາກທີ່ຢູ່ໃນຖໍ້າຂຶ້ນມາເນລະມິດສ້າງເວຈາກິດຕິ (ທາດ) ໃຫ້ພະອົງ ແລ້ວພະອົງກໍທະອານໜັກທີ່ນັ້ນ ເພື່ອເປັນການກາບໄຫວ້ບູຊາໃນພາຍພາກໜ້າ, ເມື່ອສຳເລັດພະພຸດກິດແລ້ວກໍສະເດັດຈາກໄປ. ສະນັ້ນ, ຈຶ່ງເອີ້ນພຣະທາດລູກນີ້ວ່າ : “ ທາດໂຜ່ນ ”

ພຣະທາດໂຜ່ນ ເປັນພຣະທາດທີ່ມີຄວາມສັກສິດ ທີ່ມີຄວາມສຳຄັນຄູ່ບ້ານຄູ່ເມືອງຂອງປະຊາຊົນລາວຖືວ່າເປັນມໍລະດົກຕົກທອດ, ເປັນຊັບສົມບັດມັ່ງເມືອງທີ່ມີຄ່າສູງ, ໂດດເດັ່ນທາງດ້ານວັດທະນະທຳອັນລໍ້າຄ່າ ແລະ ເປັນປະຫວັດສາດເຊິ່ງຕິດພັນກັບແບບແຜນການດຳລົງຊີວິດຂອງປະຊາຊົນລາວບັນດາເຜົ່າມາແຕ່ດຶກດຳບັນ ແລະ ໄດ້ໃຫ້ຄວາມເຄົາລົບນັບຖືເປັນຢ່າງສູງ, ໃນວັນພຣະ ຫຼື ວັນສຳຄັນທາງພຸດທະສາສະໜາຈະມີຜູ້ຄົນມາເຮັດບຸນກັນຢ່າງຫຼວງຫຼາຍ ນິຍົມມາຂໍພອນ, ສືບອາຍຸຕໍ່ສະຕາ, ບົນບານສານກ່າວ ເຊິ່ງກໍເລົ່າກັນວ່າປະສົບຜົນສຳເລັດຕາມທີ່ຂໍກັນເປັນສ່ວນໃຫຍ່ຈຶ່ງມາແກ້ບົນດ້ວຍຂັນໝາກເບັງ, ດອກໄມ້, ໝາກໄມ້, ອາຫານ ແລະ ເຄື່ອງບູຊາຫຼາກຫຼາຍຊະນິດຖວາຍເຕັມຢູ່ໜ້າທາດໃນທຸກໆວັນ. ນອກນີ້; ຍັງເປັນສະຖານທີ່ທ່ອງທ່ຽວທາງດ້ານວັດທະນະທຳທີ່ສຳຄັນ ແລະ ມີຊື່ສຽງອີກແຫ່ງໜຶ່ງຂອງແຂວງສະຫວັນນະເຂດ.






## 2. ທີ່ຕັ້ງຂອງວັດພຣະທາດໂຜ່ນ

ພຣະທາດໂຜ່ນ ຫຼື ເຈົ້າແທ່ນຄໍາເຫຼືອງ ເມືອງໄຊພູທອງ ຕັ້ງຢູ່ບ້ານໂພນທາດ ເມືອງໄຊພູທອງ ແຂວງສະຫວັນນະເຂດ, ຫ່າງຈາກເທດສະບານເມືອງໄຊພູທອງປະມານ 22 ກິໂລແມັດຕາມສັ້ນທາງເລກທີ 13 ໃຕ້ມຸ່ງໜ້າສູ່ແຂວງຈໍາປາສັກ. ການເດີນທາງໄປວັດພຣະທາດໂຜ່ນສາມາດໄປໄດ້ສອງເສັ້ນທາງຄື :

1. ໂດຍການໃຊ້ເສັ້ນທາງເລກທີ 9 ເມືອງໄກສອນ - ບ້ານຫຼັກ 35 ໄລຍະທາງປະມານ 30 ກວ່າກິໂລແມັດ, ລ້ຽວຂວາໄປຕາມເສັ້ນທາງເລກທີ 13 ອີກປະມານ 15 - 16 ກິໂລແມັດ, ລ້ຽວຂວາໄປເມືອງໄຊພູທອງອີກປະມານ 20 ກວ່າກິໂລແມັດ.
2. ໂດຍໃຊ້ເສັ້ນທາງລຽບແມ່ນໍ້າຂອງລົງໄປທາງໃຕ້ ຈະໃກ້ກວ່າເຄິ່ງຕໍ່ເຄິ່ງຄືປະມານ 30 ກິໂລແມັດເທົ່ານັ້ນເສັ້ນທາງນີ້ຈະຜ່ານເຮືອນຫີນ ເຊິ່ງເປັນປາສາດຂອມຫຼັງນ້ອຍໆອີກ



## 3. ການບູລະນະ

ໃນການບູລະນະພຣະາດໂຜ່ນນີ້ ຫ້ອງການແຜນການ ແລະ ການລົງທຶນເມືອງໄຊພູທອງ ໄດ້ປະຕິບັດໂຄງການ ປູລານພຣະທາດໂຜ່ນໃນກຳແພງແກ້ວຂອງພຣະທາດໂຜ່ນ ແລະ ໂຄງການສ້າງສວນວັດທະນະທຳເຂດພຣະທາດໂຜ່ນ ເມືອງໄຊພູທອງ ແຂວງສະຫວັນນະເຂດ ເປັນການປັບປຸງບູລະນະພື້ນຖານໂຄງລ່າງໃນເຂດດັ່ງກ່າວເພື່ອຕ້ອນຮັບໃຫ້ແກ່ປີທ່ອງທ່ຽວ ທີ່ຈະໄດ້ເປີດຂຶ້ນທີ່ພຣະທາດໂຜ່ນ. ສຳລັບໂຄງການປູລານພຣະທາດໂຜ່ນພາຍໃນກຳແພງແກ້ວ ເຊິ່ງປູດ້ວຍກະໂລດິນເຜົາຕາມສູດບູຮານທີ່ສາມາດລະເຫີຍອາຍຄວາມຮ້ອນໄດ້

# ພະທາດຫຼວງວຽງຈັນ

## 1. ປະຫວັດຄວາມເປັນມາຂອງພະທາດຫຼວງວຽງຈັນ



ຕາມຕຳນານນິທານໄດ້ກ່າວໄວ້ວ່າພະທາດຫຼວງສ້າງຂຶ້ນໃນໄລຍະດຽວກັນກັບການສ້າງເມືອງນະຄອນຫຼວງວຽງຈັນຫຼັງຈາກກໍ່ສ້າງພະທາດພະນົມພູສ້າງບູຣີຈັນອ້ອຍລ້ອຍຫຼືພະເຈົ້າຈັນທະບູລີປະເສດທິສັກເຈົ້າເມືອຫົວຜູ້ຂອງນະຄອນວຽງຈັນຜູ້ທຳອິດພ້ອມກັບພະອໍຣະຫັນ 5 ອົງເພື່ອບັນຈຸພະບູຣິມສາຣີຣິກກະທາດສອນຫົວ (ກະດູກ) 27 ພຣະອົງເຊິ່ງໄດ້ອັນເຊີນມາຈາກປະເທດອິນເດຍໂດຍກໍ່ເປັນອຸໂມງຫີນຄວມໄວ້ ອຸໂມງຄະນະນັ້ນກ້ວາງຂ້າງລະ 5 ວາ, ສູງ 4 ວາ 3 ສອກ ເມືອໄດ້ບັນຈຸກະດູກລົງໄປແລ້ວພະເຈົ້າຈັນທະບຸລີຈຶ່ງໄດ້ມີພະຣາດດຳຣັດໃຫ້ເສນາອະມາດສ້າງວິຫານຂຶ້ນໃນເມືອງຈັນທະບຸລີ ຫຼື ນະຄອນວຽງຈັນ 5 ຫຼັງເພື່ອໃຫ້ເປັນທີ່ຈຳພັນສາຂອງພະອໍຣະຫັນ 5 ອົງ ຕາມຕຳນານໄດ້ກ່າວໄວ້ວາສ້າງຂຶ້ນໃນປີ ພ.ສ 238.

ໃນໄລຍະຕໍ່ມາວຽງຈັນບໍ່ໄດ້ປະກົດໃນໜັງສືປະຫວັດສາດແຕ່ເຖິງຢາງໃດກໍ່ຕາມນະຄອນວຽງຈັນກໍ່ຍັງມີຄວາມສຳຄັນຕະຫຼອດມາໃນສີລາຈາຣຶກຂອງພໍ່ຂຸນຣາມຄຳແຫງ ແລະ ໃນພົງສາວະດ້ານລາວສະບັບຕ່າງໆ ນັບຕັ້ງແຕ່ເຈົ້າຟ້າງຸ່ມທ້ອນໂຮມອານາຈັກລາວລ້ານຊ້າງເປັນອັນໜຶ່ງອັນດຽວແລ້ວເພະອົງກໍ່ໄດ້ສົ່ງຜູ້ທີໄວເນື້ອເຊື່ອໃຈໄປປົກຄອງເມືອງວຽງຈັນຈົນມາຮອດລາຊະການຂອງພະເຈົ້າໄຊຍະເສດຖາທິລາດ (ເຈົ້າເສດຖະວັງໂສ) ເມືອພະອົງໄດ້ຂຶ້ນຄອງລາດເປັນກະສັດອານາຈັກລາວລ້ານຊ້າງແລ້ວບໍ່ດົນເພີນໄດ້ມີການຍ້າຍນະຄອນຫຼວງຈາກຊຽງທອງ (ຫຼວງພະບາງ) ມາຕັ້ງທີ່ວຽງຈັນໃນປີ 1566 ພາຍຫຼັງທີ່ຍ້າຍນະຄອນຫຼວງໄດ້ 6 ປີ ພະອົງຈຶ່ງນຳພາປະຊາຊົນກໍ່ສ້າງພະທາດຫຼວງຂຶ້ນມາໃໝ່ໃນສວນອຸດທະຍານທາງພາກຕາວັນອອກຂອງນະຄອນຫຼວງວຽງຈັນໂດຍສ້າງທັບພະທາດເກົ່າທີ່ມີມາແຕ່ບູຮານນະການ ເມືອສ້າງແລ້ວພະອົງຈິ່ງຕັ້ງຊື່ພະທາດຫຼວງດັ່ງກ່າວວ່າ: (ພະທາດເຈດີໂລກະຈຸລາມະນີ) ແຕ່ຄົນສວນຫຼາຍເຂົາເຈົ້າມັກເອີນວ່າພະທາດຫຼວງ ແລະ ໃຫ້ມອບໃຫ້ມີຜູ້ທີ່ຮັກສາຈຳນວນ 35 ຄອບຄົວເປັນຜູ້ເບິ່ງແຍ່ງຮັກສາ, ມອບທີດິນໃຫ້ໃນຂອບເຂດດັ່ງກ່າວເປັນບ່ອນທຳມາຫາກິນເພືອດຳລົງຊີວິດ.



**ເຈົ້າໄຊຍະເສດຖາທິລາດ**

ພະທາດຫຼວງນີ້ສູງ 45,00 ແມັດ ຕີນແທ່ນພະທາດຫຼວງກ້ວາງ 69 ແມັດ ແລະ ມີພະທາດປາລະມີ 30 ອ້ອມເປັນບໍລິວານ ຮູບຮ່າງຂອງພະທາດເໝືອນໂອຂ້ວນ ຫຼື ໝາກໂມຕັດເຄິ່ງເອົາວາງໄວເທິງແທ່ນສີຫຼ່ຽມຕາມແບບຢ່າງ ພະທາດສານຈິ ປະເທດອິນ ສ່ວນເບື້ອງເທິງຂອງພະທາດໄດ້ຕໍ່ຂຶ້ນເປັນຮູບດວງປີ ຫຼືຮວງປີ ສີຫຼ່ຽມທີມີຄວາມໝາຍດອກບົວຈູມ ຊຶ່ງສະແດງອອກເຖິງນິດໃສໃຈຄໍ ສີລະປະວັດທະນາທໍາຂອງລາວລ້ານຊ້າງຢ່າງແທ້ຈິງ.

ປະຫວັດການກໍ່ສ້າງພະທາດຫຼວງ ສະຫຼຸບແລ້ວໄດ້ກໍ່ສ້າງຂຶ້ນສອງໄລຍະປະຫວັດສາດແຕກຕ່າງກັນຄື: ຕາມໜັງສືອູລັງຄະທາດນິທານລາວບູຮານ ກ່າວວ່າແຮກຕົ້ນທໍາອິນນັ້ນມີພາມສີຄົນ ເອົາເສົາຫີນຮູບສີ່ຫຼ່ຽມເປັນຫຼັກໝາຍໄວ້ (ເພື່ອສະແດງໃຫ້ຮູ້ວ່າສາສະໜາພຸດໄດ້ມາຮອດດິນແດນນີ້ແລ້ວ) ຕໍານານວ່າ ເສົາຫີນນີ້ແມ່ນເສົາຫີນຂອງພະເຈົ້າອາໂສກກະມະຫາລາດ ແຫ່ງປະເທດອິນເດຍສະວັດທີ -3  ກ່ອນຄິດຕະສັງກາດ ຕໍ່ມາປະຊາຊົນຜູ້ເຫຼື້ອມໃສໃນພະພຸດທະສາສະໜາຊຶ່ມີພໍ່ນາຄົນໜຶ່ງ ຊື່ ບູລີຈັນ ເປັນຫົວໜ້າໄດ້ພາປະຊາຊົນກໍ່ສ້າງເປັນອຸບພະເຈດີຂຶ້ນ ສູງປະມານ 4 ວາ 3 ສອກ ແລະ ກ້ວາງດ້ານລະ 4 ວາ. ປີ ຄ. ສ. 1929-1930 ທ່ານໂຟນແບກໂຕ ນັກປາດຄົນພະລັ່ງ ຢາກຮູ້ວ່າມີຫຍັງຢູ່ໃຈກາງຂອງພະທາດ ຈຶ່ງໄດ້ນໍາພາການທົດລອງຂຸດເບິ່ງ ໃນນັ້ນ ເພິ່ນໄດ້ພົບເຫັນພະທາດນ້ອຍ ( ປີລະມິດ) ຢູ່ໃຈກາງຂອງພະທາດຫຼວງ ແລະ ເພິ່ນໄດ້ພົບຖານຂັ້ນໄດລົງໄປຫາພະທາດນັ້ນທັງສີດ້ານ. ຈາກຂໍ່ມູນທາງດ້ານບູຮານຄະດີ ຫຼື ວັດຖຸບູຮານທີ່ພົບເຫັ້ນຢູ່ບໍລິເວນພະທາດຫຼວງ ແລະ ອ້ອມແອມພະທາດຫຼວງ ແລະ ເຫດການປະຫວັດສາດຂອງພາກຝື້ນີ້ນັ້ນ ຈຶ່ງສັນນິດ

ຖານພະທາດຫຼວງສະໄໝແຮກຕົ້ນທຳອິດນັ້ນ ອາດສ້າງຂຶ້ນເມື່ອປະມານສະຕາວັດທີ 6 ຫາທີ 10 ແຮງຄິດຕະສັງກາດ ສະໄໝອານາຈັກ " ເຈນລະ" ຈະເລີນຮຸ່ງເຮືອງ ຄົງບໍ່ແກ່ຍາວ ຄືນຫຼັງໄປເຖິງສະໄໝພະເຈົ້າອາໂສກກະມະຫາລາດໄດ້ ເພາະບໍ່ມີຫຼັກຖານສະແດງໃຫ້ເຫັນອາດຈະເປັນໄປໄດ້. ການກໍ່ສ້າງພະທາດຫຼວງໄລຍະທີ່ສອງ ແມ່ນໄລຍະປະຫວັດສາດ ທີ່ແນ່ນອນແລ້ວເພາະຢູ່ບໍລິເວນພະທາດນີ້ໄດ້ມີຫີນຈາລຶກ 2 ໜ່ວຍບອກວ່າເມື່ອ ປີ ຄ. ສ. 1566 ພະເຈົ້າໄຊຍະເຊດ ຖາທິລາດໄດ້ນຳພາປະຊາຊົນຂອງພະອົງກໍ່ສ້າງພະທາດຫຼວງກວມພະທາດນ້ອຍລູກໜຶ່ງ ທີ່ມີມາແຕ່ກ່ອນແລ້ວ ທີ່ ຊາວເມືອງທິດຕາເວັນອອກພະທາດນີ້ໃຫ້ຊື່ວ່າ " ພະເຈດີໂລກະຈຸລະມະນີ " ແຕ່ຄົນທັງຫຼາຍເອີ້ນວ່າພະທາດຫຼວງ ເພາະ ເປັນພະທາດລູກໃຫຍ່ມີສິລະປະແບບລາວແທ້ໆ.

ໜັງສືອູລັງຄະທາດນິທານລາວບູຮານກ່າວ ສ້າງຂຶ້ນເພື່ອບັນຈຸກະດູກເນົ່າຂອງພະພຸດທະເຈົ້າ ຊຶ່ງພະອໍລະຫັນນຳມາ ແຕ່ປະເທດອິນເດຍ ຄຳເວົ້ານີ້ຍັງບໍ່ທັນມີຂໍ້ມູນໃຫ້ການສະໜັບໜູນພຽງພໍເທື່ອຂ້າພະເຈົ້າຄິດວ່າພະທາດນີ້ສ້າງຂຶ້ນເພື່ອ ອະນຸສອນເຖິງຄຳສອນພະພຸດທະເຈົ້າຫຼາຍກວາ ເພາະຢູ່ໃຈກາງຂອງພະທາດນ້ອຍປາລະມີນັ້ນເພິ່ນພົບເຫັ່ນພະທາດນ້ອຍ ເຮັດດ້ວຍຄຳໜັກປະມານ 4 ບາດແລະມີລານຄຳຍາວປະມານ 40 ຊັງຕີແມັດ ຮອງຮັບພະທາດຄຳນັ້ນຢູ່ ແລະ ໃນລານຄຳ ນັ້ນ ຂຽນເປັນຫົວໃຈພຸດທະທຳວ່າ " ເຢ ທັມມາ ເຫຕຸປະພະວາ  ເຕສັງເຫຕຸງ ຕະຖາຄະໂຕ ເຕສັ່ນຈະໂຍ ນິໂຣໂທຈະ ເອ ວັງ ວາທີ ມະຫາສະມະໂນ " ມີເນື້ອໃນວ່າ ທຳທັງຫຼາຍເກີດເພາະເຫດ ແລະ ດັບກໍ່ເພາະເຫດຕະຖາຄົດພຸດທະເຈົ້າຮູ້ແລ້ວ , ສະແດງແລ້ວເຫດແຫ່ງທຳເຫົ່ານັ້ນ ແລະ ເຫດຄວາມດັບຂອງທຳເຫຼົ່ານັ້ນ " ຄາຖາ ພຸດທະທຳມະບົດນີ້ຄືກັນກັບເພິ່ນພົບ ເຫັ່ນຢູ່ທີ່ພະເຈດີ ນະຄອນປະຖົມ ຢູ່ປະເທດໄທ.

ຕາມການບັນທຶກຂອງທູດການຄ້າຊາວໂຮນຫລັງ ທີ່ມາຢຽມຢາມນະຄອນຫຼວງວຽງຈັນເມື່ອປີ ຄ.ສ 1641 ເວົ້າເຖິງ ພະທາດຫຼວງວ່າເປັນທາດໃຫຍ່ຈົບງາມທີ່ສຸດປະດັບດ້ວຍແຜນຄຳ ວິຈິດງົດງາມ ເຈົ້າຊີວິດສຸລິຍະວົງສາ ທຳມີກະລາດໄດ້ ເປັນປະທານໃນງານບຸນນະມັດສະການ ປະທາດຫຼວງນີ້ ແລະ ພິທີຮັບຕອນທ່ານ ວັນວຸດສະຕົບ ຫົວໜ້າທູດການຄ້າຂອງ ຊາວໂຮນລັງກໍ່ໄດ້ຈັດຂຶ້ນທີ່ເດີ່ນພະທາດຫຼວງນີ້.

ພາຍຫຼັງສົງຄາມລາວ-ໄທ ປີ 1829 ໄດ້ສິ້ນສຸດລົງວຽງຈັນຖືກຈູດເຜົາພະທາດຫຼວງສູນເສຍຫຼາຍ ຍອດຂອງພະທາດ ຫຼວງໄດ້ຫັກເພລົງຍ້ອນຖືກພວກໂຈນທີ່ສ່ວຍໂອກາດຂຸດຄົ້ນມ້າງເພພະທາດ ເພື່ອຊອກຫາເອົາຊັບສົມບັດ ເງິນ,ຄຳ ແລະ ຂອງມີຄ່າອື່ນໆທີ່ມີຢູ່ໃນພະທາດເອົາໄປໝົດ.

ເຖິງປີ ຄ.ສ 1900 ຍອດພະທາດຫຼວງໄດ້ສ້າງຄືນໃໝ່ເທື່ອທຳອິດພາຍໃຕ້ການບັນຊາການຂອງຂ້າຫຼວງໃຫຍ່ຝຣັ່ງ ປະຈຳລາວໄດ້ສ້າງຍອດພະທາດຫຼວງເປັນແບບແນວຊາວຕາເວັນຕົກຂຶ້ນແທ່ນຍອດເກົ່າທີ່ຫັກເສຍໄປ ແຕ່ປະຊາຊົນບໍ່ ພໍໃຈເພາະບໍ່ແມ່ນສິລະປະວດທະນາທຳຂອງຄົນລາວ ຕໍ່ມາໃນປີ ຄ.ສ 1930

## 2. ສະຖານທີ່ຕັ້ງ ແລະ ຂອບເຂດ.




**ຮູບພາບພະທາດຫຼວງວຽງຈັນ (ຖ່າຍຈາກດາວທຽມ)**

ພະທາດຫຼວງວຽງຈັນຕັ້ງຢູ່ບ້ານທາດຫຼວງເໜືອເມືອງໄຊເສດຖາ ນະຄອນຫຼວງວຽງຈັນ

- ທິດເໜືອຕິດກັບວັດທາດຫຼວງເໜືອ
- ທິດໃຕ້ຕິດກັບວັດທາດຫຼວງໃຕ້
- ທິດຕາເວັນອອກຕິດກັບຫ້ອງການໄປສະນີທາດຫຼວງ
- ທິດຕາເວັນອອກສຽງເໜືອຕິດກັບ ຮ້ານອາຫານລາວ-ຫຼວງພະບາງ
- ທິດຕາເວັນຕົກຕິດກັບວັດທາດຫຼວງ
- ທິດຕາເວັນຕົກສຽງເໜືອຕິດກັບທຳມະສະພາ

## 3. ປະຫວັດການສ້າງຕັ້ງຂອງພະທາດຫຼວງ.



**ຮູບການກໍ່ສ້າງພະທາດຫຼວງ (ນໍາພາໂດຍເຈົ້າໄຊຍະເສດທາທິລາດ)**

ເມື່ອເຈົ້າ ໂພທິສະລາດ ໄດ້ສິ້ນພະຊົນ (ເສຍຊີວິດ) ແລ້ວ, ເສນາອາມາດທັງຫຼາຍ ຈຶ່ງໄດ້ໄປອັນເຊີນເອົາ ເຈົ້າໄຊເສດຖາທິລາດ ຜູ້ເປັນໂອລົດອົງໃຫ່ຍຂອງ ເຈົ້າໂພທິສາລະລາດຂຶ້ນເປັນເຈົ້າແຜ່ນດິນອານາຈັກລາວລ້ານຊ້າງ ທີ່ນະຄອນຊຽງທອງ ໃນປີ 1550. ເຈົ້າໄຊເຊດຖາທິລາດ ຊຶ່ງມີຊື່ເດີມວ່າເຈົ້າ ເຊດຖາວັງໂສ ເປັນໂອຣົດອົງໃຫ່ຍ (ລູກກົກ) ຂອງເຈົ້າໂພທິສາຣາດ ແລະ ພະມານດາ ຊື່ ພະນາງ ຍອດຄໍາທິບ ທີ່ເປັນພະຣາຊະທິດາຂອງເຈົ້າແຜ່ນດິນຊຽງໃໝ່.

ສົມເດັດເຈົ້າ ໄຊເຊດຖາທິລາດ ປະສູດໃນປີມະເມຍ. ເດືອນອ້າຍ, ແຮມ 9 ຄໍ່າ, ເວລາທ່ຽງ, ປີ 1534 ເມື່ອເຈົ້າໄຊເຊດຖາມີພະຊົນອາຍຸໄດ້ 14 ປີ ພະລາຊະບິດາ (ເຈົ້າ ໂພທິສະຣາດ) ໄດ້ທົງອະພິສກໃຫ້ໄປ ເປັນເຈົ້າຊາຍ ແຜ່ນດິນ ຊຽງໃໝ່ ຕາມຄໍາຂໍຮ້ອງຂອງເສນາມຸນຕີ ເມືອງຊຽງໃມ່ ໃນປີ 1548, ມາເຖິງ ປີ 1550, ພາຍຫຼັງພະລາຊະບິດາ ສະເດັດສຸລະຄົດໄປແລ້ວ, ພວກເສນາອາມາດຝ່າຍ ນະຄອນຊຽງທອງ ຈຶ່ງຊົງອະພິເສກເຈົ້າ ໄຊເຊດຖາທິລາດ ຂຶ້ນເປັນເຈົ້າແຜ່ນດິນແທນ. ພະອົງໄດ້ແຕ່ງຕັ້ງພະຍາ ສີສັດທໍາມະໄຕໂລກ ໃຫ້ເປັນພະຍາ ມີນາມມະຍົດວ່າ ຈັນທະບູລີ ສີສັດທໍາມະໄຕໂລກ ຂຶ້ນນັ່ງນະຄອນວຽງຈັນ ໂດຍມີ ບັນດາເມືອງຄື: ຊຽງຄານ, ແກ່ນທ້າວ ,ໜອງແກ, ເມືອງ ນໍ້າຮຸ່ງ, ຊຽງສາ, ເມືອງ ຫ້ອຍຫຼວງ ແລະ ວຽງຄໍາ ຂຶ້ນກັບ ນະຄອນວຽງຈັນ ຢູ່ໃຕ້ການປົກຄອງຂອງ ພະຍາ ຈັນທະບູລີ.

ມາເຖິງປີ 1560 ເຈົ້າໄຊເສດຖາທິລາດ ໄດ້ພິຈາລະນາເຫັນວ່າ ນະຄອນຊຽງທອງ ເປັນເມືອງທີ່ຄັບແຄບ, ບໍ່ກ້ວາງຂວາງ ແລະ ອີກປະການໜຶ່ງ ກໍ່ຢູ່ໃນທາງເດີນຂອງພະຍາມ້າ ທີ່ກໍາລັງເປັນສັດຕູຢູ່ກັບນະຄອນສຽງທອງ, ທັງພິຈາລະນາເຫັນວ່າ, ເມືອງວຽງຈັນ ເປັນນະຄອນທີ່ໃຫຍ່ ມີເຂດທົ່ງພຽງ ທໍາມາຫາກິນຢ່າງກວ້າງຂວາງ, ອຸດົມສົມບູນໄປດ້ວຍເຂົ້າປາອາຫານສົມຄວນຈະຕັ້ງເປັນລາຊະທານີ້ໄດ ດັ່ງນັ້ນ, ພະອົງຈຶ່ງມອບເວນ ນະຄອນຊຽງທອງ ໃຫ້ພະສັງຄະເຈົ້າເຝົ້າຮັກສາພ້ອມດ້ວຍພະບາງເຈົ້າ. ສ່ວນພະອົງໄດ້ເຊີນເອົາ ພະແກ້ວມໍລະກົດ ແລະ ພະແຊກຄໍາ ກັບພະລາຊະສົມບັດທັງມວນ

ແລ້ວກໍຍົກໄພ່ພົນສ່ວນໜຶ່ງລົງມາຢູ່ນະຄອນວຽງຈັນ ແລະ ຂະໜານນາມ ນະຄອນນີ້ວ່າ: “ ນະຄອນຈັນທະບູລີ ສີສັດຕະນາຄະນະຫູດອຸດຕະມະລາຊະທານີ ” ສ່ວນນະຄອນຊຽງທອງ ນັ້ນເອີ້ນວ່າ: “ ນະຄອນຫລວງພະບາງ “ ນັບແຕ່ນັ້ນມາຍ້ອນວ່າພະບາງ ຍັງສະຖິດຢູ່ທີ່ນັ້ນ. ໃນປີນັ້ນເອງພະອົງກໍ້ໄດ້ສ້າງພະມະຫາຜາສາດລາຊະວັງຫລວງຂຶ້ນໃໝ່ພ້ອມທັງຫໍພະແກ້ວ, ພະແຊກຄໍາ ຢ່າງພິຈິດພິດສະດານ ທັງເປັນເງື່ອນໄຂອັນຈໍາເປັນພາວະວິໄສ ເພື່ອການປົກປັກຮັກສາ ແລະ ພັດທະນາປະເທດຊາດ ກໍຄືພັດທະນາ ນະຄອນຫລວງວຽງຈັນໃຫ້ຮຸ່ງເຮືອງສີວິໄລ ແລະ ເຂັ້ມແຂງໃນເວລານັ້ນ.

ເພື່ອຮັບປະກັນ ໃຫ້ແກ່ການປົກຄອງປະເທດຊາດ ແລະ ຫລີງເຫັນໄພອັນຕະລາຍຈະມາຂົ່ມຂູ່ຈາກສັດຕູພາຍນອກເປັນຕົ້ນ ແມ່ນສັກດີນາພະມ້າ, ດັ່ງນັ້ນໃນປີດຽວກັນນີ້ ຄືປີ1560 ນີ້ເອງ ເຈົ້າ ໄຊເຊດຖາທິລາດ ກໍໄດ້ຕັດສັ່ງໄພ່ຟ້າປະຊາກອນສ້າງກໍາແພງເມືອງ ແລະ ພະອົງກໍໄປສ້າງສາຍສໍາພັນທະໄມຕີກັບ ກຸງສີອະຍຸດທະຍາ. ພ້ອມດຽວກັນນັ້ນ, ພະອົງກໍໄດ້ຮ່ວມມືກັບເຈົ້າແຜ່ນດິນອະຍຸດທະຍາ ສ້າງພະທາດສີສອງຮັກ ຂຶ້ນທີ່ ເມືອງ ດ່ານຊ້າຍໃຫ້ເປັນຫລັກເຂດແດນແຫ່ງປະເທດທັງສອງ ຊຶ່ງຍັງປະກົດເຫັນຈົນເທົ້າທຸກວັນນີ້ ພະທາດສີສອງຮັກ ເລີ່ມສ້າງປີ 1560 ເຖິງ ປີ 1563 ແທກແຕ່ບ່ອນສ້າງທາດນັ້ນ ໄປເຖິງນໍ້າຂອງ ໄກທໍ່ກັນກັບໄປຫານໍ້ານ່ານ. ຕໍ່ກມາໃນປີ 1562 , ເຈົ້າໄຊເຊດຖາທິລາດໄດ້ຕັດຂໍເອົານາງ ເທບກະສັດຕີ ແຫ່ງກຸງສີອະຍຸດທະຍາມາເປັນອັກຄະມະເຫສີ ເຖິງວ່າຈະຫຍຸ້ງຍາກ ແຕ່ກໍສໍາເລັດຕາມຈຸດປະສົງ.
ກໍາແພງເມືອງວຽງຈັນບູຮານ ມີການກໍ່ສ້າງມາ ແຕ່ປີ 1560 ພາຍຫຼັງທີ່ມີການຍ້າຍນະຄອນນຫລວງ ຈາກນະຄອນຫລວງພະບາງ ມາຕັ້ງຢູ່ວຽງຈັນ ເພື່ອປ້ອງກັນການຮຸກຮານຈາກສັກດີນາຕ່າງຊາດ,ຜູ້ປົກຄອງສະໃໝ່ນັ້ນຈິ່ງມີການວາງແຜນຮັບມືກັບເຫດທີ່ຈະເກີດຂຶ້ນ ດັ່ງນັ້ນ, ກໍາແພງເມືອງຈິ່ງຖືກສ້າງ, ມີຄວາມສູງ 4 ແມັດ ກວ້າງ 3 ແມັດ , ທັງໝົດນັ້ນ ໂດຍແມ່ນຢາດເຫື່ອຂອງປະຊາຊົນລາວທຸກຄົນ.

## 4. ການບູລະນະສ້າງສາພະທາດຫຼວງ.




**ຮູບພະທາດຫຼວງວຽງຈັນ**

ພະທາດຫຼວງວຽງຈັນໄດ້ຮັບການເສີມສ້າງບູລະນະເປັນຄັ້ງທຳອິດໃນສະໄໝພະເຈົ້າໄຊຍະເສດຖາທິລາດໄດ້ທຳການບູລະນະພະພຸດທະສາສະໜາໄປຄຽງຄູ່ກັບການສ້າງສາພັດທະນາບ້ານບ້ານເມືອງ,ນອກຈາກການກໍ່ສ້າງພະລາຊະວັງ,ວັດວາອາຮາມຕ່າງໆແລ້ວພະອົງຍັງປະຕິສັງຂອນພະທາດຫຼວງເຊິ່ງເປັນທາດເຈດີເກົ່າແກ່ສ້າງຂຶ້ນສະໄໝພະຍາຈັນທະບູຣີກະສັດອົງທະອິດຜູ້ສ້າງຕັ້ງເມືອງວຽງຈັນ ແລະ ໄດ້ກໍ່ທາດເຈດີບັນຈຸພະສາລີລິກທາດ ຂອງພະພຸດທະເຈົ້າໄວ້ (ກະດູກຫົວເຫນົ່າ) ປະມານ ພ.ສ 203 ຫຼື ປະມານກ່ອນ ຄ.ສ 310 ປີ ພະທາດເຈດີອົງເດີມນັ້ນເປັນພະທາດຂະໜາດນ້ອຍ ກໍ່ດ້ວຍດິນຈີ່ຕັ້ງຢູ່ແຄມບຶງທາດຫຼວງດ້ານຕາເວັນຕົກ; ເວລາຜ່ານໄປ 1840 ປີ ຄື ຄ.ສ 1560 ເຈົ້າໄຊຍະເສດຖາທິລາດ ໄດ້ທຳການເສີມສ້າງພະທາດເຈດີອົງນີ້ໃຫ້ສູງຂຶ້ນໃຫຍ່ຂຶ້ນຕື່ມໂດຍກໍ່ພະທາດອົງໃໝ່ກວມພະທາດອົງເກົ່າຮູບລັກສະນະຂອງພະທາດຫລວງ ທີ່ສ້າງຂຶ້ນໃໝ່ນີ້ ເປັນຮູບສີ່ຫຼ່ຽມຈະຕຸລັດ ຖານຫລືແທ່ນຂອງອົງພະທາດກວ້າງ ປະມານ 69 ແມັດ ຢູ່ເທິງແທ່ນແບ່ງເປັນສາມຖານດັ່ງນີ້: ຖ້ານລຸ່ມສຸດເປັນກຳແພງ ມີໃບສີມາອ້ອມທັງສີ່ທິດລວມມີ 323 ໃບ, ມີຫໍໄຫວ້ຢູ່ເຄິ່ງກາງຂອງແຕ່ລະດ້ານທີ່ຫໍໄຫວ້ແຕ່ຫລັງມີບັນໄດຂຶ້ນໄປຫາຫໍໄຫວ້, ມີປະຕູຂຶ້ນໄປຫາຖ້ານທີ່ສອງ. ຖ້ານທີ່ສອງກ້ວາງດ້ານລະ 48 ແມັດ, ອ້ອມຮອບດ້ວຍກາບດອກບົວໃຫຍ່ລວມມີ 120 ກາບ, ຕໍ່ຈາກກາບດອກບົວຂຶ້ນໄປມີໃບເສມານ້ອຍທີ່ມີຊອງຢູ່ເຄິ່ງກາງລວມມີ 228 ໃບ ມີປະຕູໂຂງສຳລັບ ເຂົ້າໄປຖ້ານທີສາມ. ຖ້ານທີສາມເປັນທີ່ຕັ້ງຂອງເຕົ້າພະທາດຊຶ່ງມີລັກສະນະເປັນຮູບໂອຂວ້ຳ ແຕ່ດັດເປັນຮູບສີ່ຫລ່ຽມ ອັນເປັນເອກະລັກສະເພາະຂອງສິລະປະລາວ. ມີພະທາດນ້ອຍຍ້ອມເຕົ້າທາດ ທັງສີ່ດ້ານລວມມີ 30 ທາດເອີ້ນວ່າບາຣະມີ 30 ທັດ. ຕໍ່ຈາກເຕົ້າທາດຂຶ້ນໄປ ມີກາບບົວບານອ້ອມຮອບ. ຢອງຢູ່ເທິງກາບບົວບານນັ້ນແມ່ນສ່ວນປາຍຂອງພະທາດເປັນຮູບໝາກເບັງ ດັດເປັນສີ່ຫລ່ຽມສູງຮຽວ, ຕໍ່ຈາກປາຍທາດຂຶ້ນໄປແມ່ນຍອດທາດເປັນໂລຫະລໍ່ຊົງກົມມີເສດຕະສັດຢູ່ເທິງສຸດ. ອົງພະທາດນີ້ ມີຄວາມສູງ 45 ແມັດ, ຢູ່ອ້ອມແທ່ນພະທາດມີເດີນກ້ວາງປະມານ 8 ແມັດ, ຕໍ່ຈາກເດີນກໍແມ່ນກົມມະລຽນ ອ້ອມທັງສີ່ດ້ານ ແຕ່ລະດ້ານກ້ວາງ 91 , 75 ແມັດ. ( ປະຫວັດ ສາດລາວ.2000: 188 – 189 )

# ພະທາດອິງຮັງ

## 1. ສະພາບລວມຂອງແຂວງສະຫວັນນະເຂດ.

ແຂວງສະຫວັນນະເຂດແມ່ນໜຶ່ງແຂວງໃນຈຳນວນ 18 ແຂວງໃນສປປລາວ ເປັນແຂວງທີ່ຕັ້ງຢູ່ເຂດພາກກາງຂອງປະເທດປະກອບມີ 15 ຕົວເມືອງ, ເປັນແຂວງທີ່ມີເນື້ອທີ່ກ້ວາງໃຫຍ່ກວ່າໝູ່ໃນປະເທດລາວຄືມີເນື້ອທີ່ປະມານ 21774 $km^2$ ມີຂອບເຂດຊາຍແດນຕິດຈອດກັບແຂວງ ແລະ ປະເທດໃກ້ຄຽງຄື:

- ທິດເໜືອຕິດກັບແຂວງຄຳມ່ວນຍາວເຖິງ 314 ກມ.
- ທິດໃຕ້ຕິດກັບແຂວງສາລະວັນຍາວເຖິງ 259 ກມ.
- ທິດຕາເວັນອອກຕິດກັບ ສາທາລະນະລັດສັງຄົມນິຍົມຫວຽດນາມ ຍາວເຖິງ 122 ກມ.
- ທິດຕາເວັນຕົກຕິດກັບ ລາຊະອານາຈັກໄທຍາວເຖິງ 152 ກມ.

ແຂວງສະຫວັນນະເຂດໄດ້ແບ່ງອອກເປັນສອງເຂດຄື: ເຂດທົ່ງພຽງກວມ 59% ແລະ ເຂດພູພຽງ 41% (ແບ່ງຕາມລະດັບຄວາມສູງຈາກໜ້ານ້ຳທະເລ), ເຂດທົ່ງພຽງແບ່ງອອກເປັນສອງເຂດຄື: ເຂດທົ່ງພຽງສ່ວນທີ່ລຽບຕາມແຄມແມ່ນ້ຳຂອງກວມເອົາ 6 ເມືອງຄື: ເມືອງໄຊບູລີ, ເມືອງໄກສອນພົມວິຫານ, ເມືອງໄຊພູທອງ ແລະ ເມືອງສອງຄອນ. ເປັນເຂດທີ່ອຸດົມສົມບູນໄປດ້ວຍເຂົ້າປາອາຫານເປັນແຫຼ່ງຜະລິດເຂົ້າ, ພືດຕະກູນຖົ່ວ ແລະ ລ້ຽງສັດ (ສັດປີກ, ສັດໃຫຍ່ ແລະ ປາ), ເຊິ່ງມີລະດັບຄວາມສູງຈາກລະດັບໜ້ານ້ຳທະເລ 140-180ມ. ສ່ວນເຂດທົ່ງພຽງທີ່ຕັ້ງອຢູ່ລະຫວ່າງກາງເຂດພູພຽງກັບທົ່ງພຽງລຽບນ້ຳຂອງນັ້ນກວມເອົາ 6 ເມືອງຄື: ເມືອງອຸທຸມພອນ, ເມືອງອາດສະພັງທອງ, ເມືອງພະລານໄຊ, ເມືອງອາດສະພອນ, ເມືອງຈຳພອນ ແລະ ຊົນບູລີ. ເຂດນີ້ເປັນເຂດປູກເຂົ້າ, ປູກພືດອຸດສາຫະກຳ ແລະ ລ້ຽງສັດໃຫຍ່ (ງົວຄວາຍ) ສູງກວ່າລະດັບໜ້ານ້ຳທະເລ 180-200ມ. ສ່ວນວ່າເຂດພູພຽງກວມເອົາ 5 ເມືອງຄື: ເມືອງນອງ, ເມືອງເຊໂປນ, ເມືອງວິລະ, ເມືອງພີນ ແລະ ເມືອງທ່າປາງທອງ. ເປັນເຂດທີ່ເໝາະແກ່ການປູກພືດໃຫ້ໝາກ, ພືດອຸດສາຫະກຳ ແລະ ລ້ຽງສັດໃຫຍ່ທຸກປະເພດ. ເຂດນີ້ມີຄວາມສູງຈາກລະດັບໜ້ານ້ຳທະເລປະມານແຕ່200-1000ມ.

ການປົກຄອງແບ່ງອອກເປັນ 15 ຕົວເມືອງ, ປະກອບມີ 1016 ບ້ານ, 168 ກຸ່ມບ້ານມີປະຊາກອນປະມານ 886.985 ຄົນ, ຍິງ 450.100 ຄົນ. ອັດຕາການເພີ່ມປີລະ 1,7% ຕໍ່ປີ, ຄວາມໜາແໜ້ນສະເລ່ຍ 41-44 ຄົນ/ກິໂລຕາແມັດ. ປະກອບດ້ວຍ 2 ຊົນເຜົ່າຄື: ເຜົ່າລາວລຸ່ມ ແລະ ເຜົ່າລາວເທິງ. ແຂວງສະຫວັນນະເຂດເປັນແຂວງທີ່ມີປະຫວັດຄວາມເປັນມາອັນຍາວນານພໍສົມຄວນ ແລະ ເຄີຍເປັນບ່ອນຮຸ່ງເຮືອງ, ມີຄວາມຈະເລີນທາງດ້ານສັງຄົມ ແລະ ວັດທະນະທຳມາແຕ່ບູຮານເຊິ່ງມັນສະແດງອອກໃຫ້ເຫັນຈະແຈ້ງໃນການກໍ່ສ້າງວັດຖຸບູຮານ ຫຼື ສະຖານບູຮານຕ່າງໆເຊັ່ນ: ຫໍໄຕປີດົກ (ເມືອງຈຳພອນ), ເຮືອນຫີນ, ພະທາດໂພ່ນ (ເມືອງໄຊພູທອງ) ແລະ ຍັງມີຫຼາຍສະຖານທີ່ທີ່ໂດດເດັ່ນຍັງຢາຍຕາມເມືອງຕ່າງໆຂອງແຂວງສະຫວັນນະເຂດໃນນັ້ນເດັ່ນກວ່າໝູ່ແມ່ນ ພະທາດອິງຮັງ (ເມືອງໄກສອນພົມວິຫານ). ເຊິ່ງທາດອິງຮັງໄດ້ກາຍກາຍເປັນເອກະລັກຂອງຊາວແຂວງສະຫວັນນະເຂດ.




**ຮູບພາບທີ1 ແຜ່ນທີ່ແຂວງສະຫວັນນະເຂດ**

## 2. ສະພາບປະຫວັດສາດໄລຍະກ່ອນການສ້າງຕັ້ງພະທາດອີງຮັງ.

ຂົງເຂດປະເທດລາວພາກກາງເວົ້າລວມ ເວົ້າສະເພາະແມ່ນຂອບເຂດແຂວງສະຫວັນນະເຂດໃນປັດຈຸບັນ. ແຕ່ກ່ອນຂົງເຂດນີ້ເອີ້ນວ່າ: ສຸວັນນະພູມປະເທດເຊິ່ງໝາຍເຖິງຂົງເຂດທີ່ມີຄວາມອຸດົມສົມບູນໂດຍສະເພາະແມ່ນຊັບພະຍາກອນທາງທໍາມະຊາດຂົງເຂດນີ້ແມ່ນດິນແດນຂອງນະຄອນ ຫຼື ແຄວ້ນສີໂຄດຕະບອງ ຫຼື ສີໂຄດຕະບູນທີ່ມີຄວາມຈະເລີນຮຸ່ງເຮືອງໃນເວລານັ້ນໂດຍການປົກຄອງຂອງພະຍາສຸມິດຕະທໍາມະວົງສາ.

ອານາຈັກສີໂຄດຕະບອງແມ່ນອານາຈັກໜຶ່ງທີ່ເກົ່າແກ່ຂອງລາວມີສູນກາງທໍາອິດຕັ້ງຢູ່ລ່ອງແມ່ນໍ້າເຊບັ້ງໄຟ(ນັບແຕ່ປາກແມ່ນໍ້າເຂົ້າໄປເຖິງ 15 ກມ). ໄລຍະຕໍ່ມາອານາຈັກສີໂຄດຕະບອງມີອານາເຂດກວ້າງຂວາງກວມເອົາທັງສອງຝັ່ງແມ່ນໍ້າຂອງແຕ່ວຽງຈັນລົງຮອດຫຼີ່ຜີ, ທາງທິດຕາເວັນຕົກ(ຝັ່ງຂວາແມ່ນໍ້າຂອງ) ກວມເອົາຫຼາຍແຂວງທາງພາກຕາເວັນອອກຂອງໄທມີຊາຍແດນຕິດກັບອານາຈັກທາຣາວະດີ, ທິດຕາເວັນອອກຕິດກັບອານາຈັກຈໍາປາ(ຈາມ). ຊົນເຜົ່າເດີມທີ່ເປັນເຈົ້າຂອງອານາຈັກນີ້ແມ່ນ ຊົນເຜົ່າລະວາ (ລາວເດີມ).

ຄຳວ່າ: ສີໂຄດຕະບອງ ແມ່ນໄດ້ມາຈາກຄຳວ່າ: ໂຄຕະປຸຣະ ແປວ່າເມືອງທາງທິດຕາເວັນອອກ. ເຊິ່ງກຳເນີດຂຶ້ນໃນສະຕະວັດທີ I ກ່ອນ ຄ.ສ ຈາກນັ້ນໄດ້ປ່ຽນມາເປັນ ອານາຈັກສີໂຄດຕະບູນ ແລ້ວຈິ່ງກາຍມາເປັນ ອານາຈັກສີໂຄດຕະບອງໃນເວລາຕໍ່ມາ.

ມາເຖິງສະຕະວັດທີ III ອານາຈັກສີໂຄດຕະບອງໄດ້ຕົກຢູ່ໃຕ້ອຳນາດຂອງພວກຂອມແຫ່ງອານາຈັກຟູນັນທີ່ມີສູນກາງຕັ້ງຢູ່ສາມລ່ຽມປາກແມ່ນ້ຳຂອງ ໄດ້ມີຄວາມເຂັ້ມແຂງ ແລະ ໄດ້ແຜ່ອຳນາດເອົາບັນດາອານາຈັກອ້ອມຂ້າງ.

ມາຮອດຕົ້ນສະຕະວັດທີ VI ອານາຈັກຟູນັນຊຸດໂຊມ ເມືອງສີໂຄດຕະບອງຈິ່ງແຍກຕົວອອກເປັນເອກະລາດແລະປັບປຸງອຳນາດໃຫ້ມີຄວາມເຂັ້ມແຂງເຊິ່ງມີອານາເຂດກວ້າງຂວາງກວ່າເກົ່າອີກ.

ອານາຈັກສີໂຄດຕະບອງພາຍໃຕ້ການປົກຄອງຂອງພະຍາສຸມິດຕະທຳມະວົງສາມີອານາເຂດກວ້າງຂວາງກວມເອົາ 17 ຫົວເມືອງ.

1. ເມືອງ ວຽງຈັນ.
2. ເມືອງ ວຽງຄຳ. (ເຂດວຽງແກ້ວ, ວຽງຄຳແຂວງວຽງຈັນໃນປັດຈຸບັນ)
3. ເມືອງ ພະນ້ຳຮຸ່ງ. (ປາກຊັນ)
4. ເມືອງ ສີໂຄດ. (ຄຳມ່ວນ)
5. ເມືອງ ສາມແທ. (ປາກເຊບັ້ງໄຟ)
6. ເມືອງ ຈຳປານະຄະລີ. (ຈຳປາສັກ)
7. ເມືອງ ຕະບອງ. (ອຸບົນປະເທດໄທປັດຈຸບັນ)
8. ເມືອງ ຕະເນນ. (ສະຫວັນນະເຂດ)
9. ເມືອງ ຟ້າແດດ. (ກາລະສິນປະເທດໄທປັດຈຸບັນ)
10. ເມືອງ ພູພານ. (ອຸດອນປະເທດໄທປັດຈຸບັນ)
11. ເມືອງ ບົວບອນ. (ໜອງຄາຍປະເທດໄທປັດຈຸບັນ)
12. ເມືອງ ໜອງຫານຫຼວງ.(ສະກົນນະຄອນປະເທດໄທປັດຈຸບັນ)
13. ເມືອງ ໜອງຫານນ້ອຍ. (ອຸດອນປະເທດໄທປັດຈຸບັນ)
14. ເມືອງ ສີແກ້ວ. (ມະຫາສາລະຄາມປະເທດໄທປັດຈຸບັນ)
15. ເມືອງ ຊຽງຫຽນ. (ມະຫາສາລະຄາມປະເທດໄທປັດຈຸບັນ)
16. ເມືອງ ຮ້ອຍເອັດປະຕູ. (ຈັງຫວັດຮ້ອຍເອັດປະເທດໄທປັດຈຸບັນ)
17. ເມືອງ ມະລຸກຂະນະຄອນ. (ນະຄອນພະນົມປະເທດໄທປັດຈຸບັນ)

ນອກຈາກຄວາມເຂັ້ມແຂງທາງດ້ານການເມືອງ, ການປົກຄອງແລ້ວ ປະຊາຊົນກໍຢູ່ເຢັນເປັນສຸກພະຍາສຸມິດຕະທຳມະວົງສາ ໄດ້ນຳພາປະຊາຊົນສ້າງພະທາດພະນົມ ແລະ ທາດອີງຮັງ ເພື່ອລະນຶກ ແລະ ສັນຍາລັກໄວ້ກ່ຽວກັບການມາເຜີຍແຜ່ພຸດທະສາສະໜາຂອງພະພຸດທະເຈົ້າໃນດິນແດນຂອງອານາຈັກສີໂຄດຕະບອງ.




**ຮູບທີ2 ທີ່ຕັ້ງຂອງເມືອງສີໂຄດຕະບອງ**

## 3. ປະຫວັດການສ້າງພະທາດອິງຮັງ.

ພະທາດອິງຮັງແມ່ນໄດ້ຖືກສ້າງຂຶ້ນໂດຍພະເຈົ້າສຸມິດຕະທຳມະວົງສາເມື່ອປະມານ ພ.ສ 400 (ກ່ອນຄ.ສ 443) ໄດ້ສ້າງກວມຕໍໄມ້ຮັງ, ສະຖານທີ່ທີ່ພະພຸດທະເຈົ້າເຈົ້າສະເດັດປະທັບກ່ອນສະເດັດປະລິນິພານທີ່ປະເທດອິນເດຍ.

### 3.1 ປະຫວັດພະພຸດທະເຈົ້າ.

ພະພຸດທະເຈົ້າມີຊື່ເດີມວ່າ “ ສິທັດຖະ ” ໝາຍເຖິງຜູ້ທີ່ສຳເລັດຄວາມມຸ້ງໝາຍ ຫຼື ຜູ້ທີ່ປາຖາໜາສິ່ງໃດຍ່ອມໄດ້ສິ່ງນັ້ນ. ເພິ່ນເປັນລາຊະໂອລົດຂອງພະເຈົ້າສຸດໂທທະນະ ພະຍາຜູ້ປົກຄອງເມືອງກະບິນລະພັດ ແຄວ້ນສັກກະ ແລະ ພະນາງສີລິມະຫາມາຍາພະລາຊະທິດາຂອງກະສັດລາຊະກຸນໂກລິຍະວົງແຫ່ງກຸງເທວະທະ ແຄວ້ນໂກລິຍະ.

ທັນທີທີ່ປະສູດເຈົ້າຊາຍສິທັດຖະ ກໍຊົງຍ່າງດ້ວຍພະບາດ 7 ກ້າວ ແລະ ມີດອກບົວພົ້ນຂຶ້ນມາຮອງຮັບພະບາດພ້ອມເປັ່ງພະວາຈາວ່າ ເຮົາເປັນເລີດທີ່ສຸດໃນໂລກ, ປະເສີດທີ່ສຸດໃນໂລກການເກີດຄັ້ງນີ້ເປັນຄັ້ງສຸດທ້າຍຂອງເຮົາ. ແຕ່ພາຍຫຼັງທີ່ເຈົ້າຊາຍສິທັດຖະປະສູດໄດ້ 7 ວັນ, ພະນາງສີລິມະຫາມາຍາກໍສະເດັດສະຫວັນຄາໄລ. ເຈົ້າຊາຍສິທັດຖະ ຈິ່ງຢູ່ໃນຄວາມດູແລຂອງພະນາງປະຊາບໍດີໂຄຕະມີ ເຊິ່ງເປັນນ້ອງຂອງພະນາງ ສີລິມະຫາມາຍາ.ເຈົ້າຊາຍສິທັດຖະໄດ້ສຶກສາ

ຮ່ຳຮຽນສີລະປະສາດທັງ 18 ສາດໃນສຳນັກຄູ. ເນື່ອງຈາກພະບິດາບໍ່ປະສົງໃຫ້ເຈົ້າຊາຍສິທັດຖະເປັນສາສະດາເອກຂອງໂລກຈິ່ງພະຍາຍາມເຮັດໃຫ້ລູກພົມເຫັນແຕ່ຄວາມສຸກໂດຍການສ້າງປະສາດ ສາມລະດູ ໃຫ້ປະທັບຢູ່ ແລະ ຈັດຕຽມຄວາມພ້ອມສຳລັບການອະພິເສກໃຫ້ເຈົ້າຊາຍຂຶ້ນຄອງລາດ. ເມື່ອພະອົງມີອາຍຸ 16 ພັນສາກໍຊົງອະພິເສກສົມລົດກັບພະນາງ ພິມພາ ຫຼື ຍະໂສທະຣາ ພະທິດາຂອງພະເຈົ້າກຸງເທວະທະຫະ ເຊິ່ງເປັນຍາດຕິທາງພະມານດາ. ເມື່ອພະຊົນອາຍຸ 29 ພັນສາ ພະນາງພິມພາໄດ້ປະສູດລາຊະໂອລົດມີພະນາມວ່າ ລາຫຸນເຊິ່ງມີຄວາມໝາຍວ່າ: “ ບ່ວງ ”.

❖ **ການອອກບວດ.**

ວັນໜຶ່ງເຈົ້າຊາຍສິທັດຖະມີຄວາມເບື່ອໜ່າຍຈຳເຈໃນປະສາດສາມລະດູຈິ່ງຊວນເອົາໄພ່ນັ່ງລົດມ້າອອກໄປເດີນຊົມສວນອຸທິຍານຄັ້ງນັ້ນໄດ້ທອດພະເນດເຫັນຄົນແກ່, ຄົນເຈັບ, ຄົນຕາຍໂດຍມີເທວະທູດ(ທູດສະຫວັນ)ທີ່ແປງກາຍລົງມາ. ພະອົງຄິດວ່າ: ນີ້ເປັນທຳມະຊາດຂອງໂລກຊີວິດຂອງທຸກຄົນຕ້ອງຕົກຢູ່ໃນສະພາບຄືດັ່ງນັ້ນບໍ່ມີໃຜຫຼີກລ້ຽງການເກີດ, ການແກ່, ເຈັບ ແລະ ຕາຍໄດ້ຈິງເຫັນຄວາມສຸກທາງໂລກເປັນພຽງພາບມາຍາເທົ່ານັ້ນ ແລະ ວິທີທາງທີ່ຈະພົ້ນຈາກທຸກຄືຕ້ອງຄອງເຮືອນເປັນສົມມະນະ ດັ່ງນັ້ນ ພະອົງຈິ່ງຄິດຈະສະເດັດອອກບັນພະຊາໃນຂະນະທີ່ພະຊົນອາຍຸໄດ້ 29 ພັນສາ.

ພາຍຫຼັງທີ່ອອກບວດແລ້ວພະອົງໄດ້ສະແຫວງຫາວິທີເພື່ອໃຫ້ພົ້ນຈາກທຸກດ້ວຍການທົດລອງຕ່າງໆໂດຍສະເພາະການບຳເພັນພາວະນາໄດ້ 6 ປີຈິ່ງຄິດໄດ້ວ່ານີ້ບໍ່ແມ່ນວິທີທີ່ຈະເຮັດໃຫ້ພົ້ນທຸກ. ພະອົງໄດ້ນັ່ງຂັດສະມາທິໃຕ້ຕົ້ນໂພທີ່ເມືອງພະລານະສີ ຫັນພະພັກໄປທາງທິດຕາເວັນອອກ ແລະ ຕັ້ງຈິດອະທິຖານວ່າ ຕາບໃດທີ່ຍັງບໍ່ທັນບັນລຸສຳມາສຳໂພທິພານກໍຈະບໍ່ລຸກຂຶ້ນຈາກສະມາທິ ແລະ ຕໍ່ມາພະອົງຈິ່ງສຳເລັດ ຫຼື ບັນລຸຕາມປະສົງດັ່ງກ່າວ ແລະ ພະພຸດທະເຈົ້າ ຫຼື ເຈົ້າຊາຍສິທັດຖະກໍອອກເຜີຍແຜ່ພຸດທະສາສະໜາໂດຍການເທດສະໜາໃຫ້ຄົນ ແລະ ກຸ່ມຄົນຟັງ.



**ຮູບທີ3: ພະພຸດທະເຈົ້າ ປະສູດ, ອອກບວດ ແລະ ປະລິນິພານຕາມລຳດັບຈາກຊ້າຍຫາຂວາ**

❖ **ພະພຸດທະເຈົ້າ ແລະ ພຸດທະສາສະໜາເຂົ້າສູ່ປະເທດລາວ.**

ສໍາລັບການເຂົ້າມາສະແຫວງບຸນຂອງພະພຸດທະເຈົ້າໃນຂົງເຂດທີ່ເອີ້ນວ່າ ສຸວັນນະພູມນີ້ແມ່ນຢູ່ໃນສະໄໝສີໂຄດຕະບອງມີຄວາມຈະເລີນຮຸ່ງເຮືອງທີ່ສຸດ ແລະ ພະພຸດທະເຈົ້າກໍເຂົ້າມາບິນທະບາດໃນຂົງເຂດຕ່າງໆຂອງສຸວັນນະພູມອັນທີ່ເປັນສິ່ງສະແດງວ່າພະພຸດທະເຈົ້າເຂົ້າມາໃນດິນແດນສຸວັນນະພູມນີ້ໄດ້ແກ່ຮອຍພະບາດ(ຮອຍຕີນ)ຂອງພະພຸດທະເຈົ້າແຕ່ຄົນສ່ວຍຫຼາຍມັກຮ້ອງວ່າ ຮອຍພະບາດ ແລະ ໃນຂົງເຂດປະເທດລາວໃນປັດຈຸບັນກໍຍັງປາກົດມີຢູ່ໃນຫຼາຍຂົງເຂດຄື: ຮອຍພະບາດ(ຢູ່ເມືອງທ່າພະບາດແຂວງບໍລິຄໍາໄຊ), ຮອຍພະບາດ(ຢູ່ບ້ານນາດູເມືອງນະຄອນເພັງແຂວງສາລະວັນ) ແລະ ແຫ່ງອື່ນໆອີກ.

ເລື່ອງພະພຸດທະສາສະໜາເຂົ້າສູ່ປະເທດລາວນັ້ນສ່ວນຫຼາຍເຮົາກໍສາມາດກ່າວລັດເອົາແຕ່ຕອນຕັ້ງອານາຈັກເປັນປຶກແຜ່ນເປັນອານາຈັກລາວລ້ານຊ້າງໂດຍ ພະເຈົ້າຟ້າຫຼ້າທໍລະນີສີສັດຕະນາຄະນະຫຸດ(ເຈົ້າຟ້າງຸ່ມ) ແລ້ວພະອົງໄດ້ນໍາເອົາພຸດທະສາສະໜາເຖລະວາດມາສູ່ປະເທດລາວເຮົາເທົ່ານັ້ນ. ແຕ່ເຖິງຢ່າງໃດກໍຕາມຖ້າເຮົາສຶກສາໂດຍລະອຽດແລ້ວເຮົາຈະຮູ້ວ່າພຸດທະສາສະໜາໄດ້ເຂົ້າສູ່ປະເທດລາວແຕ່ 2000 ກວ່າປີມາແລ້ວແຕ່ເຮົາບໍ່ຄ່ອຍຈະກ່າວເຖິງເພາະບໍ່ຄ່ອຍມີຫຼັກຖານທາງບູຮານຄະດີໃຫ້ເປັນທີ່ຍອມຮັບຂອງນັກປະຫວັດສາດສະໄໝໃໝ່, ຄົນສະໄໝໃໝ່ຈະເຊື່ອແຕ່ສິ່ງທີເຂົາຮູ້ເຫັນສໍາຜັດໄດ້ດ້ວຍປະສາດທັງຫ້າປະກອບດ້ວຍເຄື່ອງມືວິທະຍາສາດສະໄໝໃໝ່ເທົ່ານັ້ນ.

ອັນທີ່ຈິງກ່ຽວກັບບູຮານຄະດີນັ້ນຖ້າຫາກວ່າໃນລາວເຮົາມີຄວາມພຽນພະຍາຍາມຢ່າງຈິງຈັງເຮົາອາດໄດ້ຫຼັກຖານມາຢັ້ງຢືນແນ່ນອນເຊິ່ງຕອນນີ້ເຮົາກໍໄດ້ພົບພະພຸດທະຮູບເກົ່າແກ່ທີ່ຢູ່ໃນຖໍ້າ ແລະ ທີ່ໂຜ່ພົ້ນຂຶ້ນຈາກໜ້າດິນເປັນທີ່ໜ້າອັດສະຈັນເຊັ່ນປະກົດໃນທີ່ຕ່າງໆ. ຈາກຫຼັກຖານເຫຼົ່ານີ້ກໍຈະເຫັນໄດ້ວ່າພະພຸດທະສາສະໜາໄດ້ຈະເລີນຮຸ່ງເຮືອງມາກ່ອນແລ້ວໃນລ່ອງແມ່ນໍ້າຂອງແຖບບໍລິເວນແຄວັນສີໂຄດຕະບອງນີ້.

### 3.2 ທີ່ຕັ້ງຂອບເຂດເນື້ອທີ່ພະທາດອິງຮັງ.

ພະທາດອິງຮັງຕັ້ງຢູ່ ແຂວງສະຫວັນນະເຂດ, ເມືອງໄກສອນ ພົມວິຫານ ແລະ ບ້ານທາດອິງຮັງ.

- ທິດເໜືອຕິດກັບປ່າສະຫງວນໜອງຫຼົ່ມ.
- ທິດໃຕ້ຕິດກັບບ້ານດົງໝາກຢາງ.
- ທິດຕາເວັນອອກຕິດກັບບ້ານທາດອິງຮັງ.
- ທິດຕາເວັນຕົກຕິດກັບບ້ານດົງນາຄໍາ.
- ມີເນື້ອທີ່ທັງໝົດ 1 ເຮັກຕາ.
- ມີກົມມະລຽນທັງໝົດ 360 ອົງ.

### 3.2.1 ຄວາມຮູ້ກ່ຽວກັບພະທາດອິງຮັງ.

ພະທາດອິງຮັງເປັນປູສະນີຍະສະຖານທີ່ເກົ່າແກ່ຄູ່ບ້ານຄູ່ເມືອງຂອງຊາວລາວເວົ້າລວມ ເວົ້າສະເພາະຊາວແຂວງສະຫວັນນະເຂດຖືວ່າເປັນພະທາດອິງສັກສິດແຕ່ບູຮານນະການເກືອບຫຼາຍພັນປີມາແລ້ວ, ພະທາດອິງຮັງເປັນພະທາດທີມີຄວາມສໍາຄັນທາງປະຫວັດສາດ, ສິລະປະກໍາ ແລະ ບູຮານຄະດີລາວອີກທັງເປັນເຈດີທີ່ສັກສິດ, ເປັນທີ່ສັກກະລະບູຊາຄູ່ບ້ານຄູ່ເມືອງມາແຕ່ສະໄໝບູຮານພະທາດລູກນີ້ຕັ້ງຢູ່ພາກກາງຂອງປະເທດລາວຄືຢູ່ແຂວງສະຫວັນນະເຂດຫ່າງຈາກຕົວເມືອງໄກສອນໄປທາງທິດຕາເວັນອອກສຽງເໜືອປະມານ 15 ກມ. ຕິດກັບບ້ານທາດອິງຮັງເລີຍ. ເຊື່ອຖື

ກັນມາວ່າຕັ້ງແຕ່ບູຮານຮອດປັດຈຸບັນປະຊາຊົນບ້ານທາດອິງຮັງເປັນຜູ້ອຸປະຖາກພະທາດໂດຍກົງມາແຕ່ສະໄໝເຈົ້າໄຊຍະເສດຖາທິລາດ ປີ ຄ.ສ 1567.

ພະທາດອີງຮັງຖືກສ້າງຂຶ້ນທຳອິດແມ່ນນຳພາໂດຍ ພະຍາສຸມິຕະທຳມະວົງສາ, ຕໍ່ມາແມ່ນສະໄໝຂອມເຮືອງອຳນາດພະທາດຈຶ່ງຖືກດັດແປງ ແລະ ປະຕິສັງຂອນຕາມຄວາມເຊື່ອທາງສາສະໜາຮິນດູແຕ່ພາຍຫຼັງຂອມເຊື່ອມອຳນາດລົງຕົກມາສະໄໝເຈົ້າໄຊຍະເສດຖາທິລາດໄດ້ມາປະຕິສັງຂອນເພີ່ມເຕີມອີກ. ແຕ່ເຖິງຢ່າງໃດກໍດີຫຼັກຖານທາງປະຫວັດສາດ່ງວກັບການສ້າງພະທາດອີງຮັງຍັງຂາດວັກຂາດຕອນຍັງບໍ່ມີຂໍ້ມູນອັນຈະແຈ້ງ.

### 3.2.2 ຫຼັກຖານຕາມຕຳນານ.

ຕຳນານພະທາດອີງຮັງຕິດພັນກັບຕຳນານອຸລັງຄະທາດມາຕະຫຼອດທີ່ອ້າງເຖິງຄວາມເກົ່າແກ່ຂອງພະທາດຄືສ້າງໃນປະມາ 8 ປີ ຫຼັງຈາກທີພະພຸດທະເຈົ້າສະເດັດປະລິນິພານແລ້ວຄືກ່ອນຄິດຕະສັງກາດປະມານ 204 ປີ. ເພິ່ນມີຫຼັກຖານວ່າພະໂສນະກັບພະອຸດຕະຣະສະນະມະທູດທາງພຸດທະສາສະໜາອິນເດຍໄດ້ນຳເອົາສາສະໜາພຸດມາເຜີຍແຜ່ຄັ້ງທຳອິດໃນພ.ສ 236(307 ກ່ອນ ຄ.ສ). ກ່ອນສາສະໜາພາມລັດທິຮິນດູທີ່ມີມາໃນຫຼາຍສະໄໝ. ນັບແຕ່ພະທາດເກີດໜັງສືທີ່ຢັ້ງຢືນຄວາມເປັນມາຂອງທາດອີງນີ້ໄດ້ແກ່ຕຳນານອຸລັງຄະທາດທີ່ເຫັນວ່າພໍເປັນຫຼັກຖານທາງຕຳນານ. ຕຳນານອຸລັງຄະທາດທີ່ພະເທບລັດຕະນະໂມລີ ເຈົ້າອະທິການວັດພະທາດພະນົມເອົາມາອ້າງອີງເປັນສະບັບທີ່ຈະແຈ້ງຢັ້ງຢືນເຖິງການມາເຜີຍແຜ່ພຸດທະສາສະໜາເຂົ້າມາໃນສຸວັນນະພູມກ່າວໄວ້ດັ່ງນີ້:“ ແຕ່ພະພຸດທະເຈົ້າສະເດັດປະລິນິພານໄປແລ້ວ 8 ປີປາຍ 7 ເດືອນ. ຄືເດືອນ 12 ຂຶ້ນ. ວັນພຸດ ນັກຂັນຕະຣິກຊື່ວ່າ: ກັດຕິກາຍາມນັ້ນຍັງມີ ພະກັດສະປະເຈົ້າ ແລະ ພະອໍລະຫັນ 500 ເປັນປະທານ ...” ຍັງຢັ້ງຢືນວ່າພະພຸດທະສາສະໜາໄດ້ເຜີຍແຜ່ເຂົ້າມາດິນແດນສຸວັນນະພູມຄັ້ງທຳອິດກ່ອນຄິດຕະການ 534 ປີ.

ໃນບັນດາຕຳນານພະທາດອີງຮັງທີ່ຄັດຈ້ອນອອກມາຈາກຕຳນານອຸລັງຄະທາດນັ້ນເຫັນວ່າມີຫຼາຍສະບັບເຊັ່ນ: ຕຳນານອຸລັງຄະທາດສະບັບພິດສະດານ, ຕຳນານພະທາດອີງຮັງຄັດຈາກຕຳນານອຸລັງຄະທາດຂອງອາຈານ ມະຫາຕຸ້ມ ສີບັບຜາເລື່ອງຕຳນານພະທາດອີງຮັງແຂວງສະຫວັນນະເຂດ ແລະ ພະທາດອີງອື່ນໆໃນສອງຝັ່ງແມ່ນ້ຳຂອງດັ່ງນີ້: ພະອໍລະຫັນທັງສາມເປັນສິດສານຸສິດຂອງພະມະຫາກັດສະປະເຖຣະເຈົ້າປູກສິດທັງສາມໃຫ້ເປັນລາສະທາຍາດໄວ້ເພື່ອສືບທອດເຜີຍແຜ່ພຸດສາສະໜາໃນບັນດາປະເທດສຸວັນນະພູມ ພະອໍລະຫັນທັງສາມຖືກສົ່ງມາຈາກກຸງ ລາຊະຄື ປະເທດອິນເດຍ ມາຢູ່ເມືອງສຸວັນນະພູມໄດ້ແກ່ເມືອງ ຈັນທະບູລີ(ນະຄອນຫຼວງວຽງຈັນປັດຈຸບັນ).

**ພະອໍລະຫັນທັງສາມມີພະນາມວ່າ**

1. ພະມະຫາພຸດທະລັກຂິຕະ ນຳເອົາເຈົ້າລັດຕະນະກຸມມານ ແລະ ເຈົ້າຈຸນລະລັດຕະນະກຸມມານສອງອ້າຍນ້ອງທີ່ເມືອງອິນທະປະຖານະຄອນປະເທດກຳປູເຈຍປັດຈຸບັນ. ມາບວດແລ້ວໄປຢູ່ແຄມເມືອງຟາກຝັ່ງແມ່ນ້ຳຂອງທີ່ທ່າຫໍແພ ສາມະເນນເຊື້ອເຈົ້າເມືອງຂະເໜນ ໄດ້ຮຽນວິປັດສະນາກຳມະຖານໂດຍໝື່ນກາງໂຮງເປັນຜູ້ອຸປະຖາກ(ພໍ່ອອກຄ້ຳ).

2. ພະມະຫາທຳມະລັກຂິຕະ ນຳເອົາເຈົ້າສຸວັນນະຜາສາດກຸມມານ ແລະ ເຈົ້າຈຸນລະສຸວັນນະຜາສາດກຸມມານສອງອ້າຍນ້ອງທີ່ເປັນເຊື້ອເຈົ້າ ເມືອງຈຸນລະນີ ພົມມະທັດ ມາບວດຮຽນວິປັດສະນາກຳມະຖານທີ່ໂພນຈິກວຽງງິວໃຕ້ຫ້ວຍຄຸຄຳໂດຍໝື່ນກາງໂຮງເປັນຜູ້ອຸປະຖາກ.

3. ພະມະຫາສັງຄະລັກຂິຕະ ນຳເອົາເຈົ້າສັງວິດຊະກຸມມານທີ່ເມືອງຫຼ້າໜອງຄາຍມາບວດຮຽນວິປັດສະນາກຳມະຖານໂດຍແມ່ນນ້ຳລ້ຽງ, ແມ່ນິມເປັນຜູ້ອຸປະຖາກ (ແມ່ອອກຄ້ຳ).

ສາມະເນນທັງ 5 ເມື່ອຮຽນວິປັດສະນາກຳມະຖານນຳພະອາຈານທັງສາມຢ່າງຕໍ່ເນື່ອງລຽນຕິດແລ້ວຄັນອາຍຸເຖິງກະສຽນອຸປະສົມບົດ(ຊາວເອັດພັນສາ 21 ປີ) ເປັນພິຊຸແລ້ວກໍໄດ້ສຳເລັດເປັນພະອໍລະຫັນທັງ 5 ອົງພະອາຈານທັງສາມຈິ່ງໄດ້ນຳເອົາສານຸສິດທັງ 5 ໄປສູ່ກຸງລາຊະຄື ເພື່ອນຳເອົາພະບໍລົມສາລີລິກະທາດຂອງພະພຸດທະເຈົ້າມີຄື:

- ພະບໍລົມມະສີລິກະທາດ 29 ອົງ
- ພະບໍລົມມະສີລິກະທາດ 7 ອົງ ແຂ້ວຝາງ
- ພະບໍລົມມະສີລິກະທາດ 9 ອົງຝາຕີນ

ພະອໍລະຫັນທັງ 8 ອົງ ໄດ້ນຳເອົາພະບໍລົມມະສີລິກະທາດຈາກກຸງລາຊະຄືກັບມາທັງເມືອງຄອນຣາດ ແລະ ພັກເຊົາຢູ່ທີ່ນັ້ນວັນຕໍ່ມາພະອໍລະຫັນທັງສາມຈິ່ງສັ່ງສິດທັງ 5 ໄວ້ດັ່ງນີ້.

❖ ພະບໍລົມມະສີລິກະທາດ ຫົວເນົ່າ ໃຫ້ເອົາປະດິດສະຖານໄວ້ທີ່ພູເຂົາຫຼວງ(ທາດຫຼວງວຽງຈັນ) ແມ່ນພະຍາຈັນທະບູລີປະສິດທິຈັກພ້ອມດ້ວຍພະມະເຫສີ ເປັນຜູ້ອຸປະຖາກສ້າງເປັນຜາອຸໂມງໄວ້ທັງສີ່ດ້ານ, ດ້ານລະຫ້າວາໜາສອງວາ, ສູງສີ່ວາສາມສອກ.

❖ ພະບໍລົມມະສີລິກະທາດແຂ້ວຝາງສີ່ອົງໃຫ້ນຳເອົາໄປປະດິດສະຖານໄວ້ທີ່ທ່າຫຳແພ ໄດ້ແກ່ທາດບັງພວນເມືອງວຽງຄຸກ ແຂວງໜອງຄາຍປະເທດໄທ ໝື່ນກາງໂຮງເປັນຜູ້ອຸປະຖຳ.

ຄັ້ງນັ້ນພະອໍລະຫັນວັດປ່າໃຕ້ ມະຫາພຸດທະວົງສາ ແລະ ວັດປ່າເໜືອນ້ຳບຶງມະຫາທັດສະດີເຂົ້າສູ່ນິພານຮຽງວັນຮຽງຄືນກັນ. ພະອໍລະຫັນທັງ 5 ໄປຄາລະວະສົບພະອໍລະຫັນທັງສອງແລ້ວທຳພິທີຖວາຍພະເພີງຮ່ວມກັບພະຍາຈັນທະບູລີປະສິດທິຈັກ ແລ້ວເອົາພະອັດຖິ ທາດຂອງພະອໍລະຫັນທັງສອງປະດິດສະຖານໄວ້ກັບວັດປ່າມະຫາພຸດທະວົງສາ ແລະ ວັດປ່າໂພນເໜືອນ້ຳບຶງ.

ເມື່ອອອກພັນສາແລ້ວພະອໍລະຫັນທັງ 5 ກໍນິວັດລົງສູ່ ເມືອງສີໂຄດຕະບອງທີ່ປ່າໄມ້ຮວກເໜືອພະທາດພະນົມເພື່ອຂໍບູລະນະປະຕິສັງຂອນພະອຸລັງຄະທາດທີ່ພູກຳພ້າຕໍ່ຈາກພະຍາສຸມິຕະທຳມະວົງສາ.

ໃນຂະນະດຽວກັນນັ້ນພະອໍລະຫັນທັງ 5 ໄດ້ຜັດປ່ຽນກັນເທດສະໜາເລົ່າຊາດປາງກ່ອນ ແລະ ຄວາມເປັນມາຂອງພະຍາສຸມິຕະທຳມະວົງສາແຕ່ຊາດປາງກອນຢ່າງຖີ່ຖ້ວນເມື່ອພະຍາສຸມິຕະທຳມະວົງສາໄດ້ຮັບລົດພະທຳນັ້ນແລ້ວກໍຊື່ນຊົມພະໄທເປັນຢ່າງຍິ່ງໃນການບູລະນະປະຕິສັງຂອນພະອຸລັງຄະທາດທີ່ພູກຳພ້າເທື່ອທຳອິດ. ເມື່ອທຳການບູລະນະປະຕິສັງຂອນພະອຸລັງຄະທາດທີ່ພູກຳພ້າສຳເລັດແລ້ວພະຍາສຸມິຕະທຳມະວົງສາກໍປາຖະໜາຢາກທອດພະເນດຕົ້ນໄມ້ຮັງທີ່ວ່າ ພະອົງທີ່ຄາວເປັນພະຍາສີໂຄດຕະບອງໄດ້ອູ້ມເອົາຍັງບາດໄປທອດຖວາຍພະພຸດທະເຈົ້າທີ່ນັ່ງອີງຕົ້ນໄມ້ຮັງຢູ່ບ່ອນໃດກັນແທ້.

ພະອໍລະຫັນທັງ 5 ກໍນຳພາຂະບວນແຫ່ພະຍາໄປເຖິງຕົ້ນໄມ້ຮັງດັ່ງກ່າວ ເມື່ອພະຍາສຸມິຕະທຳມະວົງສາທອດພະເນດເຫັນກໍຊົງມີສັດທາຢ່າງຍິ່ງເຫັນຄວນຈະສ້າງສະຖູບເຈດີໄວ້ເພື່ອເປັນທີ່ສັກກະລະບູຊາຕໍ່ໆໄປ. ພະຍາສຸມິຕະທຳມະ

ວົງສາເຈົ້າຜູ້ປົກຄອງເມືອງເອກະລາດຕັ້ງຢູ່ປ່າໄມ້ຮອກ ເໜືອພະທາດພະນົມ ເມືອງທາດພະນົມ(ປະເທດໄທ)ພ້ອມດ້ວຍພະອໍລະຫັນທັງ 5 ໄດ້ສ້າງພະທາດຂຶ້ນທຳອິດລັກສະນະເປັນອຸໂມງຄືກັນກັບພະທາດພະນົມເປັນຮູບສີ່ຫຼ່ຽມຫຍໍ້ມູມ, ສິງດວງປີ, ທັງກວ້າງທັງສີ່ດ້ານສອງວາສອງສອກ, ສູງຈາກພື້ນເຖິງຍອດສຸດສາມວາ. ເມື່ອສຳເລັດພະອໍລະຫັນທັງ 5 ກໍກັບໄປເມືອງລາຊະຄືນຳເອົາບໍລົມມະສີລີກະທາດ ກະດູກສັນຫຼັງຂອງພະພຸດທະເຈົ້າມາປະດິດສະຖານໄວ້ຢູ່ທີ່ນີ້ແລ.

### 3.3 ກົກເຄົ້າການກຳເນີດພະທາດອີງຮັງ.

ເມື່ອອີງຕາມຕຳນານຫຼາຍສະບັບຂໍ້ມູນຈາກອິນເຕີເນັດ ແລະ ປຶ້ມຕ່າງໆມາປຽບທຽບໃສ່ກັນເຫັນວ່າເນື້ອຫາສາລະເກືອບເທົ່າໆກັນແຕ່ມາເບິ່ງທາງສັກກະຣາດແລ້ວຍັງຜິດດ່ຽງກັນຫຼາຍ.

ພະທາດອີງຮັງສ້າງຂຶ້ນໃນປະມານ 300 ປີ ລຸນພະພຸດທະເຈົ້າສະເດັດສູ່ປະລິນິພານຄືປະມານ ພ.ສ 236 ຫາ ພ.ສ 300 ຕົກໃນ 306 ຫາ 243 ປີກ່ອນຄ.ສ ຫຼັກຖານນີ້ມີຄວາມຄັກແນ່ພຽງໃດ, ມີຫຼັກຖານທາງປະຫວັສາດ ແລະ ການກໍ່ສ້າງພະທາດອີງອື່ນໆມາສົມທຽບກັນດັ່ງນີ້.

- ຊາວອິເດຍບູຮານອົບພະຍົບເຂົ້າສູ່ສຸວັນນະພູມປະເທດຄັ້ງໃຫຍ່ໃນປະຫວັດສາດສະໄໝພະເຈົ້າອະໂສກະມະຫາລາດຄອງເມືອງປະຕິລະບຸດລະຫວ່າງ ພ.ສ 218 ຫາ ພ.ສ 227 ກ່ອນ ຄ.ສ 325 ຫາ 316.
- ໃນ ພ.ສ 600 ຄ.ສ 57 ໂກນທັນຍະພາມໄດ້ນຳເອົາສາສະໜາພາມລັດທິສີວະນິກາຍເຂົ້າມາອານາຈັກຟູນັ້ນແລ້ວແຜ່ຂະຫຍາຍເຂົ້າສູ່ຂົງເຂດທີ່ເປັນສຸວັນນະພູມເກືອບທັງໝົດໃນເວລາຕໍ່ມາ.
- ພະໂສນະ ກັບ ພະອຸດຕຣະ ໄດ້ນຳເອົາພຸດທະສາສະໜານິກາຍເຖຣະວາດເຂົ້າມາເຜີຍແຜ່ໃນສຸວັນນະພູມປະເທດເມື່ອ ພ.ສ 236 ຫຼື 307 ປີກ່ອນ ຄ.ສ ຕາມຄຳສັ່ງຂອງພະເຈົ້າອະໂສກະມະຫາລາດແຫ່ງອິນເດຍ.
- ອີງຕາມຕຳນານອຸລັງຄະທາດຂອງທ່ານ ອາຈານ ຄຳຈຳປາ ແກ້ວມະນີເຊິ່ງຖືວ່າເປັນເອກະສານພິດສະດານສະບັບໜຶ່ງທີ່ກ່າວເຖິງການສ້າງພະທາດຫຼວງ, ພະທາດພະນົມ, ພະທາດສີໂຄດຕະບອງ ແລະ ພະທາດອີງຮັງ ໄດ້ກ່າວໄວ້ວ່າ ພະທາດສີ່ອີງນີ້ໄດ້ສ້າງຂຶ້ນລຸນຫຼັງການເຜີຍແຜ່ພຸດທະສາສະໜານິກາຍເຖຣະວາດເຂົ້າສູ່ສຸວັນນະພູມເລັກນ້ອຍຄືປະມານ ພ.ສ 200-343 ປີ ກ່ອນ ຄ.ສ.

ພະທາດຫຼວງເລີ່ມສ້າງມາແຕ່ສະໄໝພະເຈົ້າອະໂສກະມະຫາລາດເຜີຍແຜ່ພຸດທະສາສະໜາເຂົ້າສູ່ສຸວັນນະພູມປະເທດປະມານ 300 ປີກ່ອນ ຄ.ສ. ຫຼັງຈາກນັ້ນພະເຈົ້າໄຊເສດຖາທິລາດກະສັດແຫ່ງອານາຈັກລາວລ້ານຊ້າງໄດ້ນຳພາປະຊາຊົນລາວເວົ້າລວມ, ເວົ້າສະເພາະປະຊາຊົນຊາວວຽງຈັນປະຕິສັງຂອນເພີ່ມເຕີມດັ່ງທີ່ເຫັນປະຈັກຄືປັດຈຸບັນ ລົງແຮກກໍລຶກ ເດືອນອ້າຍເພັງ ຈ.ສ 928 ຄ.ສ 1566.

ເມື່ອສັງລວມປະຫວັດສາດການເຜີຍແຜ່ສາສະໜາຮິນດູລັດທິສີວະເທບ ແລະ ສາສະໜາພຸດເຂົ້າມາສຸວັນນະພູມປະເທດພ້ອມທັງປະຫວັດພະທາດອີງສຳຄັນໃນລ່ອງແມ່ນ້ຳຂອງຕອນການທີ່ໄດ້ກ່າວມາຈຶ່ງພໍອະນຸມານ ຫຼື ສະຫຼຸບໄດ້ວ່າ: ຕົ້ນກຳເນີດຂອງພະທາດອີງຮັງຕົກຢູ່ໃນລະຫວ່າງ ພ.ສ 300 ຫຼື 200 ປາຍປີ ກ່ອນ ຄ.ສ ກົງກັບສະໄໝພະເຈົ້າອະໂສກະມະຫາລາດແຫ່ງອິນເດຍເຜີຍແຜ່ພຸດທະສາສະໜາເຂົ້າມາສຸວັນນະພູມປະເທດຄາວນັ້ນແມ່ນຕົກຢູ່ໃນສະໄໝອານາຈັກສີໂຄດຕະບອງຮຸ່ງເຮືອງໂດຍແມ່ນເຈົ້າສຸມິດຕະທຳມະວົງສາເປັນຜູ້ປົກຄອງແຫ່ງແຄວ້ນສີໂຄດຕະບອງ ດັ່ງນັ້ນພະທາດອີງຮັງໄດ້ສ້າງຂຶ້ນພ້ອມກັບພະທາດຫຼວງວຽງຈັນ, ພະທາດພະນົມ, ພະທາດໂພ່ນ ແລະ ພະທາດອີງອື່ນໆທີ່ຈັດໃນຍຸກດຽວກັນ.

## 4. ສະພາບພະທາດອິງຮັງແຕ່ປີ 1893 ຫາທ້າຍສະຕະວັດທີ XX.

ພາຍຫຼັງທີ່ພວກຝຣັ່ງມາຍຶດຄອງເອົາຝັ່ງຊ້າຍແມ່ນ້ຳຂອງຈາກເງື້ອມມືຂອງພວກສະຫຍາມອິງພະທາດອິງຮັງກໍດໍາກໍ່າ ເສົ້າໝອງ, ມີເຄືອໄມ້, ຕົ້ນໂພນ້ອຍເກີດຈັບພ້ອມທັງມີພຸ່ມໄມ້ເກີດຫຸ້ມຫໍ່ອົງພະທາດຈົນໝົດຫາບ່ອນຈະເບິ່ງຈະຊົມ ແລະ ກາບໄຫວ້ສັກກະລະບໍ່ມີເລີຍ.

ຕົກມາໃນ ຄ.ສ 1930 ເຈົ້າໜ້າທີ່ຈາກສະຖາບັນບູລະພາທິດຂອງຝຣັ່ງພ້ອມດ້ວຍປະຊາຊົນລາວແຂວງສະຫວັນນະ ເຂດໄດ້ທຳການສ້ອມແປງພະທາດຄືນໃໝ່ພຽງເລັກນ້ອຍຕາມສັດທາທີ່ມີ. ຮູບທ້າວທະວາຣະບານທັງສີ່ທິດໄດ້ແປງຄືນໃ ໝ່ໃຫ້ຢູ່ໃນສະພາບເດີມພ້ອມກັບຊຸ້ມປະຕູທາງເຂົ້າທີ່ຮ້າງເພເພິ່ນໄດ້ສະຫຼັກລວດລາຍແບບເດີມໄວ້ໂດຍພໍ່ທິດພຸຜູ້ສືບ ທອດຕະກຸນຊ່າງລ້ານຊ້າງວຽງຈັນເປັນຜູ້ຄວັດແກະ ແຕ່ການຄວັດເທື່ອນີ້ບໍ່ເລີກຄືບານເກົ່າປານໃດ. ສ່ວນວົງບານປະຕູ ເກົ່າເຊິ່ງເຂົ້າໃຈວ່າຄວັດມາແຕ່ສະໄໝພະໄຊຍະເສດຖາທິລາດເຈົ້ານັ້ນໄດ້ເອົາໄປເກັບຮັກສາໄວ້ທີ່ຫໍພິພິທະພັນ(ຫໍ ພະແກ້ວນໍລະກົດນະຄອນຫຼວງວຽງຈັນເທົ່າທຸກວັນນີ້).

### 4.1 ການບູລະນະພະທາດອິງຮັງແຕ່ລະໄລຍະ.

ປີ ຄ.ສ 1949 ຊາວເມືອງສະຫວັນນະເຂດພ້ອມດ້ວຍຂ້າລາຊະການເຈົ້າແຂວງເປັນປະທານສະໜັບສະໜູນໂດຍມີ ລັດຖະບານສະໄໝນັ້ນໄດ້ຕົກລົງປະຕິສັງຂອນພະທາດຄືນໃໝ່ອີກຄື ໄດ້ແປງບໍລິເວນພະທາດໃຫ້ກວ້າງອອກກວ່າເກົ່າ, ປຸກກົມມະລຽນພ້ອມກໍ່ກຳແພງ ແລະ ປະຕູໂຂງຫຼັງຄາເຮືອນຂຶ້ນອ້ອມອົງພະທາດພ້ອມນັ້ນເພິ່ນໄດ້ກຳນົດເອົາປາງບຸນ ສະເຫຼີມສະຫຼອງປະຈຳປີຂຶ້ນຄືລະຫວ່າງເດືອນຈຽງເພັງຂອງທຸກໆປີ ເຊິ່ງແຕ່ກ່ອນເອົາລະຫວ່າງເດືອນ 12 ເພັງ ໃນໄລຍະ ດຽວກັບພະທາດຫຼວງ ທັງຖືວ່າເປັນບຸນລະດັບຊາດຄືກັບບຸນລະດັບຊາດປາງອື່ນໆທົ່ວທັງປະເທດ.

ເດືອນ 5 ປີຂານ ຄ.ສ 1950 ໄດ້ດັດແປງເສດຖະສັດ (ຍອດສຸດຂອງພະທາດ) ແຕ່ກ່ອນມີພຽງ 5 ຊັ້ນມາເທື່ອນີ້ໄດ້ ສ້າງຕື່ມເປັນ 7 ຊັ້ນ ໂດຍເອົາແຜ່ນຄຳມາປະດັບເຊິ່ງໃນເມື່ອກ່ອນມີ 30 ບາດເອົາແຖມສົມພານຕື່ມອີກ 5 ບາດເປັນ 35 ບາດ ພາຍໃຕ້ການນຳພາປະຕິສັງຂອນໂດຍທ່ານ ສູນທອນ ປະຖົມມະວົງ ແລະ ຍາທ່ານເຫຼື້ອມ ປະສັນນະຈິດໂຕເຈົ້າ ຄະນະແຂວງໃນເວລານັ້ນ. ຄ.ສ 1952 ເລີ່ມສ້າງກົມມະລຽນອ້ອມພະທາດໂດຍອາໄສສັດທາຈາກພໍ່ຄ້າຊາວຂາຍ, ພໍ່ແມ່ ປະຊາຊົນພ້ອມດ້ວຍພຸດທະບໍລິສັດຊາວແຂວງສະຫວັນນະເຂດສຳເລັດລົງໃນ ຄ.ສ 1960 ຄາວນັ້ນມີປະຕູໂຂງເຂົ້າ ພະທາດພຽງຂ້າງດຽວຄືດ້ານຕາເວັນຕົກຂອງພະທາດເທົ່ານັ້ນ. ຄ.ສ 1962 ສ້າງຫໍທຳມະສະພາຕັ້ງຢູ່ດ້ານຕາເວັນອອກເຊິ່ງ ໜ້າກັບພະທາດ, ຄ.ສ 1964 ໄດ້ມີເຈົ້າສັດທານຳພາໂດຍຍາທ່ານ ອາດ ສຸພັນໂທ ປະທານພຸດທະສາສະໜາສຳພັນແຂວງ ສະຫວັນນະເຂດໄດ້ສ້າງປະຕູໂຂງກົມມະລຽນອີ 3 ປ່ອງຄື ທາງດ້ານທິດເໜືອ, ຕາເວັນອອກ ແລະ ທາງທິດໃຕ້ ເຊິ່ງເວລາ ນັ້ນຍັງບໍ່ມີເຈົ້າສັດທາສ້າງບານປະຕູໃຫຍ່ເທື່ອ. ຈົນຮອດ ຄ.ສ 1975 ຈຶ່ງມີເຈົ້າສັດທາໝາຍມີ ທ້າວສື້ອ ແລະ ນາງສິ້ມ ອອກທຶນກໍ່ສ້າງຕໍ່ຈຶ່ງສຳເລັດທັງ 4 ປ່ອງ.

ມາໃນ ຄ.ສ 1980 ກົງກັບວັນສຸກ ແຮມ 9 ຄ່ຳ ເດືອນ ຍີ່ ປີ ວອກ ເວລາປະມານ 8 ໂມງເຊົ້າໄດ້ປະກົດເຫັນກົງ ເສດຖະສັດຄຳທີ່ຕັ້ງເທິງຈອມພະທາດເນີ້ງໄປທາງທິດຕາເວັນອອກສຽງ ເໜືອ. ຫຼັງຈາກນັ້ນຈຶ່ງນຳສະເໜີທາງການເພື່ອ ບູລະນະສ້ອມແປງອີກເທື່ອໜຶ່ງ ການສ້ອມແປງອີກເທື່ອນີ້ມີຍາພໍ່ໝອກ ພູມສະຫວັນ ອະດີດສະມາຊິກສະພາແຫ່ງຊາດ,

ຍາທ່ານອາດສຸພັນໂທ ປະທານພຸດທະສາສະໜາສຳພັນແຂວງສະຫວັນນະເຂດພ້ອມດ້ວຍເຈົ້າແຂວງສາທຸພັນຮ່ວມເປັນຄະນະປະທານ. ເສດຖະສັດດັ່ງກ່າວນຳເອົາມາສ້ອມແປງທີ່ວັດໄຊຍະພູມໂດຍທ່ານມັງ ເຈົ້າເມືອງຈາງວາງໃນລະບອບເກົ່າເປັນຜູ້ສ້ອມແປງ ພ້ອມນັ້ນໄດ້ມີສັດທາປະຊາຊົນແຂວງສະຫວັນນະເຂດແຖມສົມພານຍອດພະທາດ(ເສດຖະສັດ) ຕື່ມອີກດ້ວຍຄຳ 15 ບາດໂຮມກັບຄຳທີ່ມີຢູ່ມາກ່ອນແລ້ວເປັນ 50 ບາດ. ເວລາດຽວກັນນັ້ນຖືກລົມພາຍຸພັດເຮັດໃຫ້ກ້ານຕານຕົ້ນຕານຕົກໃສ່ຂ້າງພະທາດດ້ານໃຕ້ເຮັດໃຫ້ສິ້ນສ່ວນບິ່ນເພຈິ່ງໄດ້ເອົາປະທາຍມາປະດິດແບບບູຮານແທນຮູບເດີມທີ່ບິ່ນອອກພ້ອມດຽວກັນນັ້ນເພິ່ນໄດ້ໂບກຂອບວົງປະຕູທາງເຂົ້າພະທາດໃໝ່ ແລະ ໄດ້ປະດັບລວດລາຍດອກຜັກແວ່ນໃສ່ຂ້າງຊ້າຍສອງດອກອີກດອກໜຶ່ງຢູ່ເທິງຂອບປະຕູ.

ຮອດ ຄ.ສ 1989 ກົງກັບວັນທີ 20 ເມສາ ເພື່ອເປັນການອະນຸລັກວັດທະນະທຳທີ່ເປັນເອກະລັກອັນດີງາມທາງພຸດທະສາສະໜາ ແລະ ເອກະລັກສະເພາະຕົວຂອງພະທາດຈຶ່ງໄດ້ຈັດພິທີປູກຕົ້ນສາລະ(ຕົ້ນສາລະໄດ້ແກ່ຕົ້ນໄມ້ພັນຈາກອິນເດຍເຊິ່ງບໍ່ຄ່ອຍປາກົດເຫັນໃນປະເທດລ້ານຊ້າງຂອງພວກເຮົາແຕ່ໃດໆມາປາກົດເຫັນ. ປະກົດເຫັນເພິ່ນເອົາມາປູກທີ່ວັດປ່າໂສກປ່າຫຼວງ, ວັດປ່າ ໜອງບົວທອງ, ວັດສີເມືອງ, ວັດດົງໝ້ຽງ ແລະ ວັດອື່ນໆໃນນະຄອນຫຼວງວຽງຈັນໃນປະມານ ພ.ສ 2500 ຄືປະມານ 50 ປີ ຜ່ານມານີ້ເອງ. ຕົ້ນສາລະນີ້ເປັນຕົ້ນໄມ້ສັກສິດແທນນິມິດໝາຍສັງເວສະຖານອັນເປັນບ່ອນທີ່ພະພຸດທະເຈົ້າສະເດັດເຂົ້າສູ່ປະລິນິພານໃນມື້ ເພັງ ເດືອນ 6 ພ.ສ 1 ກົງກັບວັນສຸກ ແຕ່ໃນຄວາມໝາຍຂອງຊາວພຸດທີ່ເຊື່ອກັນມາແຕ່ບູຮານນະການແລ້ວເຂົ້າໃຈວ່າ ພະພຸດທະອົງສະເດັດສູ່ປະລິນິພານໃຕ້ກ້ອງຕົ້ນສາລະອັນໝາຍເຖິງ ຕົ້ນຮັງທີ່ມີຢາງຫຼວງຫຼາຍເກືອບທຸກເຂດແຂວງໃນປະເທດລາວເຮົາ. ໃນຄວາມຈິງແລ້ວຕົ້ນຮັງກັບຕົ້ນສາລະເປັນຕົ້ນໄມ້ຄົນລະພັນ ແລະ ຄົນລະຖິ່ນກຳເນີດ. ດັ່ງນັ້ນ ຈຶ່ງມີຄວາມເຫັນພໍພຽງວ່າ ພະພຸດທະອົງສະເດັດສູ່ປະລິນິພານໃຕ້ຮົ່ມຕົ້ນສາລະບໍ່ແມ່ນຕົ້ນໄມ້ຮັງ ຫຼື ຕົ້ນໂພດັ່ງທີ່ເຄີຍເຊື່ອກັນມາ). ຈາກອິນເດຍໂດຍມີພຸດທະບໍລິສັດຂອງລາວຈາກປະເທດຫວຽດນາມ ແລະ ໄທ ຮ່ວມກັນປູກ ໃນປີດຽວກັນນີ້ຊາວບ້ານທາດອີງຮັງໄດ້ສ້າງຫໍໂຄສະນາ ຫຼື ຫໍພາມໄຊຂຶ້ນໜຶ່ງຫຼັງທາງດ້ານຕາເວັນອອກສຽງໃຕ້ຂອງພະທາດ.

ຕົກມາຮອດ ຄ.ສ 1993 ໄດ້ມີດຳລັດຈາກລັດຖະບານວ່າດ້ວຍມໍລະດົກທາງວັດທະນະທຳປະຫວັດສາດ ແລະ ທຳມະຊາດ ເລກທີ 174/ນຍ ລົງວັນທີ 13 ພະຈິກ ປີ ຄ.ສ 1993 ໄດ້ຮັບເອົາພະທາດອີງຮັງເປັນປູສະນີຍະສະຖານທາງວັດທະນະທຳ ແລະ ປະຫວັດສາດຂອງຊາດພ້ອມນັ້ນທາງການຍັງໄດ້ອະນຸມັດເງິນຈຳນວນ 30.000.000 (ສາມສິບລ້ານກີບ). ເພື່ອປະຕິສັງຂອນກົມມະລຽນພ້ອມດ້ວຍພັດທະສີມາທີ່ຊຸດໂຊມໃຫ້ຢູ່ໃນສະພາບເດີມພ້ອມກັນນັ້ນໄດ້ມີສັດທາຈາກພະສົງ ແລະ ຊາວບ້ານພ້ອມກັນເອົາດິນ, ກະເບື້ອງລາຍມາປູເດີ່ນພະທາດດ້ານໃນເຮັດໃຫ້ບໍລິເວນດ້ານໃນຂອງພະທາດປ່ຽນຈາກຮູບເດີມມາເປັນສີສັນແບບສະໄໝໃໝ່.

ວັນທີ 22 ມັງກອນ ປີ ຄ.ສ 1995 ເພິ່ນໄດ້ນຳເອົາພັນໄມ້ຕະກຸນຕານຈຳນວນ 10 ຕົ້ນມາປູກໃສ່ດ້ານຕາເວັນຕົກຂອງພະທາດ ແລະ ໄດ້ມີການປະດັບປະດາບໍລິເວນເດີ່ນພະທາດດ້ວຍການປູກຕົ້ນໄມ້, ດອກໄມ້, ຈັດສັນໃຫ້ເປັນລະບຽບຕິດຕັ້ງໄຟຟ້າໃຫ້ແສງສະຫວ່າງ ແລະ ກໍ່ສ້າງນໍ້າພຸອີກ 2 ບ່ອນ.

ລະຫວ່າງເດືອນ 5 ເພັງ ຄ.ສ 2001 ໄດ້ສ້າງພະພຸດທະຮູບຈຳນວນ 160 ອົງມາປະດິດສະຖານອ້ອມກົມມະລຽນພາຍໃຕ້ການຊີ້ນຳຂອງຍາທ່ານ ມະຫາງອນ ດຳລົງບຸນ ວ່າການພຸດທະສາສະໜາສຳພັນແຂວງສະຫວັນນະເຂດ ພ້ອມດ້ວຍຜູ້ມີສັດທາຮ່ວມກັນສ້າງ(ປັດຈຸບັນຍາທ່າ ມະຫາງອນ ດຳລົງບຸນ ເປັນປະທານ ອົງການພຸດທະສາສະໜາສຳພັນແຂວງ (ອ.ພ.ສ) ແຂວງສະຫວັນນະເຂດ.

**4.2 ລັກສະນະຂອງພະທາດອິງຮັງ.**

ຈາກຕຳນານຫຼັກຖານທາງ ຕຳນານ ບູຮານວິທະຍາ ແລະ ປະຫວັດສາດແລ້ວ ພະທາດອິງຮັງສ້າງພ້ອມກັບພະທາດສີໂຄດຕະບອງພະທາດໂພ່ນ ແລະ ພະທາດພະນົມອົງເດີມ.

ຈາກສະໄໝພະເຈົ້າສຸມິດຕະທຳມະວົງສາ ຮອດສະຕະວັດທີ XIV ລາຊະການຂອງໂພທິສາລະລາດເຈົ້າ, ໄລຍະຂອມເຮືອງອຳນາດ ແລະ ສະໄໝພະໄຊຍະເສດຖາທິລາດເຈົ້າຕາມລຳດັບນັ້ນ ພະທາດອິງຮັງຕົກຢູ່ໃນຄວາມຫຼົງລືມເກືອບ 1000 ປີ ໃນສະໄໝພະເຈົ້າໄຊຍະເສດຖາທິລາດນີ້ເອງພະທາດອິງຮັງ ຈຶ່ງໄດຮັບການປະຕິສັງຂອນຂຶ້ນເປັນພະທາດແບບສິລະປະທາງພຸດທະສາສະໜາໂດຍແທ້ ເຊິ່ງຕໍ່ເຕີມພະທາດຈາກຮູບຊົງຂອງພວກຂອມໃນສະໄໝກ່ອນມາເປັນຮູບຊົງຄືເຫັນໃນປັດຈຸບັນ ວັດສະດຸທີ່ເອົາມາສ້າງໄດ້ແກ່ ພະທາຍເພັດ, ຂະມຸກ ແລະ ດິນຈີ່. ລວດລາຍປະດັບປະດາອົງພະທາດແນໃສ່ລວດລາຍທີ່ມີຄວາມໝາຍທາງຕຳນານ, ຄະຕິ, ຄວາມເຊື່ອແບບພາມ-ພຸດປະສົມກັນໂດຍເນັ້ນໃສ່ປັດຊະຍາຂອງຄົນໃນສະໄໝນັ້ນ ປະສານດ້ວຍຄວາມງາມທາງວິຈິດສິນອັນມີຄວາມໝາຍໂໜ່ມໜ່ຽວ, ສິດສອນສັບພະສັດທັງຫຼາຍທັງຫຼາຍ ທາງອ້ອມຕາມພຸດທະປັດຊະຍາ ແລະ ຄວາມເຊື່ອທາງສາສະໜາພາມ. ຍອດສູງສຸດຂອງພະທາດຫຼໍ່ດ້ວຍໂລຫະເສີມຄຳເປັນຮູບເສຖະສັດເຈັດຊັ້ນເຊິ່ງຫຼໍ່ແຖມສົມພານໃນສະໄໝສະເຫຼີມສະຫຼອງເຄິ່ງພຸດທະການ ພ.ສ 2500, ຄ.ສ 1957 ແທນຍອດເກົ່າທີ່ເປ້ເພຕາມການເວລາ. ຈາກເສດຖະສັດລົງມາຖ້ານດວງປີສີ່ຫຼ່ຽມ (ສະແດງເຖິງພົມມະໂລກ) ອັນເປັນເອກະລັກສະເພາະຂອງສິນລະປະລ້ານຊ້າງ ເຊິ່ງບໍ່ເຄີຍພົບເຫັນໃນຍອດເຈດີຂອງພວກ ອິນເດຍ, ຈາມ, ຂອມ, ຊະວາ, ພະມ້າ ແລະ ຈີນ ອ້ອມຮອບດ້ວຍຖ້ານດວງປີສະຫຼັກປັ້ນດ້ວຍປະທາຍເພັດ ແລະ ຂະມຸກອອ້ມດອກຕາເວັນໄວ້ທຸກດ້ານແຕ່ລະດອກຢູ່ໃນທ່າບານຫງາຍເຕັມດວງ. ຖ້ານທີສອງຈາກເທິງເປັນຖ້ານບົວຫຼ່ຽມ (ສະແດງເຖິງເທວະໂລກ) ມີລວດລາຍທີ່ສັບສົນເຊິ່ງນາຍຊ່າງໄດ້ແກະສະຫຼັກວາດພາບຈາກເທບນິຍາຍພະລັກພະລາມ (ຣາມາຍານາ) ຈາກພຸດທະປະຫວັດ ແລະ ລວດລາຍຈາກຈິນຕະນາການໃນສະໄໝນັ້ນ. ລວມຄວາມແລ້ວແມ່ນກ່າວເຖິງຊີວິດຂອງເທວະໂລກຫຼາຍກວ່າເຊັ່ນ: ພະວິສະນຸຂີ່ຄຸດ, ພະຍານາກເກົ້າສຽນ, ພະພຸດທະຮູບປາງນາກປົກຮູບນົກຫັດສະດີລີງ ແລະ ເທວະຮູບອົງອື່ນໆ.

ຖ້ານລຸ່ມເປັນຖ້ານທີ່ມີລັດສະນະເປັນຮູບຈະຕຸລັດ (ສະແດງເຖິງມະນຸດສະໂລກ) ປະກອບດ້ວຍຊຸມປະຕູໂຂງປິ່ນໜ້າໄປທາງທິດຕາເວັນອອກລວດລາຍທີ່ປະດັບຂອບປະຕູທັງສອງນັ້ນໄດ້ແກ່ລາຍເຄືອວັນແບບກ້ອນເມກໄຫຼໃນລະດູຝົນເຊິ່ງແຕກຕ່າງຈາກລາຍເຄືອຫຼວງພະບາງ ແລະ ວຽງຈັນ ອັນຖືວ່າເປັນເອກະລັກສະເພາະຂອງພະທາອິງຮັງແທ້ໆທີ່ເຄີຍພົບເຫັນໃນສິລະປະແບບລ້ານຊ້າງເປັນລວດລາຍທີ່ມີລັກສະນະເຊັ່ງຂຶມ. ແຕ່ອ່ອນຊ້ອຍດ້ວຍຄວາມໝາຍອັນເລີກແລບທາງພຸດທະປັດຊະຍາ ແລະ ຄວາມເຊື່ອທາງພາມຂອບປານປະຕູທັງສອງເບື້ອງປະກອບດ້ວຍຮູບເມຖຸນສັງວາດ ເຊິ່ງຜູ້ແກະສະຫຼັກສະໄໝກ່ອນອາດຝັງຄວາມໝາຍບອກທາງໂລກິວິໄສຄື: ບໍ່ວ່າມະນຸດ ຫຼື ສັດເດຍລະສານຕ້ອງຜ່ານໂລກີ

ວິວັດອັນມີທຸກສະມຸໄທ, ນິໂລດ, ມັກເປັນຕົ້ນ. ລວມຄວາມແລ້ວກ່ອນຈະເຂົ້າເຖິງທຳມະໄດ້ກໍຕ້ອງເຂົ້າໃຈເຖິງໂລກກ່ອນຕ້ອງໄດ້ຜ່ານຄວາມທຸກ, ຄວາມສຸກ, ຄວາມທໍລະມານ ແລະ ມີການທົດສອບກິ້ງເກືອກລີເລືອກັບກິເລດຕັນຫາບໍ່ຈັກເທົ່າໃດ. ທາງໃນຂອງພະາດນອກຈາກຈະເປັນຫ້ອງສີ່ແຈເພື່ອປະດິດສະຖານວັດຖຸສັກກະລະບູຊາແລ້ວຕົວພະທາດຍັງໂຄ້ງກົ່ງກາງບໍ່ມີແກນຄ້ຳຈີນຮອດຖ້ານດວງປີໃຫຍ່ ຂ້າງພະທາດທັງສີ່ດ້ານມີຮູບເຈົ້າຕຸໂລກະບານແກະສະຫຼັກໄວ້ທຸກດ້ານຂ້າງລຸ່ມສຸດຂອງພະທາດທາງທິດເໜືອມີຮູບຄົນຂີ່ເສືອເຊິ່ງຊາວບ້ານເອີ້ນວ່າ " ຊຽງໜ້ຽງຂີ່ເສືອ"ໃນຄວາມຈິງແທ້ນັ້ນຍັງທັນມີນັກປາດຖ່ານໃດອະທິບາຍໄດ້, ຖັດຈາກຮູບຊຽງໝ້ຽງຂີ່ເສືອຫ່າງມາທາງກຳແພງທາງນອກມີພະສະຫູບສີ່ຫຼ່ຽມຫ້າຖ້ານຕິດແນບກັບພື້ນເຖົ້າແກ່ແນວໂຮມ, ຊາວບ້ານທາດອີງຮັງເອງເຊື່ອວ່າ ຄົງສ້າງມາແຕ່ພ້ອມກັບພະທາດພຸ້ນ.

ຫ່າງຈາກທາດມາທາງທິດຕາເວັນອອກສີ່ແມັດມີເທວະຮູບສີ່ຕົນນັ່ງປິ່ນຫຼັງໃສ່ກັນແບກແທ່ນຫີນພາຍໃຕ້ມີນຄົບເທວະຮູບທັງສີ່ນັ້ນໝາຍເຖິງພົມມະວິຫານສີ່ຕາມປັດຊະຍາຂອງພາມໄດ້ແກ່ 1 ເມດຕາ, 2 ກາລຸນາ, 3 ມຸທິຕາ ແລະ 4 ອຸເບກຂາ. ເຊິ່ງມີຄວາມໝາຍວ່າ 1 ຄວາມຮັກແພງເຊິ່ງກັນ ແລະ ກັນ, 2 ຄວາມໂອບເອື້ອເຜື່ອແຜ່ເຊິ່ງກັນ ແລະ ກັນໃຫ້ພົ້ນຈາກທຸກ, 3 ຄວາມມະທຸອ່ອນຫວານໃຫ້ແກ່ໝົດທຸກຄົນຜູ້ຕົກທຸກຂໍໃຫ້ພົ້ນຈາກທຸກ, ຜູ້ມີສຸກຂໍໃຫ້ສຸກຍິ່ງໆຂຶ້ນໄປ, 4 ຄວາມຍິນດີຕໍ່ຜູ້ທຳຄຸນງາມຄວາມດີຮູ້ຈັກຊັ່ງຕວງວາງຕົວເປັນກາງພິຈາລະນາອັນໃດຜິດອັນໃດຖືກ ດັ່ງນັ້ນເທວະຮູບທັງສີ່ຈຶ່ງໝາຍເຖິງພົມມະວິຫານສີ່ຈຶ່ງຈະຄ້ຳຈູນໂລກນີ້ໄດ້. ອັນໜຶ່ງໃນຄວາມໝາຍທາງພຸດທະສາສະໜາແລ້ວແມ່ນໝາຍເຖິງ ອຸບາສົກ, ອຸບາສິກາ, ພະພິຂຸ ແລະ ພະພິຂຸນີ ເປັນຜູ້ທີ່ຈະຄ້ຳຈູນພະພຸດທະສາສະໜາໄປພາຍຊ້ອຍຮອດຫ້າພັນພະພັນສາ.

ຫ່າງຈາກພະທາດໄປທາງທິດໃຕ້ປະມານ 10 ແມັດ ຂ້າງສິມເບື້ອງໃຕ້ມີຮູບສິງຄວັດດ້ວຍຫີນໜຶ່ງຕົວ ລັກສະນະເທົ່າກັບຕົວຈິງປິ່ນໜ້າໄປທາງທິດຕາເວັນຕົກຊາວບ້ານເອີ້ນວ່າໝາສວງ. ເດີມແທ້ສິງໂຕນີ້ປິ່ນໜ້າໄປທາງທິດຕາເວັນອອກຊື່ກັບທາງເຂົ້າພະທາດອີງຮັງເຖົ້າແກ່ແນວໂຮມເວົ້າສືບກັນມາວ່າ: ສະໄໝລ້ານຊ້າງຕົກເປັນເມືອງສ່ວຍຂອງສະຫຍາມປະມານ 150 ປີຜ່ານມາຊາວບ້ານເກີດອະຫິວາຕົກໂລກເວລານັ້ນມີພະພິຂຸນອກວິໄນຕົນໜຶ່ງເດີນທາງມາຈາກຝັ່ງຂວາແມ່ນ້ຳຂອງເຂົ້າປະສົບເຫດມະຫັນຕະໄພນີ້ ພິຂຸຕົນນັ້ນມານັ່ງທຳເບິ່ງເລີຍສ່ຽງທວາຍວ່າເກີດເຂັດຂວາງຍ້ອນສິງໂຕດັ່ງກ່າວຈຶ່ງຈຳໃຫ້ຊາວບ້ານທຸບຂາທັງສີ່ດ້ານນັ້ນຖິ້ມແລ້ວຕ່າວໜ້າໄປທາງທິດຕາເວັນຕົກເພື່ອບໍ່ໃຫ້ມັນລົບກວນຊາວບ້ານອີກ. ແຕ່ໃນທາງປະຫວັດສາດສິງໂຕນັ້ນແມ່ນສິງທີ່ແກະສະຫຼັກໃນສະໄໝພະເຈົ້າອະໂສກະມະຫາລາດເຊິ່ງເປັນຕົວແທນຂອງພຸດທະສາສະໜາໄດ້ເຂົ້າມາເຖິງດິນແດນແຫ່ງນີ້ແລ້ວ.

ພາຍໃນບໍລິເວນພະທາດມີພະພຸດທະຮູບສອງອົງເບິ່ງວາດຊົງທາງສິນລະປະແລ້ວອາດໄດ້ຮັບອິດທິພົນມາຈາກຈາມປາ. ມີພະພຸດທະຮູບອີກອົງໜຶ່ງປະດັບຊົງເກດ ແລະ ສັງວານແບບລົບບູລີ ແລະ ພະພຸດທະຮູບສະໄໝລ້ານຊ້າງ. ມີໃບເສມາໃບໜຶ່ງຕັ້ງຢູ່ທາງທິດຕາເວັນຕົກຂອງພະທາດ ແຕ່ກ່ອນຄົງມີຮູບຊົງສວຍງາມແຕ່ດຽວນີ້ກຸດຫ້ຽນໄປຫຼາຍ ແລະ ພື້ນດິນຂຶ້ນມາພຽງ 0,50 ແມັດເທົ່ານັ້ນ.

ຍ້ອນວ່າພະທາດຢືນຢູ່ຄູ່ຟ້າມາຫຼາຍຍຸກຫຼາຍສະໄໝ, ແຕ່ລະຍຸກແຕ່ລະສະໄໝກໍມີການປະດັບປະດາ, ສ້ອມແປງ, ປະຕິສັງຂອນ (ແຖມສິມພານ) ມາເທື່ອລະເລັກລະນ້ອຍ. ດັ່ງນັ້ນນໍລະດົກທາງສິລະປະເອ້ຍ້ອງອີງພະທາດຈຶ່ງໄດ້ຮັບແຮງອິດທິພົນມາຈາກຫຼາຍບ່ອນເຊັ່ນ: ຈາມປາ, ເຈນລາ (ຂອມ), ສີໂຄດຕະບອງ ແລະ ລ້ານຊ້າງ. ແຕການປະຕິສັງຂອນຄັ້ງໃຫຍ່ແມ່ນໃນສະໄໝພະເຈົ້າໄຊຍະເສດຖາທິລາດ ດັ່ງນັ້ນ ລວດລາຍຈຶ່ງອ່ອນຊ້ອຍສວຍງາມມີຄວາມງາມໃນຄະຕິຄວາມເຊື່ອແມ່ນໄດ້ຮັບອິດທິພົນທາງພຸດທະສາສະໜາລ້ອນແຕ່ສ້າງມາແຕ່ສະໄໝສະຕະວັດທີ XVI ພຸ້ນເປັນສ່ວນຫຼາຍ.

ຕົວພະທາດມີຮູບຮ່າງສີ່ລ່ຽມຄືຜາສາດ, ເປັນເຈດີປະສົມວິຫານໃຊ້ເປັນບ່ອນປະດິດສະຖານສິ່ງສັກສິດ ຫຼື ເທວະຕາມຄະຕິຄວາມເຊື່ອກໍໄດ້ເພາະວ່າມີປະຕູໄຂປິດໄດ້ຂ້າງໃນບັນຈຸພະສິລິກະທາດ (ມາຮອດປັດຈຸບັນຍັງບໍ່ມີນັກປະຫວັດສາດ ແລະ ບູຮານຄະດີທ່ານໃດຢັ້ງຢືນຄວາມຄັກແນ່ວ່າພະບໍລົມສິລິກະທາດນັ້ນປະດິດສະຖານຢູ່ບ່ອນໃດກັນແທ້ ພານໃນບໍ ຫຼື ຍອດພະທາດ). ອີງພະທາດມີ ສາມຖ້ານ, ຖ້ານລຸ່ມເປັນສິລະປະດັ່ງເດີມ (ຈາມ, ຂອມ) ປະສົມສິລະປະລ້ານຊ້າງ. ແຕ່ຖ້ານເທິງເປັນສິລະປະລ້ານຊ້າງລ້ອນໆເປັນຖ້ານບົວຫງ່າຍສີ່ຫຼ່ຽມ, ຢອງດ້ວຍຖ້ານຍອດດວງປີ ແຕ່ລະດ້ານຂອງພະທາດແທກໄດ້ 9 ແມັດ, ສູງ 25 ແມັດ.



**ທາດອີງຮັງ**

### 4.2 ພະທາດອີງຮັງໃນທັດສະນະທາງປະຫວັດສາດ.

ຕາມຫຼັກຖານທາງປະຫວັດສາດແລ້ວ ຊົນຊາດລາວຕັ້ງພູມລຳເນົາໃນດິນແດນເຂດແຄວ້ນສຸວັນນະພູມນີ້ມາແຕ່ສະຕະວັດທີ XIII ພຸ້ນແຕ່ອຳນາດທັງໝົດຍັງແຂ່ງກັບພວກຂອມທາງໃຕ້ ແລະ ພວກມອນທາງທາຣາວະດີທາງ

ທີດຕາເວັນຕົກຢູ່. ຍັງຄົງຕັ້ງຢູ່ເປັນນະຄອນລັດຫຼາຍລັດຢູ່ລ່ອງແມ່ນ້ຳຂອງຕອນກາງຄືນັບແຕ່ລັດຊຽງດົງຊຽງທອງລົງມາຮອດສີໂຄດຕະບອງ, ລັດຈາມປານະຄອນ, ລັດຮ້ອຍເອັດປະຕູດັ່ງນີ້ເປັນຕົ້ນ.

ການເຕົ້າໂຮມລັດຕ່າງໆຂອງຊົນຊາດລາວເປັນເອກະພາບປະກົດຈະແຈ້ງໃນສະຕະວັດທີ XIV ຄືນັບແຕ່ປີ 1357 ພາຍໃຕ້ການນໍາພາຂອງພະເຈົ້າຟ້າງຸ່ມສີສັດຕະນາຄະນະຫຸດທີ່ທ້ອນໂຮມເອົາລັດລາວທັງໝົດເຂົ້າເປັນອານາຈັກລ້ານຊ້າງອັນໜຶ່ງອັນດຽວ. ໃນຄາວທີ່ພະອົງທໍາການທ້ອນໂຮມແຜ່ນດິນລ້ານຊ້າງນັ້ນຄືໃນ ຄ.ສ 1353 ພະອົງໄດ້ຍົກທັບມາຕີເມືອງກະບອງ (ສີໂຄດຕະບອງ) ເຊິ່ງຂະນະນັ້ນແມ່ນພະຍາແປດບໍ່ ເປັນຜູ້ປົກຄອງເມືອງຕົກເປັນຝ່າຍເສຍໄຊຖືກກອງທັບພະຍາຟ້າງຸ່ມຂ້າຕາຍໃນສະໜາມຣົບ ພະເຈົ້າຟ້າງຸ່ມຈິ່ງໄດ້ແຕ່ງພະອະນຸຊາຂອງພະຍາແປດບໍ່ຂຶ້ນຄອງເມືອງແທນ ໃນເວລານັ້ນພະທາດອິງຮັງຕົກຢູ່ໃນພາຍໃຕ້ການດູແລຮັກສາຂອງລາຊະວົງສີໂຄດຕະບອງ ຫຼື ຊາວເມືອງສີໂຄດຕະບອງມາຢ່າງໃດນັ້ນບໍ່ທັນມີຕໍານານໃດບອກແຈ້ງ ແຕ່ເຂົ້າໃຈວ່າພະຍາຄອງເມືອງສີໂຄດຕະບອງແຕ່ລະລາຊະການບໍ່ເຄີຍມີຕໍານານໃດກ່າວວ່າ ນັບຖືສາສະໜາອື່ນນອກຈາກສາສະໜາພຸດ ດັ່ງນັ້ນຈິ່ງເວົ້າໄດ້ວ່າ ພະຍາເມືອງກະບອງທຸກພະອົງຄົງທະນຸບໍາລຸງພະທາດອິງຮັງຕະຫຼອດມາ. ສ່ວນໃນລາຊະສະໄໝພະເຈົ້າຟ້າງຸ່ມມະຫາລາດ ຫາ ສະໄໝພະເຈົ້າວິຊຸນນະລາດໄລຍະປະມານໜຶ່ງສະຕະວັດມານີ້ບໍ່ເຫັນມີບັນທຶກໃດເລີຍກ່າວເຖິງການປະຕິສັງຂອນ ຫຼື ບູລະນະພະທາດອິງຮັງອົງນີ້ ແຕ່ເຂົ້າໃຈວ່າຕ້ອງມີການປົກປັກຮັກສາລະດັບທ້ອງຖິ່ນສືບໆກັນມາອົງ ພະທາດຈິງຢືນຍົງຄົງຕົວມາຮອດພວກເຮົາສູ່ມື້ນີ້.

ປະຫວັດພະທາດອິງຮັງປະກົດແຈ້ງທາງປະຫວັດສາດໃນລາຊະການຂອງພະເຈົ້າໂພທິສາລະລາດ ແລະ ພະໄຊຍະເສດຖາທິລາດເຈົ້າ ໃນຄາວທີ່ພະໂພທິສາລະລາດສະເດັດລົງມາປະທັບທີ່ນະຄອນວຽງຈັນ ຄ.ສ 1439 ພະອົງໄດ້ສະເດັດລົງມານະມັດສະການພະທາດອິງຮັງ, ພະທາດໂພ່ນ, ພະທາດສີໂຄດຕະບອງ ແລະ ພະທາດພະນົມ ຄາວນັ້ນພະອົງໄດ້ມອບຄົນອຸປະຖາກ (ຂ້າໂອກາດ) ພະທາດໄວ້ທຸກລູກ ຫຼື ທຸກພະອົງ.

ພະທາດອິງຮັງໄດ້ກໍ່ສ້າງເພີ່ມເຕີມອີກໃນລາຊະການຂອງພະໄຊເສດຖາທິລາດເຈົ້າໃຫ້ເປັນສິລະປະລ້ານຊ້າງ ແລະດັດແປງພະທາດໃຫ້ເປັນພະທາດທາງພຸດທະສາສະໜາ ແຕ່ນັກບູຮານຄະດີລາວເຮົາຫຼາຍທ່ານມີຄວາມເຫັນວ່າ ພະທາດອິງຮັງອົງປັດຈຸບັນ ແມ່ນສິລະປະລາວບູຮານສະໄໝພະເຈົ້າໄຊເສດຖາທິລາດຫຼາຍກວ່າຍ້ອນວ່າຊຸມບານປະຕູພະທາດດ້ານຕາເວັນອອກເປັນສິລະປະສະໄໝພະໄຊເສດຖາທິລາດເຊິ່ງມີຂໍ້ອ້າງອີງວ່າ: ພະເຈົ້າໄຊຍະເສດຖາທິລາດຫຼັງຈາກທີ່ສະເດັດມາຕັ້ງນະຄອນວຽງຈັນເປັນລາຊະທານີໄດ້ 6 ປີ ຄືຕົກມາໃນ ຄ.ສ 1547 ໄດ້ສະເດັດໄປນະມັດສະການພະທາດພະນົມ ແລະ ໄດ້ຊົງກໍ່ທາດສີໂຄດຕະບອງອົງປັດຈຸບັນ ໂລມອຸໂມງເກົ່າ ນອກນັ້ນພະອົງຍັງໄດ້ປະຕິສັງຂອນພະທາດອິງຮັງ ແລະ ພະທາດໂພ່ນຕື່ມອີກ ດັ່ງທີ່ເຫັນມາຮອດປະຈັກຕາປັດຈຸບັນ ລຸນຈາກນັ້ນມາກະສັດລາວລ້ານຊ້າງທຸກພະອົງກໍສະເດັດມາທະນຸບໍາລຸງພະທາດອິງຮັງບໍ່ໄດ້ຂາດ.

ຮອດລາສະການຂອງເຈົ້າອະນຸວົງ ຫຼັງຈາກທີ່ອານາຈັກລາວລ້ານຊ້າງລົ້ມສະຫຼາຍໃນ ຄ.ສ 1829 ນະຄອນຫຼວງວຽງຈັນຖືກພວກສະຫຍາມປຸ້ນສະດົມ, ຈູດເຜົາຍັງເຫຼືອແຕ່ເຖົ່າກັບຖ່ານ ພະທາດອິງຮັງຈິງຂາດການປົກປັກຮັກສາ ແລະ ເສົ້າໝອງຍ້ອນຂາດຜູ້ນໍາພາທີ່ເຂັ້ມແຂງ. ຕໍ່ມາຮອດທ້າຍສະຕະວັດທີ XIX ຫາຕົ້ນສະຕະວັດທີ XX ເຊິ່ງເປັນຄາວທີ່ດິນແດນຝັ່ງຊ້າຍແມ່ນ້ຳຂອງຕົກເປັນເມືງຂຶ້ນຝຣັ່ງ ອົງພະທາດຖືກປົກຄຸມໄປດ້ວຍເຄືອໄມ້, ປ່າໄມ້.

### 4.3 ພະທາດອິງຮັງໃນຄວາມເຫັນທາງບູຮານຄະດີ (ສະຕະວັດທີ I-XIII).

ພະທາດອີງຮັງເລີ່ມສ້າງຂຶ້ນໃນສະໄໝອານາຈັກສີໂຄດຕະບອງຮຸ່ງເຮືອງຄືປະມານສະຕະວັດທີ II ກ່ອນ ຄ.ສ ເຊິ່ງໃນຄາວນັ້ນຕົກໃນສະໄໝລາຊະການຂອງພະເຈົ້າສຸມິດຕະທຳມະວົງສາໄດ້ວາງຮາກຖານສ້າງຂຶ້ນຕາມຄຳນຳຂອງພະເຖຣະຈານຊາວອິນເດຍເມືອງກຸສິນາລາຍ ເມື່ອສ້າງສຳເລັດບໍລິບູນແລ້ວ ເພື່ອເປັນເຄື່ອງໝາຍແທນສະຖານທີ່ສະເດັດກ່ອນທີ່ຈະປະລິນິພານຂອງພະພຸດທະເຈົ້າທີ່ປ່າໄມ້ຮັງແລ້ວເອົາພະບໍລົມມາສີລິກະທາດມາບັນຈຸໄວ້.

ແຕ່ຕຳນານທັງຫຼາຍທີ່ກ່າວມາຂ້າງເທິງນັ້ນແມ່ນເພື່ອຈຸດປະສົງໃຫ້ເປັນຕົວແທນທີ່ປະທັບນັ່ງຂອງພະພຸດທະເຈົ້າຄາວພະອົງສະເດັດມາຢາມພະຍາສີໂຄດຕະບອງໃນເລື່ອງດັ່ງກ່າວຜູ້ຂຽນຕຳນານມີຈຸດປະສົງໂນ້ມໜ່ຽວຫົວໃຈຂອງປະຊາຊົນໃຫ້ເຫັນຄວາມສຳຄັນໃນປູສະນີຍະສະຖານແຫ່ງນີ້ຫຼາຍຂຶ້ນ ຈຶ່ງຜູກເລື່ອງທັງເລື່ອງພົວພັນກັບພະພຸດທະເຈົ້າ. ໃນເມືອອານາຈັກສີໂຄດຕະບອງເຊື່ອມອຳນາດລົງຕຳນານ ແລະ ປະຫວັດພະທາດອີງຮັງກໍຫາຍໄປໃນເມື່ອຂອມໄດ້ມີອຳນາດແທນສະຕະວັດທີ IX.ແຕ່ເລື່ອງພະຍາສີໂຄດຕະບອງນັ້ນຍັງເປັນນິທານປະລຳປະລາເລົ່າສືບຕໍ່ໆກັນມາໃນຫຼາຍປະເທດທົ່ວສຸວັນນະພູມໂດຍສະເພາະແມ່ນປະເທດ/ລາວ ແລະ ປະເທດໄທແລ້ວໃນທີ່ສຸດກໍລົງເອີຍກັນວ່າ ພະຍາສີໂຄດຕະບອງເປັນຄົນລາວລ້ານຊ້າງໄດ້ສູ້ຮົບກັບພະຍາຊ້າງເຜືອກທີ່ມາຮຸກຮານວຽງຈັນລະຫວ່າງຂອມມີອຳນາດນີ້ພະທາດອີງຮັງໄດ້ຖືກດັດແປງມາເປັນເທວະສະຖານຂອງສາສະ ໜາພາມລັດທິສີວະເທບ ຫຼື ຮິນດູ ແລ້ວເພິ່ນໄດ້ເລີ່ມສ້າງໄປອີກຊັ້ນໜຶ່ງສ່ວນລວດລາຍປະດັບປະດາກໍໄດ້ຄວັດໃສ່ຕາມຄະຕິຄວາມເຊື່ອຂອງພາມຄື ເລື່ອງເມຖຸນ, ສັງວາດ ແລະ ເທບນິຍາຍ.

## 5. ຄວາມເຊື່ອຖືພະທາດອີງຮັງ.

### 5.1 ຄວາມເຊື່ອຂອງປະຊາຊົນ.

ປະຊາຊົນລາວທັງຊາດເວົ້າລວມ ເວົ້າສະເພາະປະຊາຊົນຊາວແຂວງສະຫວັນນະເຂດມີຄວາມສັດທາຢ່າງຍິ່ງຕໍ່ກັບພະທາດອີງຮັງເຊື່ອຖືກັນວ່າພະທາດອີງຮັງເປັນພະທາດທີ່ສັກສິດ, ເປັນທີ່ເພິ່ງພາທາງດ້ານຈິດໃຈໂດຍສະເພາະແມ່ນ ການກາບໄຫວ້, ການໄປເຮັດບຸນ. ພະທາດອີງຮັງແມ່ນພະທາດທີ່ສ້າງຂຶ້ນແຕ່ບູຮານນະການຈຶ່ງໄດ້ຮັບຄວາມສັດທາເຫຼື້ອມໃສຈາກປະຊາຊົນທັງພາຍໃນ ແລະ ຕ່າງປະເທດ. ສະເພາະຊາວບ້ານຫຼືປະຊາຊົນບ້ານທາດອີງຮັງເອງແມ່ນມີຄວາມເຊື່ອກັນມາຕັ້ງແຕ່ບູຮານແລ້ວວ່າ ພະທາດອີງຮັງສ້າງຂຶ້ນມາເພື່ອເປັນບ່ອນສະແດງເຖິງສະຖານທີ່ປະທັບຂອງພະພຸດທະເຈົ້າສະເດັດມາບິນທະບາດໃນສະໄໝ ພະພຸດທະເຈົ້າສະເດັດມາອານາຈັກສີໂຄດຕະບອງ ແລະ ມີຕຳນານເລົ່າສືບຕໍ່ໆກັນມາວ່າ ແຕ່ກ່ອນພະພຸດທະເຈົ້າເຂົ້າມາເຜີຍແຜ່ພຸດທະສາສະໜາໃນເຂດແດນທີ່ເອີ້ນວ່າ ສຸວັນນະພູມປະເທດ ແລະ ພະອົງໄດ້ສະເດັດມາແຄວ້ນສີໂຄດຕະບອງທີ່ມີຄວາມຮຸ່ງເຮືອງສີວິໄລໃນເວລານັ້ນ ພະພຸດທະເຈົ້າໄດ້ສະເດັດມາທີ່ປ່າໄມ້ຮັງ(ເຂດບ້ານທາດອີງຮັງປັດຈຸບັນ) ແລະ ບິນທະບາດໃນເຂດບ້ານດັ່ງກ່າວຫຼັງຈາກບິນທະບາດແລ້ວ ພະອົງໄດ້ນັ່ງສັນພັດຕາຫານໃນກ້ອງຕົ້ນໄມ້ຮັງ(ຕົ້ນຮັງດັ່ງກ່າວແມ່ນໄດ້ກໍ່ພະທາດກວມ) ແລະ ພະອົງໄດ້ສັນ(ກິນ)ພັດຕາຫານ ເປັນຊີ້ນໝູທີ່ຊາວບ້ານໃສ່ບາດນັ້ນກໍໃຫ້ເກີດຄວາມບໍ່ສະບາຍພາຍໃນທ້ອງເກີດປວດທ້ອງກະທັນຫັນ. ຫຼັງຈາກນັ້ນພະອົງກໍນັ່ງອີງຕົ້ນຮັງ ແລະກໍສະເດັດປະລິນິພານທີ່ປະເທດອິນເດຍໃນໄລຍະຕໍ່ມາອີກ ດ້ວຍຕຳນານດັ່ງກ່າວຊາວບ້ານທາດອີງຮັງຈຶ່ງມີຄວາມເຊື່ອຖືກັນມາແຕ່ບູຮານຈົນຮອດປັດຈຸບັນວ່າ ບໍ່ໃຫ້ປະຊາຊົນພາຍໃນບ້ານລ້ຽງໝູ, ກິນໝູ ລວມໄປເຖິງມີຂໍ້ຫ້າມບໍ່ໃຫ້ຄົນພາຍນອກນຳເອົາຊີ້ນໝູເຂົ້າໄປກິນໃນເຂດບ້ານທາດອີງຮັງ ຖ້າຫາກວ່າຊາວບ້ານຄົນໃດຫຼື ປະຊາຊົນຄົນອື່ນໆຫາກບໍ່ປະຕິບັດຕາມຄວາມເຊື່ອຂອງຊາວບ້ານຖຸດຍສະເພາະແມ່ນຂໍ້ຫ້າມ ບໍ່ໃຫ້ກິນໝູນັ້ນ ກໍຈະມີອັນເປັນໄປຢ່າງໃດຢ່າງໜຶ່ງກັບຕົນເອງ

ຫຼື ຄອບຄົວ. ແຕ່ປະຊາຊົນບໍ່ວ່າພາຍນອກ ຫຼື ຊາວບ້ານທາດອິງຮັງກໍປະຕິບັດຕາມຂໍ້ຫ້າມດັ່ງກ່າວຢ່າງເຄັ່ງຄັດມາຕະຫຼອດແຕ່ບູຮານຮອດປັດຈຸບັນ.

### 5.1.1 ພິທີກຳຕ່າງໆໃນການເຊື່ອຖື.

ຄືດັ່ງໄດ້ກ່າວມາຂ້າງເທິງແລ້ວວ່າພະທາດອິງຮັງເປັນພະທາດທີ່ສັກສິດໃນຄວາມເຊື່ອທາງພຸດທະສາສະໜາສຳລັບພິທີກຳຕ່າງໆກໍຈະຄ້າຍຄືກັບສະຖານທີ່ສັກສິດແຫ່ງຕ່າງໆໃນ ສປປລາວ ໂດຍສະເພາະແມ່ນການສັກກະລະບູຊາກາບໄຫວ້ເຊິ່ງຈະນຳເອົາທູບ, ທຽນ, ຂັນໝາກເບັງ, ດອກບົວ ອາດຈະທັງໝົດ ຫຼື ຢ່າງໃດຢ່າງໜຶ່ງກໍໄດ້ ເຊິ່ງການສັກກະລະບູຊາພະທາດອິງຮັງສ່ວນຫຼາຍຈະມີຄົນໄປສັກກະລະບູຊາຫຼາຍໃນຕອນແລງເວລາປະມານ 15-18 ໂມງ ແຕ່ວ່າພະທາດອິງຮັງສາມາດສັກກະລະບູຊາໄດ້ຕະຫຼອດມື້ໂດຍເລີ່ມແຕ່ 8 ໂມງຫາ 18 ໂມງ ສຳລັບການຫຼັ່ງໄຫຼໄປກາບໄຫວ້ຫຼາຍທີ່ສຸດແມ່ນວັນສິນບໍ່ວ່າຈະເປັນ ສິນ 8 , ສິນ 15 ຫຼື 14ຄ່ຳ ຂອງທຸກໆເດືອນລາວກໍມີປະຊາຊົນຈຳນວນຫຼາຍໄປກາບໄຫວ້ນອກນີ້ຍັງມີການຕັກບາດສັງກະທານໃນເຂດພະທາດອິງຮັງ ເຊິ່ງຈະມີຄົນຈຳນວນຫຼາຍກວ່າແຫ່ງອື່ນໆໃນເມືອງໄກສອນນີ້ ໄປຕັກບາດໂດຍສະເພາະງານບຸນເຂົ້າພັນສາ, ເຂົ້າປະດັບ, ເຂົ້າສະຫຼາກ ແລະ ອອກພັນສາ ແລະ ຍັງມີຄວາມເຊື່ອຖືຕ່າງໆອີກແບບໜຶ່ງເຊັ່ນ: ການບະການບົນ ເຊິ່ງການບະນີ້ຜູ້ທີ່ຕ້ອງການບະຈະຕ້ອງແຕ່ງຂັນ 5 ແລ້ວມາກາບພະທາດອິງຮັງ ຫຼື ແຕ່ງຂັນຫ້າຢູ່ເຮືອນແລ້ວເອີ້ນໃສ່ພະທາດ (ກໍລະນີຄົນບ້ານໃກ້) ແລ້ວກໍປາຖະໜາ ຫຼື ເວົ້າສິ່ງທີ່ຕົນເອງຢາກຂໍຄວາມຊ່ວຍເຫຼືອ ແລະ ເພິ່ງພາບາລະມີຂອງພະທາດ ການບະຈະໄດ້ຮັບຜົນ ຫຼື ບໍ່ນັ້ນ ບໍ່ສາມາດຮັບປະກັນໄດ້ແຕ່ຫຼັງຈາກການບະແລ້ວເມື່ອສິ່ງທີ່ຕົນເອງປາຖະໜາໃນການບະນັ້ນປະສົບຜົນເປັນຈິງຜູ້ກ່ຽວຕ້ອງມາແກ້ບະທີ່ຕົນເອງໄດ້ເວົ້າໄວ້.

ຕົວຢ່າງ: ມີນາງສອນ ແຕ່ງງານໄດ້ ສາມປີ ບໍ່ມີລູກນຳເຂົາຈັກເທື່ອລາວໄດ້ຍິນ ຫຼື ເຫຼື້ອມໃສໃນພະທາດອິງຮັງລາວກໍມາທຳພິທີການບະທີ່ພະທາດໂດຍມີການກະກຽມຂັນຫ້າຄັກແນ່ແລ້ວລາວກໍປາຖະໜາຕໍ່ພະທາດອິງຮັງວ່າ ຂ້ານ້ອຍນາງສອນແຕ່ງງານສາມປີແລ້ວຍັງບໍ່ມີລູກດັ່ງນັ້ນຈຶ່ງມາຂໍເພິ່ງປາລະມີອົງພະທາດດົນບັນດານໃຫ້ຂ້ານ້ອຍໄດ້ມີລູກນຳເຂົາແດ່ ແລະ ລາວກ່າວອີກວ່າຖ້າຫາກໄດ້ແທ້ຈະມາຖວາຍຕົ້ນເງິນ 2 ຕົ້ນ. ຖ້າຫາກວ່າການບະຂອງນາງສອນປະກົດຜົນຕາມທີ່ປາຖະໜານາງສອນກໍຕ້ອງນຳຕົ້ນເງິນ 2 ຕົ້ນທີ່ບະໄວ້ນັ້ນມາຖວາຍແດ່ອົງພະທາດ ຖ້າຫາກບໍ່ປະຕິບັດຕາມຄຳເວົ້າທີ່ບະນັ້ນກໍຈະມີອັນເປັນໄປ (ຕາມຄວາມເຊື່ອ) ແຕ່ຖ້າຫາກວ່າການປາຖະໜາຂອງນາງສອນບໍ່ເກີດຜົນນາງສອນ ບໍ່ນຳຕົ້ນເງິນມາຖວາຍກໍໄດ້.

### 5.1.2 ຄຳໄຫວ້ພະທາດອິງຮັງ.

***ຕົ້ນສະບັບຂອງທ່ານອາຈານມະຫາຈັນ ອິນທຸພິລາດ***

ຕັ້ງນະໂມສາມຈົບ

❖ ປຸລິຍາຍະ ທິສາຍະ ສາລຣຸກເຂ ເຈຕິເຍ ມະຫາສັງເຂ ພຸດທະຕິເລ ຖະປິຕັງ ພຸດທະປົດຖິງ ກະທາຕຸງສິຣະສາ ນະມາມິ ອະຫັງວັນທາມິ  ສັບພະທາ ສາທຸ.

❖ ທັກຂິນາຍະ ທິສາຍະ ສາລຣຸກເຂ ເຈຕິເຍ ມະຫາສັກເຂ ພຸດທະຕິເລ ຖະປິຕັງ ພຸດທະປົດຖິງ ກະທາຕຸງສິຣະສາ ນະມາມິ ອະຫັງວັນທາມິ ສັບພະທາ ສາທຸ.

❖ ປັດສິມາຍະ ທິສາຍະ ສາລຣຸກເຂ ເຈຕິເຍ ມະຫາສັກເຂ ພຸດທະຕິເລ ຖະປິຕັງ ພຸດທະປິດຖິງ ກະທາຕຸງ ສີຣະສາ ນະມາມິ ອະຫັງວັນທາມິ ສັບພະທາ ສາທຸ.

❖ ອຸປະຣິມາຍະທິສາຍະ ສາລຣຸກເຂ ເຈຕິເຍ ມະຫາສັງເຂ ພຸດທະຕິເລ ຖະປິຕັງ ພຸດທະປິດຖິງ ກະທາຕຸງ ສີຣະສາ ນະມາມິ ອະຫັງວັນທາມິ ສັບພະທາ ສາທຸ.

❖ ເຫດຖິມາຍະ ທິສາຍະ ສາລຣຸກເຂ ເຈຕິເຍ ມະຫາສັງເຂ ພຸດທະຕິເລ ຖະປິຕັງ ພຸດທະປິດຖິງ ກະທາຕຸງ ສີຣະສາ ນະມາມິ ອະຫັງວັນທາມິ ສັບພະທາ ສາທຸ.

❖ ອະນຸທິສາຍະ ທິສາຍະ ສາລຣຸກເຂ ເຈຕິເຍ ມະຫາສັງເຂ ພຸດທະຕິເລ ຖະປິຕັງ ພຸດທະປິດຖິງ ກະທາຕຸງ ສີຣະສາ ນະມາມິ ອະຫັງວັນທາມິ ສັບພະທາ ສາທຸ.

### *ຄຳໄຫວ້ພະທາດອີງຮັງໃນປັດຈຸບັນ*

❖ ສາທຸ ກຸກກຸສັນໂທ ໂກນາຄະມະໂນ ກັດສະໂປໂຄຕະໂມ ອະຣິຍະເມດໄຕໂຍ ປັດຈະພຸດທານະມາມິ ອະຫັງວັນທາມິ ສັບພະທາ ສາທຸ(ຂາບລີງ)

❖ ປຸລິຍາມະ ທິສາຍະ ທັກຂິນາຍະ ທິສາຍະປັດສິມາຍະ ອຸດຕະຣາຍະ ທິສາຍະ ອຸປະຣິມາຍະ ທິສາຍະ ເຫດຖິມາຍະທິສາຍະ ອະນຸທິສາຍະ ສາລຣຸກເຂ ເຈຕິເຍ ມະຫາສັກເຂ ພຸດທະຕິເລ ຖາປິຕັງ ພຸດທະປິດຖິງ ກະທາຕຸງ ສີຣະສາ ນະມາມິ ອະຫັງວັນທາມິ ສັບພະທາ ສາທຸກາ (ຂາບລີງ)

❖ ຕິໂລຕະປຸເລ ຣາຊະທານີຍັງສິກຂີຍັງ ປາສາທັງ ອະຫັງວັນທາມິ ສັບພາ ສາທຸ. (ຂາລີງ)

ສາທຸ ນະໂມພຸດທະຍະທາຕຸຈິດຕັງ ທາຕຸຫະທະຍັງ ພູມີຈະຍັງ ຈີກຸງກັງ ພິມມະເວດສາ ອະພະວັງວິອອນ ອຸດສາຫັນຈະ ມາລະກິງຊີມເລີຍ ພະວັງ ພະວັງ ມາດວນພິນ ພະເອວັດຕະໂລ

ອະນຸໂມທາມິ ອະຫັງວັນທາມິ ທຸຣະໂຕ ອະຫັງວັນທາມິ ທຸຕຸໂຍ ອະຫັງວັນທາມິ ສັບພະໂສ ອະຫັງວັນທາມິ ສັບພະທາ ສາທຸ. (ຂາບລີງ)

❖ ເສດທະສັດຕັງ ສຸວັນນະຣາຊະຕັງ ຣະຕະນັງ ປານີຕັງ ອະຫັງວັນທາມິ ສັບພະທາ ສາທຸ ສາທຸ ສາທຸ. (ຂາບ ລີງ)

### *ໄຫວ້ມູມ ແລະ ໄຫວ້ຍອດພະທາດ*

ຕິໂລຕະປຸໂຣ ຣາຊະທານີຍັງ ປາສາທັງ ອະຫັງວັນທາມິ ສັບພະທາ ສາທຸ ສາທຸ ສາທຸ ນະໂມພຸພທາຍະ ທາຕຸຈິດຕັງ ທາຕຸຫັດທະຍັງ ພູມີຈະຍັງ ຈີກຸງກັງ ພິມມະເວດສາ ອະພະວັງວິອອນ ອຸດສະຫັນຈະ ມາຣະກິງຊີມເລີຍ ພະວັງ ພະວັງ ມາດວນພິນ ພະເອວັດຕະໂຣ ອະນຸໂມທາມິ ອະຫັງວັນທາມິ ທຸຣະໂຕ ອະຫັງວັນທາມິ ສັບພະໂສ ອະຫັງວັນທາມິ ທາຕຸໂຍ ອະຫັງວັນທາມິ ສັບພະທາ.

ເສດທະສັດຕັງ ສຸວັນນະຣາຊະຕັງ ຣະຕະນັງ ປານີຕັງ ອະຫັງວັນທາມິ ສັບພະທາ ສາທຸ ສາທຸ ສາທຸ. (ຂາບ ລີງ).

## 5.2 ການຈັດງານບຸນພະເພນີປະຈຳປີພະທາດອີງຮັງ.

ພະທາດອີງຮັງແມ່ນພະທາດທີ່ມີຄວາມງາມທາງດ້ານສິລະປະການສ້າງພ້ອມກັນນັ້ນພະທາດຍັງມີຄວາມໝາຍທາງປະຫວັດສາດແລະ ອີງຕາມຄວາມເຊື່ອທາງພຸດທະສາສະໜາແລ້ວພະທາດອີງຮັງກໍຄືກັບພະທາດອື່ນໆ ແລະ

ສະຖານທີ່ສັກສິດອື່ນໆ ໂດຍສະເພາະແມ່ນການຈັດງານບຸນປະເພນີ ເພື່ອສັກກະລະບູຊາອົງພະທາດ. ພະທາດອິງຮັງແມ່ນພະທາດທີ່ມີຄົນເຫຼື້ອມໃສຫຼາຍເປັນທີ່ຮູ້ຈັກຂອງປະຊົນລາວທົ່ວປະເທດ ແລະ ນັກທ່ອງທ່ຽວຕ່າງຊາດ. ການຈັດງານບຸນປະຈໍາປີພະທາດແມ່ນຈະຈັດຂຶ້ນປີລະໜຶ່ງຄັ້ງຄື ໃນລະຫວ່າງ ເດືອນ 1 ລາວ ເພັງ 13 - 15 ຄໍ່າ(ແຕ່ໃນອະດີດການຈັດງານບຸນປະເພນີນະມັດສະການພະທາດອິງຮັງແມ່ນຈັດຂຶ້ນພ້ອມກັບງານບຸນນະມັດສະການພະທາດຫຼວງວຽງຈັນຄື 13 – 15 ຄໍ່າ ເດືອນ 12 ລາວ) ເພິ່ນໄດ້ປ່ຽນການຈັດງານບຸນນະມັດສະການພະທາດອິງຮັງມາເປັນ 13 – 15 ຄໍ່າ ເດືອນ 1 ລາວ ເລີ່ມແຕ່ປີ ຄ.ສ 1949 ເປັນຕົ້ນມາ ຍ້ອນວ່າງານບຸນນະມັດສະການພະທາດອິງຮັງເປັນງານບຸນລະດັບຊາດ ແລະ ການເປີດງານເປັນທາງການກໍແມ່ນມີທາງຄະນະລັດຖະບານມາກ່າວເປີດພິທີດັກແນ່ ສໍາລັບປີ 2013 ງານບຸນເລີ່ມເປີດພິທີເປັນທາງການໃນວັນເສົາວັນທີ 9/11/2013 ກົງກັບ ເພັງ12 ຄໍ່າເດືອນ 1 ລາວ ໂດຍການກ່າວເປີດພິທີເປັນທາງການຂອງທ່ານ ຮອງນາຍົກ ທ່ານ ພົນໂທ ດວງໃຈ ພິຈິດ.

ການກະກຽມງານສ່ວນໃຫຍ່ແມ່ນ ພໍ່, ແມ່, ເຖົ້າແກ່ ພາຍໃນບ້ານທາດອິງຮັງພ້ອມດ້ວຍພະສາມະເນນພາຍໃນ ແລະ ປະທານ ອ.ພ.ສ ແຂວງ ຍາທ່ານມະຫາງອນ ດໍາລົງບຸນພ້ອມອໍານາດການປົກຄອງຂັ້ນແຂວງເປັນປະທານຮ່ວມກັນ. ໃນແຕ່ລະຄືນເລີ່ມແຕ່ເພັງ 10 ຄໍ່າເດືອນ 1 ລາວມີການຄົບງັນຕະຫຼອດຄືນເຊັ່ນ ວົງດົນຕີ, ໝໍລໍາ ແລະ ອື່ນໆ ໃນບໍລິເວນເດີ່ນພະທາດອິງຮັງຈະເຕັມໄປດ້ວຍຮ້ານວາງຂາຍສະແດງສິນຄ້າຕ່າງໆ ພິເສດໃນຕອນເຊົ້າຂອງມື້ ເພັງ 15 ຄໍ່າເດືອນ 1 ລາວ ມີການຕັກບາດສັງຂະທານ ແລະ ມີການໄຂປະຕູພະທາດອິງຮັງເພື່ອຖວາຍພັດຕາຫານ ຄໍ່າຄືນຂອງມື້ເພັງ 15 ຄໍ່າເປັນການຄົບງັນຄືນສຸດທ້າຍຕື່ນເຊົ້າມາແຮມ 1 ຄໍ່າເດືອນ 1 ລາວຖືວ່າເປັນອັນຈົບພິທີ. ງານບຸນນະມັດສະການພະທາດອິງຮັງນີ້ຈະຈັດຂຶ້ນທຸກປີ ແລະ ມີທັງນັກທ່ອງທ່ຽວພາຍໃນ ແລະ ຕ່າງປະເທດເຂົ້າມາທ່ຽວຊົມ.

### 5.3 ຂໍ້ຫ້າມໃນການໄປບູຊາພະທາດອິງຮັງ.

ໃນການເຂົ້າໄປບູຊາພະທາດອິງຮັງນັ້ນແມ່ນແຕກຕ່າງຈາກບ່ອນອື່ນຄືຫ້າມແມ່ຍິງເຂົ້າໄປຊັ້ນໃນຂອງພະທາດໄດ້ແຕ່ຂາບໄຫວ້ຢູ່ໃນບໍເວນດ້ານນອກເທົ່ານັ້ນ ແລະ ກ່ອນຈະເຂົ້າໄປໃນບໍລິເວນພະທາດ ຫຼື ວັດແມ່ນຈະຕ້ອງນຸ່ງສິ້ນເທົ່ານັ້ນຖ້າຫາກນັກທ່ອງທ່ຽວຜູ້ໃດບໍ່ໄດຖືສິ້ນໄປນໍາກໍສາມາດບູຊາເອົາໄດ້ທີ່ທາງເຂົ້າພະທາດເພາະຈະມີໜ່ວຍງານໄວ້ຄອຍບໍລິການຕະຫຼອດວັນ. ສໍາລັບຜູ້ຊາຍກໍບໍ່ມີຫຍັງຫຼາຍແຕ່ງໂຕສຸພາບຮຽບຮ້ອຍທໍາມະດາກໍໄດ້ແຕ່ຍົກເວັ້ນບໍ່ໃຫ້ເອົາດອກໄມ້ສີແດງໄປບູຊາ.

## 6. ພະທາດອິງຮັງຕໍ່ກັບວຽກງານການທ່ອງທ່ຽວ ແລະ ວັດທະນະທໍາ-ສັງຄົມ.

### 6.1 ຕໍ່ການທ່ອງທ່ຽວ.

ພະທາດອິງຮັງເປັນແຫຼ່ງທ່ອງທ່ຽວແຫ່ງໜຶ່ງໃນ ສປປລາວເຮົາ ແລະ ມີທັງນັກທ່ອງທ່ຽວຈາກພາຍໃນ ແລະ ຕ່າງປະເທດເຂົ້າມາທ່ຽວຊົມພະທາດອິງຮັງເປັນແຫຼ່ງທ່ອງທ່ຽວທາງປະຫວັດສາດ ສໍາລັບນັກທ່ອງທ່ຽວທີ່ເຂົ້າມາສ່ວນຫຼາຍແມ່ນມາຈາກ ລາຊະອານາຈັກໄທເພາະວ່າພະທາດອິງຮັງມີສ່ວນກ່ຽວພັນກັບພະທາດອົງອື່ນໆໃນປະເທດເຂົາ(ໃນຄວາມເຊື່ອ ແລະ ຕໍານານເລົ່າສືບຕໍ່ກັນມາ). ພະທາດອິງຮັງໄດ້ກາຍເປັນເອກະລັກທີ່ບົ່ງບອກເຖິງຄວາມເປັນສະຫວັນນະເຂດເຊິ່ງປະກົດເຫັນໃນຄໍາຂວັນຂອງແຂວງສະຫວັນນະເຂດທີ່ວ່າ:

“ ສະຫວັນນະເຂດ ຜືນແຜ່ນດິນຄຳ
ວັດທະນະທຳ ຫຼາຍເຜົ່າຊົນລ້ຳເລີດ
ແຫຼ່ງກໍ່ເກີດ ໄດໂນເສົາຮ້ອຍລ້ານປີ
ປູສະນິຍະສະຖານ ພະທາດອິງຮັງງາມສະຫງ່າ
ໂສມນາມວ່າ ຖິ່ນກຳເນີດວິລະບູລຸດແຫ່ງຊາດລາວ. ”

**6.2 ດ້ານການບໍລິການ.**

